ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ໜັງສືຊວນຊື້

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)

ສະເໜີຂາຍຮຸ້ນສາມັນເພີ່ມທຶນ ຈຳນວນ 71,145,700 ຮຸ້ນ, ມູນຄ່າກຳນົດ 5,000 ກີບ/ຮຸ້ນ

ສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ (RO) ຈຳນວນ 68,288,600 ຮຸ້ນ ໃນລາຄາ 5,050 ກີບ/ຮຸ້ນ
ໃນອັດຕາສ່ວນສອງຮຸ້ນເດີມຕໍ່ໜຶ່ງຮຸ້ນໃໝ່ **(2:1)**

ສະເໜີຂາຍໃຫ້ຜູ້ຖືຮຸ້ນທົ່ວໄປ (PO) ຈຳນວນ 2,857,100 ຮຸ້ນ ໃນລາຄາ 5,300 ກີບ/ຮຸ້ນ
ຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍໃຫ້ແກ່ຜູ້ຖືຮຸ້ນເດີມ (RO) ແລະ ຜູ້ຖືຮຸ້ນທົ່ວໄປ (PO) ພາຍໃນ ສປປ ລາວ
ແລະ ຕ່າງປະເທດຈະເປີດຈອງຊື້ໃນລະຫວ່າງ ວັນທີ :

ມື້ຈອງຊື້ (RO) ວັນທີ 28 - 30/8/ 2017
ມື້ຈອງຊື້ (PO) ວັນທີ 31/8 - 1/9/ 2017
8:30 ໂມງເຊົ້າ ຫາ 3:30 ໂມງແລງ

ໜັງສືຊວນຊື້

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)

(ຂຶ້ນທະບຽນເປັນບໍລິສັດມະຫາຊົນທີ່ມີຄວາມຮັບຜິດຊອບຈຳກັດຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ)

ການສະເໜີຂາຍຮຸ້ນສາມັນເພີ່ມທຶນຂອງ ທຄຕລ

ຮຸ້ນສາມັນຈຳນວນ 71,145,700 ຮຸ້ນ, ມູນຄ່າກຳນົດ 5,000 ກີບ/ຮຸ້ນ

ສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ ຈຳນວນ 68,288,600 ຮຸ້ນ ໃນລາຄາ 5,050 ກີບ/ຮຸ້ນ

(ໃນອັດຕາສ່ວນສອງຮຸ້ນເດີມຕໍ່ໜຶ່ງຮຸ້ນໃໝ່ 2:1)

ສະເໜີຂາຍໃຫ້ຜູ້ຖືຮຸ້ນທົ່ວໄປ ຈຳນວນ 2,857,100 ຮຸ້ນ ໃນລາຄາ 5,300 ກີບ/ຮຸ້ນ

ຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍໃຫ້ແກ່ຜູ້ຖືຮຸ້ນເດີມ (RO) ແລະ ຜູ້ຖືຮຸ້ນທົ່ວໄປ (PO) ພາຍໃນ ສປປ ລາວ ແລະ ຕ່າງປະເທດຈະເປີດຈອງຊື້ໃນລະຫວ່າງ:

8:30 ໂມງເຊົ້າ ຫາ 3:30 ໂມງແລງ

ສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນເດີມ (RO): ວັນທີ 28-30/08/2017

ສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທົ່ວໄປ (PO): ວັນທີ 31/08-01/09/2017

ບໍລິສັດທີ່ປຶກສາທາງດ້ານການເງິນ	:	ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ
ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ	:	ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ
ຜູ້ກວດສອບພາຍນອກ	:	ບໍລິສັດ ເອີນແອນຢັ້ງລາວ ຈຳກັດ
ບໍລິສັດທີ່ປຶກສາກົດໝາຍ	:	ບໍລິສັດ ລາວລໍ້ ແອນ ຄອນເຊົ້າແທນຊີ ກຣຸບ ຈຳກັດ

ໃນການສະເໜີຂາຍຮຸ້ນສາມັນເພີ່ມທຶນໃນຄັ້ງນີ້, ຮຸ້ນທັງໝົດຈະຖືກຈັດສັນ ແລະ ອອກຈຳໜ່າຍໃຫ້ແກ່ມວນຊົນທົ່ວໄປ, ຊຶ່ງລວມທັງນັກລົງທຶນພາຍໃນ ແລະ ຕ່າງປະເທດໂດຍ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ (ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ). ຈຳນວນຮຸ້ນສາມັນເພີ່ມທຶນຈະບໍ່ໄດ້ຈົດທະບຽນພາຍໃຕ້ກົດໝາຍວ່າດ້ວຍຫຼັກຊັບຂອງປະເທດອື່ນນອກຈາກການຈົດທະບຽນຕາມກົດໝາຍວ່າດ້ວຍຫຼັກຊັບ ຂອງ ສປປ ລາວ.

ຄຳເຕືອນ

ໜັງສືຊວນຊື້ສະບັບນີ້ ສ້າງຂຶ້ນເພື່ອໃຫ້ນັກລົງທຶນທີ່ສົນໃຈລົງທຶນໃນຮຸ້ນສາມັນເພີ່ມທຶນທີ່ອອກ ໂດຍທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ນຳໃຊ້ເປັນຂໍ້ມູນພື້ນຖານເບື້ອງຕົ້ນສຳລັບການຊ່ວຍໃນການຕັດສິນໃຈລົງທຶນເທົ່ານັ້ນ, ຊຶ່ງໄດ້ໝາຍຄວາມວ່າ ສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ (ສຄຄຊ) ແນະນຳໃຫ້ລົງທຶນໃນຫຼັກຊັບທີ່ສະເໜີຂາຍ, ຮັບປະກັນກ່ຽວກັບລາຄາ ຫຼື ຜົນຕອບແທນຂອງຫຼັກຊັບດັ່ງກ່າວ, ຮັບຮອງຄວາມຄົບຖ້ວນ ແລະ ຖືກຕ້ອງຂອງຂໍ້ມູນໃນໜັງສືຊວນຊື້ສະບັບນີ້ແຕ່ຢ່າງໃດ. ການຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເນື້ອໃນ ແລະ ຂໍ້ມູນຕ່າງໆ ໃນໜັງສືຊວນຊື້ສະບັບນີ້ແມ່ນຄວາມຮັບຜິດຊອບຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ. ໜັງສືຊວນຊື້ສະບັບພາສາລາວສະບັບນີ້ໄດ້ສ້າງຂຶ້ນເພື່ອຈຸດປະສົງໃນການສະເໜີຂາຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນທົ່ວໄປໃນຮູບແບບສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ (RO: Rights Offering) ແລະ ສະເໜີຂາຍໃຫ້ຜູ້ຖືຮຸ້ນທົ່ວໄປ (Public Offering). ດັ່ງນັ້ນ, ຈຳນວນຮຸ້ນສາມັນເພີ່ມທຶນຈະບໍ່ໄດ້ຈົດທະບຽນພາຍໃຕ້ກົດໝາຍຫຼັກຊັບຂອງປະເທດອື່ນ ນອກຈາກການຈົດທະບຽນຕາມກົດໝາຍວ່າດ້ວຍ ຫຼັກຊັບຂອງ ສປປ ລາວ. ຮູບແບບ ແລະ ໜັງສືຊວນຊື້ສະບັບນີ້ບໍ່ໄດ້ຢັ້ງຢືນເຖິງຄວາມເໝາະສົມ ຫຼື ມີຂໍ້ມູນພຽງພໍສຳລັບການອອກຈຳໜ່າຍຫຼັກຊັບໃນປະເທດອື່ນ ນັກລົງທຶນຄວນອ່ານໜັງສືຊວນຊື້ສະບັບພາສາລາວສະບັບນີ້ເປັນຫຼັກກ່ອນການຕັດສິນໃຈໃນການລົງທຶນຊື້ຮຸ້ນສາມັນເພີ່ມທຶນທີ່ອອກຈຳໜ່າຍໃນຄັ້ງນີ້.

ໃນກໍລະນີທີ່ເນື້ອໃນ ຫຼື ຂໍ້ມູນໃນໜັງສືຊວນຊື້ສະບັບນີ້ບໍ່ເປັນຄວາມຈິງ ຫຼື ຂາດຂໍ້ມູນສຳຄັນທີ່ຄວນແຈ້ງ, ຜູ້ຖືຮຸ້ນສາມາດຮຽກຮ້ອງຄ່າເສຍຫາຍຈາກທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຫຼື ຜູ້ອອກຫຼັກຊັບໄດ້ຕາມກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງ.

ກ່ອນການລົງທຶນຊື້ຮຸ້ນສາມັນເພີ່ມທຶນທີ່ຈະອອກຈຳໜ່າຍ ນັກລົງທຶນຄວນພິຈາລະນາເຖິງບັນດາຄວາມສ່ຽງທີ່ກ່ຽວຂ້ອງ, ນັກລົງທຶນຄວນອ່ານໝວດທີ່ມີຫົວຂໍ້ວ່າດ້ວຍ “ປັດໃຈຄວາມສ່ຽງ” ກ່ອນການຕັດສິນໃຈ.

ທຸກການລົງທຶນມີຄວາມສ່ຽງ, ຜູ້ລົງທຶນຄວນອ່ານໜັງສືຊວນຊື້ຢ່າງລະອຽດກ່ອນການຕັດສິນໃຈໃນການລົງທຶນ.

ສະຖາບັນສື່ກາງດ້ານຫຼັກຊັບ

❖ ບໍລິສັດອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເລກທີ 1, ຖະໜົນປາງຄຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 6821 Website: www.bcel.com.la ໂທ: 00856-21 213200 ແຟັກ: 00856-21 213202 Email: bcelhqv@bcel.com.la	❖ ບໍລິສັດທີ່ປຶກສາທາງດ້ານການເງິນ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ຊັ້ນ 6, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ (T4) ບ້ານໂພນທັນເໜືອ, ເມືອງ ໄຊເສດຖາ,ນະຄອນຫຼວງວຽງຈັນ, ຕູ້ ປ.ນ. 3373 Website:www.lcs.com.la ໂທ: 00856-21-419212 ແຟັກ: 00856-21-419221
❖ ບໍລິສັດທີ່ປຶກສາທາງດ້ານກົດໝາຍ ບໍລິສັດ ລາວລໍ້ ແອນ ຄອນເຊົາແທນຊີ ກຣຸບ ຈຳກັດ ອາຄານແອວແອວຊີ, ຖະໜົນໜອງບອນ, ເມືອງໄຊ ເສດຖາ, ນະຄອນຫຼວງວຽງຈັນ Website: www.Laolaws.com ໂທ: +856-21 261391,264866,264877 ແຟັກ: +856-21 264344	❖ ຜູ້ກວດສອບພາຍນອກ ບໍລິສັດ ເອີນແອນຢັງລາວ ຈຳກັດ ອາຄານແຄັບປີຕັລທາວເວີຊັ້ນ 6,ຖະໜົນ 23 ສິງຫາບ້ານໜອງບອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ Website: www.ey.com
❖ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ ບໍລິສັດຫຼັກຊັບລາວ-ຈີນ ຈຳກັດ ຊັ້ນ 6, ອາຄານຕະຫຼາດຫຼັກຊັບລາວ,ຖະໜົນກຳແພງ ເມືອງ (T4) ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ. 3373 Website:www.lcs.com.la ໂທ: 00856-21-419210 ແຟັກ: 00856-21-419221	❖ ຕົວແທນຈຳໜ່າຍຮຸ້ນ (ຖ້າມີ)

ສະລະບານ

ພາກສັງລວມ 1

ພາກທີ 1 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 8

1. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 8
2. ເປົ້າໝາຍໃນການນຳໃຊ້ທຶນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ 13
3. ປັດໄຈຄວາມສ່ຽງ 14
4. ທຸລະກິດທີ່ດຳເນີນໃນປັດຈຸບັນ 20
5. ຊັບສິນທີ່ໃຊ້ໃນການດຳເນີນທຸລະກິດ 26
6. ໂຄງການໃນອະນາຄົດ 27
7. ຂໍ້ຂັດແຍ່ງທາງກົດໝາຍ 29
8. ໂຄງສ້າງທຶນຂອງ ທຄຕລ 29
9. ໂຄງຮ່າງການຈັດຕັ້ງ 31
10. ການກວດກາພາຍໃນ 41
11. ລາຍການທີ່ກ່ຽວພັນ 42
12. ຖານະທາງການເງິນ ແລະ ຂໍ້ມູນການດຳເນີນງານ 43

ພາກທີ 2 ຂໍ້ມູນກ່ຽວກັບການອອກຈຳໜ່າຍຮຸ້ນ 59

1. ລາຍລະອຽດຂອງການສະເໜີອອກຈຳໜ່າຍຮຸ້ນ 59
2. ຂໍ້ຈຳກັດໃນການໂອນຮຸ້ນ ແລະ ຂໍ້ຈຳກັດໃນການຖືຮຸ້ນຂອງຜູ້ລົງທຶນຕ່າງປະເທດ 59
3. ການກຳນົດລາຄາສະເໜີຂາຍ 59
4. ລາຍລະອຽດຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນ 60
5. ເງື່ອນໄຂຂອງການຄ້ຳປະກັນ 63
6. ການຄາດຄະເນລາຍຈ່າຍໃນການອອກຈຳໜ່າຍຮຸ້ນ 63
7. ຂັ້ນຕອນການຂໍຮັບເອົາໜັງສືຊວນຊື້ ແລະ ແບບຟອມການຈອງຊື້ຮຸ້ນ 63
8. ວິທີການຈອງຊື້ຮຸ້ນ 64

9. ວິທີການຊຳລະການຈອງຊື້ຮຸ້ນ 64
10. ການແບ່ງປັນຮຸ້ນໃນກໍລະນີຈອງເກີນຈຳນວນຮຸ້ນທີ່ອອກຈຳໜ່າຍ 64
11. ການສົ່ງຄ່າສັ່ງຈອງຊື້ຮຸ້ນຄືນໃນກໍລະນີທີ່ບໍ່ໄດ້ຮັບການແບ່ງປັນຮຸ້ນ 64
12. ການແບ່ງປັນຮຸ້ນສາມັນເພີ່ມທຶນ 65
13. ການສົ່ງມອບຮຸ້ນ 65
14. ການໂອນຮຸ້ນ 65
15. ການຈ່າຍເງິນປັນຜົນ 66
16. ກອງປະຊຸມສາມັນຂອງຜູ້ຖືຮຸ້ນ 66
17. ສິດໃນການລົງຄະແນນສຽງ 67
18. ສິດໃນການຈອງຊື້ຮຸ້ນໃໝ່ ແລະ ການອອກຮຸ້ນສາມັນເພີ່ມທຶນ 67
19. ການເປີດເຜີຍບົດລາຍງານທາງດ້ານການເງິນ 67
20. ສິດໃນການຊຳລະສະສາງ 68
21. ການຊື້ຮຸ້ນຄືນຂອງບໍລິສັດ 68
22. ການຈົດທະບຽນຂອງຜູ້ຖືຮຸ້ນ 68
ພາກທີ 3 ການຮັບຮອງຄວາມຖືກຕ້ອງຂອງໜັງສືຊວນຊື້ສະບັບພາສາລາວ 69
I. ຢັ້ງຢືນຄວາມຖືກຕ້ອງໂດຍບໍລິສັດ 69
II. ໃບຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນໃນສ່ວນຂອງບໍລິສັດທີ່ປຶກສາດ້ານການເງິນ 72
III. ການຮັບຮອງຄວາມຖືກຕ້ອງຂອງຂໍ້ມູນຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ 73
ເອກະສານຊ້ອນທ້າຍ 1 ເອກະສານລາຍງານການເງິນ 74
ເອກະສານຊ້ອນທ້າຍ 2 ແບບຟອມການຈອງຊື້ຮຸ້ນ 74

ສາລະບານຕາຕະລາງ

ຕາຕະລາງ 1: ລາຍຊື່ຜູ້ຖືຮຸ້ນ 3
ຕາຕະລາງ 2: ສະພາບໍລິຫານ 3
ຕາຕະລາງ 3: ຄະນະອຳນວຍການ 3
ຕາຕະລາງ 4: ຖານະການເງິນລວມກິດຈະການ 4
ຕາຕະລາງ 5: ຜົນກຳໄລ/ຂາດທຶນ 4
ຕາຕະລາງ 6: ກຳໄລຂາດທຶນສຸດທິ 4
ຕາຕະລາງ 7: ກະແສເງິນສົດ 5
ຕາຕະລາງ 8: ອັດຕາສ່ວນຄວາມສາມາດໃນການສ້າງຜົນກຳໄລ 6
ຕາຕະລາງ 9: ປະຫວັດຄວາມເປັນມາ 9
ຕາຕະລາງ 10: ລາງວັນສາກົນທີ່ໄດ້ຮັບ 11
ຕາຕະລາງ 11: ບໍລິສັດໃນເຄືອ 12
ຕາຕະລາງ 12: ບໍລິສັດຮ່ວມທຶນ 13
ຕາຕະລາງ 13: ການຈັດຊັ້ນໜີ້ ແລະ ອັດຕາສ່ວນເງິນແຮຂັ້ນຕ່ຳ 15
ຕາຕະລາງ 14: ຊັບສິນທີ່ໃຊ້ໃນການດຳເນີນທຸລະກິດ 26
ຕາຕະລາງ 15: ໂຄງສ້າງຊັບສິນ 30
ຕາຕະລາງ 16: ໂຄງສ້າງທຶນ 30
ຕາຕະລາງ 17: ຜູ້ຖືຮຸ້ນ 31
ຕາຕະລາງ 18: ໂຄງປະກອບຂອງຄະນະກຳມະການກວດກາສະພາບໍລິຫານ 33
ຕາຕະລາງ 19: ໂຄງປະກອບຂອງສະພາບໍລິຫານ 34
ຕາຕະລາງ 20: ຄະນະກຳມະການຄຸ້ມຄອງບໍລິຫານ 36
ຕາຕະລາງ 21: ຄະນະກຳມະການກວດສອບບັນຊີພາຍໃນ 36
ຕາຕະລາງ 22: ຄະນະກຳມະການບໍລິຫານຄວາມສ່ຽງ 37
ຕາຕະລາງ 23: ຄະນະອຳນວຍການ 38
ຕາຕະລາງ 24: ຈຳນວນພະນັກງານແຕ່ປີ 2014-2016 40
ຕາຕະລາງ 25: ຈຳນວນພະນັກງານໃນແຕ່ລະລະດັບຕຳແໜ່ງໃນປີ 2016 40
ຕາຕະລາງ 26: ວຸດທິການສຶກສາຂອງພະນັກງານ 40
ຕາຕະລາງ 27: ອາຍຸຂອງພະນັກງານ 41
ຕາຕະລາງ 28: ຍອດເຫຼືອທີ່ສຳຄັນທີ່ກ່ຽວພັນກັບພາກສ່ວນທີ່ກ່ຽວຂ້ອງ 43
ຕາຕະລາງ 29: ຊັບສິນ 3 ປີ ຜ່ານມາ 43

ຕາຕະລາງ 30: ໜີ້ສິນ ແລະ ທຶນ 45
ຕາຕະລາງ 31: ກຳໄລ/ຂາດທຶນນອກທຸລະກິດ 46
ຕາຕະລາງ 32: ກະແສເງິນສົດ 3 ປີ 46
ຕາຕະລາງ 33: ອັດຕາສ່ວນທາງການເງິນທີ່ສຳຄັນ 48
ຕາຕະລາງ 34: ລາຍຮັບທັງໝົດຈາກການດຳເນີນງານ 49
ຕາຕະລາງ 35: ລາຍລະອຽດຂອງລາຍຈ່າຍໃນການດຳເນີນງານມີດັ່ງຕໍ່ໄປນີ້: 51
ຕາຕະລາງ 36: ອາກອນ ແລະ ອັດຕາອາກອນທີ່ນຳໃຊ້ 53
ຕາຕະລາງ 37: ເງິນສົດ ແລະ ທຽບເທົ່າເງິນສົດ 55
ຕາຕະລາງ 38: ໜີ້ຕ້ອງສົ່ງ 57

ສາລະບານຮູບພາບ

ຮູບພາບທີ 1: ເງິນຝາກ 20
ຮູບພາບທີ 2: ສິນເຊື່ອ 21
ຮູບພາບທີ 3: ຈຳນວນບັດ ATM 22
ຮູບພາບທີ 4: ຈຳນວນຕູ້ ATM 22
ຮູບພາບທີ 5: ຈຳນວນບັດ ວີຊາ ເຄຣດິດ 23
ຮູບພາບທີ 6: ຈຳນວນບັດ VISA DEBIT 24
ຮູບພາບທີ 7: ຈຳນວນຜູ້ຊົມໃຊ້ i-Bank 24
ຮູບພາບທີ 8: ຈຳນວນຜູ້ຊົມໃຊ້ BCEL ONE 25
ຮູບພາບທີ 9: ຈຳນວນຜູ້ຊົມໃຊ້ SMS BANKING 26
ຮູບພາບທີ 10: ໂຄງຮ່າງການຈັດຕັ້ງ 32

ນິຍາມຄຳສັບ

ຄຳສັບ	ນິຍາມ
BCEL	BANQUE POUR LE COMMERCE EXTERIEUR LAO PUBLIC
ທຄຕລ	ຊື່ຫຍໍ້ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BOL	Bank of the Lao PDR
ທຫລ	ທະນາຄານແຫ່ງ ສປປ ລາວ
MOF	ກະຊວງການເງິນ (Ministry of Finance)
ສຄຄຊ	ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
SWIFT	Society for Worldwide Interbank Financial Telecommunication
ALCO	ຄະນະກຳມະການບໍລິຫານຊັບສິນ ແລະ ໜີ້ສິນ (Assets and Liabilities Committee)
L/C	ໜັງສືສິນເຊື່ອ (Letter of Credit)
L/G	ໜັງສືຄ້ຳປະກັນ (Letter of Guarantee)
Forward/Options	ສັນຍາມີກຳນົດລ່ວງໜ້າ
EDC	ອຸປະກອນຮັບໃຊ້ໃນການຊຳລະສະສາງ (Electronic Data Capture)
ATM	ຕູ້ ATM (Automated Teller Machine)
E&Y	ບໍລິສັດ ເອີນແອນຢັງລາວ ຈຳກັດ (Ernst & YoungLao Limited)
SME	ວິສະຫະກິດຂະໜາດນ້ອຍ ແລະ ກາງ (Small and Medium Enterprises)
VISA	ບັດວີຊາ VISA (Visa International Service Association)
Internet Banking	ບໍລິການທະນາຄານຜ່ານອິນເຕີເນັດ
SMS Banking	ບໍລິການທະນາຄານຜ່ານຂໍ້ຄວາມ
ROE	ຜົນຕອບແທນຕໍ່ສ່ວນຜູ້ຖືຮຸ້ນ (Return on Equity)
ROA	ຜົນຕອບແທນຕໍ່ຊັບສິນລວມ (Return on Assets)

ພາກສັງລວມ

ບົດສັງລວມສະບັບນີ້ ອາດບໍ່ໄດ້ບັນຈຸຂໍ້ມູນທັງໝົດທີ່ສຳຄັນສຳລັບນັກລົງທຶນ. ນັກລົງທຶນຄວນອ່ານໜັງສືຊວນຊື້ສະບັບນີ້ທັງໝົດ ລວມທັງຂໍ້ມູນດ້ານການເງິນ ແລະ ໝາຍເຫດທີ່ກ່ຽວຂ້ອງ ລວມເຖິງ "ປັດໄຈຄວາມສ່ຽງ" ກ່ອນມີການລົງທຶນ.

❖ ຂໍ້ມູນບໍລິສັດອອກຈຳໜ່າຍຮຸ້ນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ ຫຼື ທຄຕລ) ໄດ້ຮັບການສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ຈຳກັດ ພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ, ສະບັບເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບອະນຸຍາດດຳເນີນທຸລະກິດດ້ານການທະນາຄານ, ສະບັບປັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010, ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນຄັ້ງທຳອິດ. ທະນາຄານໄດ້ປ່ຽນສະຖານະພາບຂອງຕົນຈາກ "ຈຳກັດ" ມາເປັນທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໂດຍໄດ້ຮັບການຮັບຮອງ ແລະ ດັດແກ້ໃບທະບຽນວິສາຫະກິດ ສະບັບເລກທີ 0061/ຫຈຫ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ຊຶ່ງຕາງໜ້າໂດຍກະຊວງ ການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ໃນວັນທີ 15 ກໍລະກົດ 2011, ກະຊວງ ການເງິນ ໄດ້ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED (COFIBRED) ໂດຍອີງໃສ່ສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງ ການເງິນ ແລະ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ຊຶ່ງເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ທີ່ເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດເທົ່າກັບ 150,235,349,000 ກີບ ແລະ ໄດ້ຮັບການຖອກຮຸ້ນເຕັມມູນຄ່າໂດຍ COFIBRED.

❖ ປັດໄຈຄວາມສ່ຽງ

- ຄວາມບໍ່ແນ່ນອນຂອງສະພາວະເສດຖະກິດໂລກ ແລະ ເສດຖະກິດພາຍໃນ
- ຄວາມສ່ຽງດ້ານເຄຣດິດ
- ຄວາມສ່ຽງດ້ານການຕະຫຼາດ
- ການປ່ຽນແປງທາງດ້ານທຸລະກິດໃນຍຸກໄອທີ
- ການປ່ຽນແປງທາງດ້ານລະບຽບຫຼັກການ
- ຄວາມສ່ຽງດ້ານອື່ນໆ

❖ ຂໍ້ມູນກ່ຽວກັບຮຸ້ນທີ່ອອກຈຳໜ່າຍ

- **ສະເໜີຂາຍຮຸ້ນສາມັນເພີ່ມທຶນໃໝ່ໃຫ້ແກ່ຜູ້ຖືຮຸ້ນເດີມ (RO)**

ສະເໜີຂາຍຮຸ້ນສາມັນເພີ່ມທຶນໃໝ່ໃຫ້ແກ່ຜູ້ຖືຮຸ້ນເດີມ (RO) ໃນສັດສ່ວນ (2) ຮຸ້ນເດີມຕໍ່ (1) ຮຸ້ນໃໝ່, ໃນຈຳນວນ 68,288,600 ຮຸ້ນ ດ້ວຍລາຄາທີ່ສະເໜີຂາຍ 5,050 ກີບຕໍ່ຮຸ້ນ.

ຮຸ້ນສາມັນທີ່ເຫຼືອຈາກການບໍ່ໃຊ້ສິດ ໃນການຈອງຊື້ຮຸ້ນຂອງຜູ້ຖືຮຸ້ນເດີມຈະຕ້ອງແບ່ງປັນໃຫ້ກັບຜູ້ຖືຮຸ້ນລາຍອື່ນທີ່ສະເໜີຈອງຊື້ຮຸ້ນຫຼາຍກວ່າສັດສ່ວນທີ່ຕົນຈະໄດ້ຮັບການແບ່ງປັນ ໂດຍການໃຊ້ວິທີສະເລ່ຍຖ່ວງນ້ຳໜັກ ຫຼື ວິທີອື່ນໆຕາມຄວາມເໝາະສົມ.

- **ສະເໜີຂາຍຮຸ້ນສາມັນເພີ່ມທຶນໃໝ່ໃຫ້ແກ່ຜູ້ຖືຮຸ້ນທົ່ວໄປ (PO)**

ສະເໜີຂາຍຮຸ້ນສາມັນເພີ່ມທຶນໃໝ່ໃຫ້ແກ່ຜູ້ຖືຮຸ້ນທົ່ວໄປ (PO) ໃນຈຳນວນ 2,857,100 ຮຸ້ນ, ດ້ວຍລາຄາທີ່ສະເໜີຂາຍ 5,300 ກີບຕໍ່ຮຸ້ນ, ການແບ່ງປັນຮຸ້ນຈະນຳໃຊ້ວິທີການສັ່ງຈອງຊື້ລ່ວງໜ້າກ່ອນຈຶ່ງຈະມີໂອກາດໄດ້ຮັບການແບ່ງປັນຮຸ້ນກ່ອນ (ຈອງກ່ອນໄດ້ກ່ອນ) ຫຼື ນຳໃຊ້ວິທີສະເລ່ຍຖ່ວງນ້ຳໜັກຕາມຄວາມເໝາະສົມ.

❖ ການອອກຈຳໜ່າຍຮຸ້ນເພີ່ມທຶນ

ການເພີ່ມທຶນທີ່ມີມູນຄ່າລວມ 360 ຕື້ກີບໃນຄັ້ງນີ້ ແມ່ນແຜນການລະດົມທຶນ ເພື່ອເພີ່ມທຶນທີ່ໄດ້ຖືກຮັບຮອງຈາກກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2012 ຊຶ່ງໄດ້ຈັດຂຶ້ນໃນຄັ້ງວັນທີ 29 ມີນາ ປີ 2013. ພາຍຫຼັງທີ່ໄດ້ມີການກຳນົດຄາດໝາຍດັ່ງກ່າວ, ຕະຫລອດໄລຍະເວລາທີ່ຜ່ານມາ ທຄຕລ ໄດ້ດຳເນີນການຄົ້ນຄວ້າ ກະກຽມຄວາມພ້ອມດ້ານເອກະສານ, ວິຊາການ, ບຸກຄະລາກອນ ແລະ ປະສານງານຢ່າງໃກ້ສິດກັບຂັ້ນເທິງ ແລະ ບັນດາໜ່ວຍງານທີ່ກ່ຽວຂ້ອງກ່ຽວກັບການເພີ່ມທຶນດັ່ງກ່າວ ເພື່ອຮັບປະກັນໃຫ້ສາມາດບັນລຸເປົ້າໝາຍຕາມກອບໄລຍະເວລາທີ່ໄດ້ກຳນົດໄວ້ ຊຶ່ງພາຍຫຼັງທີ່ສຳເລັດການເພີ່ມທຶນແລ້ວ ທຄຕລ ຈະສາມາດບັນລຸຂີດໝາຍ ຄວາມພຽງພໍຂອງທຶນຕາມລະບຽບທີ່ ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດໄວ້ ແລະ ເປັນພື້ນຖານສຳຄັນສຳລັບການນຳໃຊ້ຫຼັກການ Basel II (ບາເຊວ 2) ໃນອະນາຄົດ ພ້ອມທັງຈະເສີມສ້າງຄວາມເຂັ້ມແຂງທາງດ້ານທຶນ ເພື່ອຍົກສູງຄວາມສາມາດດ້ານການແຂ່ງຂັນ, ຮອງຮັບການຂະຫຍາຍຕົວຂອງທຸລະກິດທະນາຄານ, ການອອກຜະລິດຕະພັນໃໝ່, ພັດທະນາການບໍລິການຂອງ ທຄຕລ ໃຫ້ມີຄວາມທັນສະໄໝ ແລະ ໄດ້ມາດຕະຖານສາກົນ.

❖ ນະໂຍບາຍເງິນປັນຜົນ

ໃນປັດຈຸບັນ ນະໂຍບາຍການຈ່າຍເງິນປັນຜົນຂອງ ທຄຕລ ໃຫ້ແກ່ຜູ້ຖືຮຸ້ນແມ່ນ 1 ຄັ້ງ/ປີ ໂດຍອີງໃສ່ບັນດາມະຕິຕົກລົງຕ່າງໆທີ່ໄດ້ຮັບການອະນຸມັດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ຊຶ່ງໄດ້ສະເໜີໃຫ້ມີການຈ່າຍເງິນປັນຜົນບໍ່ຕ່ຳກວ່າ 50 ສ່ວນຮ້ອຍຂອງກຳໄລສຸດທິຂອງທະນາຄານ ພາຍຫຼັງທີ່ໄດ້ຫັກເຂົ້າຄັງສຳຮອງຕາມກົດໝາຍ ແລະ ຄັງສຳຮອງຕາມລະບຽບການທີ່ ທຄຕລ ໄດ້ກຳນົດໄວ້ ແລະ ສຳລັບການຈ່າຍເງິນປັນຜົນລະຫວ່າງປີນັ້ນ.

ເຖິງຢ່າງໃດກໍ່ຕາມອັດຕາສ່ວນການຈ່າຍເງິນປັນຜົນທີ່ບໍ່ໃຫ້ຕ່ຳກວ່າ 50 ສ່ວນຮ້ອຍຂອງກຳໄລສຸດທິດັ່ງກ່າວ ອາດມີການປ່ຽນແປງ ຂຶ້ນກັບການພິຈາລະນາ ແລະ ອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. ການພິຈາລະນາບັນຫາດັ່ງກ່າວ ອາດຕ້ອງອີງໃສ່ສະພາບເສດຖະກິດຕົວຈິງໃນແຕ່ລະໄລຍະ, ກະແສເງິນສົດ, ແຜນການລົງທຶນ, ເງື່ອນໄຂ ແລະ ຂໍ້ກຳນົດໃນສັນຍາຕ່າງໆ ທີ່ ທຄຕລ ໄດ້ມີພັນທະ ຫຼື ຜູກພັນນຳ ຊຶ່ງລວມທັງຂໍ້ຈຳກັດທາງດ້ານນິຕິກຳ ແລະ ຄຽງຄູ່ກັບຄວາມພຽງພໍຂອງທຶນໃນການຮັບຮອງການຂະຫຍາຍຕົວຂອງທະນາຄານໃນອະນາຄົດ.

ທຄຕລ ຈະຈ່າຍເງິນປັນຜົນເປັນສະກຸນເງິນກີບ ແລະ ບັນດາຜູ້ຖືຮຸ້ນຈະໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກເງິນປັນຜົນດັ່ງກ່າວ.

❖ ໂຄງສ້າງການຖືຮຸ້ນ

- ລາຍຊື່ ແລະ ສັດສ່ວນຂອງຜູ້ຖືຮຸ້ນ

ຕາຕະລາງ 1: ລາຍຊື່ຜູ້ຖືຮຸ້ນ

ລ/ດ	ຜູ້ຖືຮຸ້ນ	ກ່ອນອອກ RO/PO		ຫຼັງອອກ RO/PO	
		ຈຳນວນຮຸ້ນ	%	ຈຳນວນຮຸ້ນ	%
1	ກະຊວງ ການເງິນ	95,604,321	70%	145,187,821	70%
2	COFIBRED	13,657,759	10%	20,741,159	10%
3	ນັກລົງທຶນທົ່ວໄປ	27,315,520	20%	41,482,220	20%
ລວມ		**136,577,600**	**100%**	**207,411,200**	**100%**
ທຶນຈົດທະບຽນ		**682,888,000,000**		**1,037,056,000,000**	

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

➢ ສະພາບໍລິຫານ ແລະ ຄະນະກຳມະການ

- ສະພາບໍລິຫານ

ຕາຕະລາງ 2: ສະພາບໍລິຫານ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ດຣ ບຸນເຫຼືອ ສິນໄຊວໍລະວົງ	ປະທານສະພາບໍລິຫານ
2	ທ່ານ ຄຳສຸກ ສູນດາຣາ	ຮອງປະທານ/ກຳມະການອິດສະຫຼະ
3	ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່/ກຳມະການ
4	ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການໃຫຍ່/ກຳມະການ
5	ທ່ານ ນ. ຂັນທະລີວົງໄຊຍະລາດ	ຮອງຜູ້ອຳນວຍການໃຫຍ່/ກຳມະການ
6	ທ່ານ ວຽງໃຊ ຈັນທະວິສຸກ	ຫົວໜ້າພະແນກຄຸ້ມຄອງສາຂາຕາງໜ້າຜູ້ຖືຮຸ້ນ/ກຳມະການ
7	Mr. Marc ROBERT	ຕາງໜ້າ COFI BRED ໃນນາມຄູ່ຮ່ວມຍຸດທະສາດ/ ກຳມະການອິດສະຫຼະ

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

- ຄະນະອຳນວຍການ

ຕາຕະລາງ 3: ຄະນະອຳນວຍການ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່
2	ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການໃຫຍ່
3	ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການໃຫຍ່

4	ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການໃຫຍ່
5	ທ່ານ ຄຳຊ່ຽນ ມິ່ງບຸບຜາ	ຮອງຜູ້ອຳນວຍການໃຫຍ່
6	ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການໃຫຍ່
7	ທ່ານ ບົວວັນ ສີມະລີວົງ	ຮອງຜູ້ອຳນວຍການໃຫຍ່

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

❖ **ຜົນການດຳເນີນງານ ແລະ ສັດສ່ວນທາງການເງິນ 3 ປີຜ່ານມາ (ປີ 2014 - ປີ 2016)**

ຜົນການດຳເນີນງານຂອງ ທຄຕລ ລວມກິດຈະການໃນໄລຍະເວລາ 3 ປີຜ່ານມາ ດັ່ງນີ້:

ຕາຕະລາງ 4: ຖານະການເງິນລວມກິດຈະການ

ຖານະການເງິນລວມກິດຈະການ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ລວມຊັບສິນ	32,023,274	25,776,860	23,489,159
ລວມໜີ້ສິນ	30,710,080	24,579,789	22,338,468
ທຶນຈົດທະບຽນ	682,888	682,888	682,888
ສ່ວນຂອງທຶນທັງໝົດຂອງທະນາຄານແມ່ນ	**1,279,262**	**1,163,828**	**1,117,789**
ສ່ວນຂອງທຶນທັງໝົດຈາກສ່ວນໄດ້ເສຍທີ່ບໍ່ສາມາດຄວບຄຸມ	33,932	33,243	32,902
ລວມທຶນ	1,313,194	1,197,071	1,150,691
ລວມໜີ້ສິນ ແລະ ທຶນ	**32,023,274**	**25,776,860**	**23,489,159**

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຕາຕະລາງ 5: ຜົນກຳໄລ/ຂາດທຶນ

ຜົນກຳໄລ/ຂາດທຶນ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	547,835	260,640	314,145
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	178,433	158,234	131,279
ລາຍຮັບສຸດທິຈາກການດຳເນີນງານ	610,180	481,633	470,155
ລາຍຈ່າຍທັງໝົດຈາກການດຳເນີນງານ	(410,377)	(382,869)	(357,168)
ກຳໄລກ່ອນອາກອນ	226,216	147,089	156,133
ກຳໄລສຸດທິພາຍໃນປີ	**174,105**	**124,712**	**133,308**

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຕາຕະລາງ 6: ກຳໄລຂາດທຶນສຸດທິ

ກຳໄລ/ຂາດທຶນສຸດທິ (ລ້ານກີບ)	ປີ 2016	ປີ 2015	ປີ2014
ກຳໄລສຸດທິພາຍໃນປີ	174,105	124,712	133,328
ລາຍຮັບນອກການທຸລະກິດພາຍໃນໄລຍະຫຼັງຫັກອາກອນ	(25,404)	(31,081)	26,429

ກຳໄລ/ຂາດທຶນສຸດທິ (ລ້ານກີບ)	ປີ 2016	ປີ 2015	ປີ2014
ຍອດລວມລາຍຮັບນອກທຸລະກິດພາຍໃນໄລຍະຫຼັງຫັກອາກອນ	**148,701**	**93,631**	**159,757**

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຕາຕະລາງ 7: ກະແສເງິນສົດ

ກະແສເງິນສົດ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ກຳໄລກ່ອນອາກອນ	226,216	147,089	156,133
ກະແສເງິນສົດສຸດທິຈາກການດຳເນີນງານ	(2,888,552)	(28,984)	5,990,076
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ	(110,326)	166,135	(232,208)
ກະແສເງິນສົດສຸດທິຈາກການເຄື່ອນໄຫວກິດຈະກຳດ້ານການເງິນ	(29,881)	(55,534)	(40,567)
ການເພີ່ມຂຶ້ນ / ຫຼຸດລົງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ	(3,028,759)	81,617	5,717,301
ເງິນສົດ ແລະ ທຽບເທົ່າເງິນສົດ ໃນຕອນຕົ້ນຂອງງວດ	10,154,343	10,081,167	4,362,709
ເງິນສົດ ແລະ ທຽບເທົ່າເງິນສົດ ທ້າຍປີ	**7,125,584**	**10,154,343**	**10,081,167**

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

- **ຊັບສິນລວມ**

ໃນວັນທີ 31 ທັນວາປີ 2014, 2015 ແລະ 2016 ທະນາຄານໄດ້ມີຊັບສິນທັງໝົດ 23,489,159 ລ້ານກີບ, 25,776,860 ລ້ານກີບ ແລະ 32,023,274 ລ້ານກີບ ຕາມລຳດັບ. ໃນບັນດາຊັບສິນດັ່ງກ່າວ "ເງິນກູ້ຢືມໃຫ້ລູກຄ້າ" ແມ່ນກ້ອນຊັບສິນທີ່ໃຫຍ່ທີ່ສຸດໃນສາມປີຕິດຕໍ່ກັນຊຶ່ງກວມເອົາ 40.97%, 42.11% ແລະ 59.62% ຂອງຊັບສິນທັງໝົດຕາມລຳດັບ. ກົງກັນຂ້າມ "ເງິນສົດ ແລະ ຍອດເງິນຝາກກັບທະນາຄານແຫ່ງ ສປປ ລາວ" ແລະ "ໜີ້ຕ້ອງສົ່ງທະນາຄານ" ຊຶ່ງສ່ວນໃຫຍ່ແມ່ນປະກອບດ້ວຍເງິນສົດ ແລະ ອີງປະກອບທຽບເທົ່າເງິນສົດໄດ້ຫຼຸດລົງ 21.87% ແລະ 21.84% ໃນແຕ່ລະປີ. ດ້ວຍເຫດດັ່ງກ່າວ ທຄຕລ ໄດ້ມີນະໂຍບາຍຮັດກຸມຕໍ່ໂຄງສ້າງຊັບສິນ ຫຼື ເວົ້າອີກຢ່າງໜຶ່ງກໍ່ຄື ທະນາຄານໄດ້ແບກຫາບຄວາມສ່ຽງຫຼາຍຂຶ້ນ ໂດຍການຫັນຊັບສິນໄປສູ່ຊັບສິນທີ່ມີຄວາມສ່ຽງ ເພື່ອໃຫ້ໄດ້ດອກເບ້ຍເພີ່ມຂຶ້ນ.

- **ໜີ້ສິນລວມ**

ຕະຫຼອດໄລຍະເວລາທະນາຄານໄດ້ຮັກສາໂຄງສ້າງໜີ້ສິນທີ່ປະກອບດ້ວຍ "ເງິນຝາກຈາກລູກຄ້າ" ທີ່ກວມເອົາ 85.51%, 86.70% ແລະ 82.72% ຂອງໜີ້ສິນລວມ ໃນວັນທີ 31 ທັນວາປີ 2014, 2015 ແລະ 2016 ຕາມລຳດັບ. ສ່ວນທີ່ເຫຼືອແມ່ນມາຈາກໜີ້ສິນກັບບັນດາທະນາຄານ (ໜີ້ຕ້ອງຈ່າຍໃຫ້ທະນາຄານ ແລະ ເງິນກູ້ຈາກທະນາຄານອື່ນ) ແລະ ໜີ້ສິນອື່ນໆ. ໃນຖານະເປັນໜຶ່ງໃນທະນາຄານຊັ້ນນຳຂອງ ສປປ ລາວ ທະນາຄານມີຄວາມໄດ້ປຽບຢ່າງຫຼວງຫຼາຍ ໃນການຂະຫຍາຍການປ່ອຍເງິນກູ້ໃຫ້ແກ່ລູກຄ້າ ແລະ ທຸລະກິດການປ່ອຍສິນເຊື່ອອື່ນໆ.

➢ ສ່ວນຂອງຜູ້ຖືຮຸ້ນ

ໃນວັນທີ 31 ທັນວາປີ 2014, 2015 ແລະ 2016 ທຶນຂອງຜູ້ຖືຮຸ້ນທັງໝົດໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກ 1,150,691 ລ້ານກີບ ຫຼື ເທົ່າກັບ 4.90% ຂອງຊັບສິນລວມມາເປັນ 1,313,194 ລ້ານກີບ ຫຼື ເທົ່າກັບ 4.10% ຂອງຊັບສິນລວມຕາມລຳດັບ. ທຶນຈົດທະບຽນຂອງທະນາຄານແມ່ນ 682,888 ລ້ານກີບ. ໃນວັນທີ 31 ທັນວາປີ 2014, 2015 ແລະ 2016 ເຖິງແມ່ນວ່າທຶນຈົດທະບຽນຂອງທະນາຄານມີການເພີ່ມຂຶ້ນໃນແຕ່ລະປີ ແຕ່ສັດສ່ວນຕໍ່ຊັບສິນພັດເລີ່ມຫຼຸດລົງ. ສິ່ງເຫຼົ່ານີ້ໄດ້ບົ່ງບອກວ່າທະນາຄານໄດ້ມີສັດສ່ວນໜີ້ສິນຕໍ່ທຶນທີ່ສູງຂຶ້ນ ຊຶ່ງເປັນການບົ່ງບອກເຖິງຄວາມສ່ຽງດ້ານສະຖຽນລະພາບທີ່ສູງຂຶ້ນ. ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວຈະມີການເພີ່ມທຶນຈົດທະບຽນຈາກເດີມມາເປັນປະມານ 1,037,056 ລ້ານກີບ ພາຍຫຼັງອອກຈຳໜ່າຍຫຼັກຊັບ ຊຶ່ງເຮັດໃຫ້ສ່ວນຂອງຜູ້ຖືຮຸ້ນເພີ່ມຂຶ້ນຈາກເດີມເປັນ 1,667,362 ລ້ານກີບ ຫຼື ເທົ່າກັບ 5.21% ຂອງຊັບສິນລວມ.

ອັດຕາສ່ວນທາງການເງິນທີ່ສຳຄັນຂອງ ທຄຕລ ລວມກິດຈະການໃນໄລຍະເວລາ 3 ປີຜ່ານມາ ດັ່ງນີ້:

ຕາຕະລາງ 8: ອັດຕາສ່ວນຄວາມສາມາດໃນການສ້າງຜົນກຳໄລ

ອັດຕາສ່ວນຄວາມສາມາດໃນການສ້າງຜົນກຳໄລ	**%**	**ປີ 2016**	**ປີ 2015**	**ປີ 2014**
ດອກເບ້ຍລາຍຮັບຕໍ່ດອກເບ້ຍຊັບສິນລາຍໄດ້	%	7.12%	7.33%	7.73%
ສ່ວນຕ່າງດອກເບ້ຍສຸດທິ	%	2.77%	1.78%	2.42%
ຄ່າທຳນຽມຕໍ່ລາຍໄດ້	%	22.63%	26.63%	23.79%
ລາຍໄດ້ທີ່ບໍ່ແມ່ນດອກເບ້ຍຕໍ່ລາຍໄດ້ລວມທັງໝົດ	%	30.52%	56.14%	43.07%
ຕົ້ນທຶນຕໍ່ລາຍໄດ້	%	52.04%	64.43%	64.72%
ອັດຕາສ່ວນອາກອນ	%	23.04%	15.21%	14.61%
ຜົນຕອບແທນຕໍ່ຮຸ້ນ	%	14.20%	10.90%	12.17%
ຜົນຕອບແທນຕໍ່ຊັບສິນ	%	0.60%	0.50%	0.66%
ຄຸນນະພາບຂອງຊັບສິນ				
ໜີ້ບໍ່ເກີດດອກອອກຜົນ (NPLs) (ລ້ານກີບ)		269,795	289,067	297,735
ໜີ້ບໍ່ເກີດດອກອອກຜົນທັງໝົດຕໍ່ເງິນກູ້ຢືມ	%	1.40%	2.62%	3.06%
ຄວາມສ່ຽງຈາກການກູ້ຢືມ	%	125.87%	92.97%	66.94%
ອັດຕາສ່ວນສະພາບຄ່ອງ				
ອັດຕາສ່ວນເງິນກູ້ລວມຕໍ່ເງິນຝາກ	%	76.02%	51.88%	50.99%
ຄວາມພຽງພໍຂອງເງິນທຶນ				
ທຶນຊັ້ນ 1 (ລ້ານກີບ)		1,272,887	1,132,051	1,117,789
ເງິນທຶນທັງໝົດ (ລ້ານກີບ)		724,761	591,510	583,359
ຊັບສິນທີ່ມີຄວາມສ່ຽງ (ລ້ານກີບ)		13,588,881	10,549,190	7,321,330
ສັດສ່ວນຮຸ້ນຕໍ່ຊັບສິນ	%	4.10%	4.64%	4.90%

ອັດຕາສ່ວນເງິນທຶນຊັ້ນ 1	%	9.37%	10.73%	15.27%
ອັດຕາສ່ວນຄວາມພຽງພໍຂອງເງິນທຶນ	%	5.33%	5.61%	7.97%

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ພາກທີ 1 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

1. ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

1.1 ຂໍ້ມູນທົ່ວໄປຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຊື່ເປັນພາສາລາວ	:	ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)
ຊື່ເປັນພາສາອັງກິດ	:	BANQUE POUR LE COMMERCE EXTERIEUR LAO PUBLIC (BCEL)
ວັນສ້າງຕັ້ງ	:	01 ພະຈິກ 1989
ປະເພດທຸລະກິດ	:	ບໍລິການດ້ານທະນາຄານ
ທຶນຈົດທະບຽນທີ່ຊຳລະແລ້ວ	:	682,888,000,000
ມູນຄ່າກຳນົດ	:	5,000 ກີບ/ຮຸ້ນ
ຈຳນວນຮຸ້ນທີ່ສະເໜີອອກຈຳໜ່າຍ	:	71,145,700 ຮຸ້ນ
ຈຳນວນຮຸ້ນທີ່ສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ	:	68,288,600 ຮຸ້ນ
ລາຄາສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ	:	5,050 ກີບ/ຮຸ້ນ
ຈຳນວນຮຸ້ນທີ່ສະເໜີຂາຍໃຫ້ຜູ້ຖືຮຸ້ນທົ່ວໄປ:		2,857,100 ຮຸ້ນ
ລາຄາສະເໜີຂາຍໃຫ້ຜູ້ຖືຮຸ້ນທົ່ວໄປ	:	5,300 ກີບ/ຮຸ້ນ
ສຳນັກງານໃຫຍ່:	:	ອາຄານທີ 1 , ຖະໜົນປາງຄຳ, ຕູ້ ປ.ນ. 2925, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ	:	+856-21-213200
ແຟັກ	:	+856-21-213202
E-mail	:	bcelhqv@bcel.com.la
Website	:	www.bcel.com.la
ສັນຍາລັກ/ເຄື່ອງໝາຍ	:	

1.2 ປະຫວັດຄວາມເປັນມາຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຮັບການສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານການຄ້າຕ່າງປະເທດລາວ ຈຳກັດ ພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ, ສະບັບເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບອະນຸຍາດດຳເນີນທຸລະກິດດ້ານການທະນາຄານ ສະບັບປັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010, ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນຄັ້ງທຳອິດ. ທະນາຄານໄດ້ປ່ຽນສະຖານະພາບຂອງຕົນຈາກ “ຈຳກັດ” ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໂດຍໄດ້ຮັບການຮັບຮອງ ແລະ

ດັດແກ້ໃບທະບຽນວິສາຫະກິດ ສະບັບເລກທີ 0061/ຫຈຫ, ລົງວັນທີ 10 ມັງກອນ 2011, ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ຊຶ່ງ ຕາງໜ້າໂດຍ ກະຊວງ ການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງ ການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ Compagnie Financière de la BRED (COFIBRED). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງ ການເງິນ ແລະ COFIBRED. COFIBRED ແມ່ນທະນາຄານ ໃນເຄືອຂອງ BRED ຊຶ່ງເປັນທະນາຄານທີ່ໃຫຍ່ທີ່ສຸດ ໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ທີ່ເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດເທົ່າກັບ 150,235,349,000 ກີບ, ຊຶ່ງໄດ້ຮັບການຖອກຮຸ້ນເຕັມມູນຄ່າໂດຍ COFIBRED.

ປະຫວັດຄວາມເປັນມາຂອງ ທຄຕລ ສາມາດສັງລວມເປັນລາຍລະອຽດໃນຕາຕະລາງລຸ່ມນີ້:

ຕາຕະລາງ 9: ປະຫວັດຄວາມເປັນມາ

ປີ	ເນື້ອໃນ
1975	ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ແລະ ໄດ້ສະຖາປານາເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນໃນວັນທີ 2 ທັນວາ ປີ 1975, ທະນາຄານການຄ້າຕ່າງປະເທດລາວກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ຊຶ່ງຖືເປັນສາຂາໜຶ່ງຂອງທະນາຄານແຫ່ງລັດ ເຮັດໜ້າທີ່ເປັນຄັງເບີກຈ່າຍໃຫ້ແກ່ລັດຖະບານ ແລະ ໄດ້ຮັບມອບສິດໃຫ້ຜູກຂາດ ເຮັດໜ້າທີ່ສະເພາະທຸລະກິດດ້ານການຄ້າຕ່າງປະເທດ ພ້ອມທັງໄດ້ຮັບພາລະໜ້າທີ່ຕາງໜ້າໃຫ້ລັດຖະບານພົວພັນດ້ານການຄ້າກັບສາກົນ, ຖືບັນຊີ ແລະ ຄຸ້ມຄອງບັນຊີເງິນຝາກເປັນສະກຸນເງິນຕາຕ່າງປະເທດ, ນອກນັ້ນຍັງໄດ້ຮັບມອບໝາຍຄຸ້ມຄອງການນຳໃຊ້ທຶນຊ່ວຍເຫຼືອ, ທຶນກູ້ຢືມຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ລວມທັງເຮັດໜ້າທີ່ຊຳລະສະສາງກັບສາກົນ.
1989	ໂດຍປະຕິບັດຕາມແຜນຍຸດທະສາດໃນການພັດທະນາຂອງພັກ ແລະ ລັດຖະບານ ນັບແຕ່ວັນທີ 1 ພະຈິກ ປີ 1989 ເປັນຕົ້ນມາ ທະນາຄານການຄ້າຕ່າງປະເທດລາວ ໄດ້ຫັນຈາກທະນາຄານທີ່ລັດບໍລິຫານ ມາເປັນທະນາຄານທຸລະກິດລັດດຳເນີນການໄລ່ລຽງທຸລະກິດເປັນເອກະລາດ, ກຸ້ມຕົນເອງທາງດ້ານລາຍຮັບ-ລາຍຈ່າຍໂດຍຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ, ມີໜ້າທີ່ໃຫ້ບໍລິການດ້ານທະນາຄານ ແລະ ການເງິນໃຫ້ແກ່ລູກຄ້າທົ່ວໄປເປັນຕົ້ນແມ່ນ: ການຮັບຝາກເງິນ, ການໃຫ້ກູ້ຢືມ, ອອກໜັງສືຄ້ຳປະກັນ, ເປີດໜັງສືສິນເຊື່ອເພື່ອນຳສິນຄ້າເຂົ້າ, ຮັບແຈ້ງໜັງສືສິນເຊື່ອເພື່ອສົ່ງເສີມການສົ່ງອອກ, ບໍລິການຊຳລະສະສາງພາຍໃນ ແລະ ສາກົນໂດຍນຳໃຊ້ເຄື່ອງມືທີ່ທັນສະໄໝ ເຊັ່ນ: ໂອນເງິນໄປຕ່າງປະເທດດ້ວຍລະບົບ SWIFT, Fax, Online, Telex, ອອກເຊັກ ແລະ ອື່ນໆ; ດ້ານການບໍລິການແລກປ່ຽນເງິນຕາຕ່າງປະເທດ ເພື່ອອຳນວຍຄວາມສະດວກໃຫ້ພາກລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນ; ບໍລິການເຮັດບັດເຄຣດິດສາກົນ, ບັດເອທີເອັມ ແລະ ອື່ນໆ.
1998	ໃນເດືອນ ສິງຫາ ປີ 1998 ກະຊວງ ການເງິນ ໄດ້ແຕ່ງຕັ້ງສະພາບໍລິຫານຂອງທະນາຄານການຄ້າຕ່າງປະເທດລາວ ຊຸດທຳອິດຂຶ້ນຊຶ່ງປະກອບມີຜູ້ຕ່າງໜ້າກະຊວງ ການເງິນ ເປັນປະທານສະພາບໍລິຫານ ແລະ ມີຜູ້ຕາງໜ້າຈາກກະຊວງການຄ້າ ແລະ ຈາກບັນດາແຂວງທີ່ທະນາຄານການຄ້າຕ່າງປະເທດລາວ ມີສາຂາຕັ້ງຢູ່ເຊັ່ນ: ແຂວງ ຈຳປາສັກ, ແຂວງ ສະຫວັນນະເຂດ ແລະ ແຂວງຄຳມ່ວນເປັນຕົ້ນ. ສະພາບ

	ບໍລິຫານມີພາລະບົດບາດໃນການກຳນົດທິດທາງນະໂຍບາຍ, ການດຳເນີນງານ, ຊີ້ນຳການປະຕິບັດວຽກ ງານຮອບດ້ານຂອງ ທຄຕລ ເພື່ອປົກປ້ອງຜົນປະໂຫຍດ ແລະ ຄວາມໝັ້ນຄົງຂອງທະນາຄານ ໃຫ້ເປັນໄປ ຕາມນະໂຍບາຍຂອງ ພັກ-ລັດ ວາງອອກ ຊຶ່ງສະພາບໍລິຫານຊຸດທຳອິດມີອາຍຸການ 3 ປີ.
1999	ວັນທີ 22 ມິຖຸນາ 1999 ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ຍັງໄດ້ຮ່ວມທຶນກັບ ທະນາຄານຮຸ້ນສ່ວນການຄ້າລົງທຶນ ແລະ ພັດທະນາຫວຽດນາມ ສ້າງຕັ້ງ ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຂຶ້ນ.
2001	ໃນເດືອນ ສິງຫາ ປີ 2001 ສະພາບໍລິຫານຊຸດທີ 2 ໄດ້ຖືກແຕ່ງຕັ້ງຂຶ້ນບົນພື້ນຖານການຖອດຖອນ ບົດຮຽນຈາກສະພາບໍລິຫານຊຸດເກົ່າ ສະພາບໍລິຫານຊຸດທີ 2 ປະກອບມີຜູ້ຕາງໜ້າກະຊວງ ການເງິນ ເປັນ ປະທານ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງເປັນກຳມະການ.
2003	ໃນເດືອນມັງກອນປີ 2003 ສະພາບໍລິຫານຊຸດທີ 3 ໄດ້ຖືກສ້າງຕັ້ງຂຶ້ນ ຊຶ່ງປະກອບມີແຕ່ພະນັກງານຂອງ ທະນາຄານທັງໝົດ, ນອກຈາກນັ້ນ ລັດຖະບານຍັງໄດ້ຈ້າງຜູ້ຊ່ຽວຊານດ້ານການທະນາຄານຈາກ ຕ່າງປະເທດມາປະຈຳການຢູ່ນຳ ເພື່ອຊ່ວຍແນະນຳທຸກດ້ານໃນການດຳເນີນທຸລະກິດຂອງທະນາຄານໃນ ເວລານັ້ນ.
2008	ຮ່ວມກັບ ກຸ່ມບໍລິສັດ ປະກັນໄພທະນາຄານລົງທຶນ ແລະ ພັດທະນາຫວຽດນາມ ສ້າງຕັ້ງ ບໍລິສັດ ຮ່ວມ ທຸລະກິດປະກັນໄພລາວ-ຫວຽດ ຂຶ້ນ.
2011	ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຮ່ວມທຶນກັບບໍລິສັດ COFIBRED ທີ່ຕາງໜ້າໃຫ້ ກຸ່ມທະນາຄານ BRED ທີ່ຈົດທະບຽນຢູ່ປະເທດຝຣັ່ງ ເພື່ອສ້າງຕັ້ງ ທະນາຄານ ລາວ-ຝຣັ່ງ ຂຶ້ນ.
2011	ວັນທີ 11 ມັງກອນ ປີ 2011 ທຄຕລ ກໍໄດ້ຫັນປ່ຽນຈາກ ທະນາຄານທຸລະກິດລັດ ມາເປັນ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ແລະ ເປັນທະນາຄານທຳອິດ ແລະ ນິຕິບຸກຄົນທຳອິດໃນ ສປປ ລາວ ທີ່ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບລາວ ຊຶ່ງໃນນັ້ນຜູ້ຖືຮຸ້ນລາຍໃຫຍ່ແມ່ນ ກະຊວງ ການເງິນ ຖືຮຸ້ນ 70% ຂອງຈຳນວນຮຸ້ນທັງໝົດ, ພະນັກງານ ທຄຕລ ຖືຮຸ້ນ 5%, ຄູ່ຮ່ວມຍຸດທະສາດ 10% ແລະ ມວນຊົນທົ່ວໄປ 15%.
2011	ຮ່ວມທຶນກັບບໍລິສັດ ຫຼັກຊັບ KTZMICO ຂອງປະເທດໄທ ສ້າງຕັ້ງບໍລິສັດຫຼັກຊັບ BCEL-KT ຈຳກັດ ຂຶ້ນ.
2013	ກອງປະຊຸມສະໄໝສາມັນຜູ້ຖືຮຸ້ນປະຈຳປີ 2012 ໄດ້ມີມະຕິອະນຸມັດການເພີ່ມທຶນ 360 ຕື້ກີບໃຫ້ ທຄຕລ.
2014	ຮ່ວມທຶນກັບທະນາຄານ ຟູຕ່ຽນ ຈຳກັດ ສ້າງຕັ້ງ ທະນາຄານ ລາວ-ຈີນ ຈຳກັດ ຂຶ້ນ
2016	ປັດຈຸບັນທະນາຄານມີ 1 ສຳນັກງານໃຫຍ່, 1 ບໍລິສັດໃນເຄືອ, 4 ບໍລິສັດຮ່ວມທຶນ, 19 ສາຂາຫຼັກ, 77 ໜ່ວຍບໍລິການ ແລະ 15 ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ມາຮອດປັດຈຸບັນກິດຈະການຫຼັກຂອງທະນາຄານ ແມ່ນການສະໜອງການບໍລິການດ້ານການເງິນ, ລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ການປ່ອຍເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນ ຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫຼຸດຂອງ

ເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄຸນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ.

1.3 ຜົນສຳເລັດໃນໄລຍະຜ່ານມາ

ຕະຫລອດໄລຍະຫຼາຍສິບປີຜ່ານມາ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຕັ້ງໜ້າປະກອບສ່ວນສ້າງສາພັດທະນາປະເທດຊາດຢ່າງຮອບດ້ານ, ປະຕິບັດຕາມທິດຊີ້ນຳຈາກຂັ້ນເທິງໃນການຮ່ວມທຶນກັບທະນາຄານ ຮຸ້ນສ່ວນການຄ້າລ້ຽທຶນ ແລະ ພັດທະນາຫວຽດນາມ ເຮັດໜ້າທີ່ດຳເນີນວຽກງານບໍລິການດ້ານທະນາຄານ ດ້ວຍຮູບການຮ່ວມມືແບບພິເສດຂອງສອງຊາດ ລາວ - ຫວຽດນາມ, ຜ່ານການດຳເນີນງານດັ່ງກ່າວເຫັນວ່າທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມີຜົນງານດີເດັ່ນໃນ ການປະກອບສ່ວນຮ່ວມມືທາງດ້ານເສດຖະກິດການຄ້າ ແລະ ການລ້ຽທຶນລະຫວ່າງ 2 ປະເທດລາວ - ຫວຽດນາມ ຈຶ່ງໄດ້ຮັບຫລຽນໄຊແຮງງານຊັ້ນ III ຕາມລັດຖະດຳລັດ ສະບັບເລກທີ 27/ສປປ, ລົງວັນທີ 26 ພຶດສະພາ 2004; ໄດ້ຮັບຫລຽນໄຊແຮງງານຊັ້ນ II ຕາມດຳລັດ ສະບັບເລກທີ 335/ສປປ, ລົງວັນທີ 28/12/2007; ໃນການປະກອບສ່ວນປົກປັກຮັກສາ ແລະ ພັດທະນາປະເທດຊາດ ຄົບຮອບ 30 ປີ 1975-2005; ໄດ້ຮັບຫລຽນໄຊແຮງງານຊັ້ນ II ໃນການຮ່ວມມືພິເສດລາວ - ຫວຽດນາມ ໃນວັນຄົບຮອບສ້າງຕັ້ງທະນາຄານຮ່ວມທຸລະກິດລາວ - ຫວຽດນາມ ຄົບຮອບ 10 ປີ 22/06/1999 - 22/06/2009; ໃນວັນຄົບຮອບ 20 ປີແຫ່ງການຫັນເປັນທຸລະກິດ, ທຄຕລ ໄດ້ຮັບຫລຽນໄຊອິດສະຫລະຊັ້ນ III ໜຶ່ງໜ່ວຍ, ນອກນັ້ນ ທຄຕລ ຍັງໄດ້ຮັບບັນດາລາງວັນດັ່ງມີລາຍລະອຽດຕໍ່ໄປນີ້:

ຕາຕະລາງ 10: ລາງວັນສາກົນທີ່ໄດ້ຮັບ

ປີ	ເນື້ອໃນ	ຈາກພາກສ່ວນ
2011	The Bank Of the Year 2011	From The Branden Awards
2012	Core Banking SysitemInitiative of the Year-Retail Banking Awards	From Asian Banking & Finance Magazine
	Lao Domedtic Technology & Operations Bank Of The Year - Whole Sale Banking Awards	From Asian Banking & Finance Magazine
2013	The Platinum Technology Awards for Quality & Best Trade Name 2013	From Asian Banking & Finance Magazine
	Lao Domestic Projcet Finance Bank Of The Year	From Asian Banking & Finance Magazine
	Lao Domestic Technology and Operations Bank Of The Year	From Asian Banking & Finance Magazine
	Domestic Retail Bank Of The Year	From Asian Banking & Finance Magazine

2014	Laos Domestic Cash Management Of The Year	From Asian Banking & Finance Magazine
	Lao Domestic Technology And Operations Bank Of The Year	From Asian Banking & Finance Magazine
	Domestic Retail Bank Of The Year	From Asian Banking & Finance Magazine
	OnlineBanking Initiative Of The Year	From Asian Banking & Finance Magazine
2015	ICT Award 2015“Outstanding User Organization Award 2015	From Asian Banking & Finance Magazine
	Best Internet Bank – Laos PDR	From Global Banking & Finance Review, London, UK
2016	Domestic Retail Bank Of The Year	From Asian Banking & Finance Magazine
	Mobile Banking Initiative– Laos	From Asian Banking & Finance Magazine
	Best Internet Bank – Laos PDR	From Global Banking & Finance Review, London, UK

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວມະຫາຊົນ

1.4 ບໍລິສັດທີ່ກ່ຽວພັນ

ນະວັນທີ 31 ທັນວາ ປີ2016 ທະນາຄານມີ 01 (ໜຶ່ງ) ບໍລິສັດໃນເຄືອ ແລະ 04 (ສີ່) ບໍລິສັດຮ່ວມທຶນ

- **ບໍລິສັດໃນເຄືອ**

ໃນປີ 2011 ທຄຕລ ໄດ້ຮ່ວມທຶນກັບບໍລິສັດຫຼັກຊັບ KTZMICO ຂອງປະເທດໄທ ສ້າງຕັ້ງບໍລິສັດຫຼັກຊັບ BCEL-KT ຈຳກັດ ຂຶ້ນ.

ຕາຕະລາງ 11: ບໍລິສັດໃນເຄືອ

ຊື່	ໃບທະບຽນວິສະຫະກິດ	ຂະແໜງການ	%
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	ເລກທີ 180–10 ລົງວັນທີ 14 ທັນວາ 2010ໂດຍກົມສົ່ງເສີມການລົງທຶນຂອງ ກະຊວງແຜນການ ແລະ ການລົງທຶນຂອງ ສປປ ລາວ.	ທຸລະກິດຫຼັກຊັບ	70%

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

- **ບໍລິສັດຮ່ວມທຶນ**

ມາຮອດທ້າຍປີ 2016 ທຄຕລ ໄດ້ມີການຮ່ວມທຶນກັບນັກລົງທຶນຕ່າງປະເທດ ເພື່ອສ້າງຕັ້ງທະນາຄານຮ່ວມທຶນ 3 ແຫ່ງ ແລະ ບໍລິສັດປະກັນໄພ 1 ແຫ່ງຄື: ທະນາຄານ ຮ່ວມທຸລະກິດລາວ-ຫວຽດ, ທະນາຄານ ລາວ-ຝຣັ່ງ, ທະນາຄານ ລາວ-ຈີນຈຳກັດ ແລະ ບໍລິສັດ ປະກັນໄພ ລາວ-ຫວຽດ.

ຕາຕະລາງ 12: ບໍລິສັດຮ່ວມທຶນ

ຊື່	ໃບຖະບຽນວິສາຫະກິດ	ຂະແໜງການ	%
ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ	ເລກທີ 232/11, ລົງວັນທີ 08 ກັນຍາ 2011 ໂດຍ ທະນາຄານແຫ່ງ ສປປ ລາວ	ການທະນາຄານ & ການເງິນ	25%
ທະນາຄານ ລາວ-ຝຣັ່ງ	ເລກທີ 121-09/ຜທ, ລົງວັນທີ 26 ສິງຫາ 2009 ໂດຍກະຊວງ ແຜນການ ແລະ ການລົງທຶນຂອງ ສປປ ລາວ	ການທະນາຄານ & ການເງິນ	46%
ບໍລິສັດປະກັນໄພ ລາວ-ຫວຽດ	ເລກທີ 077/08/ FIMC, ລົງວັນທີ 09 ມິຖຸນາ 2008 ໂດຍຄະນະກຳມະການລົງທຶນຕ່າງປະເທດຂອງ ສປປ ລາວ	ປະກັນໄພ	35%
ທະນາຄານ ລາວ-ຈີນ ຈຳກັດ	ເລກທີ 041/ຫຈທ, ລົງວັນທີ 27 ມັງກອນ 2014 ໂດຍກົມທະບຽນວິສາຫະກິດຂອງ ສປປ ລາວ	ການທະນາຄານ & ການເງິນ	49%

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

2. ເປົ້າໝາຍໃນການນຳໃຊ້ທຶນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ

ການເພີ່ມທຶນທີ່ມີມູນຄ່າລວມ 360 ຕື້ກີບໃນຄັ້ງນີ້ ແມ່ນແຜນການລະດົມທຶນ ເພື່ອເພີ່ມທຶນຕາມທີ່ໄດ້ຖືກຮັບຮອງຈາກກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2012 ຊຶ່ງໄດ້ຈັດຂຶ້ນໃນຄັ້ງວັນທີ 29 ມີນາ ປີ 2013 ເປັນຕົ້ນມາ. ພາຍຫຼັງທີ່ໄດ້ມີການວາງຄາດໝາຍດັ່ງກ່າວ, ຕະຫລອດໄລຍະເວລາທີ່ຜ່ານມາ ທຄຕລ ໄດ້ດຳເນີນການຄົ້ນຄວ້າກະກຽມຄວາມພ້ອມດ້ານເອກະສານ, ວິຊາການ, ບຸກຄະລາກອນ ແລະ ປະສານງານຢ່າງໃກ້ຊິດກັບຂັ້ນເທິງ ແລະ ບັນດາໜ່ວຍງານທີ່ກ່ຽວຂ້ອງກັບການເພີ່ມທຶນດັ່ງກ່າວ ເພື່ອຮັບປະກັນໃຫ້ສາມາດບັນລຸເປົ້າໝາຍຕາມກອບໄລຍະເວລາທີ່ໄດ້ກຳນົດໄວ້ ຊຶ່ງພາຍຫຼັງທີ່ສຳເລັດການເພີ່ມທຶນແລ້ວ ທຄຕລ ຈະສາມາດບັນລຸຂີດໝາຍ ຄວາມພຽງພໍຂອງທຶນ ຕາມລະບຽບທີ່ ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດໄວ້ ແລະ ເປັນພື້ນຖານສຳຄັນສຳລັບການນຳໃຊ້ຫຼັກການບາເຊ II (Basel II) ໃນອະນາຄົດ ພ້ອມທັງຈະເສີມສ້າງຄວາມເຂັ້ມແຂງທາງດ້ານທຶນ ເພື່ອຍົກສູງຄວາມສາມາດດ້ານການແຂ່ງຂັນໃນຕະຫຼາດ, ຮອງຮັບການຂະຫຍາຍຕົວຂອງທຸລະກິດທະນາຄານ, ປັບປຸງ ແລະ ຂະຫຍາຍຕາໜ່າງການບໍລິການ ລວມທັງການພັດທະນາຜະລິດຕະພັນເພື່ອໃຫ້ທັນສະໄໝ ແລະ ໃກ້ຄຽງກັບສາກົນ.

3. ປັດໄຈຄວາມສ່ຽງ

ການລົງທຶນໃນຮຸ້ນແມ່ນມີຄວາມສ່ຽງ ສະນັ້ນ ນັກລົງທຶນຄວນພິຈາລະນາຂໍ້ມູນໃນໜັງສືຊວນຊື້ສະບັບນີ້ຢ່າງຮອບຄອບກ່ອນການຕັດສິນໃຈລົງທຶນ ໂດຍສະເພາະແມ່ນປັດໄຈດ້ານຄວາມສ່ຽງຕ່າງໆ ທີ່ກ່ຽວຂ້ອງກັບທະນາຄານ ບັນດາປັດໄຈຄວາມສ່ຽງທີ່ລະບຸໄວ້ໃນໜັງສືຊວນຊື້ສະບັບນີ້ ອາດຈະສົ່ງຜົນກະທົບໃນທາງດ້ານລົບຕໍ່ ທຄຕລ ແລະ ມູນຄ່າຮຸ້ນຂອງ ທຄຕລ ນອກຈາກນີ້ອາດຈະມີປັດໄຈຄວາມສ່ຽງອື່ນໆອີກ ຊຶ່ງບໍ່ແມ່ນສະເພາະແຕ່ຄວາມສ່ຽງທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ສະບັບນີ້ເທົ່ານັ້ນ, ແຕ່ເປັນຄວາມສ່ຽງທີ່ບໍ່ໄດ້ມີຜົນກະທົບຫຼາຍຕໍ່ພາບລວມຂອງ ທຄຕລ ໃນປັດຈຸບັນ, ແຕ່ໃນອະນາຄົດຄວາມສ່ຽງຕ່າງໆທີ່ກ່າວມາອາດສົ່ງຜົນກະທົບກັບລາຍຮັບ, ຜົນກຳໄລ, ສະພາບຄ່ອງ, ແຫຼ່ງເງິນທຶນ ແລະ ໂອກາດທາງທຸລະກິດຂອງ ທຄຕລ.

ທຄຕລ ໄດ້ຄຳນຶງສະເໝີວ່າການບໍລິຫານຄວາມສ່ຽງແມ່ນເປັນປັດໄຈພື້ນຖານຂອງການດຳເນີນທຸລະກິດຂອງ ທະນາຄານ ໂດຍໄດ້ມີການກຳນົດແນວທາງໃນການບໍລິຫານຄວາມສ່ຽງໄວ້ຢ່າງຈະແຈ້ງ ເພື່ອໃຫ້ໝັ້ນໃຈວ່າ ທະນາຄານ ໄດ້ມີກົນໄກການບໍລິຫານທີ່ດີ, ເພື່ອຮັບປະກັນຕໍ່ຜົນກະທົບທີ່ຈະເກີດຂຶ້ນຕໍ່ການດຳເນີນທຸລະກິດຂອງ ທະນາຄານ ແລະ ເສີມສ້າງໃຫ້ຂະບວນການບໍລິຫານຄວາມສ່ຽງ ມີປະສິດທິພາບໄດ້ມາດຕະຖານໃກ້ຄຽງລະດັບສາກົນ ແລະ ໃຫ້ສອດຄ່ອງກັບຫຼັກເກນບາເຊ (Basel). ການບໍລິຫານຄວາມສ່ຽງຂອງທະນາຄານ ແມ່ນປະກອບດ້ວຍຄະນະກຳມະການບໍລິຫານຄວາມສ່ຽງ ແລະ ຄະນະຜູ້ບໍລິຫານລະດັບສູງທີ່ມີບົດບາດສຳຄັນໃນການກຳນົດ ແລະ ທົບທວນຄືນນະໂຍບາຍຂອງທະນາຄານ.

ຂະບວນການບໍລິຫານຄວາມສ່ຽງຂອງ ທະນາຄານ ແມ່ນເລີ່ມຈາກການລະບຸຄວາມສ່ຽງທີ່ສຳຄັນ ທີ່ອາດຈະສົ່ງຜົນກະທົບຕໍ່ການດຳເນີນທຸລະກິດຂອງທະນາຄານ, ການປະເມີນຄວາມສ່ຽງແຕ່ລະປະເພດ, ການຕິດຕາມ ແລະ ຄວບຄຸມຄວາມສ່ຽງ ໃຫ້ຢູ່ໃນລະດັບທີ່ເໝາະສົມແລ້ວ ພ້ອມທັງລາຍງານໃຫ້ຄະນະບໍລິຫານຮັບຊາບ ເພື່ອຫາວິທີແກ້ໄຂໃຫ້ທັນກັບສະພາບການ ບັນດາປັດໄຈຄວາມສ່ຽງທີ່ນັກລົງທຶນຄວນພິຈາລະນາກ່ອນການຕັດສິນໃຈລົງທຶນມີດັ່ງນີ້:

3.1 ຄວາມບໍ່ແນ່ນອນຂອງສະພາວະເສດຖະກິດໂລກ ແລະ ເສດຖະກິດພາຍໃນ

ຄວາມບໍ່ແນ່ນອນຂອງສະພາວະເສດຖະກິດໂລກ ແລະ ເສດຖະກິດພາຍໃນປະເທດ ຊຶ່ງຈະເຮັດໃຫ້ເກີດຄວາມທ້າທາຍຕໍ່ການດຳເນີນທຸລະກິດຂອງ ທະນາຄານ ແລະ ຍັງອາດເປັນປັດໄຈສ່ຽງຕໍ່ທະນາຄານໃນໄລຍະຕໍ່ໄປ. ປັດໄຈສ່ຽງທີ່ສຳຄັນກໍ່ຄືການຂະຫຍາຍຕົວຂອງເສດຖະກິດໂລກທີ່ຊ້າລົງ ນັບແຕ່ເກີດວິກິດການດ້ານການເງິນໂລກໃນໄລຍະຜ່ານມາສະພາວະການບໍລິໂພກ ແລະ ການລົງທຶນໃນເສດຖະກິດຫຼັກໄດ້ຂະຫຍາຍຕົວຢູ່ໃນລະດັບຕ່ຳເປັນເວລາດົນ ຊຶ່ງເຮັດໃຫ້ເກີດມີກຳລັງການຜະລິດສ່ວນເກີນ ແລະ ໃນໄລຍະທີ່ຜ່ານມາການຟື້ນຕົວຂອງເສດຖະກິດໂລກຍັງລ້າຊ້າໂດຍສະເພາະແມ່ນເສດຖະກິດຢູໂຣບທີ່ໄດ້ປະເຊີນກັບບັນຫາການຫວ່າງງານ ແລະ ໜີ້ສິນຢູ່ໃນລະດັບສູງ ສ່ວນເສດຖະກິດຍີ່ປຸ່ນໄດ້ປະສົບກັບບັນຫາເງິນຝືດເປັນເວລາດົນ ສະພາບການດັ່ງກ່າວນັ້ນອາດຈະເຮັດໃຫ້ການລົງທຶນມີການຢຸດສະງັດໄດ້.

ທິດທາງການປັບຂຶ້ນອັດຕາດອກເບ້ຍຂອງອາເມລິກາໃນທ້າຍປີທີ່ຜ່ານມາ ແລະ ມີແນວໂນ້ມຈະປັບຂຶ້ນອີກໃນອະນາຄົດ ຕະຫຼອດຮອດການແຂງຄ່າຂອງເງິນໂດລາສະຫະລັດ ຈະເຮັດໃຫ້ຄ່າໃຊ້ຈ່າຍໃນການລະດົມທຶນສູງຂຶ້ນ ໂດຍສະເພາະແມ່ນຕະຫຼາດເກີດໃໝ່ ການຂຶ້ນອັດຕາດອກເບ້ຍຂອງອາເມລິກາອາດສົ່ງຜົນຕໍ່ການໄຫຼອອກຂອງເງິນທຶນຈາກບັນດາປະເທດຕ່າງໆເຂົ້າໄປສູ່ອາເມລິກາ ຊຶ່ງສົ່ງຜົນໃຫ້ເງິນໂດລາອາເມລິກາແຂງຄ່າຂຶ້ນ ທັງໝົດນັ້ນແມ່ນເປັນປັດໄຈທີ່ເຮັດໃຫ້ຄ່າໃຊ້ຈ່າຍໃນການລະດົມທຶນເພີ່ມຂຶ້ນ. ນອກນັ້ນການສະລົຕົວຂອງເສດຖະກິດຈີນຍັງຈະສົ່ງຜົນກະທົບໂດຍລວມຕໍ່ເສດຖະກິດໂລກ.

ປັດໄຈພາຍໃນຂອງເສດຖະກິດລາວທີ່ສົ່ງຜົນກະທົບໂດຍກົງຕໍ່ທະນາຄານໄດ້ແກ່ ການກຳນົດນະໂຍບາຍອັດຕາດອກເບ້ຍຂອງທະນາຄານກາງ ທີ່ມີແນວໂນ້ມຫຼຸດລົງຊຶ່ງຈະສົ່ງຜົນໂດຍກົງຕໍ່ການລະດົມເງິນຝາກຂອງທະນາຄານ

ປະກອບກັບຄວາມຕ້ອງການຖືຄອງເງິນສົດຂອງປະຊາຊົນຍັງມີສູງ ການຫຼຸດຜ່ອນການລົງທຶນໃນໂຄງສ້າງພື້ນຖານ ແລະ ການເບີກຈ່າຍງົບປະມານຂອງພາກລັດຍັງລ້າຊ້າ ເຮັດໃຫ້ພາກການລົງທຶນປະສົບກັບການຂາດແຄນເງິນທຶນ ຊຶ່ງເປັນສາຍເຫດກໍ່ໃຫ້ເກີດມີການຊຳລະໜີ້ລ້າຊ້າຕາມມາ ພ້ອມກັນນັ້ນການກຳນົດກົດເກນໃນການຄຸ້ມຄອງລະບົບສະຖາບັນການເງິນຂອງ ທະນາຄານກາງ ມີແນວໂນ້ມຮັດແໜ້ນຂຶ້ນ ເພື່ອໃຫ້ເປັນໄປຕາມເກນກຳນົດຂອງອົງກອນລະຫວ່າງປະເທດທີ່ ສປປ ລາວ ເປັນສະມາຊິກ.

3.2 ຄວາມສ່ຽງດ້ານສິນເຊື່ອ

ຄວາມສ່ຽງດ້ານສິນເຊື່ອໝາຍເຖິງຄວາມສ່ຽງຈາກການທີ່ຜູ້ກູ້ຢືມ ຫຼື ຄູ່ສັນຍາບໍ່ສາມາດປະຕິບັດຕາມເງື່ອນໄຂ ແລະ ຂໍ້ຕົກລົງໃນສັນຍາ ຊຶ່ງອາດເປັນເພາະຄູ່ສັນຍາປະເຊີນບັນຫາທາງການເງິນເຮັດໃຫ້ບໍ່ສາມາດຊຳລະໜີ້ເມື່ອຄົບກຳນົດໄດ້ ຫຼື ເຈດຕະນາບໍ່ປະຕິບັດຕາມສັນຍາ ຊຶ່ງສິ່ງຜົນໃຫ້ເກີດຄວາມເສຍຫາຍຕໍ່ທຸລະກິດທະນາຄານ ເປັນຕົ້ນແມ່ນລາຍຮັບຈາກສິນເຊື່ອຂອງທະນາຄານ. ຄວາມສ່ຽງທາງດ້ານສິນເຊື່ອແມ່ນເກີດມາຈາກຫຼາຍປັດໄຈໄດ້ແກ່:

- ປັດໄຈຄວາມສ່ຽງຈາກພາຍນອກ:

ປັດໄຈຄວາມສ່ຽງເກີດຈາກພາຍນອກທີ່ສຳຄັນແມ່ນມາຈາກສະພາວະການຂຶ້ນລົງຂອງເສດຖະກິດທັງພາຍໃນ ແລະ ຕ່າງປະເທດ ເຊັ່ນ: ການເໜັງຕີງຂອງອັດຕາດອກເບ້ຍ, ການເໜັງຕີງຂອງອັດຕາແລກປ່ຽນ, ສະພາວະທາງດ້ານການເມືອງເປັນຕົ້ນ, ນອກນັ້ນຍັງມີປັດໄຈພາຍນອກອື່ນໆອີກທີ່ກ່ຽວຂ້ອງ ເຊັ່ນ: ຄວາມສາມາດໃນການຊຳລະໜີ້ຂອງລູກຄ້າ, ຄວາມຈົງໃຈຂອງລູກຄ້າ, ການປ່ຽນແປງນະໂຍບາຍຂອງທະນາຄານກາງທີ່ກ່ຽວຂ້ອງກັບການບໍລິຫານສິນເຊື່ອຂອງທະນາຄານທຸລະກິດ ເຊັ່ນ: ການເພີ່ມມາດຕະການທາງດ້ານສິນເຊື່ອ (ການຈັດຊັ້ນໜີ້), ການຈັດລະດັບຄວາມສ່ຽງທາງດ້ານສິນເຊື່ອຂອງລູກຄ້າແຕ່ລະລາຍ, ການກຳນົດເງື່ອນໄຂ ແລະ ອຳນາດໃນການອະນຸມັດສິນເຊື່ອເປັນຕົ້ນ. ການຈັດຊັ້ນໜີ້ສິນເຊື່ອ ແລະ ການຫັກເງິນແຮຄວາມສ່ຽງສິນເຊື່ອຕໍ່ກັບລາຍການສິນເຊື່ອຂອງ ທຄຕລ ແມ່ນໄດ້ປະຕິບັດຕາມຂໍ້ຕົກລົງ ສະບັບເລກທີ 324/ທຫລ, ລົງວັນທີ 19 ເມສາ 2011 ຂອງ ທະນາຄານ ແຫ່ງ ສປປ ລາວ ຊຶ່ງມີລາຍລະອຽດດັ່ງນີ້:

ຕາຕະລາງ 13: ການຈັດຊັ້ນໜີ້ ແລະ ອັດຕາສ່ວນເງິນແຮຂັ້ນຕ່ຳ

ໜີ້ທີ່ຖືກຈັດຊັ້ນ	ຈຳນວນວັນຄ້າງຊຳລະ	ອັດຕາສ່ວນເງິນແຮຂັ້ນຕ່ຳ
ໜີ້ປົກກະຕິ (Normal or Pass)	<30	0.5%-1%
ໜີ້ຄວນເອົາໃຈໃສ່ (Watch or Special Mention)	30 ≤ ແຕ່ບໍ່ເຖິງ 90	3%
ໜີ້ຕ່ຳກວ່າມາດຕະຖານ (Substandard)	90 ≤ ແຕ່ບໍ່ເຖິງ 180	20%
ໜີ້ສົງໃສ (Doubtful)	90 ≤ ແຕ່ບໍ່ເຖິງ 360	50%
ໜີ້ສູນ(Loss)	≥ 360	100%

ທຄຕລ ໄດ້ຕິດຕາມສະພາບເສດຖະກິດຢ່າງໃກ້ຊິ ແລະ ຕໍ່ເນື່ອງ ເພື່ອຊອກຫາວິທີຮັບມື ຫຼື ປ້ອງກັນ ໃນກໍລະນີມີການປ່ຽນແປງສະພາບພາຍນອກທີ່ສົ່ງຜົນລົບຕໍ່ ທະນາຄານ ແລະ ຄົ້ນຄວ້າຫາໂອກາດເມື່ອສະພາບເສດຖະກິດເອື້ອອຳນວຍ ແລະ ນອກຈາກນີ້ ທຄຕລ ໄດ້ຍົກສູງການດຳເນີນທຸລະກິດ ໂດຍສະເພາະດ້ານສິນເຊື່ອໃຫ້ມີຄວາມສອດຄ່ອງກັບນິຕິກຳກ່ຽວຂ້ອງໃນປັດຈຸບັນ ແລະ ບາງລະບຽບອາດປ່ຽນແປງໃນຕໍ່ໜ້າ. ສະນັ້ນ, ເພື່ອຮອງຮັບການປ່ຽນແປງບາງ

ລະບຽບການກ່ຽວກັບທະນາຄານໃນອະນາຄົດ, ທະນາຄານ ໄດ້ກະກຽມຄວາມພ້ອມຫຼາຍດ້ານ ແລະ ໄດ້ວ່າຈ້າງບໍລິສັດທີ່ ປຶກສາລະດັບສາກົນເຂົ້າມາຊ່ວຍເພື່ອປັບປຸງລະບຽບພາຍໃນຕ່າງໆ ແລະ ຊອກຫາເຄື່ອງມືຊ່ວຍໃນການປະຕິບັດງານ ດ້ານສິນເຊື່ອ, ເຄື່ອງມືສະໜັບສະໜູນການວິເຄາະຂໍ້ມູນທາງການເງິນ, ເຄື່ອງມືໃຊ້ຊີ້ວັດຄວາມສ່ຽງສິນເຊື່ອ ແລະ ເຄື່ອງ ມືຈັດອັນດັບສິນເຊື່ອ.

- **ປັດໄຈຄວາມສ່ຽງຈາກພາຍໃນ**

ປັດໄຈຄວາມສ່ຽງເກີດຈາກພາຍໃນແມ່ນປັດໄຈທີ່ເກີດຂຶ້ນຈາກພາຍໃນຂອງທະນາຄານເອງໄດ້ແກ່: ການວິ ເຄາະ ແລະ ປະເມີນສິນເຊື່ອ, ການປະເມີນ ແລະ ຮັບຫຼັກຊັບຄ້ຳປະກັນ, ຈັນຍາບັນຂອງພະນັກງານສິນເຊື່ອ, ຂະບວນ ການອະນຸມັດ, ລະບອບ, ລະບຽບ, ເຄື່ອງມືຕິດຕາມ ແລະ ຄຸ້ມຄອງບໍລິຫານສິນເຊື່ອ ນັບແຕ່ເລີ່ມຕົ້ນຂັ້ນຕອນກ່ອນການ ປ່ອຍສິນເຊື່ອ ຈົນຮອດຂັ້ນຕອນສຸດທ້າຍກໍຄືການຊຳລະເງິນກູ້ຄືນໃຫ້ ທະນາຄານ ທັງໝົດຂອງລູກຄ້າ. ເນື່ອງຈາກສິນ ເຊື່ອແມ່ນທຸລະກິດຫຼັກຂອງ ທະນາຄານ, ການບໍລິຫານດ້ານສິນເຊື່ອຈຶ່ງເປັນບັນຫາທີ່ສຳຄັນທີ່ສຸດຂອງ ທະນາຄານ ຖ້າ ການບໍລິຫານ ຫຼື ການຄຸ້ມຄອງທາງດ້ານສິນເຊື່ອດີກໍຈະສົ່ງຜົນດີຕໍ່ ທະນາຄານ ເຮັດໃຫ້ທະນາຄານມີຜົນກຳໄລ; ແຕ່ໃນ ທາງກົງກັນຂ້າມ ຖ້າຫາກການບໍລິຫານສິນເຊື່ອຫາກບໍ່ມີປະສິດທິພາບ ອາດຈະກໍ່ໃຫ້ເກີດມີຜົນກະທົບໂດຍກົງຕໍ່ລາຍ ຮັບຂອງທະນາຄານ.

ຕໍ່ກັບການບໍລິຫານຄວາມສ່ຽງສິນເຊື່ອ ທຄຕລ ໄດ້ມີໜ່ວຍງານສະເພາະເພື່ອບໍລິຫາ ແລະ ຄຸ້ມຄອງຄວາມສ່ຽງ ສິນເຊື່ອ, ໃນທຶ່ອລະບົບ ທຄຕລ ໄດ້ມີນະໂຍບາຍ ແລະ ລະບຽບການເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ຄຸ້ມ ຄອງບັນດາຄູ່ສັນຍາ, ນອກຈາກນັ້ນ ທຄຕລ ຍັງໄດ້ມີການທົບທວນ ແລະ ຕິດຕາມຢ່າງໃກ້ສິດ, ທະນາຄານເນັ້ນການ ສ້າງວັດທະນະທຳສິນເຊື່ອທີ່ເຂັ້ມແຂງໂດຍມີຫຼັກການ ແລະ ເປົ້າໝາຍທີ່ຊັດເຈນເພື່ອໃຫ້ພະນັກງານສິນເຊື່ອເຂົ້າໃຈຫຼັກ ການປະຕິບັດງານດ້ານສິນເຊື່ອ ແລະ ສື່ສານບົນພື້ນຖານດຽວກັນທຶ່ອລະບົບ ນອກນັ້ນຍັງມີການຈັດຝຶກອົບຮົມໃຫຍ່ ທຶ່ອລະບົບ ແລະ ສອບເສັ່ງ ເພື່ອວັດແທກຄຸນນະພາບພະນັກງານສິນເຊື່ອໃນທຸກໆປີ.

- **ປັດໄຈຄວາມສ່ຽງດ້ານການກະຈຸກຕົວຂອງລູກໜີ້ລາຍໃຫຍ່**

ຄວາມສ່ຽງດ້ານການກະຈຸກຕົວຂອງລູກໜີ້ລາຍໃຫຍ່ ໝາຍເຖິງຄວາມສ່ຽງທີ່ເກີດຈາກການທີ່ທະນາຄານປ່ອຍ ເງິນກູ້ ຫຼື ລົງທຶນ, ສ້າງພາລະຜູກພັນທາງການເງິນ, ໃຫ້ການຄ້ຳປະກັນໃຫ້ແກ່ລູກໜີ້ກຸ່ມໃດກຸ່ມໜຶ່ງ ຫຼື ໂຄງການໃດ ໜຶ່ງທີ່ມີມູນຄ່າສູງ ຫາກເກີດຄວາມເສຍຫາຍຂຶ້ນກໍຈະສົ່ງຜົນກະທົບໂດຍກົງຕໍ່ຖານະທາງການເງິນ ແລະ ຄວາມສາມາດ ໃນການດຳເນີນທຸລະກິດຂອງທະນາຄານ. ການຄຸ້ມຄອງຄວາມສ່ຽງໃນດ້ານການກະຈຸກຕົວຂອງລູກໜີ້ລາຍໃຫຍ່ນັ້ນ ທະນາຄານຕ້ອງກະຈາຍຄວາມສ່ຽງອອກໄປໃນຫຼາຍກຸ່ມລູກຄ້າ.

ຕໍ່ກັບຄວາມສ່ຽງຂ້າງເທິງ ທຄຕລ ໄດ້ມີນະໂຍບາຍຄຸ້ມຄອງສິນເຊື່ອ ໂດຍກຳນົດການປ່ອຍສິນເຊື່ອໃຫ້ກັບບຸກ ຄົນ ຫຼື ບໍລິສັດໃດໜຶ່ງບໍ່ໃຫ້ເກີນ 25% ຂອງທຶນຊັ້ນໜຶ່ງ ແລະ ການປ່ອຍສິນເຊື່ອໃຫ້ກັບກຸ່ມບໍລິສັດໃດໜຶ່ງບໍ່ໃຫ້ເກີນ 50% ຂອງທຶນຊັ້ນໜຶ່ງ. ທີ່ສຳຄັນ, ການໃຫ້ສິນເຊື່ອແກ່ບັນດາລູກຄ້າລາຍໃຫ່ຍ (10% ຂອງທຶນຂຶ້ນໄປ) ລວມກັນ ຕ້ອງບໍ່ເກີນ 8 ເທົ່າ ຫຼື 800% ຂອງທຶນຊັ້ນໜຶ່ງ ຂອງ ທຄຕລ.

- **ປັດໄຈຄວາມສ່ຽງດ້ານການກະຈຸກຕົວຂອງຂະແໜງເສດຖະກິດ**

ຄວາມສ່ຽງດ້ານການກະຈຸກຕົວຂອງຂະແໜງເສດຖະກິດ ໝາຍເຖິງຄວາມສ່ຽງທີ່ເກີດຈາກການທີ່ທະນາຄານ ປ່ອຍເງິນກູ້ ແລະ/ຫຼື ສ້າງພາລະຜູກພັນທາງການເງິນໃຫ້ແກ່ລູກໜີ້ທີ່ຢູ່ໃນຂະແໜງເສດຖະກິດໃດໜຶ່ງທີ່ມີມູນຄ່າສູງ

ຫາກເກີດພາວະຕົກຕ່ຳໃນຂະແໜງເສດຖະກິດນັ້ນ ຈະເກີດຄວາມເສຍຫາຍ ຫຼື ຈະສົ່ງຜົນກະທົບໂດຍກົງຕໍ່ຖານະທາງການເງິນ ແລະ ຄວາມສາມາດໃນການດຳເນີນທຸລະກິດຂອງທະນາຄານ ເຊັ່ນ: ການໃຫ້ສິນເຊື່ອໃນໂຄງການກໍ່ສ້າງພື້ນຖານໂຄງລ່າງ, ຂະແໜງການກໍ່ສ້າງ ແລະ ອື່ນໆ. ທະນາຄານ ຕ້ອງກະຈາຍຄວາມສ່ຽງຈາກໃຫ້ສິນເຊື່ອໃນຂະແໜງການເສດຖະກິດໃດໜຶ່ງອອກໄປ ເພື່ອບໍ່ໃຫ້ເກີດຜົນກະທົບຕໍ່ທະນາຄານ ຖ້າຫາກເກີດພາວະເສດຖະກິດຕົກຕ່ຳ ໃນຂະແໜງເສດຖະກິດໃດໜຶ່ງ.

ຕໍ່ກັບການບໍລິຫານການກະຈຸກຕົວສິນເຊື່ອຂອງຂະແໜງການເສດຖະກິດ, ທຄຕລ ໄດ້ເອົາໃຈໃສ່ໃນການກະຈາຍຄວາມສ່ຽງສິນເຊື່ອໄປຫຼາຍຂະແໜງການ ໂດຍເນັ້ນການໃຫ້ສິນເຊື່ອແກ່ຂະແໜງການເສດຖະກິດໃດໜຶ່ງບໍ່ເກີນ 30% ຂອງຍອດສິນເຊື່ອທັງໝົດ.

3.3 ຄວາມສ່ຽງດ້ານການຕະຫຼາດ

ຄວາມສ່ຽງດ້ານຕະຫຼາດແມ່ນຄວາມສ່ຽງທີ່ມີຕໍ່ລາຍຮັບຂອງ ທຄຕລ ອາດເກີດຂຶ້ນຈາກການເຮັດທຸລະກຳ ຫຼື ການຕີມູນຄ່າໃນບັດລາຍງານການເງິນຂອງ ທຄຕລ ທີ່ອາດຈະກະທົບຕໍ່ຊັບສິນ, ໜີ້ສິນ ແລະ ທຶນ ຊຶ່ງອາດເປັນຜົນກະທົບຕໍ່ກຳໄລ/ຂາດທຶນຂອງ ທະນາຄານ, ສາເຫດຂອງຜົນກະທົບດັ່ງກ່າວແມ່ນມາຈາກການປ່ຽນແປງຂອງອັດຕາດອກເບ້ຍ, ອັດຕາແລກປ່ຽນ ແລະ ລາຄາຂອງຫຼັກຊັບໃນຕະຫຼາດທີ່ ທຄຕລ ລົງທຶນ ແຕ່ເຖິງຢ່າງໃດກໍ່ຕາມ ໃນປະຈຸບັນເຫັນວ່າຄວາມສ່ຽງດ້ານຕະຫຼາດສຳລັບ ທຄຕລ ແມ່ນມີໂອກາດເກີດຂຶ້ນໜ້ອຍ, ດັ່ງທີ່ເຫັນໄດ້ໃນໄລຍະຜ່ານມາ:

- ອັດຕາດອກເບ້ຍມີແນວໂນ້ມຫຼຸດລົງ ຊຶ່ງເປັນຜົນດີທີ່ຊ່ວຍໃຫ້ ທຄຕລ ຫຼຸດຜ່ອນການຈ່າຍພັນທະຜູກພັນຂອງດອກເບ້ຍເງິນຝາກ ແລະ ສາມາດຂະຫຍາຍເງິນກູ້ໄດ້ຫຼາຍຂຶ້ນ ແຕ່ກໍ່ເຫັນວ່າການຫຼຸດລົງຂອງອັດຕາດອກເບ້ຍໄດ້ເຮັດໃຫ້ການລະດົມທຶນຈາກເງິນຝາກຂະຫຍາຍຕົວຊ້າລົງ ຕໍ່ກັບເຫດການນີ້ ທຄຕລ ໄດ້ມີການປັບປຸງນະໂຍບາຍ ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວ ໂດຍການໃຫ້ອັດຕາດອກເບ້ຍທີ່ຢືດຢຸ່ນຕາມຄວາມເໝາະສົມ ແລະ ນຳໃຊ້ແຫຼ່ງທຶນໃນຕະຫຼາດ ໃຫ້ເກີດປະສິດທິຜົນຫຼາຍທີ່ສຸດ .
- ທຸລະກຳການຊື້-ຂາຍເງິນຕາຕ່າງປະເທດຂອງ ທຄຕລ ໂດຍສ່ວນຫຼາຍແມ່ນໃຫ້ບໍລິການລູກຄ້າທີ່ຕ້ອງການຊຳລະສະສາງຄ່າສິນຄ້າ ແລະ ຄ່າບໍລິການລະຫວ່າງປະເທດ ແລະ ເພື່ອປ້ອງກັນຄວາມສ່ຽງຈາກການປ່ຽນແປງຂອງອັດຕາແລກປ່ຽນ ທະນາຄານແມ່ນເຮັດທຸລະກຳການຊື້-ຂາຍເງິນຕາຕ່າງປະເທດພາຍໃນວັນ.
- ການລົງທຶນໃນຫຼັກຊັບຂອງ ທຄຕລ ທັງໝົດແມ່ນປະກອບມີລາຍການພັນທະບັດ ແລະ ຮຸ້ນໃນຕະຫຼາດຫຼັກຊັບລາວ ຊຶ່ງເຫັນວ່າມີຄວາມສ່ຽງຕ່ຳ ເນື່ອງຈາກເປັນພັນທະບັດລັດຖະບານ ແລະ ລາຄາຮຸ້ນໃນຕະຫຼາດພາຍໃນກໍ່ມີຄວາມຜັນຜວນໜ້ອຍ.

ເຖິງຢ່າງໃດກໍ່ຕາມ ທຄຕລ ກໍ່ໄດ້ສືບຕໍ່ປັບປຸງການບໍລິຫານຄຸ້ມຄອງຄວາມສ່ຽງດ້ານຕະຫຼາດຢ່າງຕໍ່ເນື່ອງ ເພື່ອຮັບປະກັນຜົນການດຳເນີນງານ ແລະ ໄປຄຽງຄູ່ກັນກັບການພັດທະນາຜະລິດຕະພັນທາງດ້ານການເງິນ ທັງໃນປັດຈຸບັນ ແລະ ອະນາຄົດ.

3.4 ການປ່ຽນແປງທາງດ້ານທຸລະກິດໃນຍຸກໄອທີ

ປັດຈຸບັນນີ້ ການແຂ່ງຂັນທາງດ້ານທຸລະກິດຂອງ ສະຖາບັນການເງິນແມ່ນນັບມື້ນັບສູງຂຶ້ນ ສະນັ້ນ ຈຶ່ງເຮັດໃຫ້ບັນດາສະຖາບັນການເງິນ ກໍ່ຄືບັນດາທະນາຄານທຸລະກິດ ຕ້ອງໄດ້ປັບຕົວຢູ່ຕະຫຼອດເວລາ ເພື່ອຄວາມຄົງຕົວ ແລະ ຂະຫຍາຍຕົວທາງດ້ານທຸລະກິດ ແລະ ໃຫ້ໄດ້ປຽບຄູ່ແຂ່ງ. ສະນັ້ນ, ການນຳເອົາເຄື່ອງມືເທັກໂນໂລຍີໃໝ່ໆທີ່ທັນສະໄໝເຂົ້າມາໃຊ້ຈຶ່ງເປັນເລື່ອງຈຳເປັນ ໃນການດຳເນີນທຸລະກິດຢູ່ໃນສະພາບເສດຖະກິດທີ່ມີການແຂ່ງຂັນສູງ ເພື່ອຫັນເອົາການບໍລິການຂອງທະນາຄານໄປສູ່ຄວາມທັນສະໄໝ, ອຳນວຍຄວາມສະດວກໃຫ້ລູກຄ້າໄດ້ເຂົ້າເຖິງການບໍລິການຂອງ

ທະນາຄານໄດ້ສະດວກຢູ່ທຸກທີ່ທຸກເວລາ, ຮັບປະກັນດ້ານຄວາມປອດໄພ ແລະ ເພີ່ມປະສິດທິພາບໃນການເຮັດວຽກ ພ້ອມທັງສ້າງຄວາມແຕກຕ່າງທາງດ້ານທຸລະກິດ. ພ້ອມດຽວກັນນັ້ນ ທະນາຄານ ຕ້ອງໄດ້ຄິດສະເໝີວ່າການນຳເອົາເທັກໂນໂລຊີທີ່ທັນສະໄໝເຂົ້າມານຳໃຊ້ນັ້ນແມ່ນມີຄວາມສ່ຽງ ໂດຍສະເພາະແມ່ນຄວາມສ່ຽງທາງດ້ານໄພຄຸກຄາມດ້ານລະບົບຂໍ້ມູນຂ່າວສານ ຫຼື ຄວາມປອດໄພທາງດ້ານລະບົບເຄືອຂ່າຍຄອມພິວເຕີຂອງທະນາຄານ ຊຶ່ງເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້ ແລະ ປັດຈຸບັນ ແມ່ນເພີ່ມຂຶ້ນຢ່າງວ່ອງໄວມີຫຼາຍຮູບແບບ ແລະ ມີຄວາມສັບຊ້ອນຫຼາຍຂຶ້ນ ຊຶ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ການຕັດສິນໃຈເລືອກໃຊ້ບໍລິການຂອງລູກຄ້າ ຈຶ່ງຈຳເປັນຕ້ອງໄດ້ຫັນໄປສູ່ຄວາມເປັນມາດຕະຖານສາກົນຫຼາຍຂຶ້ນ ແລະ ກຽມພ້ອມຢູ່ຕະຫຼອດເວລາໃນປ້ອງກັນ ແລະ ຮັບມືຕໍ່ບັນຫາດັ່ງກ່າວ; ຊຶ່ງລັກສະນະຄວາມສ່ຽງດ້ານລະບົບຂໍ້ມູນຂ່າວສານທີ່ເຫັນໄດ້ ແລະ ວິທີການປ້ອງກັນມີຄື :

- ຄວາມສ່ຽງຈາກການນຳເອົາອຸປະກອນອື່ນທີ່ບໍ່ໄດ້ຮັບອະນຸຍາດເຂົ້າມາເຊື່ອມຕໍ່ ທະນາຄານໄດ້ນຳໃຊ້ຊອຟແວເຂົ້າໃນການຄຸ້ມຄອງຊັບພະຍາກອນຄອມພິວເຕີແບບລວມສູນທີ່ມີປະສິດທິພາບສູງ, ສາມາດປ້ອງກັນໄວຣັດຄອມພິວເຕີໄດ້ ຊຶ່ງສາມາດຕິດຕາມ ແລະ ກວດກາໄດ້ສົມຄວນຕາມນະໂຍບາຍທີ່ ທະນາຄານໄດ້ກຳນົດໄວ້ໃນແຕ່ລະໄລຍະ.
- ຄວາມສ່ຽງຈາກເຄື່ອງຄອມພິວເຕີ ແລະ ອຸປະກອນໄອທີຂັດຂ້ອງບໍ່ສາມາດເຮັດວຽກໄດ້ປົກກະຕິ ທະນາຄານໄດ້ເອົາໃຈໃສ່ຕິດຕາມກວດກາບັນດາວັດຖຸອຸປະກອນໄອທີທີ່ຮັບໃຊ້ພາຍໃນທະນາຄານ ອຸປະກອນໃດໃຊ້ວຽກງານໄດ້ຫຼາຍປີຕ້ອງໄດ້ປ່ຽນອອກ, ປະກອບເຄື່ອງໃຫມ່ທີ່ມີຄຸນນະພາບສູງກວ່າ, ອັບເດດເຕັກໂນໂລຊີ, ຈັດຫາອຸປະກອນສຳຮອງໃຫ້ມີຄວາມພ້ອມໃນການປ່ຽນແທນ ສ້າງລະບົບແມ່ຂ່າຍແລ່ນຄູ່ຂະຫນານທັງໃນສະຖານທີ່ ແລະ ນອກສະຖານທີ່ ເພື່ອຮັບປະກັນການບໍລິການໃຫ້ມີລັກສະນະຕໍ່ເນື່ອງໄດ້ຕະຫລອດເວລາ.

ດັ່ງນັ້ນ, ເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ລູກຜູ້ມາໃຊ້ບໍລິການ, ຄູ່ຮ່ວມທຸລະກິດ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ ທະນາຄານຈຶ່ງໄດ້ມີຄວາມຈຳເປັນໃນການນຳໃຊ້ທຶນຮອນຈຳນວນໜຶ່ງເຂົ້າໃນການພັດທະນາ, ປັບປຸງ ແລະ ຍົກລະດັບດ້ານລະບົບໄອທີໄປສູ່ຄວາມທັນສະໄໝໃກ້ຄຽງສາກົນເທື່ອລະກ້າວ.

3.5 ການປ່ຽນແປງທາງດ້ານລະບຽບຫຼັກການ

ທະນາຄານ ແຫ່ງ ສປປ ລາວ ຊຶ່ງເປັນອົງກອນຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນຕ່າງໆໄດ້ວາງນະໂຍບາຍໃນການຄຸ້ມຄອງສະຖາບັນການເງິນອອກມາເປັນແຕ່ລະໄລຍະ ເພື່ອໃຫ້ການດຳເນີນທຸລະກິດສອດ ຄ່ອງກັບນະໂຍບາຍທາງດ້ານການເງິນຂອງ ທະນາຄານແຫ່ງ ສປປ ລາວ ເພື່ອເປັນບ່ອນອີງໃນການຄຸ້ມຄອງສະພາບຄ່ອງ ແລະ ຄຸ້ມຄອງຄວາມສ່ຽງໃນການດຳເນີນທຸລະກິດຂອງ ທະນາຄານ ໄດ້ແກ່:

3.5.1 ຫຼັກເກນບາເຊ ii (Basel II)

ໃນຫຼັກເກນບາເຊ II ຈະເນັ້ນໜັກເລື່ອງຄວາມພຽງພໍຂອງເງິນທຶນຕໍ່ຊັບສິນທີ່ມີຄວາມສ່ຽງ. ໃນຊັບສິນສ່ຽງແຕ່ລະປະເພດນັ້ນ ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດໄວ້ຢ່າງຈະແຈ້ງຕາມມາດຕະຖານ ແລະ ເງື່ອນໄຂຂອງອົງກອນການເງິນສາກົນ ຊຶ່ງຈະສ້າງຄວາມຫຍຸ້ງຍາກໃຫ້ແກ່ບັນດາທະນາຄານໃນການປະຕິບັດຕາມຫຼັກເກນດັ່ງກ່າວ,

ອັດຕາສ່ວນຄວາມພຽງພໍຂອງທຶນ (Capital Adequacy Ratio: CAR) ແມ່ນເປັນເຄື່ອງມືທີ່ໃຊ້ໃນການວັດແທກຄວາມພຽງພໍຂອງເງິນທຶນຕໍ່ຊັບສິນສ່ຽງ ຊຶ່ງຄິດໄລ່ຈາກທຶນຊັ້ນ I (Capital Tier 1) ແລະ ທຶນຊັ້ນ II (Capital Tier 2) ທຽບກັບຊັບສິນສ່ຽງທັງໝົດ (Risk Assets) :

CAR =[(ທຶນຊັ້ນ 1 + ທຶນຊັ້ນ 2) / ລວມຜົນຄູນຊັບສິນທີ່ມີນ້ຳໜັກຄວາມສ່ຽງທັງໝົດ] X 100 ≥ 8%.

3.5.2 ການປະຕິບັດຕາມມາດຕະຖານບັນຊີສາກົນ

ທະນາຄານ ຕ້ອງໄດ້ປະຕິບັດຕາມມາດຖານສາກົນດ້ານການລາຍງານການເງິນ (International Financial Reporting Standard ຫຼື IFRS) ໄດ້ສ້າງຄວາມຫຍຸ້ງຍາກ ແລະ ສ້າງຄວາມຊັກຊ້າໃຫ້ແກ່ການອອກບົດລາຍງານການເງິນຂອງ ທຄຕລ ເນື່ອງຈາກລະບຽບຫຼັກການ ແລະ ນະໂຍບາຍບັນຊີຈຳນວນໜຶ່ງທີ່ຍັງບໍ່ສອດຄ່ອງກັບມາດຕະຖານສາກົນ (IFRS) ເຊັ່ນ: ລາຍການທຸລະກຳກ່ຽວກັບສິນເຊື່ອ .

ແຕ່ເຖິງຢ່າງໃດກໍ່ຕາມ ປັດຈຸບັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາມາດສ້າງບົດລາຍງານການເງິນສາກົນດ້ວຍຕົນເອງ ແລະ ເປີດເຜີຍຂໍ້ມູນອອກສູ່ພາຍນອກຕາມກຳນົດເວລາ.

3.5.3 ການປະຕິບັດຕາມລະບຽບກົດໝາຍອື່ນ

ນອກຈາກນັ້ນບັນດາທະນາຄານທຸລະກິດ ຕ້ອງໄດ້ປະຕິບັດຕາມບັນດາກົດເກນ ແລະ ເງື່ອນໄຂຕ່າງໆທີ່ທະນາຄານກາງ ແລະ ອົງກອນຄຸ້ມຄອງທາງດ້ານຫຼັກຊັບ ກຳນົດອອກມາໃນແຕ່ລະໄລຍະນຳອີກ ເຊັ່ນ: ການຄຸ້ມຄອງທາງດ້ານສິນເຊື່ອ, ການຄຸ້ມຄອງດ້ານເງິນຕາຕ່າງປະເທດ, ດ້ານອັດຕາແລກປ່ຽນ, ການຄຸ້ມຄອງດ້ານອັດຕາດອກເບ້ຍ ແລະ ອື່ນໆ.

- ລະບຽບສາກົນ: ທຄຕລ ໄດ້ເຂົ້າເປັນສະຖາບັນການເງິນທີ່ປະຕິບັດພາຍໃຕ້ກົດໝາຍ FATCA (Foreing Accout Tax Compliance Act) ກົດໝາຍວ່າດ້ວຍ ການເສຍພາສີອາກອນຂອງບຸກຄົນ ແລະ ນິຕິບຸຄົນອາເມລິກາທີ່ເຄື່ອນໄຫວຢູ່ຕ່າງປະເທດ ໄດ້ໃຫ້ຄວາມສຳຄັນໃນການມີສ່ວນຮ່ວມເຂົ້າໃນວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ນອກນັ້ນຍັງມີການປະຕິບັດມາດຕະການຕ່າງໆທີ່ຕິດພັນກັບບັນຊີລາຍຊື່ທີ່ຖືກຂ້ວມບາດໂດຍອົງການຈັດຕັ້ງຂອງສາກົນ.
- ລະບຽບພາຍໃນ: ທຄຕລ ໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບກ່ຽວຂ້ອງທີ່ປະກາດໃຊ້ໃນແຕ່ລະໄລຍະ. ນອກນັ້ນຍັງມີການປັບປຸງ ແລະ ພັດທະນາບັນດາລະບຽບ, ນະໂຍບາຍ ແລະ ບັນດາຄູ່ມື.

3.5.4 ຄວາມສ່ຽງດ້ານສະພາບຄ່ອງ

ຄວາມສ່ຽງທາງດ້ານສະພາບຄ່ອງແມ່ນຄວາມສ່ຽງທີ່ເກີດຈາກການທີ່ ທະນາຄານ ບໍ່ສາມາດຊຳລະໜີ້ ແລະ ພາລະຜູກພັນທາງສັນຍາຂອງທະນາຄານໄດ້ ເນື່ອງຈາກການຂາດສະພາບຄ່ອງທາງການເງິນ. ຈຸດປະສົງໃນການບໍລິຫານຄວາມສ່ຽງດ້ານສະພາບຄ່ອງຂອງທະນາຄານກໍ່ຄື: ທະນາຄານຕ້ອງມີເງິນທຶນທີ່ເໝາະສົມ ແລະ ພຽງພໍທີ່ຈະຊຳລະໜີ້ ແລະ ພາລະຜູກພັນທາງການເງິນອື່ນໆທັງໃນປັດຈຸບັນ ແລະ ອະນາຄົດໄດ້ ນອກນັ້ນຍັງສາມາດນຳເງິນທຶນໄປຫາຜົນປະໂຫຍດທາງອື່ນໄດ້ອີກ. ປັດໄຈຄວາມສ່ຽງດ້ານສະພາບຄ່ອງທີ່ສຳຄັນ ຂອງທະນາຄານໄດ້ແກ່: ໂຄງສ້າງທາງການເງິນ, ແຫຼ່ງທີ່ມາຂອງທຶນ ແລະ ການນຳໃຊ້ແຫຼ່ງທຶນ.

ຕໍ່ກັບຄວາມສ່ຽງດັ່ງກ່າວ ທະນາຄານ ໄດ້ມີຄະນະກຳມະການບໍລິຫານຊັບສິນ-ໜີ້ສິນ (ALCO) ຊຶ່ງມີການທົບທວນຢ່າງເປັນປະຈຳ ໂດຍມີພະແນກບໍລິຫານທຶນ ແລະ ບໍລິການລະຫວ່າງປະເທດ (TISD) ເປັນເສນາທິການໃຫ້ແກ່ຄະນະດັ່ງກ່າວ ຊຶ່ງພະແນກທີ່ເປັນເສນາທິການຕ້ອງໄດ້ມີການບໍລິຫານ ແລະ ຕິດຕາມໃນແຕ່ລະວັນ ນອກຈາກນີ້ຍັງມີການພັດທະນາລະບົບການລາຍງານຢ່າງຕໍ່ເນື່ອງ.

3.6 ຄວາມສ່ຽງດ້ານອື່ນໆ

ນອກຈາກຄວາມສ່ຽງທີ່ໄດ້ກ່າວມາຂ້າງເທິງແລ້ວ ຍັງມີຄວາມສ່ຽງອື່ນໆທີ່ບໍ່ສາມາດຄາດຄະເນໄດ້ ແຕ່ກໍ່ສາມາດສົ່ງຜົນສະທ້ອນເຖິງການເຄື່ອນໄຫວຂອງ ທຄຕລ ເຊັ່ນ: ໄພທຳມະຊາດ, ສົງຄາມ, ອຸທົກກະໄພ, ອັກຄີໄພ, ລະເບີດ ແລະ ອື່ນໆ ອັນເປັນປັດໄຈທີ່ສາມາດສົ່ງຜົນຕໍ່ການດຳເນີນທຸລະກິດຂອງທະນາຄານໄດ້. ດັ່ງນັ້ນ, ທຄຕລ ຈຶ່ງໃຫ້ຄວາມສຳຄັນໃນການບໍລິຫານຄວາມສ່ຽງເຫຼົ່ານີ້ ດ້ວຍການກະກຽມພັດທະນານະໂຍບາຍ ແລະ ເຄື່ອງມືການຄຸ້ມຄອງຄວາມສ່ຽງໃຫ້ຮັດກຸມ ແນ່ໃສ່ຮັບປະກັນປະສິດທິພາບທາງດ້ານຂະບວນການເຮັດວຽກຕະຫຼອດຈົນການບໍລິຫານຄວາມສ່ຽງຢ່າງເປັນລະບົບ ແລະ ເປັນມາດຕະຖານດຽວກັນ, ພ້ອມກັນນັ້ນ ເພື່ອຮອງຮັບກັບເຫດການສຸກເສີນທີ່ອາດສົ່ງຜົນກະທົບຕໍ່ທະນາຄານ ທຄຕລ ຍັງມີການກະກຽມພັດທະນາແຜນການບໍລິຫານຄວາມຕໍ່ເນື່ອງທາງທຸລະກິດ (Business Continuity Management) ເພື່ອຮັບປະກັນວ່າ ທຄຕລ ສາມາດຮັບມືກັບສະຖານະການທີ່ອາດເກີດຂຶ້ນໄດ້ໃນລະດັບໃດໜຶ່ງ.


4. ທຸລະກິດທີ່ດຳເນີນໃນປັດຈຸບັນ

ທຄຕລ ໄດ້ດຳເນີນທຸລະກິດທາງດ້ານທະນາຄານທຸລະກິດຕາມລະບຽບຫຼັກການທີ່ ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດຊຶ່ງບັນດາຜະລິດຕະພັນ ແລະ ການບໍລິການຂອງ ທຄຕລ ທີ່ສະໜອງໃຫ້ແກ່ລູກຄ້ານັ້ນກໍ່ເໝືອນກັບບັນດາທະນາຄານອື່ນໆທົ່ວໄປ ຊຶ່ງລວມມີ ເງິນຝາກປະຈຳ, ເງິນຝາກແບບມີກຳນົດ, ການປ່ອຍສິນເຊື່ອ, ການຄ້ຳປະກັນ ແລະ ອື່ນໆ; ແຕ່ເນື່ອງຈາກວ່າ ທຄຕລ ມີທ່າແຮງບໍ່ມຊ້ອນຫຼາຍຢ່າງຈຶ່ງເຮັດໃຫ້ ທຄຕລ ໄດ້ພັດທະນາຕັກໂນໂລຊີໃຫ້ຕິດພັນກັບຜະລິດຕະພັນຂອງທະນາຄານ ເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຄ້າ ເຊັ່ນ: BCEL One, Mobile Banking, Internet Banking ແລະ ອື່ນໆທີ່ມີຄວາມລ້ຳໜ້າກວ່າບັນດາທະນາຄານທຸລະກິດອື່ນໆ. ການບໍລິການທົ່ວໄປມີລາຍລະອຽດດັ່ງນີ້:

4.1 ເງິນຝາກ

ໃນປີ 2013 ທຄຕລ ມີເງິນຝາກ 15,513 ຕື້ກີບ ການຂະຫຍາຍເງິນຝາກນັບມື້ນັບຫຼາຍຂຶ້ນ ໂດຍອີງໃສ່ສະພາບເສດຖະກິດໃນແຕ່ລະໄລຍະການລະດົມທຶນຂອງ ທຄຕລ ກໍ່ໄດ້ມີຫຼາຍຊ່ອງທາງ ໂດຍສະເພາະເງິນຝາກໃນປີ 2014 ເພີ່ມຂຶ້ນເປັນ 21,935 ຕື້ກີບ ຊຶ່ງໄດ້ເພີ່ມຂຶ້ນ 41% ທຽບໃສ່ປີ 2013 ແລະ ປີ 2015 ເພີ່ມຂຶ້ນ 8% ທຽບໃສ່ປີ 2014 ເນື່ອງຈາກວ່າ ມີລູກຄ້າລາຍໃຫຍ່ເພີ່ມຂຶ້ນເຮັດໃຫ້ເງິນຝາກມີການເພີ່ມຂຶ້ນສູງ

ຮູບພາບທີ 1: ເງິນຝາກ




ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

4.2 ສິນເຊື່ອ

ໃນປີ 2013 ທຄຕລ ມີຍອດລວມສິນເຊື່ອ 9,279 ຕື້ກີບ ການຂະຫຍາຍສິນເຊື່ອສ່ວນໃຫ່ຍແມ່ນອີງໃສ່ສະພາບເສດຖະກິດໃນແຕ່ລະໄລຍະ ການປ່ອຍກູ້ສ່ວນໃຫຍ່ແມ່ນໄປຫາຂະແໜງການກໍ່ສ້າງ. ໃນປີ 2014 ຍອດສິນເຊື່ອເພີ່ມຂຶ້ນເປັນ 9,728 ຕື້ກີບ ຊຶ່ງໄດ້ເພີ່ມຂຶ້ນ 5% ທຽບໃສ່ປີ 2013, ເນື່ອງຈາກໃນໄລຍະດັ່ງກ່າວສະພາບເສດຖະກິດມີການຜັນຜວນ ແລະ ໄດ້ສົ່ງຜົນກະທົບໃຫ້ແກ່ການເກັບກູ້ໜີ້ສິນ ແລະ ການປ່ອຍກູ້. ໃນປີ 2015 ຍອດສິນເຊື່ອທັງໝົດມີ 11,026 ຕື້ກີບ ຊຶ່ງເພີ່ມຂຶ້ນ 13% ເມື່ອສົມທຽບກັບ ປີ2014.

ຮູບພາບທີ 2: ສິນເຊື່ອ




ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

4.3 ຜະລິດຕະພັນບັດ ATM

ບັດ ATM ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເປັນທີ່ນິຍົມນຳໃຊ້ຂອງມວນຊົນທົ່ວໄປ, ເນື່ອງຈາກວ່າ ທຄຕລ ມີສາຂາ ແລະ ໜ່ວຍບໍລິການຢູ່ທົ່ວທຸກແຂວງ ຊຶ່ງແຕກຕ່າງຈາກຫຼາຍທະນາຄານທີ່ຍັງບໍ່ທັນຂະຫຍາຍສາຂາໄປສູ່ຕ່າງແຂວງ, ດ້ວຍເຫດນີ້ ບັດ ATM ຈຶ່ງຖືກນຳໃຊ້ຢ່າງແຜ່ຫຼາຍ. ນອກຈາກນັ້ນ ທຄຕລ ຍັງໄດ້ສະໜອງບັດ ATM ໃນຮູບແບບບັດນັກສຶກສາ ແລະ ບັນດາພະນັກງານລັດຖະກອນ ໃນຂອບເຂດທົ່ວປະເທດ.

ການເພີ່ມຈຳນວນຂອງບັດ ATM ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຫັນໄດ້ຈາກເສັ້ນສະແດງດ້ານລຸ່ມນີ້ ຊຶ່ງມີການເພີ່ມຂຶ້ນໃນແຕ່ລະປີ. ໃນປີ 2013 ທຄຕລ ໄດ້ອອກບັດທັງໝົດ 280, 439 ບັດ; ໃນ ປີ 2014 ມີການຂະຫຍາຍບັດ ATM ມາເປັນ 340,070 ບັດ ຊຶ່ງໃນປີດັ່ງກ່າວໄດ້ເພີ່ມຂຶ້ນ 59, 631 ບັດ ຫຼື 21% ເມື່ອທຽບໄດ້ ປີ 2013. ການເພີ່ມຈຳນວນຂອງບັດໃນປີ 2015 ຂະຫຍາຍໄດ້ 43,570 ບັດ ຊຶ່ງເພີ່ມຂຶ້ນ 13% ເມື່ອທຽບໃສ່ປີ 2014. ປີ 2016 ສາມາດຂະຫຍາຍບັດໄດ້ຈຳນວນ 48,096 ບັດຊຶ່ງເພີ່ມຂຶ້ນ 13% ເມື່ອທຽບໃສ່ປີ 2015.

ຮູບພາບທີ 3: ຈຳນວນບັດ ATM




ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

4.4 ຕູ້ ATM

ການຂະຫຍາຍຕູ້ ATM ຂອງ ທຄຕລ ແມ່ນອີງໃສ່ການຂະຫຍາຍຕາໜ່າງການບໍລິການຂອງ ທຄຕລ ໃນທົ່ວປະເທດ. ໃນປີ 2013 ສາມາດຕິດຕັ້ງຕູ້ ATM ໄດ້ທັງໝົດ 246 ໜ່ວຍໃນທົ່ວປະເທດ;ໃນປີ 2014 ຕິດຕັ້ງໄດ້ເພີ່ມ 37 ໜ່ວຍ ຊຶ່ງເພີ່ມຂຶ້ນ 15% ເມື່ອທຽບໃສ່ປີ 2013; ປີ 2015 ຕິດຕັ້ງໄດ້ເພີ່ມ 36 ໜ່ວຍ ຊຶ່ງເພີ່ມຂຶ້ນ 13% ເມື່ອທຽບໃສ່ປີ 2014, ປີ 2016 ຕິດຕັ້ງໄດ້ເພີ່ມ 19 ໜ່ວຍ ຊຶ່ງເພີ່ມຂຶ້ນ 6% ເມື່ອທຽບໃສ່ປີ 2015. ໃນປີ 2016 ໄດ້ຕິດຕັ້ງຕູ້ ATM ຂອງ ທຄຕລ ທົ່ວປະເທດທັງໝົດ 338 ເຄື່ອງ.

ຮູບພາບທີ 4: ຈຳນວນຕູ້ ATM



ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ


4.5 ບັດວີຊາ ເຄຼດິດ (BCEL VISA CREDIT)

ເປັນບັດເຄຼດິດແບບ chip ຕາມມາດຕະຖານສາກົນ ຊຶ່ງມີຄວາມປອດໄພສູງ, ບັດເຄຼດິດຄືບັດແທນເງິນສົດລ່ວງໜ້າ ຫຼື ເປັນບັດສິນເຊື່ອ ທີ່ສະມາຊິກບັດຈະໄດ້ຮັບວົງເງິນສິນເຊື່ອຈາກທະນາຄານໂດຍອີງຕາມລະບຽບທົ່ວໆ ອອກ. ບັດດັ່ງກ່າວສາມາດໃຊ້ຊຳລະຄ່າສິນຄ້າ ຫຼື ບໍລິການຕ່າງໆ ຫຼື ຈ່າຍເງິນຜ່ານອິນເຕີເນັດ; ສາມາດສະມັກບັດເສີມ

ໄດ້ສູງສຸດ 1 ບັດ, ໄລຍະເວລາປອດດອກເບ້ຍ ສູງສຸດ 45 ວັນ (ຂຶ້ນຢູ່ກັບວັນທີທີ່ໃຊ້ຈ່າຍ) ກໍລະນີຊຳລະເຕັມຈຳນວນເງິນທີ່ຮຽກເກັບ ແລະ ຊຳລະໃນເວລາທີ່ກຳນົດ; ສາມາດເລືອກຊຳລະຄ່າໃຊ້ຈ່າຍພຽງບາງສ່ວນ ແລະ ຈະໄດ້ຮັບການຍົກເວັ້ນຄ່າທຳນຽມບາງສ່ວນຖ້າຊຳລະຫຼາຍກວ່າ 20% ຂອງຍອດນຳໃຊ້ຕາມໃບແຈ້ງ (Statement); ສາມາດໃຊ້ກັບຮ້ານຄ້າທີ່ມີເຄື່ອງໝາຍຮັບບັດເຄຼດິດ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ຮ້ານຄ້າທີ່ມີສັນຍາລັກ ວີຊາ ທົ່ວປະເທດ ແລະ ທົ່ວໂລກ. ບັດວີຊາເຄຼດິດ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ມີ 02 ປະເພດ ຄື: ບັດເງິນ ແລະ ບັດຄຳ.

ການອອກບັດ ວີຊາ ເຄຣດິດ ໃນແຕ່ລະປີ ໄດ້ມີການເພີ່ມຂຶ້ນໄປຕາມລຳດັບ ຊຶ່ງໃນຕາຕະລາງໄດ້ສະແດງໃຫ້ເຫັນໃນປີ 2014 ສາມາດສະໜອງບັດເພີ່ມຂຶ້ນໄດ້ ຈຳນວນ 586 ບັດ ຊຶ່ງເພີ່ມຂຶ້ນ 41% ເມື່ອທຽບໃສ່ ປີ 2013; ໃນປີ 2015 ສາມາດຂະຫຍາຍໄດ້ເພີ່ມຕື່ມ ຈຳນວນ 647 ບັດ ດ້ວຍອັດຕາການຂະຫຍາຍຕົວ 32% ເມື່ອສົມທຽບໃນປີ 2014; ໃນປີ 2016 ຂະຫຍາຍບັດໄດ້ ຈຳນວນ 652 ບັດ ຊຶ່ງເພີ່ມຂຶ້ນ 24% ເມື່ອທຽບໃສ່ ປີ 2015.

ຮູບພາບທີ 5: ຈຳນວນບັດ ວີຊາ ເຄຣດິດ



ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

4.6 ບັດວີຊາ ເດບິດ (BCEL VISA DEBIT)

ໂດຍອີງໃສ່ທ່າແຮງຂອງ ທຄຕລ ດັ່ງທີ່ໄດ້ລະບຸໄວ້ຂ້າງເທິງການຊຸກໃຊ້ບັດວີຊ້າເດບິດເປັນທີ່ນິຍົມຂອງລູກຄ້າ ທຄຕລ ໃນຂອບເຂດທົ່ວປະເທດ ເພາະສາມາດຖອນເງິນໄດ້ທັງພາຍໃນ ແລະ ຕ່າງປະເທດ. ເປັນບັດເຄຼດິດແບບ chip ຕາມມາດຕະຖານສາກົນ ຊຶ່ງມີຄວາມປອດໄພສູງ, ບັດເດບິດຄືບັດແທນເງິນສົດສາມາດໃຊ້ຊຳລະຄ່າສິນຄ້າ ຫຼື ບໍລິການຕ່າງໆ ຫຼື ຈ່າຍເງິນຜ່ານອິນເຕີເນັດຄືກັບບັດເຄຼດິດ. ບັດເດບິດ ຕ່າງຈາກບັດເຄຼດິດຄື ບັດເດບິດແມ່ນວິທີການຊຳລະທັນທີຈາກບັນຊີເງິນຝາກຂອງລູກຄ້າ.

ໂດຍອີງໃສ່ຮູບການສະແດງຂ້າງລຸ່ມ, ການເຕີບໂຕຂອງບັດ ວີຊາ ເດບິດ ກໍ່ເປັນການບໍລິການໜຶ່ງທີ່ສັງຄົມໃຫ້ຄວາມນິຍົມ ໃນປີ 2014 ຊຶ່ງຂະຫຍາຍເພີ່ມໄດ້ 1,381 ບັດ ຫຼື ເພີ່ມຂຶ້ນ 36% ເມື່ອທຽບໃສ່ ປີ 2013, ປີ 2015 ຂະຫຍາຍບັດໄດ້ຈຳນວນ 1,319 ຊຶ່ງເພີ່ນຂຶ້ນ 25 % ເມື່ອທຽບໃສ່ ປີ 2014 (ໃນປີ 2015 ບັດ ວີຊາ ເດບິດ ບໍ່ໄດ້ຂະຫຍາຍເທົ່າທີ່ຄວນ ເນື່ອງຈາກມີການຜັດທະນາຮູບແບບບັດ ແລະ ໄດ້ຍຸດການພິມບັດຊົ່ວຄາວໃນຊ່ວງໄຕມາດ 3 ຂອງປີ ແລະ ໄດ້ພິມບັດຄືນໃນຕົ້ນປີ 2016). ເຖິງຢ່າງໃດກໍ່ຕາມ ບັດ ວີຊາ ເດບິດ ໃນປີ 2016 ຍັງສາມາດສືບຕໍ່ຂະຫຍາຍເພີ່ມໄດ້ 1,654 ບັດ ຊຶ່ງເພີ່ມຂຶ້ນ 25% ເມື່ອທຽບໃສ່ກັບປີ 2015.

ຮູບພາບທີ 6: ຈຳນວນບັດ ວີຊາ ເດບິດ



ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

4.7 BCEL i-Bank

ຜະລິດຕະພັນ I-bank ເປັນຜະລິດຕະພັນທີ່ຖືກສ້າງຂຶ້ນໃນປີ 2008 ແລະ ໄດ້ຮັບການພັດທະນາເປັນແຕ່ລະໄລຍະ, ຜະລິດຕະພັນດັ່ງກ່າວເໝາະສົມກັບ ບັນດາອົງກອນລັດ-ເອກະຊົນ, ອົງກອນສາກົນ, ບໍລິສັດ ຫຼື ນິຕິບຸກຄົນ ແລະ ກຸ່ມນິຕິບຸກຄົນ.

ປີ 2013 ມີຜູ້ນຳໃຊ້ທັງໝົດ 2,269 ລາຍ, ໃນປີ 2014 ຂະຫຍາຍໄດ້ 505 ລາຍ ເພີ່ມຂຶ້ນ 22% ເມື່ອທຽບໃສ່ປີ 2013, ປີ 2014 ຂະຫຍາຍໄດ້ 414 ລາຍ ຊຶ່ງເພີ່ມຂຶ້ນ 15% ເມື່ອທຽບໃສ່ປີ 2015. ໃນປີ 2016 ຜະລິດຕະພັນດັ່ງກ່າວໄດ້ມີການພັດທະນາໃຫ້ສາມາດໂອນເງິນເຖືອນຜະນັກງານຜ່ານລະບົບໄດ້ ໂດຍບໍ່ຈຳເປັນເຂົ້າມາທະນາຄານ, ໂອນ, ແລກປ່ຽນເງິນຕາເຂົ້າໃນບັນຊີ ແລະ ອື່ນໆ ຊຶ່ງເຮັດໃຫ້ມີຜູ້ຊົມໃຊ້ເພີ່ມຂຶ້ນເປັນຈຳນວນຫຼາຍ. ໃນປີ 2016 ຂະຫຍາຍໄດ້ 2,073 ລາຍ ຊຶ່ງເພີ່ມຂຶ້ນ 85% ເມື່ອທຽບໃສ ປີ 2015.

ຮູບພາບທີ 7: ຈຳນວນຜູ້ຊົມໃຊ້ i-Bank




ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

4.8 BCEL ONE

ຜະລິດຕະພັນ BCEL ONE ໄດ້ເລີ່ມຕົ້ນເປີດນຳໃຊ້ໃນເດືອນ ກໍລະກົດ ປີ 2013 ຜະລິດຕະພັນດັ່ງກ່າວ ເປັນຜະລິດຕະພັນໃໝ່ທີ່ ທຄຕລ ໄດ້ສ້າງຂຶ້ນມາເພື່ອຮັບໃຊ້ສັງຄົມ, ເປົ້າໝາຍຫຼັກໃນການສ້າງຜະລິດຕະພັນດັ່ງກ່າວ ແມ່ນເພື່ອເປັນການຫຼຸດຜ່ອນລູກຄ້າຂອງ ທຄຕລ ເຂົ້າມາບໍລິການໃນທະນາຄານ ຊຶ່ງລູກຄ້າສາມາດເຮັດທຸລະກຳການ ເງິນດ້ວຍຕົນເອງ ເຊັ່ນ: ການໂອນເງິນ, ຊຳລະຄ່ານ້ຳ, ຄ່າໄຟຟ້າ, ຈ່າຍຄ່າໂທລະສັບໄດ້ບາງເຄືອຂ່າຍ. ມາເຖິງປັດຈຸບັນ BCEL ONE ເປັນຜະລິດຕະພັນທີ່ສັງຄົມໃຫ້ຄວາມນິຍົມຫຼາຍ ແລະ ເປັນຜະລິດຕະພັນທາງດ້ານເອເລັກໂທນິກທີ່ໃຫ້ ຄວາມສະດວກສະບາຍໃຫ້ກັບລູກຄ້າ ຊຶ່ງເຫັນໄດ້ຈາກໃນປີ 2013 ຂະຫຍາຍໄດ້ 9,783 ຜູ້ຊົມໃຊ້.

ປີ 2014 ເພີ່ມຂຶ້ນ 8,079 ຜູ້ຊົມໃຊ້ ຊຶ່ງເພີ່ມຂຶ້ນ 83% ເມື່ອທຽບໃສ່ປີ 2013 ແລະ ໄດ້ມີການຂະຫຍາຍ ເປັນລຳດັບ, 2015 ເພີ່ມຂຶ້ນ 3,492 ຜູ້ຊົມໃຊ້ ຊຶ່ງເພີ່ມຂຶ້ນ 20%ເມື່ອທຽບໃສ່ປີ 2014. ໃນປີ 2016 ເພີ່ມຂຶ້ນເຖິງ 64,089 ລາຍ ຊຶ່ງເພີ່ມຂຶ້ນ 40% ເມື່ອທຽບໃສ່ປີ 2015. ມາຮອດປັດຈຸບັນ ທຄຕລ ເປັນຜູ້ໃຫ້ບໍລິການພຽງແຕ່ເຈົ້າ ດຽວເທົ່ານັ້ນໃນຂອບເຂດທົ່ວປະເທດຊຶ່ງຍັງບໍ່ທັນມີທະນາຄານອື່ນ ຫຼື ອົງກອນອື່ນໃຫ້ການບໍລິການທີ່ມີລັກສະນະດຽວ ກັນນີ້. ສິ່ງດັ່ງກ່າວເຮັດໃຫ້ ທຄຕລ ໄດ້ປຽບທາງດ້ານທຸລະກິດ ເພາະບໍ່ມີຄູ່ແຂ່ງໃນ ສາຍຜະລິດຕະພັນນີ້.

ຮູບພາບທີ 8: ຈຳນວນຜູ້ຊົມໃຊ້ BCEL ONE




ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

4.9 SMS Banking

ການບໍລິການ SMS BANKING ມີໃຫ້ບໍລິການມາແຕ່ປີ 2008 ຊຶ່ງໃຫ້ການບໍລິການແຈ້ງເຕືອນ ການເຄື່ອນໄຫວທຸລະກຳທາງການເງິນຂອງລູກຄ້າ. ໃນປີ 2014 ສາມາດຂະຫຍາຍໄດ້ 5,497 ລາຍຜູ້ຊົມໃຊ້ ຊຶ່ງເພີ່ມ ຂຶ້ນ 31 % ເມື່ອທຽບໃສ່ປີ 2013, ປີ 2015 ຂະຫຍາຍໄດ້ 5,359 ລາຍຜູ້ຊົມໃຊ້ ຊຶ່ງເພີ່ມຂຶ້ນ 23% ເມື່ອທຽບໃສ່ ປີ 2014; ປີ 2016 ຂະຫຍາຍໄດ້ 14,368 ລາຍຜູ້ຊົມໃຊ້ ຊຶ່ງເພີ່ມຂຶ້ນ 50% ເມືອທຽບໃສ່ປີ 2015 . ສາເຫດທີ່ ເຮັດໃຫ້ເພີ່ມຂຶ້ນສູງຍ້ອນວ່າ ທຄຕລ ໄດ້ມີການປັບປຸງຮູບແບບການບໍລິການ ແລະ ເຮັດໃຫ້ຜະລິດຕະພັນດັ່ງກ່າວເປັນ ຜະລິດຕະພັນເສີມເມື່ອລູກຄ້າເຂົ້າມາເປີດບັນຊີໃໝ່.

ຮູບພາບທີ 9: ຈຳນວນຜູ້ຊົມໃຊ້ SMS BANKING



ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

5. ຊັບສິນທີ່ໃຊ້ໃນການດຳເນີນທຸລະກິດ

ມາຮອດວັນທີ 31/12/2016 ມູນຄ່າຊັບສິນຂອງ ທຄຕລ ແມ່ນມີເຖິງ 31,935,026 ລ້ານກີບ ຍ້ອນຈຸດພິເສດຂອງຂົງເຂດທຸລະກິດການທະນາຄານ ຊັບສິນຕົ້ນຕໍຂອງ ທຄຕລລວມມີເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ, ເງິນຝາກຢູ່ທະນາຄານອື່ນ, ເງິນປ່ອຍກູ້ໃຫ້ແກ່ລູກຄ້າ, ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ, ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ, ການລົງທຶນໃນບັນດາບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ, ຊັບສົມບັດຄົງທີ່ ແລະ ອຸປະກອນ, ຊັບສົມບັດຄົງທີ່ບໍ່ມີຕົວຕົນ, ຊັບສິນອາກອນເຍື້ອນຊຳລະ ແລະ ຊັບສິນອື່ນໆ ດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ 14: ຊັບສິນທີ່ໃຊ້ໃນການດຳເນີນທຸລະກິດ

ຊັບສິນ	ປີ 2015	ປີ 2016
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	9,466,790	50680,936
ເງິນຝາກຢູ່ທະນາຄານອື່ນ	1,986,635	2,950,093
ເງິນກູ້ໃຫ້ແກ່ລູກຄ້າ	10,854,955	19,093,205
ການລົງທຶນດ້ານການເງິນ - ປະເພດມີໄວ້ແລກປ່ຽນ	6,046	39
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ	224,348	198,121
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	1,776,408	2,553,110
ການລົງທຶນໃນບັນດາບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ	555,418	551,449
ຊັບສົມບັດຄົງທີ່ ແລະ ອຸປະກອນ	391,146	447,935
ຊັບສົມບັດຄົງທີ່ບໍ່ມີຕົວຕົນ	297,744	243,521

ຊັບສິນອາກອນເຍື້ອນຊຳລະ	6,259	10,856
ຊັບສິນອື່ນໆ	211,111	294,009
ລວມຊັບສິນ	**25,776,860**	**32,023,274**

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

6. ໂຄງການໃນອະນາຄົດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ແລະ ກ້າວສູ່ມາດຕະຖານສາກົນ ພາລະກິດທີ່ສຳຄັນຂອງ ທຄຕລ ມີຄື: ພັດທະນາລະບົບບໍລິຫານອົງກອນທີ່ເຂັ້ມແຂງ ເນັ້ນການປັບປຸງທຸລະກິດ ທະນາຄານໃຫ້ແທດເໝາະກັບສະພາບການປ່ຽນແປງໃນໄລຍະໃໝ່ ຖືເອົາການສ້າງວັດທະນະທຳຄຸ້ມຄອງບໍລິຫານ ຄວາມສ່ຽງໃຫ້ເຂັ້ມແຂງ ແລະ ສອດຄ່ອງຕາມຫລັກການ Basel II, ຍົກສູງປະສິດທິພາບການດຳເນີນທຸລະກິດ, ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານບໍລິຫານທີ່ມີສັກກະຍະພາບ, ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ, ໄດ້ ມາດຕະຖານສາກົນ ທາງດ້ານລະບົບລາຍງານ, ນຳໃຊ້ລະບົບເທັກໂນໂລຊີທີ່ທັນສະໄໝ ແລະ ຍົກລະດັບຄວາມຮູ້, ຄວາມຊ່ຽວຊານສະເພາະດ້ານໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ. ໃນນັ້ນ, ຈະມີ 6 ແຜນງານຫຼັກ, 32 ໂຄງການ ແລະ 216 ແຜນວຽກ. ໃນນັ້ນ 6 ແຜນງານຫຼັກມີຄື:

❖ ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຕະຖານສາກົນ

ພັດທະນາການຄຸ້ມຄອງບໍລິຫານ (Corporate Governance ຫຼື CG) ຊຶ່ງແມ່ນລະບົບການຄຸ້ມຄອງ ບໍລິຫານທີ່ຕິດພັນດ້ານໂຄງສ້າງການຄວບຄຸມ ແລະ ຂະບວນການຕ່າງໆ ຂອງກອງປະຊຸມຜູ້ຖືຮຸ້ນ, ສະພາບໍລິຫານ, ຜູ້ ອຳນວຍ ການ, ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ເພື່ອສ້າງໃຫ້ບໍລິສັດມີແນວທາງໃນການຈັດຕັ້ງປະຕິບັດ ແລະ ມີ ມາດຕະຖານໃນການຄຸ້ມຄອງກິດຈະການທີ່ດີ, ການຄຸ້ມຄອງບໍລິຫານກິດຈະການຂອງບໍລິສັດທີ່ມີປະສິດທິພາບ, ໂປ່ງ ໃສ, ສາມາດກວດສອບໄດ້ ແລະ ຄຳນຶງເຖິງຜູ້ມີສ່ວນໄດ້ສ່ວນເສຍທຸກພາກສ່ວນ.

❖ ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ປະຕິບັດຫຼັກເກນ Basel II

ພາຍຫຼັງການເຂົ້າເປັນປະຊາຄົມເສດຖະກິດອາຊຽນ ການແຂ່ງຂັນໃນລະບົບການເງິນ-ການທະນາຄານ ກໍ່ມີ ແນວໂນ້ມສູງຂຶ້ນ ຊຶ່ງຮຽກຮ້ອງໃຫ້ບັນດາທະນາຄານຕ້ອງມີການປັບປຸງ ແລະ ສ້າງພື້ນຖານຄວາມເຂັ້ມແຂງໃຫ້ອົງ ກອນເພື່ອທີ່ຈະສາມາດຮອງຮັບການແຂ່ງຂັນ ແລະ ຮັບປະກັນການບັນລຸເປົ້າໝາຍຂອງທະນາຄານ ໂດຍການສ້າງ ພື້ນຖານລະບົບຄຸ້ມຄອງຄວາມສ່ຽງຢ່າງມີປະສິດທິພາບ ແລະ ໄດ້ມາດຕະຖານພາກພື້ນ ກໍ່ຄືສາກົນ, ທຄຕລ ມີແນວທາງ ໃນການສ້າງພື້ນຖານລະບົບຄຸ້ມຄອງຄວາມສ່ຽງ ດ້ວຍການສ້າງຕັ້ງພະແນກຄຸ້ມຄອງຄວາມສ່ຽງ ແລະ ຕ້ານການຝອກ ເງິນຂຶ້ນ ໂດຍແຍກໃສ່ຄຸ້ມຄອງຄວາມສ່ຽງໃຫ້ມີປະສິດທິພາບ ແລະ ດຳເນີນຕາມຫຼັກການ Basel II. ສະນັ້ນ, ເພື່ອໃຫ້ ບັນລຸເປົ້າໝາຍການສ້າງລະບົບຄຸ້ມຄອງຄວາມສ່ຽງຕາມຫຼັກການ Basel II, ທຄຕລ ຕ້ອງເອົາໃຈໃສ່ບັນດາວຽກງານ ຫຼັກ ດັ່ງນີ້:

- ປັບປຸງລະບົບຄຸ້ມຄອງຄວາມສ່ຽງໃຫ້ສອດຄ່ອງກັບນະໂຍບາຍຂອງ ທະນາຄານແຫ່ງ ສປປ ລາວ; ແລະ
- ມາດຕະຖານ Basel II;
- ປັບປຸງນະໂຍບາຍຄຸ້ມຄອງຄວາມສ່ຽງໃຫ້ໄດ້ມາດຕະຖານ Basel II;
- ພັດທະນາເຄື່ອງມືຮັບໃຊ້ການບໍລິຫານຊັບສິນ, ຄຸ້ມຄອງຄວາມສ່ຽງ ແລະ ການກວດກາ ໃຫ້ມີປະສິດທິພາບ;

ສ້າງ ແລະ ປັບປຸງລະບຽບການຄຸ້ມຄອງຊັບສິນສ່ຽງໃຫ້ໄດ້ຄຸນນະພາບ

❖ ສ້າງລະບົບຂໍ້ມູນ (MIS) ເພື່ອການບໍລິຫານ

MIS ແມ່ນສ່ວນໜຶ່ງທີ່ສຳຄັນໃນການ ບໍລິຫານທຸລະກິດ ຈຶ່ງຈຳເປັນຕ້ອງໄດ້ມີການພັດທະນາໃຫ້ຖືກຕ້ອງ, ຊັດເຈນ, ໄດ້ມາດຕະຖານສາກົນ ແລະ ຄຸ້ມຄອງຢ່າງຮັດກຸມ ຊຶ່ງເປົ້າໝາຍຍຸດທະສາດ ມີຄື:

- ພັດທະນາລະບົບລາຍງານໃຫ້ໄດ້ມາດຕະຖານເພື່ອການບໍລິຫານຢ່າງມີຄຸນນະພາບ;
- ພັດທະນາຖານເກັບຂໍ້ມູນໃຫ້ລວມສູນ ແລະ ໄດ້ຄຸນນະພາບ;
- ສ້າງ ແລະ ພັດທະນາລະບົບລາຍງານໃຫ້ມີຫຼາຍຮູບແບບຫຼາຍມິຕິ;
- ລະບົບລາຍງານ ແລະ ການເປີດເຜີຍຂໍ້ມູນໃຫ້ມີການລວມສູນ; ແລະ
- ພັດທະນາລະບົບປ້ອງກັນຄວາມປອດໄພດ້ານຂໍ້ມູນຂ່າວສານ

❖ ການພັດທະນາ ແລະ ຄຸ້ມຄອງລະບົບ IT

ຄຽງຄູ່ກັບການພັດທະນາທັນເປັນທັນສະໄໝ ການພັດທະນາລະບົບ IT ຖືວ່າເປັນວຽກງານທີ່ສຳຄັນ ແລະ ເປັນພື້ນຖານ, ຈຶ່ງມີຄວາມຈຳເປັນຕ້ອງພັດທະນາລະບົບໄອທີຂອງ ທຄຕລ ໃຫ້ມີຄວາມທັນສະໄໝ, ເປັນລະບົບຄົບຊຸດ ແລະ ໄດ້ມາດຕະຖານໃກ້ຄຽງກັບສາກົນ, ສາມາດຮອງຮັບການດຳເນີນທຸລະກິດ, ຕອບສະໜອງການບໍລິການທີ່ມີຄວາມທັນສະໄໝວ່ອງໄວ ແລະ ສາມາດເຊື່ອມໂຍງກັບສາກົນໄດ້. ພ້ອມນັ້ນ ກໍ່ຕ້ອງຈັດລຽງບຸລິມະສິດການພັດທະນາລະບົບ ໄປຕາມໜ້າວຽກຫຼັກຂອງຍຸດທະສາດ. ຊຶ່ງໃນຕໍ່ໜ້າຕ້ອງໄດ້ພັດທະນາ ແລະ ປັບປຸງລະບົບໄອທີ ດັ່ງນີ້:

- ຄົ້ນຄວ້າພັດທະນາຫັນໄປນຳໃຊ້ລະບົບເປີດ (Open Source);
- ພັດທະນາລະບົບໂປຼແກຼມເພື່ອຮັບໃຊ້ວຽກງານພາຍໃນ;
- ສ້າງລະບົບແລ່ນຄູ່ຂະໜານ ແລະ ລະບົບສຳຮອງ;
- ສ້າງລະບົບປ້ອງກັນໄພທາງດ້ານລະບົບຄອມພິວເຕີໃຫ້ເຂັ້ມແຂງ;
- ພັດທະນາຍົກລະດັບໂຄງສ້າງລະບົບໄອທີໃຫ້ໄດ້ມາດຕະຖານໃກ້ຄຽງກັບສາກົນ ຄື: ສ້າງສູນ DATA CENTER ໃຫ້ໄດ້ມາດຕະຖານໃກ້ຄຽງສາກົນ, ສ້າງເງື່ອນໄຂໃຫ້ການຄຸ້ມຄອງບໍລິຫານລະບົບໄອທີ ທຄຕລ ໄດ້ຮັບການຢັ້ງຢືນຄຸນນະພາບທາງດ້ານມາດຕະຖານສາກົນ ISO 27001 ແລະ ກຽມຄວາມພ້ອມເພື່ອຮອງຮັບການເຊື່ອມໂຍງກັບສາກົນ; ແລະ
- ສ້າງ ແລະ ປັບປຸງລະບຽບການ, ຄູ່ມື ແລະ ຄຳແນະນຳ ທີ່ຕິດພັນກັບວຽກງານໄອທີໃຫ້ເປັນລະບົບຄົບຊຸດ ແລະ ຮັດກຸມ

❖ ພັດທະນາການບໍລິຫານບຸກຄະລາກອນ

ບຸກຄະລາກອນເປັນປັດໄຈສະໜັບສະໜູນທີ່ສຳຄັນຕໍ່ການຂັບເຄື່ອນຍຸດທະສາດຂອງ ທຄຕລ ໃຫ້ບັນລຸຜົນຕາມເປົ້າໝາຍທີ່ກຳນົດໄວ້. ໃນສະພາບປະຈຸບັນ ການແຂ່ງຂັນທາງດ້ານການທະນາຄານນັບມື້ສູງຂຶ້ນ, ດ້ານເສດຖະກິດ, ສັງຄົມ ແລະ ເຕັກໂນໂລຊີ ມີການປ່ຽນແປງຢ່າງວ່ອງໄວ, ການບໍລິຫານບຸກຄະລາກອນ ຖືວ່າເປັນເຄື່ອງມືສຳຄັນຕົ້ນຕໍ ທີ່ຊ່ວຍຜັກດັນໃຫ້ປະສົບຜົນສຳເລັດທາງທຸລະກິດໄດ້ຢ່າງຍືນຍົງ ໂດຍມຸ່ງເນັ້ນຄຸນນະພາບຂອງບຸກຄະລາກອນ

ເປັນກົນໄກຂັບເຄື່ອນ ທຄຕລ ໄປສູ່ຄວາມກ້າວໜ້າ, ໂດຍສະເພາະການສ້າງບຸກຄະລາກອນໃຫ້ເປັນມືອາຊີບ ສາມາດ ປັບຕົວເຂົ້າກັບສະພາບແວດລ້ອມທີ່ປ່ຽນແປງໃໝ່.

ສະນັ້ນ, ເພື່ອພັດທະນາລະບົບການບໍລິຫານບຸກຄະລາກອນ ໃຫ້ມີຄວາມເຂັ້ມແຂງ, ສອດຄ່ອງ, ເຊື່ອມໂຍງ ກັບ ຍຸດທະສາດ, ສາມາດກ້າວສູ່ການບັນລຸວິໄສທັດ ແລະ ພາລະກິດຂອງ ທຄຕລ ຈຶ່ງມີຄວາມຈຳເປັນຕ້ອງໄດ້ກຳນົດຍຸດທະ ສາດ ພັດທະນາການບໍລິຫານບຸກຄະລາກອນ ດັ່ງນີ້:

- ພັດທະນາບຸກຄະລາກອນໃຫ້ສອດຄ່ອງກັບວຽກງານຈຸດສຸມທີ່ຈະພັດທະນາ;
- ເພີ່ມປະສິດທິພາບການຈັດວາງບຸກຄະລາກອນໃຫ້ເໝາະສົມຕາມໜ້າວຽກ, ຄວາມຮູ້ຄວາມສາມາດ
- ແລະ ລະດັບວິຊາສະເພາະ;
- ສ້າງແຮງຈູງໃຈແບບໃໝ່ໃຫ້ກັບພະນັກງານຕາມສະພາບການປ່ຽນແປງ ແລະ ຄວາມຈຳເປັນໃນວຽກ
- ງານຈຸດສຸມ; ແລະ
- ສ້າງລະບົບການປະເມີນຜົນພະນັກງານ (Key Performance Indicators ຫຼື KPI)

❖ ພັດທະນາການບໍລິຫານການເງິນ ແລະ ປະສິດທິພາບການດຳເນີນທຸລະກິດໃຫ້ສູງຂຶ້ນ

ການບໍລິຫານການເງິນ ແມ່ນສຸມໃສ່ພັດທະນາວຽກງານລະດົມທຶນ, ບໍລິຫານທຶນໃນຮູບແບບຕ່າງໆທີ່ເປັນໄປ ໄດ້ຕາມເງື່ອນໄຂຕົວຈິງ, ປັບປຸງໂຄງສ້າງທຶນໃຫ້ເໝາະສົມ ເພື່ອເປັນພື້ນຖານໃນການຈັດລະດັບຄວາມໜ້າເຊື່ອຖື (Credit Rating), ຮັບປະກັນການນຳໃຊ້ທຶນທີ່ໄດ້ຄຸນນະພາບ ໂດຍການກຳນົດຍຸດທະສາດຂອງສິນເຊື່ອ ແລະ ບໍລິຫານທຶນ ໃຫ້ສອດຄ່ອງຊັດເຈນ, ປັບປຸງການຮ່ວມທຶນກັບພາກສ່ວນອື່ນ ໃຫ້ໄດ້ຄຸນນະພາບໃນດ້ານທຸລະກິດຫຼາຍ ຂຶ້ນ, ສ້າງລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ໃຫ້ມີປະສິດທິຜົນຍິ່ງຂຶ້ນ ແລະ ພັດທະນາລະບົບຄຸ້ມຄອງ - ຕິດຕາມ ເພື່ອ ປະເມີນຜົນ ໃນແຕ່ລະໄລຍະ.

7. ຂໍ້ຂັດແຍ່ງທາງກົດໝາຍ

ໃນຊ່ວງໄລຍະເວລາດຳເນີນທຸລະກິດຜ່ານມາ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ບໍ່ໄດ້ມີການຮ້ອງ ຟ້ອງໄປຍັງສານໃດໜຶ່ງ ຫຼື ບໍ່ມີຂໍ້ຂັດແຍ່ງໃດໜຶ່ງທີ່ອາດຈະສົ່ງຜົນກະທົບເຖິງຊັບສິນຂອງທະນາຄານການຄ້າຕ່າງປະເທດ ລາວ ມະຫາຊົນ ຫຼື ເຮັດໃຫ້ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມີຄະດີຄວາມ ຫຼື ດຳເນີນຂັ້ນຕອນຕາມກົດ ໝາຍ. ໃນປັດຈຸບັນ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ບໍ່ມີການດຳເນີນຄະດີ, ການແກ້ໄຂຂໍ້ຂັດແຍ່ງ, ການຮ້ອງຟ້ອງ, ການດຳເນີນຄະດີອາຍາ ຫຼື ການດຳເນີນຂໍ້ຂັດແຍ່ງອື່ນ ບໍ່ວ່າຈະເປັນຄວາມຈິງ ຫຼື ອາດຈະເກີດຂຶ້ນ ແລະ ບໍ່ມີການຮຽກຮ້ອງ ຫຼື ການປົກປ້ອງທີ່ພົວພັນເຖິງບຸກຄົນທີສາມ ຫຼື ພະຍານ.

ໃບຢັ້ງຢືນຈາກສານປະຊາຊົນ ນະຄອນຫຼວງວຽງຈັນ ສະບັບເລກທີ: 35/ສປຊ.ນວ, ລົງວັນທີ 29 ມີນາ ປີ 2017 ລະບຸ ວ່າທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ບໍ່ມີຄະດີຄ້າງຢູ່ໃນສານ.

8. ໂຄງສ້າງທຶນຂອງ ທຄຕລ

8.1 ຊັບສິນ

ຊັບສິນລວມຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນປີ 2016 ມີມູນຄ່າລວມ 32,008,204 ລ້ານກີບ (ຕົວເລກພາຍໃນ), ໂດຍທົ່ວໄປຊັບສິນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະກອບດ້ວຍ:

ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ, ໜີ້ຕ້ອງຮັບຈາກທະນາຄານອື່ນ, ເງິນກູ້ໃຫ້ແກ່ລູກຄ້າ, ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຊື້ຂາຍ, ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ, ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ, ການລົງທຶນໃນບັນດາບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ, ຊັບສິນປັດຕັງທີ່ ແລະ ອຸປະກອນ, ຊັບສິນປັດຕັງທີ່ບໍ່ມີຕົວຕົນ, ຊັບສິນອາກອນເຍື້ອນຊຳລະ ແລະ ຊັບສິນອື່ນໆ ດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ 15: ໂຄງສ້າງຊັບສິນ

ຊັບສິນ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ເງິນສົດ ແລະ ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ	5,680,936	9,466,790	7,271,254
ເງິນຝາກຢູ່ທະນາຄານອື່ນ	2,950,093	1,986,635	3,774,198
ເງິນກູ້ໃຫ້ແກ່ລູກຄ້າ	19,093,205	10,854,955	9,622,905
ການລົງທຶນດ້ານການເງິນ - ປະເພດມີໄວ້ເພື່ອຄ້າ	39	6,046	3,906
ການລົງທຶນດ້ານການເງິນ - ປະເພດມີໄວ້ເພື່ອຂາຍ	198,121	224,348	222,332
ການລົງທຶນດ້ານການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	2,553,110	1,776,408	1,266,732
ການລົງທຶນໃນບໍລິສັດຮ່ວມທຶນ	551,449	555,418	534,430
ຊັບສິນປັດຕັງທີ່ ແລະ ອຸປະກອນ	447,935	391,146	250,393
ຊັບສິນປັດຕັງທີ່ບໍ່ມີຕົວຕົນ	243,521	297,744	271,569
ຊັບສິນອາກອນເຍື້ອນຊຳລະ	10,856	6,259	5,999
ຊັບສິນອື່ນໆ	294,009	211,111	265,441
ລວມຊັບສິນ	**32,023,274**	**25,776,860**	**23,489,159**

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

8.2 ທຶນ

ທຶນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນປີ 2016 ມີມູນຄ່າລວມ 1,298,134 ລ້ານກີບ (ຕົວເລກພາຍໃນ) ໂດຍທົ່ວໄປທຶນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ, ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ, ຮຸ້ນທີ່ໄດ້ຊື້ຄືນ, ກຳໄລສະສົມ ແລະ ສ່ວນໄດ້ສ່ວນເສຍທີ່ບໍ່ມີການຄວບຄຸມດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ 16: ໂຄງສ້າງທຶນ

ເນື້ອໃນ	ປີ 2016
ທຶນຈົດທະບຽນ	682,888
ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ	359,002
ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ	7,219

ຮຸ້ນທີ່ໄດ້ຊື້ຄືນ	(1,010)
ກຳໄລສະສົມ	216,104
ສ່ວນໄດ້ສ່ວນເສຍທີ່ບໍ່ມີການຄວບຄຸມ	33,931
ລວມທຶນ	**1,298,134**

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

8.3 ຜູ້ຖືຮຸ້ນ

ມາຮອດວັນທີ 3 ເມສາ ປີ 2017 ຜູ້ຖືຮຸ້ນຂອງ ທຄຕລ ທັງໝົດລວມມີໃນມື້ປິດປຶ້ມທະບຽນແມ່ນ 1,404 ທ່ານ ຊຶ່ງໃນນັ້ນມີຜູ້ຖືຮຸ້ນຕ່າງປະເທດ 344 ທ່ານ ແລະ ພາຍໃນ1,060 ທ່ານ, ຖືຮຸ້ນລວມກັນທັງໝົດ136,577,600 ຮຸ້ນເທົ່າກັບ100% ແລະ ມີສັດສ່ວນການຖືຄອງດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ 17: ຜູ້ຖືຮຸ້ນ

ລ/ດ	ຜູ້ຖືຮຸ້ນ	ກ່ອນອອກ RO/PO	
		ຈຳນວນຮຸ້ນ	%
1	ກະຊວງ ການເງິນ	95,604,321	70%
2	COFIBRED	13,657,759	10%
3	ນັກລົງທຶນທົ່ວໄປ	27,315,520	20%
ລວມ		**136,577,600**	**100%**


ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

9. ໂຄງຮ່າງການຈັດຕັ້ງ

ໂຄງຮ່າງການຈັດຕັ້ງຂອງ ທຄຕລ ປະກອບດ້ວຍ:

1) ກອງປະຊຸມຜູ້ຖືຮຸ້ນ;
2) ຄະນະກວດສອບຂອງຜູ້ຖືຮຸ້ນ;
3) ສະພາບລິຫານ;
4) ຄະນະກຳມະການຂອງສະພາບໍລິຫານ;
5) ຜູ້ອຳນວຍການໃຫຍ່;
6) ຮອງຜູ້ອຳນວຍການໃຫຍ່

ຮູບພາບທີ 10: ໂຄງຮ່າງການຈັດຕັ້ງ



ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວມະຫາຊົນ

9.1 ກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນແມ່ນການຈັດຕັ້ງສູງສຸດຂອງທະນາຄານ ແລະ ຜູ້ຖືຮຸ້ນທັງໝົດທີ່ມີລາຍຊື່ຢູ່ໃນປຶ້ມບັນຊີລາຍຊື່ຜູ້ຖືຮຸ້ນຂອງທະນາຄານທີ່ມີສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແມ່ນມີສອງປະເພດຄື: ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

9.1.1 ກອງປະຊຸມສາມັນຂອງຜູ້ຖືຮຸ້ນ

ກອງປະຊຸມສາມັນຂອງຜູ້ຖືຮຸ້ນຈະຖືກເປີດຂຶ້ນໃນກຳນົດເວລາສີ່ (4) ເດືອນພາຍຫຼັງສິ້ນສຸດປີການບັນຊີ. ກອງປະຊຸມສາມັນຂອງຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ດັ່ງນີ້:

- ຮັບຮອງເອົາການປ່ຽນແປງກົດລະບຽບຂອງທະນາຄານຕາມການສະເໜີຂອງສະພາບໍລິຫານ;
- ເລືອກຕັ້ງ ຫຼື ປົດຕຳແໜ່ງປະທານ, ຮອງປະທານ ແລະ ສະມາຊິກສະພາບໍລິຫານ;
- ຕົກລົງເບ້ຍປະຊຸມຂອງກອງປະຊຸມສະພາບໍລິຫານ, ເງິນເດືອນ, ເງິນບຳເນັດ ແລະ ນະໂຍບາຍຕ່າງໆ ສຳລັບຜູ້ບໍລິຫານ;
- ຮັບຮອງເອົາບົດສະຫຼຸບ, ແຜນການດຳເນີນທຸລະກິດ ແລະ ບົດລາຍງານການກວດສອບປະຈຳປີ ຕາມການສະເໜີຂອງສະພາບໍລິຫານ;
- ຮັບຮອງເອົາການຄວບທຸລະກິດ, ການຂາຍຊັບສິນບັດບາງສ່ວນໃຫຍ່ ຫຼື ການຍຸບເລີກທະນາຄານ;
- ຮັບຮອງເອົາການແບ່ງປັນເງິນປັນຜົນ ແລະ ການສ້າງຄັງຕ່າງໆ ຕາມການສະເໜີຂອງສະພາບໍລິຫານ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບພາຍໃນຂອງທະນາຄານ.

9.1.2 ກອງປະຊຸມວິສາມັນຂອງຜູ້ຖືຮຸ້ນ

ກອງປະຊຸມວິສາມັນຂອງຜູ້ຖືຮຸ້ນອາດຈະຖືກຈັດຂຶ້ນຖ້າຫາກເຫັນວ່າມີຄວາມຈຳເປັນ. ສະພາບໍລິຫານ, ຄະນະກວດສອບຂອງຜູ້ຮຸ້ນ ແລະ ກຸ່ມຜູ້ຖືຮຸ້ນທີ່ຖືຮຸ້ນຫຼາຍກວ່າຫ້າສ່ວນຮ້ອຍ (5%) ຂອງຈຳນວນຮຸ້ນສາມັນທັງໝົດເປັນໄລຍະເວລາຫົກເດືອນຕິດຕໍ່ກັນ ຫຼື ຫຼາຍກວ່າ ມີສິດສະເໜີເປີດກອງປະຊຸມຜູ້ຖືຮຸ້ນໃນກໍລະນີດັ່ງນີ້:

- ໃບລາຍງານຖານະການເງິນໄດ້ສະແດງເຖິງຄວາມບໍ່ໝັ້ນຄົງຂອງທະນາຄານ ເຊັ່ນ: ອັດຕາສ່ວນຄວາມພຽງພໍຂອງທຶນຕໍ່ຊັບສິນສ່ຽງໄດ້ມີທ່າອ່ຽງຫຼຸດລົງ ຫຼື ຫຼຸດລົງຕ່ຳກວ່າເກນກຳນົດທີ່ທະນາຄານແຫ່ງ ສປປ ລາວໄດ້ກຳນົດໄວ້;
- ເມື່ອມີຈຳນວນສະມາຊິກສະພາບໍລິຫານມີໜ້ອຍກວ່າຈຳນວນທີ່ໄດ້ກຳນົດໄວ້ໂດຍກົດໝາຍ ຫຼື ໜ້ອຍກວ່າຈຳນວນສະມາຊິກທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງທະນາຄານ;
- ໃນກໍລະນີທີ່ມີເຫດຜົນທີ່ເຮັດໃຫ້ເຊື່ອໄດ້ວ່າຜູ້ບໍລິຫານຂອງທະນາຄານ ມີການລະເມີດຢ່າງຮ້າຍແຮງຕໍ່ກົດລະບຽບພາຍໃນຂອງທະນາຄານ ຫຼື ລະບຽບກົດໝາຍທີ່ກ່ຽວຂ້ອງ ຊຶ່ງພາໃຫ້ເກີດມີຄວາມເສຍຫາຍໃຫ້ແກ່ທະນາຄານ ແລະ ຜູ້ຖືຮຸ້ນ;
- ເປີດກອງປະຊຸມຕາມຄຳສັ່ງຂອງສານ;
- ການດັດແກ້ ແລະ ການເພີ່ມເຕີມເນື້ອໃນໃຫ້ແກ່ກົດລະບຽບພາຍໃນຂອງທະນາຄານ;
- ການເພີ່ມ ຫຼື ຫຼຸດທຶນຈົດທະບຽນ;
- ກໍລະນີອື່ນໆດັ່ງທີ່ໄດ້ກຳນົດໃນລະບຽບພາຍໃນຂອງທະນາຄານ

ໃນທຸກຮູບແບບການດຳເນີນກອງປະຊຸມຕ້ອງມີບັນທຶກເປັນລາຍລັກອັກສອນ ແລະ ລົງລາຍເຊັນໂດຍຜູ້ເຂົ້າຮ່ວມ. ສຳລັບການດຳເນີນກອງປະຊຸມຜ່ານລະບົບວິດີໂອ ຫຼື ຜ່ານລະບົບສື່ສານອື່ນໆຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ ຕ້ອງມີການບັນທຶກສຽງ ແລະ ພາບເພື່ອເກັບຮັກສາໄວ້.

ເມື່ອມີຄວາມຈຳເປັນຕ້ອງຕົກລົງບັນຫາໃດໜຶ່ງ ປະທານສະພາບໍລິຫານສາມາດສົ່ງຈົດໝາຍວຽນໃຫ້ຜູ້ຖືຮຸ້ນເພື່ອລົງຄະແນນສຽງໂດຍບໍ່ມີການເປີດກອງປະຊຸມ.

9.2 ຄະນະກວດສອບຂອງຜູ້ຖືຮຸ້ນ

ຄະນະກຳມະການກວດກາສະພາບໍລິຫານຂອງ ທຄຕລ ປະກອບມີ 5 ທ່ານຕາມການຕົກລົງເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ. ຢ່າງໜ້ອຍໃນຄະນະກຳມະການດັ່ງກ່າວ, ສະມາຊິກໜຶ່ງທ່ານຈະຕ້ອງເປັນຜູ້ທີ່ມີຄວາມຮູ້ຄວາມສາມາດດ້ານບັນຊີ-ການເງິນ, ແຕ່ຕ້ອງບໍ່ແມ່ນສະມາຊິກສະພາບໍລິຫານ, ພະນັກງານທີ່ເຮັດວຽກຢູ່ພະແນກບັນຊີ-ການເງິນຂອງ ທຄຕລ ແລະ ພະນັກງານຂອງບໍລິສັດກວດສອບພາຍນອກທີ່ດຳເນີນການກວດສອບ ທຄຕລ. ຄະນະກຳມະການກວດກາສະພາບໍລິຫານຕ້ອງແຕ່ງຕັ້ງສະມາຊິກໜຶ່ງທ່ານທີ່ເປັນຜູ້ຖືຮຸ້ນຂອງທະນາຄານ ໃຫ້ເປັນຫົວໜ້າຄະນະກຳມະການກວດກາສະພາບໍລິຫານດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ 18: ໂຄງປະກອບຂອງຄະນະກຳມະການກວດກາສະພາບໍລິຫານ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ໂພໄຊ ໜັ້ນພິລາວັນ	ຮອງຫົວໜ້າກົມກວດກາ ກະຊວງ ການເງິນ (ປະທານ)
2	ທ່ານ ພູເຂົາ ທອງມະນີລາ	ຮອງຫົວໜ້າກົມກວດກາກະຊວງ ແຜນການ ແລະ ການລົງທຶນ (ຮອງປະທານ)

3	ທ່ານ ນ. ດວງດີ ພົມວົງສາ	ຮອງຫົວໜ້າສະຖາບັນການທະນາຄານ (ກຳມະການ)
4	ທ່ານ ດຣ. ພອນໄຊ ກອງມະນີລາ	ອາຈານສອນ ແລະ ຫົວໜ້າຄະນະກຳມະການພົວພັນຕ່າງປະເທດ ແລະ ການຝຶກອົບຮົມ (ກຳມະການ)
5	ທ່ານ ຄຳກົງ ລ່ຽມພຣະຈັນ	ນັກກົດໝາຍອິດສະຫຼະ (ກຳມະການ)

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

9.2.1 ສິດ ແລະ ໜ້າທີ່ຂອງຄະນະກວດສອບຂອງຜູ້ຖືຮຸ້ນ

ຄະນະກຳມະການກວດກາສະພາບໍລິຫານຂອງ ທຄຕລ ມີສິດ ແລະ ໜ້າທີ່ດັ່ງນີ້:

- ກວດກາການປະຕິບັດແຜນຍຸດທະສາດ ແລະ ແຜນທຸລະກິດຂອງສະພາບໍລິຫານ ທຄຕລ;
- ກວດກາຖານະການເງິນຂອງ ທຄຕລ ແລະ ຢັ້ງຢືນຕໍ່ສະພາຜູ້ຖືຮຸ້ນ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງສະພາຜູ້ຖືຮຸ້ນ.

9.3 ສະພາບໍລິຫານ

ສະພາບໍລິຫານຂອງ ທຄຕລ ປະກອບດ້ວຍ 7 ທ່ານ, ໃນນັ້ນ ສະມາຊິກອິດສະຫຼະ 2 ທ່ານ ດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ 19: ໂຄງປະກອບຂອງສະພາບໍລິຫານ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ດຣ ບຸນເຫຼືອ ສົນໄຊວໍລະວົງ	ຫົວໜ້າກົມນະໂຍບາຍການເງິນ/ປະທານສະພາບໍລິຫານ
2	ທ່ານ ຄຳສຸກ ສູນດາຣາ	ບຸກຄົນເອກະລາດຈາກພາຍນອກ/ຮອງປະທານ
3	ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່/ກຳມະການ
4	ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການໃຫຍ່/ກຳມະການ
5	ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ້ອຳນວຍການໃຫຍ່/ກຳມະການ
6	ທ່ານ ວຽງໄຊ ຈັນທະວິສຸກ	ຫົວໜ້າພະແນກຄຸ້ມຄອງສາຂາ ຕາງໜ້າຜູ້ຖືຮຸ້ນ/ກຳມະການ
7	Mr. Marc ROBERT	ຕາງໜ້າ COFI BRED ໃນນາມຄູ່ຮ່ວມຍຸດທະສາດ/ ເປັນກຳມະການ

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

9.3.1 ສິດ ແລະ ໜ້າທີ່ຂອງສະພາບໍລິຫານ

- ຄຸ້ມຄອງ ແລະ ກວດກາການດຳເນີນທຸລະກິດ ແລະ ການດຳເນີນວຽກງານອື່ນໆຂອງທະນາຄານ;
- ມີສິດຄົບຖ້ວນ ແລະ ເອກະລາດໃນການບໍລິຫານ ແລະ ການກວດກາດຳເນີນງານ ແລະ ວຽກງານການເມືອງຂອງທະນາຄານ, ບໍ່ຫຍຸ້ງກ່ຽວກັບວຽກງານການເຄື່ອນໄຫວໃນແຕ່ລະມື້ຂອງທະນາຄານ, ຍົກເວັ້ນບຸກຄົນທີ່ຖືກເລືອກໃຫ້ເປັນຜູ້ອຳນວຍການ;
- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງສະພາບໍລິຫານ ບົນພື້ນຖານຄວາມຊື່ສັດ ແລະ ຮັບປະກັນຜົນປະໂຫຍດສູງສຸດຂອງທະນາຄານ;
- ສະມາຊິກສະພາບໍລິຫານບໍ່ມີສິດນຳໃຊ້ສິດ ແລະ ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ;

- ສະພາບໍລິຫານມີສິດພິຈາລະນາການກູ້ຢືມເງິນຈາກພາກສ່ວນອື່ນ, ອອກໃບຄ້ຳປະກັນຫຼັກຊັບ ແລະ ສາມາດ ອອກໃບຄ້ຳປະກັນແກ່ບັນດາໜີ້ສິນ ຫຼື ບັນດາວຽກງານອື່ນໆທີ່ມີສ່ວນກ່ຽວຂ້ອງຕາມກົດໝາຍ ແລະ ຂໍ້ກຳນົດ ຂອງລາວ;
- ສະພາບໍລິຫານຂອງ ທຄຕລ ມີສິດຄົບຖ້ວນໃນການສ້າງຕັ້ງໂຄງຮ່າງການຈັດຕັ້ງ ແລະ ຈັດວາງຕຳແໜ່ງຂອງ ພະນັກງານ ໃນກໍລະນີມີການແກ້ໄຂໂຄງຮ່າງການຈັດຕັ້ງໃຫ້ເໝາະສົມກັບກົດໝາຍ ແລະ ຂໍ້ກຳນົດຂອງ ສປປ ລາວ;
- ພິຈາລະນາ ແລະ ຮັບຮອງແຜນນະໂຍບາຍການດຳເນີນງານຂອງທະນາຄານ;
- ພິຈາລະນາ ແລະ ຮັບຮອງບົດລາຍງານປະຈຳປີ ແລະ ແຜນການເຄື່ອນໄຫວປະຈຳປີຂອງທະນາຄານ;
- ພິຈາລະນາ ແລະ ຮັບຮອງນະໂຍບາຍ ແລະ ລະບົບການບໍລິການທີ່ຈຳເປັນແກ່ທະນາຄານ ເພື່ອບັນລຸເປົ້າໝາຍ ທີ່ວາງອອກ;
- ພິຈາລະນາບົດລາຍງານການດຳເນີນງານຂອງທະນາຄານ ເພື່ອຮັບປະກັນຜົນປະໂຫຍດຂອງບັນດາຮຸ້ນສ່ວນ ແລະ ຮັບປະກັນສະພາບການການເງິນຂອງທະນາຄານ ເພື່ອເຮັດໃຫ້ທະນາຄານມີກຳລັງຈ່າຍເງິນໃນໄລຍະ ຍາວ;
- ພິຈາລະນາ ແລະ ກຳນົດວິທີແກ້ໄຂບັນຫາໃນການສ້າງຕັ້ງໂຄງຮ່າງທຶນຮອນ: ຂາຍຮຸ້ນສ່ວນທີ່ໄດ້ຮັບການເຫັນ ດີຈາກຜູ້ຖືຮຸ້ນ;
- ພິຈາລະນາ ແລະ ຮັບຮອງທຸກຂໍ້ກຳນົດຂອງທະນາຄານ;
- ສະເໜີຫົວໜ້າກະຊວງ ການເງິນ ຮັບຮອງເອົາທຸກການມອບສິດໜ້າທີ່ ແລະ ການກົນເບ້ຍບຳນານຂອງ ຜູ້ອຳນວຍການ;
- ພິຈາລະນາກຳນົດເງິນເດືອນຂອງຜູ້ອຳນວຍການ, ຮອງອຳນວຍການ ແລະ ຜູ້ນຳແຕ່ລະພາກສ່ວນ;
- ກຳນົດຄ່າໃຊ້ຈ່າຍເພີ້ມໃນການເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາ ແລະ ສະມາຊິກທີ່ເຂົ້າຮ່ວມກອງ ປະຊຸມທີ່ກະຊວງ ການເງິນກຳນົດ; ແລະ
- ຮັບຮອງການລາຍງານຂອງຄະນະກວດກາພາຍໃນຂອງທະນາຄານ

9.4 ຄະນະກຳມະການຂອງສະພາບໍລິຫານ

ຄະນະກວດກາຂອງສະພາບໍລິຫານ ປະກອບມີ: ຄະນະກຳມະການຄຸ້ມຄອງບໍລິຫານ, ຄະນະກຳມະການຄຸ້ມຄອງ ຄວາມສ່ຽງ ແລະ ຄະນະກຳມະການກວດສອບບັນຊີພາຍໃນ. ໃນກໍລະນີທີ່ມີຄວາມຈຳເປັນອາດຈະສ້າງຕັ້ງຄະນະ ກຳມະການອື່ນໆຂຶ້ນຕື່ມກໍ່ໄດ້ ຕາມການຕົກລົງຂອງສະພາບໍລິຫານ.

ແຕ່ລະຄະນະກຳມະການປະກອບດ້ວຍສະມະຊິກສະພາບໍລິຫານ 3 ທ່ານ, ໃນນັ້ນມີຜູ້ໜຶ່ງເປັນປະທານຄະນະ ກຳມະການ. ຖ້າຫາກມີສະມາຊິກສະພາບໍລິຫານຈາກພາຍນອກ ຢູ່ໃນຄະນະກຳມະການໃດ ກໍໃຫ້ສະມາຊິກຜູ້ນັ້ນ ເປັນ ປະທານຄະນະກຳມະການ. ສະມາຊິກສະພາບໍລິຫານຜູ້ໜຶ່ງສາມາດສັງກັດຢູ່ຫຼາຍຄະນະກຳມະການ ແຕ່ສາມາດເປັນ ປະທານໄດ້ພຽງໜຶ່ງຄະນະກຳມະການເທົ່ານັ້ນ.

9.4.1 ຄະນະກຳມະການຄຸ້ມຄອງບໍລິຫານ

ຄະນະກຳມະການຄຸ້ມຄອງບໍລິຫານຂອງ ທຄຕລ ປະກອບດ້ວຍ 9 ທ່ານດັ່ງນີ້:

ຕາຕະລາງ 20: ຄະນະກຳມະການຄຸ້ມຄອງບໍລິຫານ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ຜູໂຂງ ຈັນທະຈັກ	ຜູ້ອຳນວຍການໃຫຍ່/ປະທານ
2	ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການໃຫຍ່/ຮອງປະທານ
3	ທ່ານ ນ.ຂັນທະລີ ວົງໄຊຍະລາດ	ຮອງຜູ້ອຳນວຍການໃຫຍ່/ຮອງປະທານ
4	ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການໃຫຍ່/ຮອງປະທານ
5	ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການໃຫຍ່/ຮອງປະທານ
6	ທ່ານ ບຸນລ້ອມ ອຸ່ນລະທະວົງ	ຫົວໜ້າພະແນກຄົ້ນຄ້ວ ແລະ ພັດທະນາ/ກຳມະການ
7	ທ່ານ ນ. ບຸດສະດີ ມູນລາດຊະວົງ	ຫົວໜ້າພະແນກຈັດຕັ້ງພະນັກງານ/ກຳມະການ
8	ທ່ານ ສາຍຈິດ ສິມມະວົງ	ວ່າການພະແນກຫົວໜ້າຫ້ອງການ/ກຳມະການ
9	ທ່ານ ຫົນເພັດ ຈັນທະວົງສີ	ວ່າການຫົວໜ້າພະແນກບໍລິຫານທຶນ/ກຳມະການ

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

9.4.1.1 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງບໍລິຫານ

- ຄັດເລືອກເປົ້າໝາຍທີ່ຈະເປັນສະມາຊິກສະພາບໍລິຫານຕາມມາດຖານເງື່ອນໄຂທີ່ໄດ້ກຳນົດໄວ້ ເພື່ອສະເໜີໃນກອງປະຊຸມຜູ້ຖືຮຸ້ນເລືອກຕັ້ງ;
- ຄັດເລືອກເປົ້າໝາຍທີ່ຈະເປັນອຳນວຍການໃຫຍ່ ແລະ ຮອງຜູ້ອຳນວຍການຮັບຜິດຊອບດ້ານການເງິນຕາມມາດຕະຖານເງື່ອນໄຂທີ່ໄດ້ກຳນົດໄວ້ ເພື່ອສະເໜີໃຫ້ສະພາບໍລິຫານແຕ່ງຕັ້ງ;
- ຄົ້ນຄວ້າແຜນການດຳເນີນງານຂອງສະພາບໍລິຫານໃນແຕ່ລະປີ;
- ກຳນົດເງື່ອນໄຂ ແລະ ແຜນການເພື່ອຕີລາຄາການເຄື່ອນໄຫວຂອງສະພາບໍລິຫານ ແລະ ຜູ້ບໍລິຫານ;
- ຈັດກອງປະຊຸມຢ່າງໜ້ອຍຫົກ (6) ເດືອນຕໍ່ຄັ້ງ ຫຼື ເປີດກອງປະຊຸມຕາມການຮຽກຮ້ອງຂອງສະພາບໍລິຫານ;
- ສະຫຼຸບຕີລາຄາຈັດຕັ້ງປະຕິບັດວຽກງານປະຈຳປີຂອງຕົນ; ແລະ
  ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງສະພາບໍລິຫານ ຫຼື ກອງປະຊຸມຜູ້ຖືຮຸ້ນ

9.4.2 ຄະນະກຳມະການກວດສອບບັນຊີພາຍໃນ

ຄະນະກຳມະການກວດສອບບັນຊີພາຍໃນຂອງ ທຄຕລ ປະກອບດ້ວຍ 8 ທ່ານ ດັ່ງນີ້:

ຕາຕະລາງ 21: ຄະນະກຳມະການກວດສອບບັນຊີພາຍໃນ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ້ອຳນວຍການໃຫຍ່/ປະທານ
2	ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການໃຫຍ່/ຮອງປະທານ
3	ທ່ານ ນ. ລຳມະນີແສງ ໄຊຍະເພັດ	ຫົວໜ້າພະແນກບັນຊີສັງລວມ/ກຳມະການ
4	ທ່ານ ວຽງສຸກ ຈຸນທະວົງ	ຫົວໜ້າພະແນກຄຸ້ມຄອງສິນເຊື່ອ/ກຳມະການ
5	ທ່ານ ນ. ວັນລີ ສາຍສຸວັນ	ຫົວໜ້າສູນບໍລິການ/ກຳມະການ

6	ທ່ານ ວຽງໄຊ ຈັນທະວີສຸກ	ຫົວໜ້າຄຸ້ມຄອງສາຂາ/ກຳມະການ
7	ທ່ານ ນ. ພູແສງທອງ ອານຸລັກຄຳ	ວ່າການຫົວໜ້າພະແນກກວດກາພາຍໃນ/ກຳມະການ
8	ທ່ານ ຫີນເພັດ ຈັນທະລັງສີ	ວ່າການຫົວໜ້າພະແນກບໍລິຫານທຶນ/ກຳມະການ

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

9.4.3.1 ສິດ ແລະ ໜ້າທີ່ຂອງຄະນະກຳມະການກວດສອບບັນຊີພາຍໃນ

- ວາງລະບອບບັນຊີທີ່ເໝາະສົມ ແລະ ລະບົບບັນຊີທະນາຄານ ໂດຍສອດຄ່ອງກັບລະບຽບການທີ່ທະນາຄານແຫ່ງ ສປປ ລາວ ໄດ້ວາງອອກ;
- ສ້າງແຜນ ແລະ ງົບປະມານສະລັບການກວດສອບບັນຊີພາຍໃນຂອງທະນາຄານ;
- ຕິດຕາມການຈັດຕັ້ງປະຕິບັດວຽກງານການບັນຊີຕາມຂັ້ນຕອນທີ່ກຳນົດໄວ້ ຖ້າຫາກເຫັນວ່າຈຳເປັນກໍ່ໃຫ້ມີການກວດສອບຈາກພາຍນອກໄດ້;
- ຕີລາຄາຄຸນນະພາບຂອງບໍລິສັດກວດສອບພາຍນອກ, ຄວາມເປັນເອກະລາດ ແລະ ການພົວພັນຂອງຜູ້ກວດສອບພາຍນອກ ໂດຍເບິ່ງສາຍພົວພັນຮອບດ້ານລະຫວ່າງຜູ້ກວດສອບພາຍນອກກັບທະນາຄານ;
- ວ່າຈ້າງ, ກຳນົດຂອບເຂດຂອງການກວດສອບ ຫຼື ຍົກເລີກສັນຍາກັບຜູ້ກວດສອບບັນຊີພາຍນອກຕາມການຕົກລົງຂອງສະພາບໍລິຫານ;
- ປຶກສາຫາລືກ່ຽວກັບບົດລາຍງານປະຈຳປີ ແລະ ໄຕມາດທີ່ຖືກກວດສອບນັ້ນ ກັບຜູ້ບໍລິຫານທີ່ກ່ຽວຂ້ອງ ແລະ ຜູ້ກວດສອບພາຍນອກ;
- ຕິດຕາມກວດກາຄວາມຄືບໜ້າຂອງຜູ້ບໍລິຫານກ່ຽວກັບການແກ້ໄຂຂໍ້ຄົງຄ້າງທີ່ກຳນົດໄວ້ ຢູ່ໃນບົດລາຍງານການກວດສອບ;
- ຂໍຄຳປຶກສາ ແລະ ການຊ່ວຍເຫຼືອຈາກທີ່ປຶກສາທາງດ້ານກົດໝາຍ, ທີ່ປຶກສາດ້ານບັນຊີ ແລະ ອື່ນໆຕາມທີ່ຕົນເຫັນວ່າຈຳເປັນ;
- ປະກອບຄຳເຫັນຕໍ່ສະພາບໍລະຫານ ຫຼື ຜູ້ບໍລິຫານໄດ້ສະເໜີຂຶ້ນ;
- ຕົກລົງບັນຫາອື່ນໆທີ່ກ່ຽວຂ້ອງ ແລະ ເຫັນວ່າຈຳເປັນໃຫ້ແກ່ສະພາບໍລິຫານ;
- ສະຫຼຸບຕີລາຄາຈັດຕັ້ງປະຕິບັດວຽກງານປະຈຳປີຂອງຕົນ;
- ຈັດກອງປະຊຸມຢ່າງໜ້ອຍໜຶ່ງ (1) ເດືອນຕໍ່ຄັ້ງ ຫຼື ເປີດກອງປະຊຸມຕາມຄວາມຮຽກຮ້ອງຕ້ອງການຂອງສະພາບໍລິຫານ;
- ປະຕິບັດສິດ ແລະ ຫນ້າທີ່ອື່ນໆຕາມການມອບໝາຍຂອງສະພາບໍລິຫານ ຫຼື ກອງປະຊຸມຜູ້ຖືຮຸ້ນ.

9.4.3 ຄະນະກຳມະການບໍລິຫານຄວາມສ່ຽງ

ຄະນະກຳມະການບໍລິຫານຄວາມສ່ຽງຂອງ ທຄຕລ ປະກອບດ້ວຍ 9 ທ່ານດັ່ງລຸ່ມນີ້:

ຕາຕະລາງ 22: ຄະນະກຳມະການບໍລິຫານຄວາມສ່ຽງ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ພັນສະນະ ຄຸນນຸວົງ	ຮອງອຳນວຍການໃຫຍ່

2	ທ່ານ ນັນທະລາດ ແກ້ວປະເສີດ	ຮອງອຳນວຍການໃຫຍ່
3	ທ່ານ ບຸນລ້ວນ ອຸ່ນລະທະວົງ	ຫົວໜ້າພະແນກຄົ້ນຄວ້າ ແລະ ພັດທະນາ/ກຳມະການ
4	ທ່ານ ລິນທອງ ຂັນທະລີວັນ	ຫົວໜ້າພະແນກຄັງສາງ/ກຳມະການ
5	ທ່ານ ວຽງສຸກ ຈຸນທະວົງ	ຫົວໜ້າພະແນກຄຸ້ມຄອງສິນເຊື່ອ/ກຳມະການ
6	ທ່ານ ສີສະອາດ ນິມອາສາ	ຫົວໜ້າສູນໄອທີ/ກຳມະການ
7	ທ່ານ ນ. ວັນລີສາຍສຸວັນ	ຫົວໜ້າສູນບໍລິການ/ກຳມະການ
8	ທ່ານ ສຸກກະເສີມ ສຸວັນນະຈັກ	ວ່າການຫົວໜ້າສູນບັດ/ກຳມະການ
9	ທ່ານ ຫິນເພັດ ຈັນທະລັງສີ	ວ່າການຫົວໜ້າພະແນກບໍລິຫານທຶນ/ກຳມະການ

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

9.4.4.1 ສິດ ແລະ ໜ້າທີ່ຂອງຄະນະກຳມະການບໍລິຫານຄວາມສ່ຽງ

- ກຳນົດນະໂຍບາຍ ແລະ ຂັ້ນຕອນໃນການຄຸ້ມຄອງຄວາມສ່ຽງດ້ານສິນເຊື່ອ, ຕະຫຼາດ, ການດຳເນີນງານ ແລະ ຄວາມສ່ຽງອື່ນໆຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດແລ້ວລາຍງານໃຫ້ສະພາບໍລິຫານຮັບຊາບ;
- ຕິດຕາມກວດກາ ແລະ ລາຍງານໃຫ້ສະພາບໍລິຫານຮັບຊາບກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ລະບຽບ ສິນເຊື່ອ ແລະ ຄວາມສ່ຽງຕ່າງໆ;
- ປະກອບຄຳເຫັນຕໍ່ບັນຫາທີ່ສະພາມອບໝາຍໃຫ້ ຫຼື ຕ້ອງການໃຫ້ແກ້ໄຂ;
- ຈັດກອງປະຊຸມຢ່າງໜ້ອຍໜຶ່ງ (1) ເດືອນຕໍ່ຄັ້ງ ຫຼື ເປີດກອງປະຊຸມຕາມການຮຽກໂຮມຂອງສະພາບໍລິຫານ;
- ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານປະຈຳປີຂອງຕົນ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງສະພາບໍລິຫານ ຫຼື ກອງປະຊຸມຜູ້ຖືຮຸ້ນ.

9.5 ຄະນະອຳນວຍການ

ຄະນະອຳນວຍການປະກອບມີ ຜູ້ອຳນວຍການໃຫຍ່ 1 ທ່ານ ແລະ ຮອງຜູ້ອຳນວຍການໃຫຍ່ 6 ທ່ານ ດັ່ງລາຍ ລະອຽດລຸ່ມນີ້:

ຕາຕະລາງ 23: ຄະນະອຳນວຍການ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່
2	ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການໃຫຍ່
3	ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການໃຫຍ່
4	ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການໃຫຍ່
5	ທ່ານ ຄຳຊ່ຽນ ມິ່ງບຸບຜາ	ຮອງຜູ້ອຳນວຍການໃຫຍ່
6	ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການໃຫຍ່
7	ທ່ານ ບົວວັນ ສີມະລີວົງ	ຮອງຜູ້ອຳນວຍການໃຫຍ່

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

9.5.1 ຜູ້ອຳນວຍການໃຫຍ່

ຜູ້ອຳນວຍການຮັບຜິດຊອບການດຳເນີນງານໃນແຕ່ລະມື້ຂອງທະນາຄານ ຕາມສິດ ແລະ ໜ້າທີ່ ທີ່ໄດ້ລະບຸໄວ້ໃນຂໍ້ກຳນົດພາຍໃນທະນາຄານ ຜູ້ອຳນວຍການ ໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກຄຳຕົກລົງຂອງສະພາບໍລິຫານ, ມີກຳນົດວາລະ 2 ປີ ແລະ ສາມາດຖືກແຕ່ງຕັ້ງໃຫ້ດຳລົງຕຳແໜ່ງໃຫມ່. ຜູ້ອຳນວຍການອາດແມ່ນສະມາຊິກສະພາບໍລິຫານ ແຕ່ບໍ່ແມ່ນປະທານ ຫຼື ຮອງປະທານຂອງສະພາບໍລິຫານ.

9.5.2 ສິດ ແລະ ໜ້າທີ່ຂອງຜູ້ອຳນວຍການໃຫຍ່

- ມີບົດບາດໃນການເປັນຕົວແທນ ແລະ ເຊັນສັນຍາ ບັນດາເອກະສານອື່ນໆໂດຍຕາງໜ້າໃຫ້ແກ່ທະນາຄານ;
- ຄຸ້ມຄອງການດຳເນີນງານໃນແຕ່ລະມື້ຂອງທະນາຄານ ໃນຂອບເຂດສິດ ແລະ ໜ້າທີ່ ທີ່ໄດ້ລະບຸໄວ້ໃນຂໍ້ກຳນົດຂອງທະນາຄານ ຫຼື ທີ່ສະພາບໍລິຫານໄດ້ກຳນົດໄວ້;
- ພັດທະນາ ແລະ ສະເໜີ ຫຼື ສະເໜີແກ້ໄຂແຜນການເສດຖະກິດໃນແຕ່ລະປີຕໍ່ສະພາບໍລິຫານ ເພື່ອພິຈາລະນາ ແລະ ຮັບຮອງ ຈາກນັ້ນປະຕິບັດຕາມແຜນການທີ່ວາງອອກ;
- ບັນຈຸຕຳແໜ່ງ ຫຼື ປົດຕຳແໜ່ງຮອງຜູ້ອຳນວຍການ ຈາກນັ້ນສະເໜີໃຫ້ສະພາບໍລິຫານເຫັນດີ;
- ບັນຈຸຕຳແໜ່ງ ຫຼື ປົດຕຳແໜ່ງບັນດາຜູ້ຄຸ້ມຄອງ ແລະ ຮັບພະນັກງານຂອງທະນາຄານການຄ້າ;
- ຈັດຫາເອກະສານຂໍ້ມູນ ແລະ ອະທິບາຍລະອຽດກ່ຽວກັບບັນຫາທີ່ສະພາບໍລິຫານໃຫ້ຄວາມສົນໃຈ;
- ເສີມຂະຫຍາຍ ແລະ ປັບປຸງບັນດາຂໍ້ກຳນົດໃນການບໍລິຫານ ແລະ ສະເໜີຕໍ່ສະພາບໍລິຫານພິຈາລະນາ ແລະ ຮັບຮອງ;
- ສະແດງຄວາມຮັບຜິດຊອບກ່ຽວກັບທຸກວຽກງານຂອງທະນາຄານຕໍ່ສະພາບໍລິຫານ;
- ວາງຂໍ້ສະເໜີຕໍ່ສະພາບໍລິຫານ,ພິຈາລະນາ ແລະ ຮັບຮອງ,ສ້າງຕັ້ງສາຂາ ແລະ ຮ່ວມມື ຫຼື ລົງທຶນໃນຂົງເຂດທຸລະກິດອື່ນ;
- ກຳນົດເງິນເດືອນ, ປະຕິບັດນະໂຍບາຍໃນການຍ້ອງຍໍ ແລະ ລົງໂທດພະນັກງານຂອງທະນາຄານ ຕາມກົດລະບຽບຂອງທະນາຄານ;
- ຮ່ວມມື ແລະ ສະໜອງເອກະສານຂໍ້ມູນ ແລະ ອະທິບາຍໃຫ້ຄະນະກວດກາພາຍໃນ ແລະ ກວດກາພາຍນອກ;
- ລາຍງານສະພາບເຄື່ອນໄຫວຂອງທະນາຄານໃຫ້ແກ່ສະພາບໍລິຫານ ແລະ ບັນດາຄະນະ,ສະໜອງ ແລະ ຊີ້ແຈງເອກະສານທີ່ຈຳເປັນຕາມຄວາມສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ; ແລະ
- ປະຕິບັດສິດ ແລະ ດຳເນີນໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້

9.6 ພະນັກງານຂອງ ທຄຕລ

ການຂະຫຍາຍປະເພດຜະລິດຕະພັນ ແລະ ສາຂາບໍລິການຂອງ ທຄຕລ ຢ່າງຕໍ່ເນື່ອງ ໄດ້ເຮັດໃຫ້ທະນາຄານເພີ່ມຈຳນວນພະນັກງານຂຶ້ນເປັນລຳດັບ ຈາກ 1470 ຄົນ ໃນ ປີ 2014 ມາເປັນ 1591 ຊຶ່ງໄດ້ເພີ່ມຂຶ້ນ 121 ຄົນ ໃນ ຊ່ວງໄລຍະເວລາ 3 ປີ.

ຕາຕະລາງ 24: ຈຳນວນພະນັກງານແຕ່ປີ 2014-2016

ປີ 2014	ປີ 2015	ປີ 2016
1,470	1,518	1,591

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃນປີ 2016 ທຄຕລ ໄດ້ມີພະນັກງານທັງໝົດຈຳນວນ 1,591 ຄົນ ໃນນັ້ນພະນັກງານນັບແຕ່ຂັ້ນອຳນວຍການຮອດລະດັບຄະນະໜ່ວຍງານມີ 471 ຄົນ ກວມປະມານ 30% ຂອງຈຳນວນພະນັກງານທັງໝົດ.

ຕາຕະລາງ 25: ຈຳນວນພະນັກງານໃນແຕ່ລະລະດັບຕຳແໜ່ງໃນປີ 2016

ຂັ້ນ	ຈຳນວນຄົນ	ຄິດໄລ່ເປັນ (%)
ຄະນະອຳນວຍການ	8	0.5
ຄະນະພະແນກ	82	5.2
ຄະນະຂະແໜງ	245	15.4
ຄະນະໜ່ວຍບໍລິການ	120	7.5
ຄະນະໜ່ວຍງານ	16	1.0
ພະນັກງານສົມບູນ	890	55.9
ພະນັກງານທົດສອບ	101	6.3
ສັນຍາຈ້າງ	129	8.1
ລວມ	1,591	100

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທາງດ້ານວຸດທິການສຶກສາຂອງພະນັກງານ ກວ່າ 90% ຂອງ ພະນັກງານທີ່ສັງກັດ ທຄຕລ ແມ່ນມີລະດັບການສຶກສາຊັ້ນສູງຂຶ້ນໄປ ຈົນຮອດລະດັບປະລິນຍາເອກ. 63% ຂອງພະນັກງານແມ່ນມີລະດັບການສຶກສາຂັ້ນປະລິນຍາຕີ ແລະ 14.3 % ຂອງພະນັກງານແມ່ນມີລະດັບການສຶກສາຂັ້ນປະລິນຍາໂທ.

ຕາຕະລາງ 26: ວຸດທິການສຶກສາຂອງພະນັກງານ

ລະດັບການສຶກສາ	ຈຳນວນຄົນ	ຄິດໄລ່ເປັນ (%)
ປະລິນຍາເອກ	2	0.1
ປະລິນຍາໂທ	228	14.3
ເໜືອປະລິນຍາຕີ	13	0.8
ປະລິນຍາຕີ	1,002	63.0
ຊັ້ນສູງ	210	13.2

ຊັ້ນກາງ	1	0.1
ຊັ້ນຕົ້ນ	3	0.2
ບໍ່ມີຊັ້ນ	2	0.1
ສັນຍາຈ້າງ	130	8.2
ລວມ	**1,591**	**100**

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເມື່ອເບິ່ງທາງດ້ານໂຄງປະກອບອາຍຸຂອງພະນັກງານ ເຫັນວ່າ ທຄຕລ ມີພະນັກງານທີ່ເປັນໄວໜຸ່ມ ແລະ ໄວ ກາງຄົນ ເປັນຈຳນວນສ່ວນຫຼາຍ ຊຶ່ງກຸ່ມພະນັກງານທີ່ຢູ່ລະຫວ່າງ 29-30 ປີ ແລະ 31-35 ປີ ແມ່ນກວມ 38% ແລະ 23.6 % ຂອງຈຳນວນພະນັກງານທັງໝົດ.

ຕາຕະລາງ 27: ອາຍຸຂອງພະນັກງານ

ອາຍຸ	**ຈຳນວນຄົນ**	**ຄິດໄລ່ເປັນ (%)**
ຕ່ຳກວ່າ 25 ປີ	195	12.3
26 - 30 ປີ	605	38.0
31 - 35 ປີ	375	23.6
36 - 40 ປີ	186	11.7
41 - 45 ປີ	115	7.2
46 - 50 ປີ	71	4.5
51 - 55 ປີ	34	2.1
56 - 60 ປີ	10	0.6
ລວມ	**1,591**	**100**

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

10. ການກວດກາພາຍໃນ

ເພື່ອກຳນົດຫຼັກການ, ວິທີການ, ຂັ້ນຕອນກ່ຽວກັບການຈັດຕັ້ງ ແລະ ເຄື່ອນໄຫວວຽກງານກວດກາຂອງ ທຄຕລ ສາມາດນຳໃຊ້ເປັນເຄື່ອງມືເຂົ້າໃນລະບົບການຄຸ້ມຄອງພາຍໃນ ສາມາດຄົ້ນຫາ ແລະ ແກ້ໄຂຂໍ້ຜິດພາດທີ່ເກີດ ຂຶ້ນໂດຍເຈດຕະນາ ຫຼື ບໍ່ເຈດຕະນາໃນການປະຕິບັດນະໂຍບາຍ, ລະບຽບຫຼັກການ, ແຈ້ງການ, ຂໍ້ແນະນຳ ແລະ ຂັ້ນ ຕອນທີ່ໄດ້ວາງອອກໃນແຕ່ລະໄລຍະໃຫ້ຖືກຕ້ອງ ແລະ ທັນສະພາບ. ແນ່ໃສ່ສິ່ງເສີມໃຫ້ພະນັກງານທຸກຄົນ, ຜູ້ບໍລິຫານ ທຸກຂັ້ນ ຕ້ອງໄດ້ດຳເນີນການກວດກາ ແລະ ຄຸ້ມຄອງພາຍໃນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ເພື່ອສະກັດກັ້ນປະກົດ ການຫຍໍ້ທໍ້ຕ່າງໆທີ່ອາດຈະເກີດຂຶ້ນ ຊຶ່ງອາດສົ່ງຜົນເສຍຫາຍໃຫ້ແກ່ຊັບສິນລວມຂອງ ທຄຕລ.

ການກວດກາເປັນເຄື່ອງມື ຫຼື ກົນໄກທີ່ສຳຄັນຂອງຜູ້ບໍລິຫານໃນການປະເມີນຜົນຂອງການດຳເນີນວຽກງານ ແລະ ລະບົບການຄວບຄຸມພາຍໃນ. ສິ່ງເສີມໃຫ້ເກີດຂະບວນການຄຸ້ມຄອງທີ່ດີ, ມີຄວາມໂປ່ງໃສໃນການປະຕິບັດວຽກ

ງານ, ປ້ອງກັນບັນຫາປະກົດການຫຍໍ້ທໍ້ຕ່າງໆ ແລະ ເປັນການຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນໃນການດຳເນີນວຽກງານ. ການກວດກາແມ່ນເພື່ອເປັນການສະໜັບສະໜູນຜູ້ປະຕິບັດວຽກງານທຸກລະດັບສາມາດປະຕິບັດໜ້າທີ່ ແລະ ເຄື່ອນໄຫວວຽກງານເປັນໄປຕາມກົດໝາຍ, ລະບຽບ ແລະ ຂໍ້ກຳນົດຢ່າງມີປະສິດທິພາບຍິ່ງຂຶ້ນ. ສະນັ້ນ, ຈຶ່ງກຳນົດການກວດກາອອກເປັນ 3 ຂັ້ນຕອນດັ່ງລາຍລະອຽດລຸ່ມນີ້:

ກວດກາຂັ້ນຕອນທີ 1: ແມ່ນພະນັກງານວິຊາການທີ່ປະຕິບັດວຽກງານຕົວຈິງ.

ກວດກາຂັ້ນຕອນທີ 2: ແມ່ນຜູ້ຊີ້ນຳເປັນຜູ້ກວດກາ ແລະ ທົບທວນຄືນການປະຕິບັດວຽກງານຢູ່ໃນກວດກາຂັ້ນຕອນທີ 1, ກວດກາຂັ້ນຕອນທີ 2 ໄດ້ແບ່ງອອກເປັນ 3 ລະດັບການກວດກາຄື:

- ລະດັບທີ 1: ໝາຍເຖິງບັນດາຫົວໜ້າໜ່ວຍງານ, ຄະນະໜ່ວຍບໍລິຫານ ແລະ ຄະນະຂະແໜງທີ່ໄດ້ຮັບມອບໝາຍໃຫ້ຮັບຜິດຊອບວຽກງານໃດໜຶ່ງ ຫຼື ຮັບຜິດຊອບກວດກາວຽກງານໃດໜຶ່ງ.
- ລະດັບທີ 2: ໝາຍເຖິງຄະນະພະແນກ, ຄະນະສູນ ແລະ ຄະນະສາຂາທີ່ຮັບຜິດຊອບວຽກງານຂອງບັນດາຂະແໜງ ແລະ ໜ່ວຍບໍລິການຕ່າງໆ ຫຼື ຮັບຜິດຊອບກວດກາບັນດາວຽກງານຂອງຂະແໜງ ແລະ ໜ່ວຍບໍລິການທີ່ຂຶ້ນກັບຄວາມຮັບຜິດຊອບຂອງພະແນກ, ສູນ ແລະ ສາຂາຂອງໃຜລາວ.
- ລະດັບທີ 3: ໝາຍເຖິງຄະນະອຳນວຍການທີ່ຮັບຜິດຊອບຊີ້ນຳພະແນກ, ສູນ ແລະ ສາຂາ ທຄຕລ ທົ່ວລະບົບ.

ກວດກາຂັ້ນຕອນທີ 3: ແມ່ນຜູ້ກວດກາພາຍໃນໄດ້ດຳເນີນການກວດກາ ໂດຍອີງຕາມລະບຽບຫຼັກການ, ຄູ່ມື ແລະ ຂັ້ນຕອນການປະຕິບັດວຽກງານທີ່ໄດ້ວາງອອກໃນແຕ່ລະໄລຍະ. ກວດກາຂັ້ນຕອນທີ 3 ແບ່ງອອກເປັນ 2 ລະດັບ ຄື:

- ລະດັບທີ 1: ໝາຍເຖິງຫົວໜ້າ, ຄະນະພະແນກ ແລະ ພະນັກງານທັງໝົດຢູ່ພະແນກຄຸ້ມຄອງສາຂາ.
- ລະດັບທີ 2: ໝາຍເຖິງຫົວໜ້າ, ຄະນະພະແນກ ແລະ ພະນັກງານທັງໝົດທີ່ຢູ່ພະແນກກວດກາພາຍໃນ.

11. ລາຍການທີ່ກ່ຽວພັນ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງປະກອບດ້ວຍ ລາຍການທຸລະກຳທັງໝົດທີ່ດຳເນີນງານໂດຍພາກສ່ວນອື່ນໆ ທີ່ກ່ຽວຂ້ອງກັບທະນາຄານ, ພາກສ່ວນຈະກ່ຽວຂ້ອງກັບທະນາຄານ ຖ້າວ່າພາກສ່ວນຫາກທຳໜ້າທີ່ທາງກົງ ຫຼື ທາງອ້ອມໂດຍຜ່ານຄົນກາງຄົນໜຶ່ງ ຫຼື ຫລາຍຄົນດັ່ງລຸ່ມນີ້:

- ຄວບຄຸມ, ຖືກຄວບຄຸມ ຫຼື ຢູ່ໃຕ້ການຄວບຄຸມລວມກັບທະນາຄານ (ລວມມີສຳນັກງານ, ສາຂາ ແລະ ຄູ່ສາຂາ);
- ມີຜົນປະໂຫຍດໃນທະນາຄານທີ່ມີອິດທິພົນທີ່ສຳຄັນຕໍ່ທະນາຄານ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມທະນາຄານ;
- ພາກສ່ວນທີ່ຮ່ວມລົງທຶນກັບທະນາຄານ;
- ພາກສ່ວນທີ່ເປັນສະມາຊິກຄົນສຳຄັນໃນຄະນະອຳນວຍການຂອງທະນາຄານ ຫຼື ຂອງບໍລິສັດແມ່;
- ພາກສ່ວນທີ່ເປັນທະນາຄານທີ່ຖືກຄວບຄຸມ, ຄວບຄຸມຮ່ວມ ຫຼື ມີອິດທິພົນທີ່ສຳຄັນ ຫຼື ຜູ້ທີ່ມີສິດໃນການລົງຄະແນນສຽງທີ່ສຳຄັນ; ແລະ
- ພາກສ່ວນທີ່ເປັນຜົນປະໂຫຍດຂອງພະນັກງານໃນທະນາຄານ ຫຼື ທະນາຄານອື່ນໆທີ່ກ່ຽວຂ້ອງກັບພາກສ່ວນຂອງທະນາຄານ.

ຍອດເຫຼືອທີ່ສຳຄັນທີ່ກ່ຽວພັນກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 31 ທັນວາ ປີ 2016 ມີລາຍລະອຽດຄືດັ່ງລຸ່ມນີ້:

ຕາຕະລາງ 28: ຍອດເຫຼືອທີ່ສຳຄັນທີ່ກ່ຽວພັນກັບພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນ ທີ່ກ່ຽວພັນ	ສາຍພົວພັນ	ລາຍການ ເຄື່ອນໄຫວ	ໜີ້ຕ້ອງຮັບ (ລ້ານກີບ)	ໜີ້ຕ້ອງສົ່ງ (ລ້ານກີບ)
ທະນາຄານແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນກູ້ຢືມ ແລະ ດອກ ເບ້ຍຄ້າງຮັບຈາກ ທຫລ	-	1,640,776
ທະນາຄານແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກກະແສລາຍວັນ ຂອງ ທຄຕລ ຢູ່ ທຫລ	2,432,732	-
ທະນາຄານແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກພາກບັງຄັບ ຂອງ ທຄຕລ ຢູ່ ທຫລ	1,378,763	-
ທະນາຄານແຫ່ງ ສປປ ລາວ	ຜູ້ຄຸ້ມຄອງໂດຍກົງ	ເງິນຝາກກະແສລາຍວັນ ຢູ່ ທຄຕລ	-	728
ກະຊວງ ການເງິນ	ເຈົ້າຂອງໂດຍກົງ	ລົງທຶນໃນພັນທະບັດ ຂອງກະຊວງການເງິນ	2,534,380	-
ກະຊວງ ການເງິນ	ເຈົ້າຂອງໂດຍກົງ	ດອກເບ້ຍຄ້າງຮັບ	49,983	
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	ບໍລິສັດໃນເຄືອ	ບັນຊີເງິນຝາກກະແສ ລາຍວັນ	-	741
ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສ ລາຍວັນ	-	114,846
ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກມີກຳນົດ	-	122,535
ທະນາຄານ ລາວ-ຝຣັ່ງ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກມີກຳນົດ	8,231	-
ທະນາຄານ ລາວ-ຝຣັ່ງ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສ ລາຍວັນ	-	29,372
ທະນາຄານ ລາວ-ຈີນ ຈຳກັດ	ບໍລິສັດຮ່ວມທຶນ	ບັນຊີເງິນຝາກກະແສ ລາຍວັນ	-	11,268

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

12. ຖານະທາງການເງິນ ແລະ ຂໍ້ມູນການດຳເນີນງານ

12.1 ຜົນການດຳເນີນງານ

ຜົນການດຳເນີນງານ ແລະ ຂໍ້ມູນທາງດ້ານການເງິນຂອງ ທຄຕລ ລວມກິດຈະການໃນໄລຍະ 3 ປີຜ່ານມາ ສາມາດສະຫຼຸບໄດ້ດັ່ງລຸ່ມນີ້:

ຕາຕະລາງ 29: ຊັບສິນ 3 ປີ ຜ່ານມາ

ຊັບສິນ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	5,680,936	9,466,790	7,271,254

ເງິນຝາກຢູ່ທະນາຄານອື່ນ	2,950,093	1,986,635	3,774,198
ເງິນກູ້ໃຫ້ແກ່ລູກຄ້າ	19,093,205	10,854,955	9,622,905
ການລົງທຶນດ້ານການເງິນ - ປະເພດມີໄວ້ເພື່ອຄ້າ	39	6,046	3,906
ການລົງທຶນດ້ານການເງິນ - ປະເພດມີໄວ້ເພື່ອຂາຍ	198,121	224,348	222,332
ການລົງທຶນດ້ານການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	2,553,110	1,776,408	1,266,732
ການລົງທຶນໃນບໍລິສັດຮ່ວມທຶນ	551,449	555,418	534,430
ຊັບສົມບັດຄົງທີ່ ແລະ ອຸປະກອນ	447,935	391,146	250,393
ຊັບສົມບັດຄົງທີ່ບໍ່ມີຕົວຕົນ	243,521	297,744	271,569
ຊັບສິນອາກອນເຍື້ອນຊຳລະ	10,856	6,259	5,999
ຊັບສິນອື່ນໆ	294,009	211,111	265,441
ລວມຊັບສິນ	32,023,274	25,776,860	23,489,159
ໜີ້ທີ່ຕ້ອງສົ່ງທະນາຄານອື່ນ ແລະ ສະຖາບັນການເງິນອື່ນ	3,526,229	2,446,347	2,861,725
ໜີ້ທີ່ຕ້ອງສົ່ງລູກຄ້າ	25,402,421	21,310,561	19,101,649
ກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	1,640,776	720,497	121,287
ໜີ້ສິນອາກອນ	36,496	30,934	20,028
ໜີ້ສິນອາກອນເຍື້ອນຊຳລະ	9,834	11,077	17,394
ໜີ້ສິນອື່ນໆ	94,324	60,373	216,385
ລວມໜີ້ສິນ	30,710,080	24,579,789	22,338,468
ທຶນຈົດທະບຽນ	682,888	682,888	682,888
ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ	359,007	314,898	279,157
ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ	7,385	32,789	64,142
ຮຸ້ນທີ່ໄດ້ຊື້ຄືນ	(1,010)	(1,010)	(1,010)
ກຳໄລສະສົມ	230,992	134,263	92,612
ສ່ວນຂອງທຶນທັງໝົດຂອງທະນາຄານແມ່	1,279,262	1,163,828	1,117,789
ສ່ວນຂອງທຶນທັງໝົດຈາກສ່ວນໄດ້ເສຍທີ່ບໍ່ສາມາດຄວບຄຸມ	33,932	33,243	32,902
ລວມທຶນ	1,313,194	1,197,071	1,150,691
ລວມໜີ້ສິນ ແລະ ທຶນ	**32,023,274**	**25,776,860**	**23,489,159**

ຕາຕະລາງ 30: ໜີ້ສິນ ແລະ ທຶນ

ກຳໄລ/ຂາດທຶນ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	1,406,431	1,073,610	1,003,754
ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ	(858,596)	(812,970)	(689,609)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	547,835	260,640	314,145
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	193,844	171,548	142,810
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	(15,411)	(13,314)	(11,531)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	178,433	158,234	131,279
ລາຍຮັບ/ລາຍຈ່າຍສຸດທິຈາກການຄ້າ	47,270	(246,883)	88,185
ລາຍຮັບອື່ນໆຈາກການດຳເນີນງານ	14,994	422,260	18,229
ລາຍຮັບທັງໝົດຈາກການດຳເນີນງານ	788,532	594,251	551,838
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ	(167,367)	(114,455)	(115,365)
(ຫັກເພີ່ມ) /ເກັບຄືນຈາກຄ່າເຊື່ອມມູນຄ່າການລົງທຶນທາງດ້ານການເງິນ	(10,985)	1,837	27,237
ການເກັບຄ່າເພື່ອການດ້ອຍຄ່າຂອງຊັບສິນ	-	-	6,445
ລາຍຮັບສຸດທິຈາກການດຳເນີນງານ	610,180	481,633	470,155
ລາຍຈ່າຍພະນັກງານ	(240,203)	(220,719)	(212,933)
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	(70,553)	(64,465)	(58,861)
ລາຍຈ່າຍອື່ນໆຈາກການດຳເນີນງານ	(99,621)	(97,685)	(85,374)
ລາຍຈ່າຍທັງໝົດຈາກການດຳເນີນງານ	(410,377)	(382,869)	(357,168)
ການແບ່ງຜົນກຳໄລຂອງບໍລິສັດຮ່ວມທຶນ	26,413	48,325	43,146
ກຳໄລກ່ອນອາກອນ	226,216	147,089	156,133
ລາຍຈ່າຍອາກອນກຳໄລພາຍໃນປີ	(49,928)	(24,327)	(26,593)
ລາຍຮັບອາກອນກຳໄລເຍື້ອນຊຳລະ	(2,183)	1,950	3,768
ກຳໄລສຸດທິພາຍໃນປີ	174,105	124,712	133,308
ແບ່ງເຂົ້າ:			
ຜູ້ຖືຮຸ້ນຂອງບໍລິສັດແມ່	173,416	124,371	132,610
ສ່ວນໄດ້ເສຍບໍ່ສາມາດຄວບຄຸມ	689	341	718

ຕາຕະລາງ 31: ກຳໄລ/ຂາດທຶນນອກທຸລະກິດ

ກຳໄລ/ຂາດທຶນນອກທຸລະກິດ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ກຳໄລສຸດທິພາຍໃນປີ	174,105	124,712	133,328
ລາຍຮັບອື່ນໆນອກການທຸລະກິດ			
ກຳໄລ/(ຂາດທຶນ) ສຸດທິຈາກເຄື່ອງມືທາງການເງິນມີໄວ້ເພື່ອຂາຍ	(33,427)	(35,708)	32,293
ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ	8,023	4,627	(6,136)
ສ່ວນແບ່ງຂອງກຳໄລສຸດທິຈາກເຄື່ອງມືທາງການເງິນມີໄວ້ເພື່ອຂາຍຂອງບໍລິສັດຮ່ວມທຶນ	-	-	272
ລາຍຮັບນອກການທຸລະກິດພາຍໃນໄລຍະຫຼັງຫັກອາກອນ	(25,404)	(31,081)	26,429
ຍອດລວມລາຍຮັບນອກການທຸລະກິດພາຍໃນໄລຍະຫຼັງຫັກອາກອນ	148,701	93,631	159,757
ແບ່ງເຂົ້າ:			
ຜູ້ຖືຮຸ້ນຂອງບໍລິສັດແມ່	148,200	93,290	159,039
ສ່ວນໄດ້ເສຍສາມາດຄວບຄຸມໄດ້	501	341	718

ຕາຕະລາງ 32: ກະແສເງິນສົດ 3 ປີ

ກະແສເງິນສົດ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ	226,216	147,089	156,133
ການດັດແກ້ສຳລັບ:			
ຄ່າຫຼຸ້ຍຫຽນ ແລະ ຄ່າເຊື່ອມມູນຄ່າ	70,553	64,465	58,861
ລາຍຈ່າຍທີ່ຫັກເປັນເງິນຮັບສຳລັບການສູນເສຍເງິນກູ້ ແລະ ຄ່າເຊື່ອມຂອງການລົງທຶນໃນຫຼັກຊັບ	178,352	112,618	81,683
ສ່ວນແບ່ງກຳໄລຂອງບໍລິສັດພາຍໃຕ້ວິທີສ່ວນໄດ້ເສຍ	(26,413)	(48,325)	(43,146)
ກຳໄລຈາກການຂາຍຊັບສິນບັດຄົງທີ່	(676)	(359,076)	-
ລາຍຮັບເງິນປັນຜົນ	(11,060)	(12,673)	(13,704)
ກະແສເງິນສົດຈາກກຳໄລຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນ	436,972	(95,902)	239,827
ສ່ວນປ່ຽນແປງໃນຊັບສິນທີ່ໃຊ້ໃນການດຳເນີນງານ			
ຍອດເຫຼືອຈາກທະນາຄານອື່ນ	(206,364)	(334,797)	234,833
ເງິນກູ້ໃຫ້ແກ່ລູກຄ້າ	(8,406,559)	(1,338,065)	(465,699)
ເງິນທຶນທາງການເງິນ-ປະເພດມີໄວ້ເພື່ອຄ້າ	6,007	(2,140)	(3,443)

ກະແສເງິນສົດ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ເງິນທຶນທາງການເງິນ-ປະເພດມີໄວ້ເພື່ອຂາຍ	26,227	(2,016)	(9,659)
ເງິນທຶນທາງການເງິນ-ປະເພດຖືໄວ້ຈົນຄົບກຳນົດ	(787,691)	(507,839)	(582,936)
ຊັບສິນອື່ນໆ	(7,296)	54,422	139,046
ການປ່ຽນແປງໃນໜີ້ສິນທີ່ໃຊ້ໃນການດຳເນີນງານ			
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ ແລະ ທະນາຄານແຫ່ງ ສປປ ລາວ	2,000,161	183,832	1,795,478
ໜີ້ຕ້ອງສົ່ງລູກຄ້າ	4,091,859	2,208,913	4,505,108
ໜີ້ສິນອື່ນໆ	5,007	(186,372)	168,351
ອາກອນທີ່ໄດ້ຈ່າຍພາຍໃນປີ	(46,875)	(9,020)	(30,830)
ກະແສເງິນສົດສຸດທິຈາກການດຳເນີນງານ	(2,888,552)	(28,984)	5,990,076
ກິດຈະກຳການລົງທຶນ			
ການຈັດຊື້ ແລະ ການກໍ່ສ້າງ ຊັບສິນຄົງທີ່	(170,304)	(244,225)	(109,581)
ຮັບຈາກການຈຳໜ່າຍຊັບສິນຄົງທີ່	48,918	371,908	1,265
ລາຍຈ່າຍເພື່ອການລົງທຶນໃນບັນດາກິດຈະການອື່ນໆ	-	-	(147,000)
ຮັບເງິນປັນຜົນ	11,060	38,452	23,108
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ	(110,326)	166,135	(232,208)
ກິດຈະກຳທາງດ້ານການເງິນ			
ເງິນທີ່ໄດ້ຮັບຈາກການກູ້ຢືມ	-	-	62,472
ຈ່າຍເງິນປັນຜົນ	(29,881)	(55,534)	(103,039)
ກະແສເງິນສົດສຸດທິຈາກກິດຈະກຳທາງດ້ານການເງິນ	(29,881)	(55,534)	(40,567)
ການເພີ່ມຂຶ້ນ/(ຫຼຸດລົງ)ສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ	(3,028,759)	81,617	5,717,301
ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ	10,154,343	10,081,167	4,362,709
ສ່ວນຜິດຕ່ຽງຈາກອັດຕາແລກປ່ຽນ	-	(8,441)	1,157
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍປີ	7,125,584	10,154,343	10,081,167
ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ:			
ເງິນສົດ ແລະ ທຽບເທົ່າເງິນສົດໃນກຳມື	1,867,159	2,236,642	1,998,781
ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ	2,435,014	6,095,242	4,322,473
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ	2,573,530	1,659,680	2,268,162
ເງິນຝາກມີກຳນົດພາຍໃນ 3 ເດືອນ	249,881	162,779	1,491,751
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍປີ	7,125,584	10,154,343	10,081,167

12.2 ອັດຕາສ່ວນທາງການເງິນທີ່ສຳຄັນ

ຕາຕະລາງ 33: ອັດຕາສ່ວນທາງການເງິນທີ່ສຳຄັນ

ອັດຕາສ່ວນຄວາມສາມາດໃນການສ້າງຜົນກຳໄລ	%	ປີ 2016	ປີ 2015	ປີ 2014
ດອກເບ້ຍລາຍຮັບ ຕໍ່ ດອກເບ້ຍຊັບສິນລາຍໄດ້	%	7.12%	7.33%	7.73%
ສ່ວນຕ່າງດອກເບ້ຍສຸດທິ	%	2.77%	1.78%	2.42%
ຄ່າທຳນຽມຕໍ່ລາຍໄດ້	%	22.63%	26.63%	23.79%
ລາຍໄດ້ທີ່ບໍ່ແມ່ນດອກເບ້ຍ ຕໍ່ ລາຍໄດ້ລວມທັງໝົດ	%	30.52%	56.14%	43.07%
ຕົ້ນທຶນ ຕໍ່ ລາຍໄດ້	%	52.04%	64.43%	64.72%
ອັດຕາສ່ວນອາກອນ	%	23.04%	15.21%	14.61%
ຜົນຕອບແທນຕໍ່ຮຸ້ນ	%	14.20%	10.90%	12.17%
ຜົນຕອບແທນຕໍ່ຊັບສິນ	%	0.60%	0.50%	0.66%
ຄຸນນະພາບຂອງຊັບສິນ				
ໜີ້ບໍ່ເກີດດອກອອກຜົນ (NPLs)(ລ້ານກີບ)		269,795	289,067	297,735
ໜີ້ບໍ່ເກີດດອກອອກຜົນ ທັງໝົດຕໍ່ເງິນກູ້ຢືມ	%	1.40%	2.62%	3.06%
ຄວາມສ່ຽງຈາກການກູ້ຢືມ	%	125.87%	92.97%	66.94%
ອັດຕາສ່ວນສະພາບຄ່ອງ				
ອັດຕາສ່ວນເງິນກູ້ລວມຕໍ່ເງິນຝາກ	%	76.02%	51.88%	50.99%
ຄວາມພຽງພໍຂອງເງິນທຶນ				
ທຶນຊັ້ນ 1 (ລ້ານກີບ)		1,272,887	1,132,051	1,117,789
ເງິນທຶນທັງໝົດ (ລ້ານກີບ)		724,761	591,510	583,359
ຊັບສິນທີ່ມີຄວາມສ່ຽງ (ລ້ານກີບ)		13,588,881	10,549,190	7,321,330
ສັດສ່ວນຮຸ້ນຕໍ່ຊັບສິນ	%	4.10%	4.64%	4.90%
ອັດຕາສ່ວນເງິນທຶນຊັ້ນ 1	%	9.37%	10.73%	15.27%
ອັດຕາສ່ວນຄວາມພຽງພໍຂອງເງິນທຶນ	%	5.33%	5.61%	7.97%

12.3 ຜົນຂອງການດຳເນີນງານ

ລາຍຮັບຈາກການດຳເນີນງານທັງໝົດຂອງທະນາຄານແມ່ນເພີ່ມຂຶ້ນ 7.69% ຈາກ 551,838 ລ້ານກີບ ໃນປີ 2014 ເຖິງ 594,251 ລ້ານກີບ ໃນປີ 2015 ແລະ ເພີ່ມຂຶ້ນ 32.69% ເຖິງ 788,532 ລ້ານກີບ ໃນປີ 2016, ໃນປີ 2016 ລາຍຮັບຈາກດອກເບ້ຍສຸດທິ ແມ່ນເພີ່ມຂຶ້ນ 110.19% (ໂດຍຫຼຸດລົງ 17.03% ໃນປີ 2015) ໃນຂະນະທີ່ ລາຍຮັບທີ່ບໍ່ແມ່ນມາຈາກດອກເບ້ຍ ແມ່ນຫຼຸດລົງ 27.85% (ເພີ່ມຂຶ້ນ 40.35% ໃນປີ 2015) ຊຶ່ງເປັນຜົນມາຈາກການຂະຫຍາຍຕົວຂອງທຸລະກິດໃຫ້ກູ້ຢືມ. ໃນຂະນະດຽວກັນ ກໍ່ໄດ້ຮັບຜົນກະທົບຈາກການຈຳໜ່າຍຊັບສິນຄົງທີ່ ແລະ ເຄື່ອງມືໃນການລົງທຶນໜຶ່ງຄັ້ງ ໃນປີ 2015.

ທະນາຄານມີກຳໄລສຸດທິ 174,105 ລ້ານກີບ (ຈາກປີ 2015: 124,712 ລ້ານກີບ). ການເພີ່ມຂຶ້ນຂອງກຳໄລສຸດທິ ແມ່ນບົນພື້ນຖານການຂະຫຍາຍຕົວຂອງລາຍຮັບດອກເບ້ຍສຸດທິ, ການຄຸ້ມຄອງບໍລິຫານຕົ້ນທຶນທີ່ໄດ້ຮັບການຄວບຄຸມ ແລະ ມີການຈັດສັນທີ່ດີຂຶ້ນ ສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ. ຕົ້ນທຶນຕໍ່ອັດຕາສ່ວນລາຍຮັບທີ່ເພີ່ມຂຶ້ນ ໃນຊ່ວງເວລາລະຫວ່າງປີ ຊຶ່ງເປັນຜົນເນື່ອງມາຈາກ ຍຸດທະສາດການຄຸ້ມຄອງບໍລິຫານຕົ້ນທຶນຂອງທະນາຄານ ໃນການຂັບເຄື່ອນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນທີ່ດີຂຶ້ນ. ຄຸນນະພາບຂອງຊັບສິນຂອງທະນາຄານ ແມ່ນປັບຕົວດີຂຶ້ນ ບົນພື້ນຖານເງື່ອນໄຂສະພາບການຂະຫຍາຍຕົວຂອງຕະຫຼາດ ພ້ອມດ້ວຍການຫຼຸດລົງຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ ໂດຍມີປະມານ 19,272 ລ້ານກີບ ໃນປີ 2016. ສຳລັບປີ 2017, ຄຸນນະພາບຂອງຊັບສິນ ຈະຍັງຄົງສືບຕໍ່ປະຕິບັດຕາມກົນໄກການຄຸ້ມຄອງບໍລິຫານທີ່ດີ - ມີລະບຽບວິໄນຂອງທະນາຄານ. ນອກຈາກນີ້ ທະນາຄານຍັງຈະຕ້ອງຕັ້ງໜ້າເອົາໃຈໃສ່ການຄຸ້ມຄອງບໍລິຫານຫຼັກຊັບຂອງຕົນຢ່າງຮອບຄອບ ແລະ ລະມັດລະວັງພາຍໃນຄວາມສ່ຽງຂອງຕົນເອງ.

12.3.1 ລາຍຮັບຈາກການດຳເນີນງານ

ໃນຖານະທີ່ເປັນຜູ້ໃຫ້ບໍລິການດ້ານການເງິນທີ່ມີຄວາມຊຳນານທາງດ້ານ ຂະແໜງການທະນາຄານ, ແຫຼ່ງລາຍຮັບຫຼັກຂອງທະນາຄານແມ່ນໄດ້ມາຈາກ ການສະໜອງການໃຫ້ບໍລິການດ້ານການທະນາຄານ, ດ້ວຍການສະໜອງວິທີທາງໃນການແກ້ໄຂບັນຫາທາງດ້ານການເງິນໃຫ້ແກ່ ບຸກຄົນ, ອົງກອນ ແລະ ນິຕິບຸກຄົນ. ລາຍລະອຽດຂອງລາຍຮັບຂອງທະນາຄານແມ່ນມີຄືດັ່ງຕໍ່ໄປນີ້:

ຕາຕະລາງ 34: ລາຍຮັບທັງໝົດຈາກການດຳເນີນງານ

ລາຍຮັບ (ລ້ານກີບ)	ປີ2016		ປີ2015		ປີ2014	
	ຈຳນວນ	%	ຈຳນວນ	%	ຈຳນວນ	%
ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືກັນ	547,835	69.48	260,640	43.86	314,145	56.93
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	178,433	22.63	158,234	26.63	131,279	23.79
ລາຍຮັບ/(ລາຍຈ່າຍ)ສຸດທິຈາກການຄ້າ	47,270	5.99	(246,883)	41.55	88,185	15.98
ລາຍຮັບອື່ນໆຈາກການດຳເນີນງານ	14,994	1.90	422,260	71.06	18,229	3.30
ລາຍຮັບທັງໝົດຈາກການດຳເນີນງານ	**788,532**	**100%**	**594,251**	**100%**	**551,838**	**100%**

12.3.2 ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ປະກອບດ້ວຍລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ ລົບໃຫ້ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືກັນ ຊຶ່ງເປັນລາຍຮັບຫຼັກຂອງທະນາຄານ ແລະ ຄິດເປັນສັດສ່ວນ 69.48%, 43.86% ແລະ 56.93% ຂອງລາຍຮັບທັງໝົດຈາກການດຳເນີນງານໃນປີ 2016, 2015 ແລະ 2014 ຕາມລຳດັບ.

ສ່ວນຕ່າງອັດຕາດອກເບ້ຍສຸດທິ ແມ່ນໄດ້ຫຼຸດລົງຈາກ 2.42% ໃນ 2014 ແລະ ມາເປັນ 1.78% ໃນປີ 2015 ເປັນຜົນມາຈາກ ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍປັບຕົວຫຼຸດລົງໃນປີ 2015 ເພາະການປ່ອຍສິນເຊື່ອຢູ່ໃນສະພາວະສະລົຕົວເມື່ອທຽບກັບເງິນຝາກຂອງລູກຄ້າທີ່ເພີ່ມຂຶ້ນ. ສ່ວນຕ່າງອັດຕາດອກເບ້ຍສຸດທິແມ່ນເພີ່ມຂຶ້ນ

ຈາກ1.78% ໃນປີ 2015 ມາເປັນ 2.77% ໃນປີ 2016 ເປັນຜົນມາຈາກການຟື້ນຕົວຂອງເສດຖະກິດ ເຮັດໃຫ້ປ່ອຍສິນເຊື່ອໄດ້ຫຼາຍຂຶ້ນ ຊຶ່ງນຳໄປສູ່ລາຍຮັບດອກເບ້ຍທີ່ສູງຂຶ້ນໃນປີດັ່ງກ່າວ.

ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນປະກອບດ້ວຍ ລາຍຮັບດອກເບ້ຍຈາກການໃຫ້ກູ້ຢືມ, ລາຍຮັບດອກເບ້ຍເງິນຝາກຢູ່ທະນາຄານອື່ນ, ລາຍຮັບດອກເບ້ຍຈາກການລົງທຶນໃນຫຼັກຊັບ, ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ. ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ໃນປີ 2016 ເພີ່ມຂຶ້ນ 31.00 (ປີ2015: 6.96%) ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນມີການເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກ ປີ 2014 ເຖິງ ປີ 2016 ສາເຫດມາຈາກ:

- ລາຍຮັບດອກເບ້ຍການໃຫ້ກູ້ຢືມ

ລາຍຮັບດອກເບ້ຍການໃຫ້ກູ້ຢືມເພີ່ມຂຶ້ນ 3.65% ຈາກ 900,677 ລ້ານກີບ ໃນປີ 2014 ມາເປັນ 933,530 ລ້ານກີບ ໃນປີ 2015 ແລະ ເພີ່ມຂຶ້ນ 34.13% ຈາກເດີມມາເປັນ 1,252,157 ລ້ານກີບ ໃນປີ 2016, ຄິດໄລ່ສະເລ່ຍເປັນ 89.73%, 86.95% ແລະ 89.03% ຂອງລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນທັງໝົດ ຕາມລຳດັບ. ການຂະຫຍາຍຕົວດັ່ງກ່າວ ຕົ້ນຕໍແມ່ນເນື່ອງມາຈາກ ທະນາຄານແຫ່ງ ສປປ ລາວ ໄດ້ຫຼຸດອັດຕາດອກເບ້ຍອ້າງອີງ ໃນເດືອນ ກໍລະກົດ ປີ 2015 ແລະ ເພດານທີ່ກຳນົດໃຫ້ແກ່ ບັນດາທະນາຄານທຸລະກິດ ສຳລັບອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຢືມຂອງຕົນ ທີ່ເປັນສະກຸນເງິນກີບ, ຊຶ່ງເປັນການສົ່ງເສີມໂດຍທາງອ້ອມຕໍ່ສະພາບແວດລ້ອມທີ່ດຶງດູດໃຫ້ແກ່ການກູ້ຢືມ. ເຖິງແມ່ນວ່າ ດອກເບ້ຍລາຍຮັບຕໍ່ດອກເບ້ຍຊັບສິນລາຍໄດ້ຈະຫຼຸດລົງ ຈາກ 7.73% ໃນປີ 2014 ມາເປັນ 7.33% ໃນປີ 2015 ແລະ ສືບຕໍ່ຫຼຸດລົງເຫຼືອ 7.12% ໃນປີ 2016 ແຕ່ການປ່ອຍກູ້ໃຫ້ແກ່ລູກຄ້າແມ່ນໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ໃນປີ 2016 ຢູ່ທີ່ 19,093,205 ລ້ານກີບ ຊຶ່ງຄິດເປັນອັດຕາການຂະຫຍາຍຕົວ 75.89% (ຊຶ່ງໃນປີ 2015 ໄດ້ມີການຂະຫຍາຍຕົວ 12.80% ເມື່ອທຽບໃສ່ປີ 2014).

- ລາຍຮັບດອກເບ້ຍຈາກການລົງທຶນໃນຫຼັກຊັບ

ລາຍຮັບດອກເບ້ຍຈາກການລົງທຶນໃນຫຼັກຊັບ ເພີ່ມຂຶ້ນ 117.77% ຈາກ 37,494 ລ້ານກີບ ໃນປີ 2014 ມາເປັນ 81,650 ລ້ານກີບ ໃນປີ 2015 ແລະ ເພີ່ມຂຶ້ນ 32.70% ຈາກເດີມມາເປັນ 108,348 ລ້ານກີບ ໃນປີ 2016, ຊຶ່ງຄິດສະເລ່ຍເປັນ 3.74%, 7.61% ແລະ 7.70% ຂອງດອກເບ້ຍທັງໝົດ ແລະ ລາຍຮັບທີ່ຄ້າຍຄືກັນ ຕາມລຳດັບ. ການເພີ່ມຂຶ້ນຂອງລາຍຮັບດັ່ງກ່າວແມ່ນມາຈາກການລົງທຶນໃນພັນທະບັດຄັງເງິນທີ່ອອກໂດຍ ກະຊວງການເງິນ, ເຖິງແມ່ນວ່າ ອັດຕາດອກເບ້ຍໂດຍສະເລ່ຍຂອງພັນທະບັດຄັງເງິນ ຈະຫຼຸດລົງຈາກ 4.91% ໃນປີ 2014 ມາເປັນ 4.33% ໃນປີ 2015 ແລະ 4.31% ໃນປີ 2016 ກໍ່ຕາມ ແຕ່ໂດຍລວມແມ່ນຍັງສາມາດສ້າງລາຍຮັບໃຫ້ທະນາຄານຢູ່ໃນລະດັບດີ.

- ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ

ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນແມ່ນປະກອບດ້ວຍລາຍຈ່າຍດອກເບ້ຍເງິນຝາກຂອງທະນາຄານອື່ນ ແລະ ລາຍຈ່າຍດອກເບ້ຍເງິນຝາກຂອງລູກຄ້າ, ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນສຳລັບທ້າຍປີ 2016 ແມ່ນ 858,596 ລ້ານກີບ ຊຶ່ງໄດ້ເພີ່ມຂຶ້ນ 45,626 ລ້ານກີບ ເມື່ອທຽບກັບ 812,970 ລ້ານກີບໃນປີ 2015 ແລະ ໄດ້ເພີ່ມຂຶ້ນ 168,987 ລ້ານກີບເມື່ອທຽບກັບ 689,609 ລ້ານກີບໃນປີ 2014, ຊຶ່ງໂດຍຫຼັກການແລ້ວແມ່ນເນື່ອງຈາກການປະຕິບັດນະໂຍບາຍຂອງທະນາຄານແຫ່ງ ສປປ ລາວ ຢ່າງເປັນກ້າວໆນັບຈາກປີ 2015 ອັນເຮັດໃຫ້ຕົວປະກອບຕົ້ນຕໍ່ຂອງລາຍຈ່າຍໝວດດັ່ງກ່າວ - ລາຍຈ່າຍດອກເບ້ຍສຳລັບເງິນຝາກລູກຄ້າໄດ້ຫຼຸດລົງເລັກນ້ອຍ ຄື 1.38% ຈາກ 785,543 ລ້ານກີບ ໃນປີ 2015 ຫາ 774,725 ລ້ານກີບ ໃນປີ 2016 ເຖິງແມ່ນວ່າປະລິມານເງິນຝາກຈາກລູກຄ້າໄດ້ມີການເພີ່ມຂຶ້ນໃນຊ່ວງປີດັ່ງກ່າວກໍ່ຕາມ.

12.3.3 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການປະກອບດ້ວຍລາຍຮັບທັງໝົດຈາກການບໍລິການດ້ານທະນາຄານເຊັ່ນ: ຄ່າບໍລິການຊຳລະສະສາງ, ທຸລະກຳດ້ານສິນເຊື່ອ ແລະ ທຸລະກຳອື່ນໆ, ໃນປີ 2016 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການເພີ່ມຂຶ້ນ 12.77% ເປັນ 178,433 ລ້ານກີບ ເມື່ອທຽບກັບປີ 2015 ມີພຽງແຕ່ 158,234 ລ້ານກີບ. ການເພີ່ມຂຶ້ນດັ່ງກ່າວແມ່ນເນື່ອງມາຈາກການເຕີບໂຕຂອງລາຍຮັບຈາກການບໍລິການການຊຳລະສະສາງເປັນຕົ້ນຕໍ, ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການໄດ້ກວມສັດສ່ວນ 22.63%, 26.63% ແລະ 23.79% ຂອງລາຍຮັບທັງໝົດຈາກການດຳເນີນງານໃນປີ 2016, 2015 ແລະ 2014 ຕາມລຳດັບ. ພາຍໃຕ້ຊື່ການຄ້າ, ຄວາມຊຳນານງານ ແລະ ຕາໜ່າງເຄືອຄ່າຍການບໍລິການທີ່ຄອບຄຸມ, ທະນາຄານໄດ້ກາຍເປັນໜຶ່ງໃນຜູ້ນຳຂອງຂະແໜງການທະນາຄານໃນ ສປປ ລາວ ໃນດ້ານການຊຳລະສະສາງທຸລະກຳກັບສາກົນ. ພາຍໃຕ້ຍຸດທະສາດສືບຕໍ່ການຂະຫຍາຍຫົວໜ່ວຍບໍລິການຂອງທະນາຄານໃນທົ່ວປະເທດ ແລະ ພັດທະນາການບໍລິການທະນາຄານ ແລະ ຜະລິດຕະພັນຮູບແບບໃໝ່ ສາມາດເຫັນໄດ້ວ່າທະນາຄານຈະສືບຕໍ່ມີການເຕີບໂຕໃນດ້ານລາຍຮັບປະເພດດັ່ງກ່າວ.

ສັດສ່ວນຂອງລາຍຮັບຄ່າທຳນຽມຕໍ່ລາຍຮັບລວມໄດ້ເພີ່ມຂຶ້ນຈາກ 23.79% ໃນປີ 2014 ຫາ 26.63% ໃນປີ 2015 ແລະ ກໍ່ໄດ້ຫຼຸດລົງມາເປັນ 22.63% ໃນປີ 2016 ຊຶ່ງເປັນຜົນເນື່ອງມາຈາກການເໜັງຕີງຂອງລາຍຮັບດ້ານດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ.

12.3.4 ລາຍຮັບອື່ນຈາກການດຳເນີນງານ

ລາຍຮັບດັ່ງກ່າວປະກອບດ້ວຍລາຍຮັບດ້ານເງິນປັນຜົນຈາກການລົງທຶນໃນຫຼັກຊັບ, ກຳໄລຈາກການຂາຍຊັບສິນບັດຄົງທີ່ ແລະ ເກັບຄືນໜີ້ສູນທີ່ສະສາງອອກ. ລາຍຮັບອື່ນຈາກການດຳເນີນງານໄດ້ກວມສັດສ່ວນ 1.90%, 71.06% ແລະ 3.30% ຂອງລາຍຮັບຈາກການດຳເນີນງານໃນປີ 2016, 2015 ແລະ 2014 ຕາມລຳດັບ. ໃນປີ 2016 ລາຍຮັບອື່ນຈາກການດຳເນີນງານແມ່ນມີ 14,994 ລ້ານກີບ ຊຶ່ງໄດ້ຫຼຸດລົງ 407,266 ລ້ານກີບ ເມື່ອທຽບກັບ 422,260 ລ້ານກີບ ໃນປີ 2015. ຕາມຫຼັກການແລ້ວນີ້ແມ່ນເນື່ອງມາຈາກລາຍຮັບຈາກການຂາຍຊັບສິນບັດຄົງທີ່ໃນຈຳນວນ 355,022 ລ້ານກີບ ຊຶ່ງເປັນການຂາຍສິດນຳໃຊ້ທີ່ດິນຈຳນວນ 36 ຕອນ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ທີ່ມີມູນຄ່າ 374,970 ລ້ານກີບໃນປີ 2015.

12.3.5 ລາຍຈ່າຍໃນການດຳເນີນງານ

ຕາຕະລາງ 35: ລາຍລະອຽດຂອງລາຍຈ່າຍໃນການດຳເນີນງານມີດັ່ງຕໍ່ໄປນີ້:

ລາຍຈ່າຍ	ປີ 2016		ປີ 2015		ປີ 2014	
ລາຍຈ່າຍພະນັກງານ	240,203	58.53%	220,719	57.65%	212,933	59.62%
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	70,553	17.19%	64,465	16.84%	58,861	16.48%
ລາຍຈ່າຍໃນການດຳເນີນງານອື່ນໆ	99,621	24.28%	97,685	25.51%	85,374	23.90%
ລາຍຈ່າຍທັງໝົດໃນການດຳເນີນງານ	**410,377**	**100.00%**	**382,869**	**100.00%**	**357,168**	**100.00%**

ລາຍຈ່າຍໃນການດຳເນີນງານໂດຍພື້ນຖານແມ່ນປະກອບດ້ວຍລາຍຈ່າຍພະນັກງານ, ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ ແລະ ລາຍຈ່າຍໃນການດຳເນີນງານອື່ນໆ. ລາຍຈ່າຍໃນການດຳເນີນງານໄດ້ເພີ່ມຂຶ້ນຈາກ 7.20% ຈາກ 357,168 ລ້ານກີບໃນປີ 2014 ມາເປັນ 382,869 ລ້ານກີບໃນປີ 2015 ແລະ ໄດ້ສືບຕໍ່ເພີ່ມຂຶ້ນ 7.18% ມາເປັນ 410,377 ລ້ານກີບ ໃນປີ 2016. ນີ້ແມ່ນເນື່ອງມາຈາກລາຍຈ່າຍພະນັກງານໄດ້ເພີ່ມຂຶ້ນຈາກ 212,933 ລ້ານກີບ ໃນປີ 2014 ມາເປັນ 220,719 ລ້ານກີບໃນປີ 2015 ແລະ ໄດ້ສືບຕໍ່ເພີ່ມຂຶ້ນເປັນ 240,203 ລ້ານກີບໃນປີ 2016. ການເພີ່ມຂຶ້ນຂອງລາຍຈ່າຍພະນັກງານ ແມ່ນຄຽງຄູ່ໄປກັບການເພີ່ມຂຶ້ນຂອງຈຳນວນພະນັກງານ ອັນເນື່ອງມາຈາກການຂະຫຍາຍຕົວຂອງທຸລະກິດທະນາຄານ.

ສັດສ່ວນຄ່າໃຊ້ຈ່າຍຕໍ່ລາຍຮັບໄດ້ຄ່ອຍໆຫຼຸດລົງຈາກ 64.72 % ໃນປີ 2014 ມາເປັນ 64.43% ໃນປີ 2015 ແລະ ໄດ້ສືບຕໍ່ຫຼຸດລົງເຖິງ 52.04% ໃນປີ 2016. ການຫຼຸດລົງຂອງສັດສ່ວນຄ່າໃຊ້ຈ່າຍຕໍ່ລາຍຮັບຕົ້ນຕໍແມ່ນເນື່ອງມາຈາກການບໍລິຫານລາຍຈ່າຍທີ່ມີປະສິດທິພາບຂອງທະນາຄານ. ໂດຍສອດຫາງກັບການເຕີບໂຕຂອງລາຍຈ່າຍໃນການດຳເນີນງານ ທາງທະນາຄານຄາດຄະເນວ່າສັດສ່ວນດັ່ງກ່າວຈະມີການເພີ່ມຂຶ້ນ.

ລາຍຈ່າຍພະນັກງານແມ່ນປະກອບດ້ວຍລາຍຈ່າຍເງິນເດືອນ, ລາຍຈ່າຍປະກັນໄພສຳລັບພະນັກງານ ແລະ ລາຍຈ່າຍພະນັກງານອື່ນໆ. ຈຳນວນພະນັກງານທັງໝົດຂອງທະນາຄານໃນວັນທີ 31 ທັນວາ ປີ 2014 ແມ່ນ 1,470 ຄົນ ແລະ ໃນປີ 2015 ແມ່ນ 1,518 ຄົນ ແລະ ໃນວັນທີ 31 ທັນວາ ປີ 2016 ແມ່ນ 1,591ຄົນ.

ຄ່າຫຼຸ້ຍຫ້ຽນຕົ້ນຕໍແມ່ນຄິດໄລ່ຈາກອາຄານ ແລະ ການປັບປຸງອາຄານ ແລະ ອຸປະກອນຮັບໃຊ້ຫ້ອງການ, ລາຍຈ່າຍໃນການດຳເນີນງານອື່ນໆແມ່ນປະກອບດ້ວຍຄ່ານ້ຳມັນ ແລະ ຄ່າເດີນທາງ, ລາຍຈ່າຍໃນການຝຶກອົບຮົມ ແລະ ການສຶກສາ, ລາຍຈ່າຍໃນການສື່ສານ, ການພິມ, ລາຍຈ່າຍດ້ານການຕະຫຼາດ ແລະ ການສົ່ງເສີມ, ລາຍຈ່າຍດ້ານການສ້ອມແປງ ແລະ ການບຳລຸງ, ອຸປະກອນ, ລາຍຈ່າຍດ້ານເຄື່ອງມື ແລະ ອຸປະກອນ, ຄ່າໄຟ, ຄ່ານ້ຳ, ຄ່າເຊົ່າຫ້ອງການ, ຄ່າປະກັນໄພສຳລັບກອງທຶນປົກປ້ອງຜູ້ຝາກເງິນ, ລາຍຈ່າຍທົ່ວໄປ ແລະ ການບໍລິຫານອື່ນໆ.

12.3.6 ສ່ວນແບ່ງກຳໄລຂອງບໍລິສັດຮ່ວມທຶນ

ສ່ວນແບ່ງກຳໄລຂອງບໍລິສັດຮ່ວມທຶນ ແມ່ນໄດ້ສະທ້ອນເຖິງຜົນກຳໄລດ້ານການເງິນຂອງບັນດາບໍລິສັດຮ່ວມທຶນຂອງທະນາຄານ ເຊັ່ນ: ທະນາຄານ ຮ່ວມທຸລະກິດລາວ-ຫວຽດ,ທະນາຄານ ລາວ- ຝຣັ່ງ, ທະນາຄານ ລາວ-ຈີນ ຈຳກັດ ແລະ ບໍລິສັດປະກັນໄພ ລາວ-ຫວຽດ. ໃນລະຫວ່າງ ປີ 2014 ຫາ 2016 ໄດ້ມີການປ່ຽນແປງຕ່າງໆດັ່ງທີ່ໄດ້ລະບຸຢູ່ຂ້າງລຸ່ມ:

- ການສ້າງຕັ້ງທະນາຄານລາວ-ຈີນຈຳກັດ ຊຶ່ງເປັນບໍລິສັດຮ່ວມທຶນລະຫວ່າງ ທຄຕລ ແລະ ທະນາຄານ ຟູຕຽນ ຈີນ ໃນປີ 2014. ການລົງທຶນໃນເບື້ອງຕົ້ນແມ່ນ 147,000 ລ້ານກີບ ຊຶ່ງຝ່າຍຈີນໄດ້ຖືຮຸ້ນ 49%.
- ໃນປີ 2015 ທະນາຄານ ຮ່ວມທຸລະກິດລາວ-ຫວຽດໄດ້ເພີ່ມທຶນເປັນ 791,357 ລ້ານກີບ. ທາງທະນາຄານໄດ້ໃຊ້ສິດຈອງຊື້ຮຸ້ນໃໝ່ ແລະ ຈາກນັ້ນກໍ່ຂາຍໃຫ້ຜູ້ຖືຮຸ້ນໃໝ່ບາງສ່ວນ ອັນເປັນສາຍເຫດຜາໃຫ້ການຖືຄອງຮຸ້ນຂອງທະນາຄານຫຼຸດລົງ 10% ຈາກ 35% ມາເປັນ 25% ຫຼັງການເພີ່ມທຶນດັ່ງກ່າວ.

12.3.7 ກຳໄລກ່ອນອາກອນ

ກຳໄລກ່ອນອາກອນໄດ້ຫຼຸດລົງ 5.79% ຈາກ 156,133 ລ້ານກີບໃນປີ 2014 ມາເປັນ 147,089 ລ້ານກີບໃນປີ 2015 ເນື່ອງຈາກໄດ້ມີລາຍຮັບດອກເບ້ຍສຸດທິ ແລະ ລາຍຮັບທີ່ຄ້າຍຄືກັນຫຼຸດລົງຍ້ອນການເຕີບໂຕຊ້າຂອງເງິນກູ້ຢືມໃຫ້ແກ່ລູກຄ້າເມື່ອທຽບໃສ່ເງິນຝາກຈາກລູກຄ້າ.

ກຳໄລກ່ອນອາກອນໄດ້ເພີ່ມຂຶ້ນ 53.80% ຈາກ 147,089 ລ້ານກີບໃນປີ 2015 ມາເປັນ 226,216 ລ້ານກີບໃນປີ 2016 ເມື່ອມີການເພີ່ມຂຶ້ນສູງຂອງລາຍຮັບດອກເບ້ຍສຸດທິ ແລະ ລາຍຮັບທີ່ຄ້າຍຄືກັນເປັນ 110.19% ຈາກປີ 2015.

12.3.8 ລາຍຈ່າຍອາກອນ

ອາກອນ ແລະ ອັດຕາອາກອນທີ່ນຳໃຊ້ແມ່ນມີຄືດັ່ງຕໍ່ໄປນີ້:

ຕາຕະລາງ 36: ອາກອນ ແລະ ອັດຕາອາກອນທີ່ນຳໃຊ້

ອາກອນ	ປີ 2016	ປີ 2015	ປີ 2014
ອາກອນທີ່ສະແດງໃນໃບລາຍງານຜົນການດຳເນີນງານໃນການທຸລະກິດລວມກິດຈະການ (ລ້ານກີບ)	52,111	22,377	22,805
ອັດຕາອາກອນຕາມກົດໝາຍ (%)	24%	24%	24%
ອັດຕາອາກອນໃນພາກປະຕິບັດ(%)	23.04%	15.21%	14.61%

ທະນາຄານຕ້ອງຊຳລະອາກອນລາຍໄດ້ຕາມອັດຕາອາກອນຕາມກົດໝາຍໃນ ສປປ ລາວ. ແຕ່ເຖິງຢ່າງໃດກໍ່ຕາມ ອັດຕາອາກອນໃນພາກປະຕິບັດສຳລັບປີ 2014 ແລະ 2015 ແມ່ນຕ່ຳກວ່າອັດຕາຕາມກົດໝາຍ ເນື່ອງຈາກນະໂຍບາຍດ້ານອາກອນທີ່ທາງທະນາຄານໄດ້ນຳໃຊ້ ອັນພາໃຫ້ມີລາຍຈ່າຍອາກອນທີ່ໜ້ອຍລົງ:

- ໂດຍອີງຕາມດຳລັດ ເລກທີ 001, ສະບັບລົງວັນທີ 28 ທັນວາ 2010 ຂອງປະທານປະເທດແຫ່ງ ສປປ ລາວ ສຳລັບບັນດາບໍລິສັດທີ່ຈົດທະບຽນເຂົ້າຕະຫຼາດຫຼັກຊັບແມ່ນອະນຸຍາດໃຫ້ມີການຫຼຸດອັດຕາອາກອນລົງ 5% ຈາກອັດຕາຕາມກົດໝາຍຄື: ຫຼຸດຈາກ 24% ພາຍໃນ 4 ປີທີ່ນັບຈາກມື້ທີ່ໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບ. ດ້ວຍເຫດດັ່ງກ່າວ ທະນາຄານຈຶ່ງນຳໃຊ້ອັດຕາມະໂຍບາຍຄື 19% ໃນລະຫວ່າງປີ 2011-2014.
- ທະນາຄານໄດ້ລົງບັນຊີຕາມລະບຽບກົດໝາຍວ່າດ້ວຍ ບັນຊີວິສາຫະກິດ ຂອງ ສປປ ລາວ ແລະ ລະບຽບການອື່ນໆທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ (LAS) ຊຶ່ງວ່າມີຄວາມແຕກຕ່າງຫຼາຍລະຫວ່າງຫຼັກການບັນຊີ LAS ແລະ ຫຼັກການການລາຍງານບັນຊີສາກົນ (IFRS). ດ້ວຍເຫດດັ່ງກ່າວຖານະທາງດ້ານການເງິນ ແລະ ຜົນການດຳເນີນງານຂອງທະນາຄານຕາມລະບົບລາຍງານບັນຊີ LAS ຈຶ່ງອາດມີຄວາມແຕກຕ່າງກັນຫຼາຍກັບທີ່ລາຍງານໃນລະບົບ IFRS. ເນື່ອງຈາກວ່າບົດລາຍງານບັນຊີທີ່ລົງບັນຊີຕາມລະບົບ LAS ແມ່ນເພື່ອຈຸດປະສົງຂອງການແຈ້ງເສຍອາກອນ ສະນັ້ນກຳໄລກ່ອນອາກອນທີ່ບັນທຶກຕາມລະບົບ IFRS ຈຶ່ງມີການດັດແກ້ຍ້ອນຄວາມແຕກຕ່າງຂອງລະບົບລາຍງານບັນຊີ IFRS ແລະ LAS.

ອັດຕາອາກອນໃນພາກປະຕິບັດໃນປີ 2014 ແມ່ນຕ່ຳກວ່າ 14.61% ເປັນຕົ້ນແມ່ນເນື່ອງມາຈາກການໄດ້ຮັບນະໂຍບາຍໃຊ້ອັດຕາ 19% ຍ້ອນໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບ ແລະ ໄດ້ມີການຊຳລະສຳຮອງສ່ວນຕ່າງອາກອນດ້ານຊຳລະໃນຈຳນວນ 3,788 ລ້ານກີບ ໃນປີ 2013 ທີ່ໄດ້ຖືກດັດປັບ ແລະ ຫັກລ້າງອອກກັບລາຍຈ່າຍອາກອນໃນປີ 2014.

ລາຍຈ່າຍອາກອນໄດ້ຫຼຸດລົງຈາກ 22,805 ລ້ານກີບ ໃນປີ 2014 ມາເປັນ 22,377 ລ້ານກີບ ໃນປີ 2015. ລາຍຈ່າຍອາກອນໄດ້ຫຼຸດລົງໃນປີ 2015 ເນື່ອງຈາກມີກຳໄລກ່ອນອາກອນທີ່ໜ້ອຍກວ່າໃນປີ 2015 ເມື່ອທຽບກັບປີ 2014. ແຕ່ເຖິງຢ່າງໃດກໍ່ຕາມ ອັດຕາອາກອນໃນພາກປະຕິບັດແມ່ນຍັງຕ່ຳຄືຢູ່ໃນລະດັບ 15.21% ເນື່ອງຈາກມີການປັບກຳໄລກ່ອນອາກອນລະຫວ່າງລະບົບ IFRS and LAS ແລະ ໄດ້ມີການຊຳລະສຳຮອງສ່ວນຕ່າງອາກອນດ້ານຊຳລະໃນຈຳນວນ 1,950 ລ້ານກີບ ໃນປີ 2014 ທີ່ໄດ້ຖືກດັດປັບ ແລະ ຫັກລ້າງອອກກັບລາຍຈ່າຍອາກອນໃນປີ 2015.

ໃນປີ 2016 ອັດຕາອາກອນໃນພາກປະຕິບັດໄດ້ເພີ່ມຂຶ້ນ 23.04% ເມື່ອທຽບໃສ່ 15.21% ໃນປີ 2015. ອັດຕາອາກອນໃນພາກປະຕິບັດໄດ້ເພີ່ມສູງຂຶ້ນອີກໃນປີ 2016 ເປັນຕົ້ນແມ່ນເນື່ອງມາຈາກກຳໄລກ່ອນອາກອນທີ່ເພີ່ມຂຶ້ນໃນປີ 2016 ເມື່ອທຽບໃສ່ ປີ 2015. ກຳໄລອາກອນທີ່ກ່ຽວພັນກັບອາກອນລາຍຮັບທີ່ຄາດຄະເນຂອງທະນາຄານແມ່ນ 208,031 ລ້ານກີບ ໃນປີ 2016 ເມື່ອທຽບກັບ 101,360 ລ້ານກີບ ໃນປີ 2015.

12.3.9 ກຳໄລສຸດທິ

ກຳໄລສຸດທິໄດ້ຫຼຸດລົງ 6.46% ຈາກ 133,328 ລ້ານກີບໃນປີ 2014 ມາເປັນ 124,712 ລ້ານກີບໃນປີ 2015 ເນື່ອງຈາກມີລາຍຮັບດອກເບ້ຍສຸດທິ ແລະ ລາຍຮັບທີ່ຄ້າຍຄືກັນທີ່ຫຼຸດລົງ ຍ້ອນການເຕີບໂຕຊ້າຂອງເງິນກູ້ໃຫ້ແກ່ລູກຄ້າ.

ກຳໄລສຸດທິໄດ້ເພີ່ມຂຶ້ນ 39.61% ຈາກ 124,712 ລ້ານກີບ ໃນປີ 2015 ມາເປັນ 174,105 ລ້ານກີບ ໃນປີ 2016 ເນື່ອງຈາກມີລາຍຮັບດອກເບ້ຍສຸດທິ ແລະ ລາຍຮັບທີ່ຄ້າຍຄືກັນໄດ້ເພີ່ມຂຶ້ນສູງເປັນ 110.19% ຈາກປີ 2015.

ຜົນຕອບແທນຂອງສ່ວນຜູ້ຖືຮຸ້ນ (ROE) ແມ່ນຢູ່ໃນລະດັບ 12.17%, 10.90% ແລະ 14.20% ໃນທ້າຍປີ 2014, 2015 ແລະ 2016 ຕາມລຳດັບ.

ຜົນຕອບແທນຕໍ່ຊັບສິນລວມ (ROA) ແມ່ນຢູ່ໃນລະດັບ 0.66%, 0.50% ແລະ 0.60% ໃນທ້າຍປີ 2014, 2015 ແລະ 2016 ຕາມລຳດັບ.

12.4 ບົດລາຍງານ ແລະ ການວິເຄາະຖານະທາງດ້ານການເງິນ

12.4.1 ວິເຄາະຊັບສິນ

ໃນວັນທີ 31 ທັນວາ ປີ 2014, 2015 ແລະ 2016 ທະນາຄານໄດ້ມີຊັບສິນທັງໝົດ 23,489,159 ລ້ານກີບ, 25,776,860 ລ້ານກີບ ແລະ 32,023,274 ລ້ານກີບ ຕາມລຳດັບໃນນັ້ນຄາຊັບສິນດັ່ງກ່າວ ເງິນກູ້ຢືມໃຫ້ລູກ

ຄ້າ ແມ່ນກ້ອນຊັບສິນທີ່ໃຫຍ່ທີ່ສຸດໃນສາມປີຕິດຕໍ່ກັນຊຶ່ງກວມເອົາ 40.97%, 42.11% ແລະ 59.62% ຂອງຊັບສິນທັງໝົດຕາມລຳດັບ. ກົງກັນຂ້າມ ເງິນສົດ ແລະ ຍອດເງິນຝາກກັບທະນາຄານແຫ່ງ ສປປ ລາວ ແລະ ໜີ້ຕ້ອງສົ່ງທະນາຄານ ຊຶ່ງສ່ວນໃຫຍ່ແມ່ນປະກອບດ້ວຍເງິນສົດ ແລະ ອົງປະກອບທຽບເທົ່າເງິນສົດໄດ້ຫຼຸດລົງ 21.87% ແລະ 21.84% ໃນແຕ່ລະປີ. ດ້ວຍເຫດດັ່ງກ່າວ ທຄຕລ ໄດ້ມີນະໂຍບາຍຮັດກຸມຕໍ່ໂຄງສ້າງຊັບສິນ ຫຼື ເວົ້າອີກຢ່າງໜຶ່ງກໍ່ຄື ທະນາຄານໄດ້ແບກຫາບຄວາມສ່ຽງຫຼາຍຂຶ້ນ ໂດຍການຫັນຊັບສິນໄປສູ່ຊັບສິນທີ່ມີຄວາມສ່ຽງ ເພື່ອໃຫ້ໄດ້ດອກເບ້ຍເພີ່ມຂຶ້ນ.

ອັດຕາສ່ວນເງິນກູ້ຕໍ່ເງິນຝາກລວມໄດ້ເພີ່ມຂຶ້ນໃນແຕ່ລະປີຈາກ 50.99% ໃນປີ 2014 ມາເປັນ 51.88% ໃນປີ 2015 ແລະ ສືບຕໍ່ເພີ່ມຂຶ້ນເປັນ 76.02% ໃນປີ 2016. ເຖິງແມ່ນວ່າລະດັບທີ່ເໝາະສົມຂອງອັດຕາດັ່ງກ່າວ ແມ່ນຂຶ້ນກັບຫຼາຍປັດໃຈຊຶ່ງໂດຍອີງໃສ່ການວິເຄາະຂອງທະນາຄານສຳລັບທະນາຄານທຸລະກິດທີ່ເປັນລັດວິສາຫະກິດຕາມທຳນຽມແລ້ວ ລະດັບອັດຕາທີ່ເໝາະສົມແມ່ນຢູ່ໃນລະຫວ່າງ 60% ຫາ 80%. ສະນັ້ນ, ຈຶ່ງເຫັນວ່າອັດຕາດັ່ງກ່າວ ແມ່ນມີຄວາມເໝາະສົມແລ້ວ.

12.4.2 ເງິນກູ້ໃຫ້ລູກຄ້າ

ເງິນກູ້ໃຫ້ລູກຄ້າໄດ້ເພີ່ມຂຶ້ນ 12.80% ຈາກ 9,622,905 ລ້ານກີບໃນປີ 2014 ມາເປັນ 10,854,955 ລ້ານກີບໃນປີ 2015 ແລະ ສືບຕໍ່ເພີ່ມຂຶ້ນ 75.89% ມາເປັນ 19,093,205 ລ້ານກີບໃນປີ 2016. ການເຕີບໂຕຂອງເງິນປ່ອຍກູ້ແມ່ນເພີ່ມຂຶ້ນຕາມຄວາມຕ້ອງການຂອງບໍລິສັດຂະແໜງການບໍລິການ ຊຶ່ງເພີ່ມຂຶ້ນ 55.01% ຈາກ 1,545,510 ລ້ານກີບ ໃນປີ 2014 ມາເປັນ 2,395,765 ລ້ານກີບ ໃນປີ 2015 ແລະ ສືບຕໍ່ເພີ່ມຂຶ້ນ 308.92% ມາເປັນ 9,796,735 ລ້ານກີບໃນປີ 2016. ເນື່ອງຈາກ ການເຕີບໂຕດັ່ງກ່າວໄດ້ເພີ່ມຄວາມສ່ຽງດ້ານການລວມສູນຄື ເມື່ອມີເຫດການສິ່ງຜົນກະທົບອັນຮ້າຍແຮງຕໍ່ຂະແໜງການສະເພາະດັ່ງກ່າວ.

ໃນວັນທີ 31 ທັນວາ 2014, 2015 ແລະ 2016 ທະນາຄານໄດ້ມີໜີ້ທວງຍາກ 297,735 ລ້ານກີບ, 289,067 ລ້ານກີບ ແລະ 269,795 ລ້ານກີບ ຕາມລຳດັບ. ອັດຕາສ່ວນໜີ້ທວງຍາກຕໍ່ເງິນປ່ອຍກູ້ສຳລັບປີ 2014, 2015 ແລະ 2016 ແມ່ນ 3.06%, 2.62% ແລະ 1.40% ຕາມລຳດັບ. ການຫຼຸດລົງດັ່ງກ່າວແມ່ນເນື່ອງມາຈາກຄວາມພະຍາຍາມຂອງທະນາຄານໃນການຮັກສາອັດຕາສ່ວນໜີ້ເສຍຕໍ່ເງິນປ່ອຍກູ້ໃຫ້ຕ່ຳກວ່າ 3% ໂດຍຜ່ານການປະຕິບັດຂະບວນການອະນຸມັດເງິນກູ້ຢືມທີ່ເຂັ້ມງວດ ແລະ ການປັບປຸງການບໍລິຫານຄວາມສ່ຽງ.

12.4.3 ເງິນສົດ ແລະ ທຽບເທົ່າເງິນສົດ

ລາຍລະອຽດຂອງເງິນສົດ ແລະ ທຽບເທົ່າເງິນສົດມີດັ່ງຕໍ່ໄປນີ້:

ຕາຕະລາງ 37: ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ເງິນສົດ ແລະ ທຽບເທົ່າເງິນສົດໃນມື	1,867,159	2,236,642	1,998,781
ບັນດາເງິນຝາກກັບທະນາຄານແຫ່ງ ສປປ ລາວ	2,435,014	6,095,242	4,322,473

ເງິນສົດ (ລ້ານກີບ)	ປີ 2016	ປີ 2015	ປີ 2014
ເງິນຝາກກະແສລາຍວັນກັບທະນາຄານອື່ນ	2,573,530	1,659,680	2,268,162
ເງິນຝາກປະຈຳທີ່ຄົບກຳນົດພາຍໃນ 3 ເດືອນ	249,881	162,779	1,491,751
ລວມເງິນສົດ ແລະ ທຽບເທົ່າເງິນສົດໃນມື	7,125,584	10,154,343	10,081,167

ກະແສເງິນສົດ ແລະ ທຽບເທົ່າເງິນສົດໃນມື ໄດ້ເພີ່ມຂຶ້ນ 0.73% ຈາກ 10,081,167 ລ້ານກີບ ໃນປີ 2014 ມາເປັນ 10,154,343 ລ້ານກີບ ໃນປີ 2015 ແລະ ຈາກນັ້ນກໍ່ຫຼຸດລົງເຫຼືອ 7,125,585 ລ້ານກີບໃນປີ 2016. ການເພີ່ມຂຶ້ນໃນປີ 2015 ນັ້ນແມ່ນເນື່ອງມາຈາກການໄດ້ຮັບກະແສເງິນສົດຈາກກິດຈະກຳການລົງທຶນເປັນ ຈຳນວນ 166,135 ລ້ານກີບ. ການເພີ່ມຂຶ້ນດັ່ງກ່າວແມ່ນຍ້ອນທາງທະນາຄານໄດ້ຂາຍສິດນຳໃຊ້ທີ່ດິນສຳລັບທີ່ດິນ 36 ຕອນໃຫ້ແກ່ທະນານຄານແຫ່ງ ສປປ ລາວ ໃນມູນຄ່າ 374,970 ລ້ານກີບ. ກະແສເງິນສົດທີ່ໄດ້ຮັບແມ່ນຖືກຫັກລ້າງຈາກກະແສເງິນສົດທີ່ຖືກນຳໃຊ້ເຂົ້າໃນກິດຈະການດຳເນີນງານໃນຈຳນວນ 28,984 ລ້ານກີບ ແລະ ກິດຈະການດ້ານການເງິນໃນຈຳນວນ 55,534 ລ້ານກີບ. ການຫຼຸດລົງຂອງເງິນສົດ ແລະ ທຽບເທົ່າເງິນສົດໃນປີ 2016 ແມ່ນເນື່ອງມາຈາກກະແສເງິນສົດທີ່ຖືກນຳໃຊ້ເຂົ້າໃນກິດຈະການດຳເນີນງານໃນຈຳນວນ 2,888,552 ລ້ານກີບ ຊຶ່ງສ່ວນໃຫຍ່ຂອງເງິນສົດດັ່ງກ່າວແມ່ນຖືກນຳໃຊ້ເຂົ້າໃນການປ່ອຍສິນເຊື່ອໃຫ້ແກ່ລູກຄ້າ ອັນນຳໄປສູ່ການເຕີບໂຕດ້ານລາຍຮັບໃນທາງບວກຂອງທະນາຄານ.

12.4.4 ການລົງທຶນທາງການເງິນປະເພດທີ່ຖືໄວ້ຈົນເຖິງມື້ຄົບກຳນົດ

ການລົງທຶນທາງການເງິນປະເພດທີ່ຖືໄວ້ຈົນເຖິງມື້ຄົບກຳນົດໄດ້ເພີ່ມຂຶ້ນ 40.24% ຈາກ 1,266,732 ລ້ານກີບ ໃນປີ 2014 ມາເປັນ 1,776,408 ລ້ານກີບ ໃນປີ 2015 ແລະ ຈາກນັ້ນສືບຕໍ່ເພີ່ມຂຶ້ນອີກ 43.72% ເປັນ 2,553,110 ລ້ານກີບ ໃນປີ 2016. ການເພີ່ມຂຶ້ນດັ່ງກ່າວ ແມ່ນເນື່ອງມາຈາກການເພີ່ມຂຶ້ນໃນການລົງທຶນໃນພັນທະບັດທີ່ອອກໂດຍກະຊວງ ການເງິນ ຈາກ 759,871 ລ້ານກີບ ໃນປີ 2014 ມາເປັນ 1,033,202 ລ້ານກີບ ໃນປີ 2015 ແລະ ຈາກນັ້ນສືບຕໍ່ເພີ່ມເປັນ 1,998,663 ລ້ານກີບໃນປີ 2016. ພັນທະບັດໄດ້ສະໜອງຜົນຕອບແທນທີ່ມີຄວາມສ່ຽງຕ່ຳ ແລະ ຮັບປະກັນສຳລັບເງິນລົງທຶນ.

12.4.5 ການວິເຄາະໜີ້ສິນ

ຕະຫຼອດໄລຍະເວລາທະນາຄານໄດ້ຮັກສາໂຄງສ້າງໜີ້ສິນທີ່ປະກອບດ້ວຍ ເງິນຝາກຈາກລູກຄ້າ ທີ່ກວມເອົາ 85.51%, 86.70% ແລະ 82.72% ຂອງໜີ້ສິນລວມ ນະວັນທີ 31 ທັນວາປີ 2014, 2015 ແລະ 2016 ຕາມລຳດັບ. ສ່ວນທີ່ເຫຼືອແມ່ນມາຈາກໜີ້ສິນກັບບັນດາທະນາຄານ (ໜີ້ຕ້ອງຈ່າຍໃຫ້ທະນາຄານ ແລະ ເງິນກູ້ຈາກທະນາຄານອື່ນ) ແລະ ໜີ້ສິນອື່ນໆ. ໃນຖານະເປັນໜຶ່ງໃນທະນາຄານຊັ້ນນຳຂອງ ສປປ ລາວ ທະນາຄານມີຄວາມໄດ້ປຽບຢ່າງຫຼວງຫຼາຍໃນການຂະຫຍາຍການປ່ອຍເງິນກູ້ໃຫ້ແກ່ລູກຄ້າ ແລະ ທຸລະກິດການປ່ອຍສິນເຊື່ອອື່ນໆ.

12.4.6 ໜີ້ຕ້ອງສົ່ງລູກຄ້າ

ລູກຄ້າ ເງິນຝາກໄດ້ມີການຂະຫຍາຍຕົວເປັນ 11.56% ຈາກ 19,101,649 ລ້ານກີບ ໃນປີ 2014 ມາເປັນ 21,310,561 ລ້ານກີບ ໃນປີ 2015 ແລະ ຈາກນັ້ນສືບຕໍ່ເພີ່ມຂຶ້ນອີກ 19.20% ເປັນ 25,402,421 ລ້ານກີບໃນປີ 2016. ລາຍລະອຽດຂອງເງິນຝາກລູກຄ້າມີດັ່ງນີ້:

ຕາຕະລາງ 38: ໜີ້ຕ້ອງສົ່ງ

ໜີ້ຕ້ອງສົ່ງ (ລ້ານກີບ)	ປີ 2016		ປີ 2015		ປີ 2014	
ເງິນຝາກກະແສລາຍວັນ	6,082,985	23.95%	4,515,881	21.19%	4,308,911	22.56%
ເງິນຝາກປະຢັດ	9,341,554	36.77%	8,591,522	40.32%	7,544,224	39.50%
ເງິນຝາກມີກຳນົດ	9,495,540	37.38%	7,882,509	36.99%	6,913,028	36.19%
ເງິນຝາກປະຈຳ	119,478	0.47%	61,525	0.29%	72,056	0.38%
ໜີ້ຕ້ອງສົ່ງອື່ນໆ	270,585	1.07%	202,651	0.95%	242,084	1.27%
ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ	92,279	0.36%	56,473	0.27%	21,346	0.11%
ລວມໜີ້ຕ້ອງສົ່ງລູກຄ້າ	**25,402,421**	**100.00%**	**21,310,561**	**100.00%**	**19,101,649**	**100.00%**

ສັດສ່ວນທີ່ປະກອບເປັນເງິນຝາກຂອງລູກຄ້າໃນປີ 2014 ແລະ 2015 ໄດ້ແກ່ເງິນຝາກປະຢັດ (ກວມ 39.50% ແລະ 40.32% ຕາມລຳດັບ) ແລະ ໃນປີ 2016 ແມ່ນເງິນຝາກປະຈຳ (ກວມ 37.38%). ໃນປີ 2014 ແລະ 2015 ອັດຕາດອກເບ້ຍສຳລັບເງິນຝາກປະຢັດທີ່ເປັນສະກຸນເງິນກີບແມ່ນຢູ່ໃນລະຫວ່າງ 1.50%-3.00% ຕໍ່ປີ ຊຶ່ງເປັນອັດຕາດອກເບ້ຍທີ່ສູງ ແລະ ມີສະພາບຄ່ອງສູງ ເຫັນວ່າເປັນອັດຕາທີ່ສາມາດດຶງດູດບຸກຄົນ ແລະ ລູກຄ້າທີ່ເປັນສະຖາບັນເມື່ອທຽບໃສ່ເງິນຝາກປະເພດດຽວກັນທີ່ເປັນສະກຸນຕ່າງປະເພດທີ່ມີຢູ່ໃນລະຫວ່າງ 0.60%- 1.40% ຕໍ່ປີ. ແຕ່ເມື່ອມາຮອດທ້າຍປີ 2016 ເນື່ອງຈາກວ່າທະນາຄານແຫ່ງ ສປປ ລາວ ໄດ້ມີຂໍ້ຕົກລົງຫຼຸດອັດຕາດອກເບ້ຍໃນເດືອນ ກໍລະກົດ ປີ 2015 ແລະ ໄດ້ວາງເພດານອັດຕາດອກເບ້ຍສຳລັບເງິນຝາກ ແລະ ສິນເຊື່ອທີ່ເປັນສະກຸນເງິນກີບສຳລັບ ບັນດາທະນາຄານທຸລະກິດ ອັດຕາດອກເບ້ຍເງິນຝາກສະກຸນເງິນກີບກໍ່ໄດ້ຫຼຸດລົງຫຼາຍຊຶ່ງເຮັດໃຫ້ອັດຕາດອກເບ້ຍເງິນຝາກບໍ່ເປັນທີ່ໜ້າດຶງດູດ. ໃນທາງກົງກັນຂ້າມ ເງິນຝາກທີ່ເປັນສະກຸນເງິນຕ່າງປະເທດຜັດບໍ່ໄດ້ຮັບຜົນກະທົບຫຼາຍຈາກຂໍ້ຕົກລົງທີ່ໄດ້ກ່າວມາຂ້າງເທິງ ເນື່ອງຈາກສາເຫດຄວາມໄດ້ປຽບຂອງອັດຕາດອກເບ້ຍດັ່ງກ່າວໄດ້ເຮັດໃຫ້ປະລິມານເງິນຝາກທີ່ເປັນສະກຸນເງິນຕ່າງປະເທດເພີ່ມຂຶ້ນ ໂດຍສະເພາະແມ່ນປະເພດເງິນຝາກມີກຳນົດ.

12.4.7 ໜີ້ຕ້ອງຈ່າຍໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ

ໜີ້ຕ້ອງຈ່າຍໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນໄດ້ຂະຫຍາຍຕົວ 6.16% ຈາກ 2,983,012 ລ້ານກີບ ໃນປີ 2014 ມາເປັນ 3,166,844 ລ້ານກີບ ໃນປີ 2015 ແລະ ຈາກນັ້ນສືບຕໍ່ເພີ່ມຂຶ້ນອີກ 63.16% ເປັນ 5,167,005 ລ້ານກີບໃນປີ 2016 ຊຶ່ງກວມ 13.35%, 12.88% ແລະ 16.83% ຂອງໜີ້ສິນລວມໃນທ້າຍປີ 2014, 2015 ແລະ 2016 ຕາມລຳດັບ. ການຂະຫຍາຍຕົວດັ່ງກ່າວຕົ້ນຕໍແມ່ນເນື່ອງມາຈາກເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ. ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ ໄດ້ເພີ່ມຂຶ້ນ 494.04% ຈາກ 121,287

ລ້ານກີບໃນປີ 2014 ມາເປັນ 720,497 ລ້ານກີບໃນປີ 2015 ແລະ ຈາກນັ້ນສືບຕໍ່ເພີ່ມຂຶ້ນເປັນ 1,640,776 ລ້ານກີບ ໃນປີ 2016. ຈຸດປະສົງໃນການກູ້ຢືມດັ່ງກ່າວຕົ້ນຕໍແມ່ນເພື່ອນຳໃຊ້ເຂົ້າໃນການລົງທຶນຂອງທະນາຄານ ແລະ ປ່ອຍກູ້ໃຫ້ແກ່ບັນດາໂຄງການທີ່ລັດຖະບານສະໜັບສະໜູນ.

12.4.8 ການວິເຄາະທຶນ ແລະ ສ່ວນຂອງຜູ້ຖືຮຸ້ນ

ໃນວັນທີ 31 ທັນວາປີ 2014, 2015 ແລະ 2016 ທຶນຂອງຜູ້ຖືຮຸ້ນທັງໝົດໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກ 1,150,691 ລ້ານກີບ ຫຼື ເທົ່າກັບ 4.90% ຂອງຊັບສິນລວມ ມາເປັນ 1,313,194 ລ້ານກີບ ຫຼື ເທົ່າກັບ 4.10% ຂອງຊັບສິນລວມຕາມລຳດັບ. ທຶນຈົດທະບຽນຂອງທະນາຄານແມ່ນ 682,888 ລ້ານກີບ ນະວັນທີ 31 ທັນວາປີ 2014, 2015 ແລະ 2016. ເຖິງແມ່ນວ່າທຶນຈົດທະບຽນຂອງທະນາຄານມີການເພີ່ມຂຶ້ນໃນແຕ່ລະປີ ແຕ່ສັດສ່ວນຕໍ່ຊັບສິນພັດຫຼຸດລົງ. ສິ່ງເຫຼົ່ານີ້ໄດ້ບົ່ງບອກວ່າທະນາຄານໄດ້ມີສັດສ່ວນໜີ້ສິນຕໍ່ທຶນທີ່ສູງຂຶ້ນ ຊຶ່ງເປັນການບົ່ງບອກເຖິງຄວາມສ່ຽງດ້ານສະຖຽນລະພາບທີ່ສູງຂຶ້ນ. ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວຈະມີການເພີ່ມທຶນຈົດທະບຽນມາເປັນປະມານ 1,037,056 ລ້ານກີບ ພາຍຫຼັງອອກຈຳໜ່າຍຫຼັກຊັບ ຊຶ່ງເຮັດໃຫ້ສ່ວນຂອງຜູ້ຖືຮຸ້ນເພີ່ມຂຶ້ນເປັນ 1,667,362 ລ້ານກີບ ຫຼື ເທົ່າກັບ 5.21% ຂອງຊັບສິນລວມ.

ສັດສ່ວນຂອງທຶນຊັ້ນໜຶ່ງໄດ້ຄ່ອຍຫຼຸດຈາກ 15.27% ໃນທ້າຍປີ 2014 ມາເປັນ 10.73% ໃນປີ 2015 ແລະ ຈາກນັ້ນສືບຕໍ່ຫຼຸດລົງມາເປັນ 9.37% ໃນປີ 2016 ອັນມີສາເຫດເນື່ອງມາຈາກການເພີ່ມຂຶ້ນຂອງຊັບສິນທີ່ມີຄວາມສ່ຽງ ຊຶ່ງຄຽງຄູ່ກັນກັບການເຕີບໂຕຂອງເງິນກູ້ຢືມເຮັດໃຫ້ສັດສ່ວນຂອງຊັບສິນສ່ຽງເພີ່ມຂຶ້ນຕາມ.

ສັດສ່ວນຄວາມພຽງພໍຂອງທຶນກໍ່ມີການຫຼຸດລົງຢ່າງຕໍ່ເນື່ອງຈາກ 7.97% ໃນທ້າຍປີ 2014 ມາເປັນ 5.61% ໃນປີ 2015 ແລະ ຈາກນັ້ນສືບຕໍ່ຫຼຸດລົງມາເປັນ 5.33% ໃນປີ 2016 ເນື່ອງຈາກເຫດຜົນຄືດັ່ງທີ່ໄດ້ກ່າວມາຂ້າງເທິງ ຊຶ່ງກໍ່ໝາຍຄວາມວ່າການເຕີບໂຕຂອງທຶນແມ່ນຍັງບໍ່ສາມາດທ່ວງທັນກັບການຂະຫຍາຍຕົວຂອງຊັບສິນທີ່ມີຄວາມສ່ຽງ ແລະ ບັນຫາດັ່ງກ່າວກໍ່ໄດ້ຂັດກັບຄວາມພະຍາຍາມຂອງທະນາຄານ ໃນການບັນລຸລະບຽບການກ່ຽວກັບຄວາມພຽງພໍຂອງທຶນຕາມທີ່ໄດ້ກຳນົດໂດຍທະນາຄານແຫ່ງ ສປປ ລາວ ທີ່ໄດ້ລະບຸວ່າຄວາມພຽງພໍຂອງທຶນຂອງທະນາຄານຕ້ອງບໍ່ໃຫ້ຫຼຸດ 8%. ເພື່ອປະຕິບັດຕາມລະບຽບການດັ່ງກ່າວ ທະນາຄານຕ້ອງເພີ່ມທຶນທັງໝົດໂດຍການເພີ່ມທຶນ ຫຼື ຫຼຸດຊັບສິນທີ່ມີຄວາມສ່ຽງດ້ວຍການປັບຊັບສິນທີ່ມີຄວາມສ່ຽງໄປເປັນປະເພດຊັບສິນທີ່ມີຄວາມສ່ຽງໜ້ອຍກວ່າ ເຊັ່ນ: ພັນທະບັດລັດຖະບານ ຫຼື ເງິນກູ້ໃຫ້ແກ່ສະຖາບັນການເງິນ ຫຼື ທັງສອງຢ່າງ. ເພື່ອຕອບສະໜອງຈຸດປະສົງດັ່ງກ່າວ ທະນາຄານມີແຜນປະຕິບັດດັ່ງຕໍ່ໄປນີ້:

- ການເພີ່ມທຶນໂດຍຜ່ານການລະດົມທຶນຈາກຜູ້ຖືຮຸ້ນເດີມ ແລະ/ຫຼື ນັກລົງທຶນທົ່ວໄປ;
- ຫຼຸດຜ່ອນຊັບສິນສ່ຽງ ໂດຍສະເພາະແມ່ນເງິນປ່ອຍກູ້ຢືມໃຫ້ແກ່ລູກຄ້າ ດ້ວຍການຕິດຕາມສະຖານະເງິນກູ້ປັດຈຸບັນຂອງທະນາຄານຢ່າງໃກ້ຊິດ ແລະ ບໍລິຫານຄວາມສ່ຽງທີ່ມີຄວາມສຳຄັນ ແລະ ເຂັ້ມງວດກັບຂະບວນການອະນຸມັດສິນເຊື່ອກັບລູກຄ້າສິນເຊື່ອໃໝ່; ແລະ
- ເພີ່ມທະວີການລົງທຶນໃນຊັບສິນທີ່ມີຄວາມສ່ຽງລະດັບຕ່ຳຫາກາງ

ພາກທີ 2 ຂໍ້ມູນກ່ຽວກັບການອອກຈຳໜ່າຍຮຸ້ນ

ພາກນີ້ ສະແດງເຖິງຂໍ້ມູນທີ່ກ່ຽວພັນກັບຮຸ້ນຂອງ ທຄຕລ ແລະ ສິດໃນການຖືຄອງຮຸ້ນຂອງຜູ້ຖືຮຸ້ນ ຊຶ່ງອີງໃສ່ກົດລະບຽບຂອງ ທຄຕລ ແລະ ບັນດາກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

1. ລາຍລະອຽດຂອງການສະເໜີອອກຈຳໜ່າຍຮຸ້ນ

- **ສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ RO**

RO ຫຼື Rights Offering ແມ່ນ ຮຸ້ນທີ່ບໍລິສັດຈົດທະບຽນອອກຮຸ້ນເພີ່ມທຶນໃໝ່ ເພື່ອສະເໜີຂາຍໃຫ້ກັບຜູ້ຖືຮຸ້ນເດີມ ຊຶ່ງບຸກຄົນທີ່ຊື້ຮຸ້ນ ທຄຕລ ກ່ອນມື້ປິດປຶ້ມບັນຊີເພື່ອກຳນົດສິດຜູ້ຖືຮຸ້ນເດີມກ່ອນມີເຄື່ອງໝາຍອະສິດຜູ້ຖືຮຸ້ນ (XR) ແມ່ນຈະໄດ້ຮັບສິດໃນການຈອງຊື້ຮຸ້ນໃນສັດສ່ວນສອງຮຸ້ນເດີມຕໍ່ໜຶ່ງຮຸ້ນໃໝ່ (2:1) ສຳລັບຮຸ້ນທີ່ບໍ່ໄດ້ຮັບການໃຊ້ສິດ ແມ່ນສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມລາຍອື່ນໆກ່ອນສະເໜີຂາຍໃຫ້ມວນຊົນທົ່ວໄປ.

- **ສະເໜີຂາຍຮຸ້ນໃຫ້ແກ່ມວນຊົນທົ່ວໄປ PO**

PO ຫຼື Public Offering ແມ່ນຮຸ້ນສາມັນເພີ່ມທຶນທີ່ຂາຍໃຫ້ກັບມວນຊົນທົ່ວໄປ ຊຶ່ງບໍ່ໄດ້ຈຳກັດຜູ້ລົງທຶນທີ່ຈະຊື້. ຜູ້ຖືຮຸ້ນເດີມ, ຜູ້ຖືຮຸ້ນທົ່ວໄປ ຫຼື ຜູ້ທີ່ບໍ່ເຄີຍຖືຮຸ້ນກໍ່ສາມາດຈອງຊື້ຮຸ້ນໄດ້, ໃນກໍລະນີຜູ້ຈອງຊື້ຮຸ້ນ PO ເກີນຈຳນວນທີ່ອອກຈຳໜ່າຍ ຜູ້ຄ້ຳປະກັນຈະໄຊ້ວິທີສະເລ່ຍຖ່ວງນ້ຳໜັກ ແລະ ຈັດສັນຕາມສັດສ່ວນການຈອງຊື້ຮຸ້ນ PO ໃນກໍລະນີທີ່ຂາຍບໍ່ໝົດ ຜູ້ຮັບປະກັນຈະຮັບຊື້ຮຸ້ນດັ່ງກ່າວ.

2. ຂໍ້ຈຳກັດໃນການໂອນຮຸ້ນ ແລະ ຂໍ້ຈຳກັດໃນການຖືຮຸ້ນຂອງຜູ້ລົງທຶນຕ່າງປະເທດ

ກົດໝາຍຂອງ ສປປ ລາວ ໄດ້ມີຂໍ້ຫ້າມກ່ຽວກັບການຖືຄອງຮຸ້ນຂອງນັກລົງທຶນຕ່າງປະເທດອາດຈະໄດ້ຮັບ ຫຼື ຖືໄດ້ ອີງຕາມລະບຽບວ່າດ້ວຍ ການຄຸ້ມຄອງນັກລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບ ຢູ ສປປ ລາວ (ສະບັບປັບປຸງ) ເລກທີ 005/ຄຄຊ, ລົງວັນທີ 08 ທັນວາ ປີ 2015 ຜູ້ລົງທຶນຕ່າງປະເທດສາມາດຖືຄອງຫຼັກຊັບປະເພດຮຸ້ນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນຕາມບຸລິມະສິດໃດໜຶ່ງຕາມລຳດັບດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງລະບຽບດັ່ງນີ້:

1) ຕາມການກຳນົດໄວ້ໃນລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ;
2) ຕາມການກຳນົດຂອງມະຕິກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ;
3) ຕາມການກຳນົດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບເປັນແຕ່ລະກໍລະນີ.

ສຳລັບການຖືຄອງຮຸ້ນຫຼັກຊັບປະເພດຮຸ້ນກູ້ ຫຼື ຫຼັກຊັບປະເພດອື່ນແມ່ນປະຕິບັດຕາມມະຕິກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ.

3. ການກຳນົດລາຄາສະເໜີຂາຍ

ປັດຈຸບັນ ລາຄາປິດສະເລ່ຍຖ່ວງນ້ຳໜັກ 30 ວັນກ່ອນຍື່ນຂໍອະນຸມັດຈາກສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ລາຄາສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ (RO) ທີ່ສາມາດສະເໜີຂາຍໄດ້ຕ່ຳສຸດແມ່ນ 5,050 ກີບ/ຮຸ້ນ ຄາດຄະເນການລະດົມທຶນຈາກການອອກຈຳໜ່າຍ RO ປະມານ 344,857,430,000 ກີບ ແລະ ສະເໜີຂາຍຕໍ່ມວນຊົນທົ່ວໄປ (PO) ຈຳນວນ 2,857,100 ຮຸ້ນໃນລາຄາ 5,300 ກີບ, ສາມາດລະດົມທຶນໄດ້ປະມານ 15,142,630,000 ກີບ, ລວມການລະດົມທຶນທັງໝົດແມ່ນ 360,000,060,000 ກີບ, ໃນນັ້ນເຂົ້າເປັນເງິນທຶນຈົດທະບຽນ

355,728,500,000 ກີບ ແລະ ເປັນສ່ວນຕ່າງຂອງລາຄາສະເໜີຂາຍ (Premium) ແມ່ນ 4,271,560,000 ກີບ, ເຮັດໃຫ້ທຶນຈົດທະບຽນໃໝ່ພາຍຫຼັງອອກຈຳໜ່າຍຮຸ້ນແລ້ວກາຍເປັນ 1,038,616,500,000 ກີບ ແລະ ມີຈຳນວນຮຸ້ນທີ່ຊຳລະແລ້ວທັງໝົດ 207,723,300 ຮຸ້ນ.

4. ລາຍລະອຽດຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນ

ທີ່ປຶກສາທາງດ້ານການເງິນ ແລະ ຜູ້ຄ້ຳປະກັນຫຼັກໃນການອອກຈຳໜ່າຍຮຸ້ນ

ຊື່ບໍລິສັດ	:	ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ
ສຳນັກງານຕັ້ງຢູ່	:	ຕະຫຼາດຫຼັກຊັບລາວ (ຕລຊລ) ຊັ້ນ 6,ຖະໜົນກຳແພງເມືອງ (T4), ບ.ໂພນທັນ, ມ.ໄຊເສດຖາ, ນະຄອນຫຼວງວຽງຈັນ
ໂທລະສັບ	:	856 21 419222
ແຟັກ	:	856 21 419220
Call center	:	856 21 419210
Website	:	www.lcs.com.la

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນນາມເປັນທະນາຄານຕົວແທນຊຳລະສະສາງຂໍແຈ້ງໃຫ້ຊາບວ່າ ທ່ານສາມາດເປີດບັນຊີເງິນຝາກປະຈຳເປັນສະກຸນເງິນກີບ ທີ່ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອເປັນບັນຊີຮອງຮັບໃນການໂອນເງິນ ສຳລັບການຈອງຊື້ຮຸ້ນສາມັນເພີ່ມທຶນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຊຶ່ງທ່ານສາມາດຕິດຕໍ່ພົວພັນໄດ້ທີ່ລາຍລະອຽດລຸ່ມນີ້:

1	ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ສຳນັກງານໃຫຍ່)	ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ	ໂທ: (85621) 213200-1 , (85621) 223243-4 (85621) 217899 , (85621) 222495 ແຟັກ: (85621) 213202 , (85621) 223012, (85621) 214944 ອີເມວ: bcelhovt@bcel.com.la, bcelhqv@bcel.com.la ຕູ້ໄປສະນີ: 2925 ລະຫັດ Swift: COEBLALA
2	ສາຂາຈຳປາສັກ	ເລກທີ 11, ບ້ານຜັດທະນາຫຼັກເມືອງ, ເມືອງ ປາກເຊ, ແຂວງຈຳປາສັກ	ໂທ: (856-31) 213207 ແຟັກ: (856-31) 213206 ຕູ້ໄປສະນີ: 789 ລະຫັດ Swift: COEBLALA
3	ສາຂາຜົ້ງສາລີ	ຖະໜົນພູຟ້າ, ບ້ານຈອມເມືອງ, ເມືອງຜົ້ງສາລີ,	ໂທ: (856-88) 210224

		ແຂວງຜົ້ງສາລີ.	ແຟັກ: (856-88) 210221 ອີເມວ: bcelpsl@bcel.com.la ລະຫັດ Swift: COEBLALA
4	ສາຂາຫຼວງພະບາງ	ຖະໜົນໄກສອນ, ບ້ານໂພນເພ້ງ, ເມືອງຫຼວງພະບາງ, ແຂວງຫຼວງພະບາງ.	ໂທ: (856-71) 252814 ແຟັກ: (856-71) 260598 ອີເມວ: bcellpb@bcel.com.la ຕູ້ໄປສະນີ: 534 ລະຫັດ Swift: COEBLALA
5	ສາຂາໄຊຍະບູລີ	ຖະໜົນໄກສອນ, ບ້ານສີເມືອງ, ເມືອງໄຊຍະບູລີ, ແຂວງໄຊຍະບູລີ	ໂທ: (856-74) 260038 ແຟັກ: (856-74) 211318 ອີເມວ: bcelxyb@bcel.com.la ລະຫັດ Swift: COEBLALA
6	ສາຂາຄຳມ່ວນ	ຖະໜົນວຽງຈັນ, ບ້ານຈອມທອງ, ເມືອງທ່າແຂກ, ແຂວງຄຳມ່ວນ.	ໂທ: (856-51) 212689, 212688, ແຟັກ: (856-51) 212685, 214409, ອີເມວ: bcelkmn@bcel.com.la ລະຫັດ Swift: COEBLALA
7	ສາຂາຊຽງຂວາງ	ຖະໜົນເລກ 7 ໄຊຊະນະ, ບ້ານໂພນສະຫວັນໃຕ້, ເມືອງແປກ, ແຂວງຊຽງຂວາງ	ໂທ: (856-61) 213297 ແຟັກ: (856-61) 213293 ອີເມວ: bcelxkh@bcel.com.la ລະຫັດ Swift: COEBLALA
8	ສາຂາດົງໂດກ	ຖະໜົນ 13 ເໜືອ, ບ້ານຄຳຮຸ່ງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ	ໂທ: (856-21) 771495 ແຟັກ: (856-21) 771496 ອີເມວ: bcelddb@bcel.com.la
9	ສາຂານະຄອນຫຼວງວຽງຈັນ	ຖະໜົນອາຊຽນ, ບ້ານທົ່ງຂັນຄຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ.	ໂທ: (856-21) 213205, 219763, 219764 ແຟັກ: (856-21) 219765 ອີເມວ: bcelvtc@bcel.com.la ຕູ້ໄປສະນີ: 2925 ລະຫັດ Swift: COEBLALA
10	ສາຂາບໍລິຄຳໄຊ	ເລກທີ 13 ໃຕ້ຖະໜົນບ້ານໂພນໄຊເໜືອ,	ໂທ: (856-54) 280112

		ເມືອງປາກຊັນ, ແຂວງບໍລິຄຳໄຊ.	ແຟັກ: (856-54) 790918 ອີເມວ: bcelblx@bcel.com.la ລະຫັດSwift: COEBLALA
11	ສາຂາບໍ່ແກ້ວ	ຖະໜົນສາຍກາງ, ບ້ານໃຫຍ່ຫ້ວຍຊາຍເໜືອ, ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ.	ໂທ: (856-84) 212170 ແຟັກ: (856-84) 212169 ອີເມວ: bcelbok@bcel.com.la
12	ສາຂາວັງວຽງ	ຖະໜົນກາງເມືອງ, ບ້ານສະຫວ່າງ, ເມືອງວັງວຽງ, ແຂວງວຽງຈັນ.	ໂທ: (856-23) 511434 ແຟັກ: (856-23) 511433 ອີເມວ: bcelvv@bcel.com.la ລະຫັດ Swift: COEBLALA
13	ສາຂາສະຫວັນນະເຂດ	ຖະໜົນລາດສະວິງເສີກ, ບ້ານສຸນັນທາ, ເມືອງໄກສອນພົມວິຫານ, ແຂວງສະຫວັນນະເຂດ.	ໂທ: (856-41) 212261 ແຟັກ: (856-41) 212723 ອີເມວ: bcelsvn@bcel.com.la ລະຫັດ Swift: COEBLALA
14	ສາຂາສາລະວັນ	ທາງເລກທີ 15 A, ບ້ານນາເຫຼັກ, ເມືອງສາລະວັນ, ແຂວງສາລະວັນ	ໂທ: (856-34) 212016 ແຟັກ: (856-34) 212037 ອີເມວ: bcelslv@bcel.com.la ລະຫັດ Swift: COEBLALA
15	ສາຂາຫຼວງນ້ຳທາ	ຖະໜົນຫຼວງນ້ຳທາ, ບ້ານໂພນໄຊ, ເມືອງຫຼວງນ້ຳທາ, ແຂວງຫຼວງນ້ຳທາ	ໂທ: (856-86) 211316 ແຟັກ: (856-86) 212334 ອີເມວ: bcellnt@bcel.com.la ລະຫັດ Swift: COEBLALA
16	ສາຂາຫົວພັນ	ຖະໜົນຜາຖ່ ບ້ານພັນໄຊ, ເມືອງຊຳເໜືອ, ແຂວງຫົວພັນ.	ໂທ: (856-64) 312178 ແຟັກ: (856-64) 312090 ອີເມວ: bcelhpn@bcel.com.la
17	ສາຂາອັດຕະປື	ຖະໜົນ 16 ໄອ, ບ້ານໂພນສະຫວ່າງ, ເມືອງສາມັກຄີໄຊ, ແຂວງອັດຕະປື.	ໂທ: (856-36) 210062-0, 211929 ແຟັກ: (856-36) 211939, 210063 ອີເມວ: bcelatp@bcel.com.la
18	ສາຂາອຸດົມໄຊ	ຖະຫນົນ 13 ເຫນືອ, ບ້ານນາຫວານນ້ອຍ,	ໂທ: (856-81) 211260

		ເມືອງໄຊ, ແຂວງອຸດົມໄຊ.	ແຟັກ: (856-81) 212234 ອີເມວ: bcelodx@bcel.com.la ລະຫັດ Swift: COEBLALA
19	ສາຂາເຊກອງ	ຖະໜົນເລກທີ 16, ບ້ານໃໝ່ຫົວເມືອງ, ເມືອງ ລະມາມ, ແຂວງເຊກອງ.	ໂທ: (856-38) 211689 ແຟັກ: (856-38) 211689 ອີເມວ: bcelsek@bcel.com.la ລະຫັດ Swift: COEBLALA
20	ສາຂາໂພນໂຮງ	ຖະໜົນ 13 ເໜືອ, ບ້ານໂພນໂຮງ, ເມືອງໂພນ ໂຮງ, ແຂວງວຽງຈັນ	ໂທ: (856-23) 212171 ແຟັກ: (856-23) 212173 ລະຫັດ Swift: COEBLALA

ແຫຼ່ງຂໍ້ມູນ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

5. ເງື່ອນໄຂຂອງການຄ້ຳປະກັນ

ທຄຕລ ໄດ້ແຕ່ງຕັ້ງຜູ້ອອກຈຳໜ່າຍຮຸ້ນເພື່ອດຳເນີນການຈອງ ແລະ ການຊຳລະຄ່າຈອງຮຸ້ນຈຳນວນ 71,145,700 ຮຸ້ນ (ລວມທັງຈຳນວນຮຸ້ນທັງໝົດທີ່ສະເໜີຂາຍບົນພື້ນຖານການໃຊ້ສິດຂອງຜູ້ຖືຮຸ້ນເດີມ), ດ້ວຍມູນຄ່າກຳນົດ 5,050 ກີບຕໍ່ຮຸ້ນສຳລັບ (RO) ແລະ 5,300 ກີບຕໍ່ຮຸ້ນສຳລັບ (PO) ຕາມການຄ້ຳປະກັນແບບ firm commitment (ຖ້າຂາຍບໍ່ໝົດຜູ້ຄ້ຳປະກັນເປັນຜູ້ຮັບຜິດຊອບ) ໂດຍອີງຕາມຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ.

ຖ້າຄູ່ສັນຍາລະເມີດສິດສັນຍາດັ່ງກ່າວ ຊຶ່ງເປັນການລະເມີດໃນຂໍ້ທີ່ເປັນເນື້ອໃນສຳຄັນ ແລະ ບໍ່ມີການຊົດເຊີຍຄວາມເສຍຫາຍພາຍໃນເວລາທີ່ໄດ້ກຳນົດໄວ້ ຫຼື ບໍ່ສາມາດຊົດເຊີຍຄວາມເສຍຫາຍໄດ້, ຄູ່ສັນຍາຝ່າຍທີ່ເສຍຫາຍອາດຕັດສິນໃຈແຈ້ງການຍົກເລີກສັນຍາຕໍ່ຄູ່ສັນຍາອີກຝ່າຍໜຶ່ງ ແລະ ຜົນການຍົກເລີກສັນຍາດັ່ງກ່າວ ຊຶ່ງອາດລວມເຖິງຄ່າເສຍຫາຍ ແລະ ຄ່າປັບໃໝ.

6. ການຄາດຄະເນລາຍຈ່າຍໃນການອອກຈຳໜ່າຍຮຸ້ນ

ລາຍຈ່າຍທີ່ໃຊ້ໃນການສະເໜີຂາຍຮຸ້ນຈ່າຍເປັນເງິນກີບທຽບເທົ່າປະມານ 55,000 ໂດລ້າສະຫະລັດ ບໍ່ລວມເອົາຄ່າທຳນຽມທີ່ຕ້ອງການຈ່າຍໃຫ້ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ.

7. ຂັ້ນຕອນການຂໍຮັບເອົາໜັງສືຊວນຊື້ ແລະ ແບບຟອມການຈອງຊື້ຮຸ້ນ

- ໄລຍະສະເໜີຂາຍຮຸ້ນໃຫ້ກັບຜູ້ຖືຮຸ້ນເດີມ: ເວລາ 8:30 ເຖິງ 15:30, ລະຫວ່າງວັນທີ 28/08/2017 ເຖິງ 30/08/2017
- ໄລຍະສະເໜີຂາຍຮຸ້ນໃຫ້ກັບມວນຊົນທົ່ວໄປ: ເວລາ 8:30 ເຖິງ 15:30, ລະວ່າງວັນທີ 31/08/2017 ເຖິງ 01/09/2017

ສຳລັບໜັງສືຊວນຊື້ ແລະ ແບບຟອມການຈອງຊື້ຮຸ້ນນັ້ນຜູ້ລົງທຶນແມ່ນສາມາດຜ່ານທາງຜ່ານເອົາໄດ້ຕາມທີ່ຢູ່ຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ຕົວແທນຈຳໜ່າຍຮຸ້ນຫຼືຜູ້ຈັດສັນຮຸ້ນ ແລະ ສາຂາແຕ່ລະແຫ່ງຂອງ ທຄຕລ ໃນຖານະເປັນຜູ້ຕາງໜ້າຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ລາຍລະອຽດເບິ່ງໄດ້ໃນຂໍ້ທີ 4.

8. ວິທີການຈອງຊື້ຮຸ້ນ

ຜູ້ຈອງຊື້ຮຸ້ນສາມາດຜ່ານເອົາໜັງສືຊວນຊື້ ແລະ ໃບຈອງຊື້ໄດ້ຈາກຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນພາຍໃນໄລຍະສະເໜີຂາຍຮຸ້ນທີ່ກຳນົດໄວ້ໃນໜັງສືຊວນຊື້ສະບັບນີ້. ຜູ້ຈອງຊື້ຮຸ້ນຕ້ອງປະກອບຂໍ້ມູນໃສ່ໃບຈອງຊື້ຢ່າງຈະແຈ້ງດັ່ງເອກະສານລຸ່ມນີ້:

<u>ເອກະສານຢັ້ງຢືນສະຖານະພາບທີ່ຕ້ອງປະກອບມີ:</u>

- ສຳລັບນັກລົງທຶນລາວ: ສຳເນົາບັດປະຈຳຕົວ;
- ສຳລັບນັກລົງທຶນຕ່າງປະເທດ: ສຳເນົາໜັງສືຜ່ານແດນ (Passport);
- ໃບມອບສິດຈາກຜູ້ຈອງຊື້: ໃນກໍລະນີທີ່ເຈົ້າຂອງບັນຊີມອບໝາຍໃຫ້ບຸກຄົນທີສາມມາຈອງຊື້ແທນ;
- ນັກລົງທຶນທີ່ເປັນ ທຄຕລ ຫຼື ສະຖາບັນ: ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາບັດປະຈຳຕົວ ຫຼືໜັງສືຜ່ານແດນ (Passport) ຂອງບຸກຄົນທີ່ໄດ້ຮັບມອບສິດ.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນທີ່ຮັບເອົາການຈອງຊື້ຮຸ້ນຈະອອກໃບຢັ້ງຢືນທີ່ເປັນຫຼັກຖານກ່ຽວກັບການຈອງຊື້ຮຸ້ນໃຫ້ຜູ້ຈອງຊື້ຮຸ້ນ; ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນຈະແຈ້ງກ່ຽວກັບຜົນການແບ່ງປັນຮຸ້ນຫຼັງຈາກມື້ສິ້ນສຸດໄລຍະການສະເໜີຂາຍ.

9. ວິທີການຊຳລະການຈອງຊື້ຮຸ້ນ

ຜູ້ລົງທຶນທີ່ມີຈຸດປະສົງຈອງຊື້ຮຸ້ນເພີ່ມທຶນສາມາດຝາກເງິນເຂົ້າບັນຊີ ເພື່ອໃຊ້ສຳລັບການຈອງຊື້ຮຸ້ນເຂົ້າໄປໃນບັນຊີຕາມທີ່ໄດ້ລະບຸໄວ້ໃນແບບຟອມການຈອງຊື້ຮຸ້ນ.

ດັ່ງນັ້ນ, ຜູ້ຈອງຈະຕ້ອງໂອນຈຳນວນເງິນທີ່ຈອງຊື້ຮຸ້ນຕາມມູນຄ່າຂອງຮຸ້ນໃຫ້ຄົບຖ້ວນ ເພື່ອການຈອງຊື້ຮຸ້ນສາມັນເພີ່ມທຶນລ່ວງໜ້າກ່ອນການສິ້ນສຸດໄລຍະເວລາຂອງການສະເໜີຂາຍ.

10. ການແບ່ງປັນຮຸ້ນໃນກໍລະນີຈອງເກີນຈຳນວນຮຸ້ນທີ່ອອກຈຳໜ່າຍ

ກໍລະນີຜູ້ຄ້ຳປະກັນອອກຈຳໜ່າຍຮຸ້ນ ແລະ ຕົວແທນຈຳໜ່າຍຮຸ້ນໄດ້ຮັບການຈອງຊື້ຮຸ້ນທີ່ຖືກຕ້ອງຕາມຂັ້ນຕອນຫຼາຍກວ່າຈຳນວນຮຸ້ນທີ່ບໍລິສັດຕົກລົງເຫັນດີອອກຈຳໜ່າຍ ຜູ້ຈັດສັນຮຸ້ນຈະມີສິດໃນການພິຈາລະນາໃນການແບ່ງປັນຮຸ້ນສາມັນເພີ່ມທຶນ ໃຫ້ກັບຜູ້ລົງທຶນໃດໜຶ່ງ ຫຼື ທັງໝົດໂດຍຄຳນຶງເຖິງຜົນປະໂຫຍດສູງສຸດຂອງບໍລິສັດ ທັງນີ້ອາດນຳໃຊ້ຫຼາຍວິທີການເຊັ່ນ: ການສະເລ່ຍຖ່ວງນ້ຳໜັກ, ການຈອງກ່ອນໄດ້ກ່ອນ ຫຼື ອື່ນໆ ຕາມຄວາມເໝາະສົມ.

11. ການສົ່ງຄ່າຈອງຊື້ຮຸ້ນຄືນໃນກໍລະນີທີ່ບໍ່ໄດ້ຮັບການແບ່ງປັນຮຸ້ນ

ອີງຕາມມາດຕາ 19 ຂອງລະບຽບວ່າດ້ວຍ ການອອກຈຳໜ່າຍຮຸ້ນ ເລກທີ 018/ຄຄຊ, ລົງວັນທີ 27 ກໍລະກົດປີ 2015, ກໍລະນີຜູ້ລົງທຶນທີ່ຈອງຊື້ຮຸ້ນບໍ່ໄດ້ຮັບການແບ່ງປັນຮຸ້ນ ຕ້ອງສົ່ງເງິນມັດຈຳທັງໝົດ ຫຼື ສ່ວນທີ່ຍັງເຫຼືອຄືນໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ຮຸ້ນ ພາຍໃນກຳນົດເວລາ 5 (ຫ້າ) ວັນລັດຖະການ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນເປັນຕົ້ນໄປ.

ກໍລະນີກາຍກຳນົດເວລາດັ່ງກ່າວ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຕ້ອງຮັບຜິດຊອບກ່ຽວກັບການສົ່ງເງິນມັດຈຳຄືນທັງໝົດ ຫຼື ສ່ວນທີ່ເຫຼືອຄືນໃຫ້ແກ່ລູກຄ້າທີ່ຈອງຊື້ຮຸ້ນ ພ້ອມດ້ວຍດອກເບ້ຍຕາມອັດຕາດອກເບ້ຍເງິນຝາກຂອງທະນາຄານຕົວແທນຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ໃນໄລຍະເວລານັ້ນ.

ພາຍຫຼັງສຳເລັດຂັ້ນຕອນການຊຳລະເງິນ ຫຼື ສົ່ງເງິນມັດຈຳຄືນ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຕ້ອງໂອນເງິນທີ່ລະດົມໄດ້ຈາກບັນຊີສະເພາະສຳລັບການເປີດຈອງຊື້ຮຸ້ນ ເຂົ້າໃນບັນຊີເງິນສະເພາະສຳລັບທຶນທີ່ລະດົມໄດ້ຂອງ ທຄຕລ.

12. ການແບ່ງປັນຮຸ້ນສາມັນເພີ່ມທຶນ

ພາຍຫຼັງທີ່ຜູ້ຄ້ຳປະກັນ ແລະ ຕົວແທນຈັດຈຳໜ່າຍໄດ້ດຳເນີນການຮັບຈອງຊື້ຮຸ້ນຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບການແລ້ວ ການແບ່ງປັນຮຸ້ນໃຫ້ແກ່ນັກລົງທຶນແມ່ນຈະໄດ້ດຳເນີນໄປ ຊຶ່ງຄາດວ່າຈະສຳເລັດພາຍໃນ 5 (ຫ້າ) ວັນລັດຖະການ ຫຼັງຈາກສິ້ນສຸດໄລຍະເວລາຂອງການອອກຈຳໜ່າຍຮຸ້ນແລ້ວ ເພື່ອເປັນການຮັບປະກັນສິດ ແລະ ຜົນປະໂຫຍດສູງສຸດຂອງ ທຄຕລ ແລະ ນັກລົງທຶນ. ຜູ້ຄ້ຳປະກັນການຈັດຈຳໜ່າຍຮຸ້ນມີສິດພິຈາລະນາໃນການຈັດສັນຮຸ້ນໃຫ້ນັກລົງທຶນໃດໜຶ່ງ ຫຼື ທັງໝົດດ້ວຍການນຳໃຊ້ວິທີການຈອງຕາມສິດສຳລັບຮຸ້ນ RO, ສ່ວນຮຸ້ນ PO ແມ່ນອາດນຳໃຊ້ວິທີຕາມຂໍ້ 10 ຂອງໜັງສືຊວນຊື້ສະບັບນີ້ ແຕ່ຮຸ້ນຈະຕ້ອງຖືກຈັດສັນໃຫ້ສອດຄ່ອງຕາມລະບຽບການ. ເຖິງຢ່າງໃດກໍ່ຕາມ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນຈຳໜ່າຍຮຸ້ນຂໍສະຫງວນສິດໃນການປະຕິເສດການຈອງຊື້ຮຸ້ນ ແລະ ການແບ່ງປັນທີ່ອອກຈຳໜ່າຍຕາມໃບຈອງຮຸ້ນ ໃນກໍລະນີທີ່ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ຕົວແທນການອອກຈຳໜ່າຍຮຸ້ນໄດ້ພິຈາລະນາແລ້ວ ເຫັນດີວ່າການຈອງຊື້ຮຸ້ນດັ່ງກ່າວເກີດບັນຫາ,ອຸປະສັກ ຫຼື ມີຂໍ້ຈຳກັດໃນການດຳເນີນການ ເພື່ອໃຫ້ການອອກຈຳໜ່າຍຮຸ້ນໃນຄັ້ງນີ້ມີປະສິດທິຜົນສູງສຸດ. ໃນກໍລະນີທີ່ອອກຈັດຈຳໜ່າຍຫາກຖືກຈອງຊື້ໝົດກ່ອນວັນທີກຳນົດໄວ້ຜູ້ຄ້ຳປະກັນ ການຈັດຈຳໜ່າຍຮຸ້ນສາມາດປິດການຈອງກ່ອນເວລາກຳນົດໄວ້ໄດ້.

13. ການສົ່ງມອບຮຸ້ນ

ນາຍທະບຽນຮຸ້ນຈະຝາກຮຸ້ນສາມັນເພີ່ມທຶນ ເຂົ້າບັນຊີຫຼັກຊັບທີ່ຜູ້ຈອງຊື້ຮຸ້ນມີບັນຊີຊື້-ຂາຍຫຼັກຊັບຢູ່ນຳບໍລິສັດຫຼັກຊັບທີ່ເປັນສະມາຊິກຂອງສູນຮັບຝາກຫຼັກຊັບຂອງ ຕລຊລ ຕາມທີ່ໄດ້ແຈ້ງໃຫ້ຜູ້ຈອງຊື້ຮຸ້ນຮັບຊາບໄວ້ໃນໃບຈອງຊື້, ຢ່າງໃດກໍ່ຕາມ ຜູ້ຖືຮຸ້ນຂອງ ທຄຕລ ມີສິດທີ່ຈະຂໍໃຫ້ບໍລິສັດຫຼັກຊັບອອກໃບຢັ້ງຢືນການຖືຄອງຮຸ້ນໃຫ້ໄດ້ໂດຍປະຕິບັດຕາມຂັ້ນຕອນທີ່ກ່ຽວຂ້ອງ.

14. ການໂອນຮຸ້ນ

ຮຸ້ນຂອງບໍລິສັດມະຫາຊົນສາມາດໂອນໃຫ້ພາຍໃນ ຫຼື ພາຍນອກໄດ້, ການໂອນຮຸ້ນຖືວ່າສຳເລັດເມື່ອຜູ້ໂອນໄດ້ສະຫຼັກຫຼັງໃບຮຸ້ນໂດຍກຳນົດຊື່ຂອງຜູ້ໂອນພ້ອມດ້ວຍລາຍເຊັ່ນ ແລະ ລາຍຊື່ຂອງພວກກ່ຽວ ແລະ ຜູ້ໂອນໄດ້ມອບໃບຮຸ້ນໃຫ້ຜູ້ຮັບໂອນ.

<u>ການໂອນຮຸ້ນຈະມີຜົນໃຊ້ໄດ້ຕໍ່:</u>

- ເມື່ອ ທຄຕລ ໄດ້ຮັບການຮ້ອງຂໍໃຫ້ຂຶ້ນທະບຽນການໂອນ;
- ເມື່ອ ທຄຕລ ໄດ້ຂຶ້ນທະບຽນການໂອນໃຫ້ແລ້ວ ພາຍຫຼັງເຫັນວ່າການໂອນຖືກຕ້ອງຕາມຂັ້ນຕອນແລ້ວ ທຄຕລ ຕ້ອງຂຶ້ນທະບຽນການໂອນໃຫ້ແລ້ວພາຍໃນກຳນົດ 5 (ຫ້າ) ວັນລັດຖະການນັບແຕ່ໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີການໂອນບໍ່ຖືກຕ້ອງ ທຄຕລ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງຮັບຊາບພາຍໃນກຳນົດ 5 (ຫ້າ) ວັນລັດຖະການນັບແຕ່ວັນຮັບຄຳຮ້ອງເພື່ອນຳໄປແກ້ໄຂ.

ວິທີການກຳນົດ ແລະ ຂໍ້ປ່ຽນໃບຮຸ້ນໃໝ່ໃຫ້ບິ່ງໄວ້ໃນກົດລະບຽບຂອງ ທຄຕລ ເຖິງຢ່າງໃດກໍ່ຕາມການໂອນຮຸ້ນຈະຕ້ອງປະຕິບັດຕາມກົດລະບຽບຂອງ ຕລຊລ ເນື່ອງຈາກຮຸ້ນນັ້ນອອກເພື່ອທຳການຊື້-ຂາຍໃນ ຕລຊລ.

15. ການຈ່າຍເງິນປັນຜົນ

ທຄຕລ ມີນະໂຍບາຍຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ໃນອັດຕາສ່ວນບໍ່ຕ່ຳກວ່າ 50 ສ່ວນຮ້ອຍຂອງກຳໄລສຸດທິຂອງ ທຄຕລ ພາຍຫຼັງທີ່ໄດ້ຫັກເຂົ້າຄັງສຳຮອງຕາມກົດໝາຍ ແລະ ຄັງສຳຮອງຕາມລະບຽບການທີ່ ທຄຕລ ໄດ້ກຳນົດໄວ້.

ມະຕິຕົກລົງຕ່າງໆຂອງກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ໄດ້ອະນຸມັດນະໂຍບາຍການຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນ 1 ຄັ້ງ/ປີ ໂດຍມີການສະເໜີໃຫ້ມີການຈ່າຍເງິນປັນຜົນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິຂອງທະນາຄານພາຍຫຼັງທີ່ໄດ້ຫັກເຂົ້າຄັງສຳຮອງຕາມກົດໝາຍ ແລະ ຄັງສຳຮອງຕາມລະບຽບການທີ່ ທຄຕລ ໄດ້ກຳນົດໄວ້ ແລະ ສຳລັບການຈ່າຍເງິນປັນຜົນລະຫວ່າງປີນັ້ນ

ເຖິງແນວໃດກໍ່ຕາມອັດຕາສ່ວນການຈ່າຍເງິນປັນຜົນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິດັ່ງກ່າວອາດມີການປ່ຽນແປງຂຶ້ນກັບການພິຈາລະນາ ແລະ ອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. ການພິຈາລະນາອາດຈະອີງໃສ່ສະພາບເສດຖະກິດ, ກະແສເງິນສົດ, ແຜນການລົງທຶນ, ເງື່ອນໄຂ ແລະ ຂໍ້ກຳນົດໃນສັນຍາຕ່າງໆທີ່ ທຄຕລ ຜູກພັນນຳຢູ່, ລວມທັງຂໍ້ຈຳກັດທາງກົດໝາຍ ແລະ ຄຽງຄູ່ກັບຄວາມພຽງພໍຂອງທຶນໃນການຮັບຮອງການຂະຫຍາຍຕົວຂອງທະນາຄານໃນອະນາຄົດ.

ທຄຕລ ຈະຈ່າຍເງິນປັນຜົນເປັນສະກຸນເງິນກີບ ແລະ ຜູ້ຖືຮຸ້ນຈະໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກເງິນປັນຜົນ.

16. ກອງປະຊຸມສາມັນຂອງຜູ້ຖືຮຸ້ນ

ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ແລະ ກົດລະບຽບຂອງທະນາຄານ ສະພາບໍລິຫານຂອງທະນາຄານຈະຮຽກເປີດກອງປະຊຸມຜູ້ຖືຮຸ້ນຢ່າງໜ້ອຍປີລະ 1 ຄັ້ງພາຍໃນ 4 ເດືອນນັບຈາກມື້ສຸດທ້າຍຂອງປີ ສະພາບໍລິຫານຂອງ ທຄຕລ ສາມາດຮຽກປະຊຸມກອງປະຊຸມວິສາມັນຜູ້ຖືຮຸ້ນໄດ້ຖ້າເຫັນວ່າມີຄວາມຈຳເປັນເຊັ່ນ: ກໍລະນີຕຳແໜ່ງຜູ້ກວດສອບບັນຊີວ່າງລົງ ຫຼື ຜູ້ອຳນວຍການເກີນກວ່າເຄິ່ງໜຶ່ງເຫັນດີໃຫ້ເປີດກອງປະຊຸມຜູ້ຖືຮຸ້ນ ຫຼື ຜູ້ຖືຮຸ້ນຮ້ອງຟ້ອງຕໍ່ສານ ແລະ ສານສັ່ງໃຫ້ເປີດກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນຢ່າງໜ້ອຍເທົ່າກັບ 20 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດສະເໜີເປັນລາຍລັກອັກສອນ ໂດຍແຈ້ງຈຸດປະສົງຂໍເປີດກອງປະຊຸມ. ພາຍຫຼັງໄດ້ຮັບການສະເໜີ ສະພາບໍລິຫານກໍ່ຕ້ອງເປີດກອງປະຊຸມວິສາມັນຜູ້ຖືຮຸ້ນພາຍໃນເວລາ 30 (ສາມສິບ) ວັນ ນັບແຕ່ວັນໄດ້ຮັບຄຳສະເໜີຂໍເປີດກອງປະຊຸມເປັນຕົ້ນໄປ.

ໜັງສືແຈ້ງເປີດກອງປະຊຸມຂອງຜູ້ຖືຮຸ້ນຕ້ອງສົ່ງໂດຍກົງ ຫຼື ຜ່ານລະບົບສື່ສານທີ່ເໝາະສົມໃຫ້ແກ່ຜູ້ຖືຮຸ້ນຂອງທະນາຄານທຸກໆທ່ານຢ່າງໜ້ອຍ 5 (ຫ້າ) ວັນລັດຖະການກ່ອນວັນເປີດກອງປະຊຸມ.

ທຄຕລ ເມື່ອໄດ້ຮັບການຈົດທະບຽນຈະຕ້ອງປະຕິບັດຕາມບົດແນະນຳວ່າດ້ວຍ ການຈັດກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບ ເລກທີ 257/ສຄຄ, ລົງວັນທີ 2 ມິນາ 2014 ແລະ ປະຕິບັດຕາມຄຳແນະນຳຂອງກອງປະຊຸມຜູ້ຖືຮຸ້ນຂອງທະນາຄານທີ່ໄດ້ຮັບການຈົດທະບຽນ.

ພາຍໃຕ້ຄຳແນະນຳຂອງກອງປະຊຸມຜູ້ຖືຮຸ້ນທະນາຄານທີ່ໄດ້ຮັບການຈົດທະບຽນ ຕາມທີ່ກ່າວມາຂ້າງເທິງນີ້, ເມື່ອສະພາບໍລິຫານເປີດກອງປະຊຸມ, ກອງປະຊຸມແມ່ນມີໜ້າທີ່ພິຈາລະນາ ແລະ ກຳນົດປະເດັນທີ່ຈະສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງ. ແຈ້ງການ ແລະ ເອກະສານຕ່າງໆຈະຕ້ອງສົ່ງໃຫ້ກັບບັນດາຜູ້ຖືຮຸ້ນຕາມລາຍຊື່ທີ່ລະບຸໄວ້ໃນປຶ້ມບັນທຶກຜູ້ຖືຮຸ້ນ ແລະ ຕ້ອງແຈ້ງກ່ອນລ່ວງໜ້າ 15 (ສິບຫ້າ) ວັນລັດຖະການກ່ອນມື້ເປີດກອງປະຊຸມ.

ອົງປະຊຸມຂອງກອງປະຊຸມຜູ້ຖືຮຸ້ນຂອງທະນາຄານຕ້ອງມີຜູ້ຖືຮຸ້ນເຂົ້າຮ່ວມຢ່າງໜ້ອຍສອງຄົນ ແລະ ຕ້ອງມີຈຳນວນຮຸ້ນເກີນເຄິ່ງໜຶ່ງຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

17. ສິດໃນການລົງຄະແນນສຽງ

ໂດຍທົ່ວໄປແລ້ວຜູ້ຖືຮຸ້ນມີສິດອອກສຽງຕາມຫຼັກການໜຶ່ງຮຸ້ນຕໍ່ໜຶ່ງສຽງ ມະຕິຂອງກອງປະຊຸມຜູ້ຖືຮຸ້ນຈະຖືກຮັບຮອງອັດຕະໂນມັດກໍ່ຕໍ່ເມື່ອມີສຽງສ່ວນຫຼາຍຈາກກອງປະຊຸມຜູ້ຖືຮຸ້ນ. ແຕ່ສຳລັບມະຕິສະເພາະຈະຕ້ອງໄດ້ຮັບການອະນະມັດໂດຍການອອກສຽງຢ່າງໜ່ອຍສອງສ່ວນສາມຂອງຈຳນວນຜູ້ຖືຮຸ້ນ ຫຼື ຕົວແທນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ. ປະເດັນເຈາະຈີ້ມທີ່ຕ້ອງມີການລົງມະຕິສະເພາະຂອງຜູ້ຖືຮຸ້ນມີດັ່ງລຸ່ມນີ້:

- ການລົງຄະແນນສຽງໃນບັນຫາທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ;
- ການປ່ຽນແປງກົດລະບຽບ ຫຼື ສັນຍາສ້າງຕັ້ງບໍລິສັດ;
- ການເພີ່ມທຶນ ຫຼື ຫຼຸດທຶນຂອງບໍລິສັດ;
- ການຄວບ ຫຼື ການຍຸບເລີກບໍລິສັດ;
- ການຂາຍ ຫຼື ການໂອນກິດຈະການທັງໝົດ ຫຼື ບາງສ່ວນຂອງບໍລິສັດໃຫ້ບຸກຄົນອື່ນ; ແລະ
- ການຊື້ ຫຼື ການໂອນກິດຈະການຂອງວິສາຫະກິດອື່ນ.

ອີງຕາມກົດໝາຍວ່າດ້ວຍ ວິສາຫະກິດ ຜູ້ຖືຮຸ້ນອາດຈະຖືກຫ້າມລົງຄະແນນສຽງກ່ຽວກັບບັນຫາທີ່ຕົນເອງມີຄວາມກ່ຽວຂ້ອງ ຫຼື ຜົນປະໂຫຍດໂດຍກົງກັບບັນຫາທີ່ລົງຄະແນນສຽງຮັບຮອງ ໂດຍກຳນົດຜູ້ໃຫ້ກອງປະຊຸມເປັນຜູ້ຕົກລົງກັນເອງວ່າຜູ້ຖືຮຸ້ນນັ້ນຈະຖືກຈຳກັດສິດ ຫຼື ບໍ່.

18. ສິດໃນການຈອງຊື້ຮຸ້ນໃໝ່ ແລະ ການອອກຮຸ້ນສາມັນເພີ່ມທຶນ

ກົດໝາຍວ່າດ້ວຍ ວິສາຫະກິດ ກຳນົດໄວ້ວ່າການເພີ່ມທຶນຂອງບໍລິສັດຈະຕ້ອງໄດ້ຮັບການຕົກລົງເຫັນດີຈາກຜູ້ຖືຮຸ້ນ, ຜູ້ຖືຮຸ້ນມີສິດຊື້ຮຸ້ນເພີ່ມທຶນຕາມລຳດັບບຸລິມະສິດ; ການເພີ່ມທຶນຈະໄດ້ສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນເດີມຕາມອັດຕາສ່ວນການຖືຄອງຮຸ້ນຂອງແຕ່ລະຄົນກ່ອນ ຮຸ້ນເພີ່ມທຶນໃດທີ່ບໍ່ໄດ້ຮັບການຊື້ພາຍໃນເວລາທີ່ກຳນົດໄວ້ ຫຼື ຖືກສະຫຼະສິດໂດຍຜູ້ຖືຮຸ້ນເດີມກໍ່ຈະສາມາດສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທົ່ວໄປໄດ້.

ຕໍ່ກັບການເພີ່ມທຶນ ບໍລິສັດຕ້ອງໄດ້ຈົດທະບຽນການເພີ່ມທຶນກັບກະຊວງ ອຸດສະຫາກຳ ແລະ ການຄ້າ ພາຍໃນກຳນົດເວລາ 10 (ສິບ) ວັນລັດຖະການນັບແຕ່ມື້ໄດ້ກຳນົດໃຫ້ຊຳລະເງິນຄ່າຈອງຮຸ້ນທີ່ຈອງໄວ້. ນອກຈາກນີ້ບໍລິສັດຈະແຈ້ງໃຫ້ມວນຊົນທົ່ວໄປຮັບຮູ້ເຖິງການຂຶ້ນທະບຽນການເພີ່ມທຶນຢ່າງໜ້ອຍໜຶ່ງຄັ້ງພາຍໃນເວລາ 10 (ສິບ) ວັນລັດຖະການນັບ ແຕ່ວັນທີ່ໄດ້ຮັບການຈົດທະບຽນເປັນຕົ້ນໄປ.

19. ການເປີດເຜີຍບົດລາຍງານທາງດ້ານການເງິນ

ກົດໝາຍວ່າດ້ວຍ ວິສາຫະກິດ ກຳນົດໃຫ້ສະພາບໍລິຫານຮ່ວມມືກັບຜູ້ກວດສອບພາຍນອກ ໃນການໃຫ້ຄວາມກະຈ່າງແຈ້ງກ່ຽວກັບແຫຼ່ງຄວາມຊັດເຈນຂອງຕົວເລກ ແລະ ຂໍ້ມູນທີ່ປະກົດໃນບົດລາຍງານຖານະການເງິນຂອງບໍລິສັດກ່ອນສະເໜີຜ່ານກອງປະຊຸມ ເພື່ອພິຈາລະນາຮັບຮອງ,ໃບລາຍງານຖານະການເງິນຂອງບໍລິສັດຕ້ອງໄດ້ຮັບການຢັ້ງຢືນຈາກຜູ້ກວດສອບບັນຊີ ແລະ ການຕົກລົງຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນ.

ນອກຈາກນີ້ການລາຍງານ ແລະ ການເປີດເຜີຍຂໍ້ມູນຕາມລະບຽບ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ ປີ 2014 ກຳນົດໃຫ້ບໍລິສັດກຽມ ແລະ ສະເໜີເອກະສານລາຍງານການເງິນປະຈຳປີທີ່ຜ່ານການກວດສອບແລ້ວ

ແລະ ເອກະສານລາຍງານການເງິນປະຈຳໄຕມາດທີ່ຜ່ານການກວດສອບແລ້ວຕໍ່ ສຄຄຊ. ນອກຈາກນີ້ ທຄຕລ ຍັງຕ້ອງປະຕິບັດຕາມຂໍ້ຕົກລົງອື່ນໆຂອງ ຕລຊລ ກຳນົດໄວ້.

ໂດຍພາຍໃຕ້ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນຕາມກົດລະບຽບ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ ປີ 2014, ການລາຍງານ ແລະ ເປີດເຜີຍຂໍ້ມູນໂດຍປົກກະຕິແມ່ນເປັນໄປຕາມໄຕມາດ, ຫົກເດືອນ ແລະ ປະຈຳປີ.

- ການລາຍງານ ແລະ ເປີດເຜີຍຂໍ້ມູນປະຈຳໄຕມາດທີ 1 ແລະ ໄຕມາດ 3 ຕ້ອງລາຍງານພາຍໃນເວລາ 45 (ສີ່ສິບຫ້າ) ວັນນັບຈາກວັນສຸດທ້າຍຂອງວັນໄຕມາດທີ 1 ແລະ ໄຕມາດທີ 3 ຕາມລຳດັບ, ການລາຍງານປະຈຳໄຕມາດປະກອບມີບົດສະຫຼຸບລາຍການເຄື່ອນໄຫວທຸລະກິດຂອງ ທຄຕລ ສຳລັບໄຕມາດນັ້ນ ແລະ ເອກະສານດ້ານການເງິນທີ່ໄດ້ຮັບການຢັ້ງຢືນຈາກພະແນກການເງິນຂອງ ທຄຕລ, ພະແນກກວດສອບພາຍໃນ ແລະ ຜູ້ອຳນວຍການ.
- ການລາຍງານ ແລະ ການເປີດເຜີຍຂໍ້ມູນປະຈຳ 6 ເດືອນ ຕ້ອງລາຍງານພາຍໃນກຳນົດເວລາ 60 (ຫົກສິບ) ວັນນັບຈາວັນສຸດທ້າຍຂອງວັນໄຕມາດທີ 2, ການລາຍງານປະຈຳໄຕມາດປະກອບມີບົດສະຫຼຸບລາຍການເຄື່ອນໄຫວທຸລະກິດຂອງ ທຄຕລ ເຄິ່ງປີທຳອິດ ແລະ ບົດລາຍງານດ້ານການເງິນທີ່ໄດ້ຮັບການກວດສອບໂດຍຜູ້ກວດສອບພາຍນອກທີ່ໄດ້ຮັບຮອງຈາກ ສຄຄຊ ແລະ ໄດ້ຮັບຮອງຈາກກອງປະຊຸມສະພາບໍລິຫານຂອງ ທຄຕລ.
- ການລາຍງານ ແລະ ການເປີດເຜີຍຂໍ້ມູນປະຈຳປີຕ້ອງລາຍງານພາຍໃນກຳນົດເວລາ 120 (ຮ້ອຍຊາວ) ວັນນັບຈາກວັນສຸດທ້າຍຂອງປີການບັນຊີແຕ່ລະປີ, ບົດລາຍງານປະຈຳປີປະກອບມີບົດສະຫຼຸບລາຍການເຄື່ອນໄຫວທຸລະກິດຂອງ ທຄຕລ ປະຈຳປີ ແລະ ບົດລາຍງານດ້ານການເງິນທີ່ໄດ້ຮັບການກວດສອບໂດຍຜູ້ກວດສອບພາຍນອກທີ່ໄດ້ຖືກຮັບຮອງຈາກ ສຄຄຊ ແລະ ກອງປະຊຸມສະພາບໍລິຫານຂອງ ທຄຕລ.

20. ສິດໃນການຊຳລະສະສາງ

ໃນກໍລະນີຊຳລະສະສາງ ຊັບສິນທີ່ເຫຼືອຈາກການຊຳລະເຈົ້າໜີ້ຢ່າງຄົບຖ້ວນແລ້ວ ຈະໄດ້ແບ່ງປັນໃຫ້ຜູ້ຖືຮຸ້ນຕາມລຳດັບບຸລິມະສິດ ແລະ ຕາມອັດຕາສ່ວນຈຳນວນຮຸ້ນທີ່ຜູ້ຖືຮຸ້ນຖືຄອງ.

21. ການຊື້ຮຸ້ນຄືນຂອງບໍລິສັດ

ໂດຍອີງຕາມກົດໝາຍວ່າດ້ວຍວິສະຫະກິດຫ້າມບໍລິສັດຊື້ຮຸ້ນຂອງຕົນເອງ

22. ການຈົດທະບຽນຂອງຜູ້ຖືຮຸ້ນ

ນາຍທະບຽນຂອງ ທຄຕລ ຈະບັນທຶກຊື່ຂອງຜູ້ຖືຮຸ້ນໄວ້ໃນປຶ້ມບັນຊີຖະບຽນຜູ້ຖືຮຸ້ນຂອງທະນາຄານ. ຂໍ້ມູນກ່ຽວກັບຜູ້ຖືຮຸ້ນຈະຢູ່ໃນປຶ້ມບັນຊີດັ່ງກ່າວ ແລະ ຈະຖືວ່າເປັນຫຼັກຖານທີ່ຖືກຕ້ອງທີ່ໃຊ້ອ້າງອີງເຖິງສິດໃນຮຸ້ນຂອງ ທຄຕລ.

ພາກທີ 3 ການຮັບຮອງຄວາມຖືກຕ້ອງຂອງໜັງສືຊອນຊໍ້ສະບັບພາສາລາວ

I. ຢັ້ງຢືນຄວາມຖືກຕ້ອງໂດຍບໍລິສັດ

ພວກຂ້າພະເຈົ້າໄດ້ກວດກາຂໍ້ມູນທີ່ລະບຸໃນໜັງສືຊອນຊໍ້ສະບັບພາສາລາວ ພ້ອມດ້ວຍຄຳເຕືອນໃນນາມຕຳແໜ່ງຜູ້ອຳນວຍການໃຫຍ່ (ຜູ້ບໍລິຫານລະດັບສູງ) ຂໍຢັ້ງຢືນວ່າຂໍ້ມູນດັ່ງກ່າວແມ່ນ ຖືກຕ້ອງ ແລະ ສົມບູນ.

ເພື່ອເປັນຫຼັກຖານ, ພວກຂ້າພະເຈົ້າຂໍຢັ້ງຢືນອີກວ່າຂໍ້ມູນທັງໝົດແມ່ນເປັນເອກະສານທີ່ໄດ້ຮັບການຢັ້ງຢືນວ່າມີຄວາມຈິງ ແລະ ຖືກຕ້ອງເປັນຊຸດດຽວກັນ. ພວກຂ້າພະເຈົ້າໄດ້ມອບສິດອຳນາດໃຫ້ ທ່ານ ພຸຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ເຊັນກຳກັບໄວ້ທຸກໜ້າຂອງເອກະສານ. ຖ້າຫາກເອກະສານໃດໜຶ່ງບໍ່ມີການເຊັນກຳກັບຂອງທ່ານ ພຸຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ດັ່ງກ່າວມານັ້ນ, ພວກຂ້າພະເຈົ້າຈະຖືວ່າເອກະສານດັ່ງກ່າວບໍ່ແມ່ນຂໍ້ມູນທີ່ພວກຂ້າພະເຈົ້າໄດ້ມີການຢັ້ງຢືນແລ້ວ.

ລົງນາມໂດຍສະພາບໍລິຫານຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ລາຍເຊັນ
1	ທ່ານ ດຣ ບຸນເຫຼືອ ສິນໄຊວໍລະວົງ	ຫົວໜ້າກົມນະໂຍບາຍການເງິນ/ ປະທານສະພາບໍລິຫານ	
2	ທ່ານ ຄຳສຸກ ສຸນດາຣາ	ບຸກຄົນເອກະລາດຈາກພາຍນອກ/ຮອງ ປະທານ	
3	ທ່ານ ພຸຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່/ກຳມະການ	
4	ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການໃຫຍ່/ກຳມະການ	
5	ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ້ອຳນວຍການໃຫຍ່/ກຳມະການ	
6	ທ່ານ ວຽງໄຊ ຈັນທະວິສຸກ	ຫົວໜ້າພະແນກຄຸ້ມຄອງສາຂາຕາງໜ້າ ຜູ້ຖືຮຸ້ນ/ກຳມະການ	
7	Mr. Marc ROBERT	ຕາງໜ້າທະນາຄານ COFIBRED ໃນນາມຄູ່ຮ່ວມຍຸດທະສາດ/ ເປັນກຳມະການ	

ລົງນາມໂດຍຄະນະກຳມະການກວດສອບກວດສອບບັນຊີພາຍໃນ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ລາຍເຊັນ
1	ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ້ອຳນວຍການໃຫຍ່/ປະທານ	
2	ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການໃຫຍ່/ຮອງປະທານ	
3	ທ່ານ ຄຳຊ່ຽນ ມີ່ງບຸບຜາ	ຮອງຜູ້ອຳນວຍການໃຫຍ່/ກຳມະການ	
4	ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການໃຫຍ່/ກຳມະການ	
5	ທ່ານ ນ. ລຳມະນີແສງ ໄຊຍະເພັດ	ຫົວໜ້າພະແນກບັນຊີສັງລວມ/ ກຳມະການ	
6	ທ່ານ ວຽງສຸກ ຈຸນທະວົງ	ຫົວໜ້າພະແນກຄຸ້ມຄອງສິນເຊື່ອ/ ກຳມະການ	
7	ທ່ານ ນ. ວັນລີ ສາຍສຸວັນ	ຫົວໜ້າສູນບໍລິການ/ກຳມະການ	
8	ທ່ານ ວຽງໄຊ ຈັນທະວິສຸກ	ຫົວໜ້າຄຸ້ມຄອງສາຂາ/ກຳມະການ	
9	ທ່ານ ສາຍຈິດ ສົມມະວົງ	ວ່າການຫົວໜ້າພະແນກຫ້ອງການ / ກຳມະການ	
10	ທ່ານ ນ. ພູແສງທອງ ອານຸລັກຄຳ	ວ່າການຫົວໜ້າພະແນກກວດກາພາຍໃນ/ ກຳມະການ	
11	ທ່ານ ຫົນເພັດ ຈັນທະລັງສີ	ວ່າການຫົວໜ້າພະແນກບໍລິຫານທຶນ/ ກຳມະການ	

ເຊັນໂດຍພະແນກຫ້ອງການບໍລິຫານ-ການເງິນ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ລາຍເຊັນ
1	ທ່ານ ນ. ລຳມະນີແສງ ໄຊຍະເພັດ	ຫົວໜ້າພະແນກບັນຊີສັງລວມ/ ກຳມະການ	

II. ໃບຢັ້ງຢືນຄວາມຖືກຕ້ອງດ້ານຂໍ້ມູນໃນສ່ວນຂອງບໍລິສັດທີ່ປຶກສາດ້ານການເງິນ.

ໜັງສືຊວນຊື້ສະບັບນີ້ ແມ່ນສ່ວນໜຶ່ງຂອງເອກະສານຂໍ້ມູນທີ່ນຳໃຊ້ເຂົ້າໃນການຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອສະເໜີຂໍອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໂດຍທີ່ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ໄດ້ກະກຽມໂດຍອີງຕາມສັນຍາວ່າດ້ວຍການໃຫ້ບໍລິການທີ່ປຶກສາທາງດ້ານການເງິນ.

ຂ້າພະເຈົ້າຮັບປະກັນວ່າການວິເຄາະ, ການຕີຄວາມໝາຍ ແລະ ການນຳໃຊ້ສັບສຳນວນໃນໜັງສືຊວນຊື້ສະບັບນີ້ມີຄວາມຖືກຕ້ອງ, ຄົບຖ້ວນບົນພື້ນຖານຂໍ້ມູນທີ່ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະໜອງໃຫ້.

ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ລາຍເຊັນ
1	ທ່ານ ລິນລີ	ຜູ້ອຳນວຍການ	ລິນ ລີ

III. ການຮັບຮອງຄວາມຖືກຕ້ອງດ້ານຂໍ້ມູນຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ

ໜັງສືຊວນຊື້ສະບັບນີ້ ເປັນສ່ວນໜຶ່ງຂອງເອກະສານປະກອບສຳນວນຄຳຮ້ອງຂໍອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ໄດ້ກະກຽມໂດຍອີງຕາມສັນຍາວ່າດ້ວຍຄ້ຳປະກັນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນເພື່ອສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປ.

ຂ້າພະເຈົ້າຮັບປະກັນວ່າການວິເຄາະ, ການປະເມີນ ແລະ ບັນດາປະໂຫຍກໃນໜັງສືຊວນຊື້ສະບັບນີ້ ແມ່ນມີຈິງ ຖືກຕ້ອງ ແລະ ອີງໃສ່ຂໍ້ມູນທີ່ສະໜອງໂດຍທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

ລ/ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ	ລາຍເຊັນ
1	ທ່ານ ລິນລີ	ຜູ້ອຳນວຍການ	ລິນ ລີ

ເອກະສານຊ້ອນທ້າຍ 1 ເອກະສານລາຍງານການເງິນ

ເອກະສານຊ້ອນທ້າຍ 2 ແບບຟອມການຈອງຊື້ຮຸ້ນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນລວມກິດຈະການ

ວັນທີ 31 ທັນວາ 2016

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານນັກກວດສອບອິດສະຫຼະ	4 - 8
ໃບລາຍງານຜົນການດຳເນີນງານໃນການທຸລະກິດລວມກິດຈະການ	9
ໃບລາຍງານຜົນການດຳເນີນງານນອກການທຸລະກິດລວມກິດຈະການ	10
ໃບລາຍງານຖານະການເງິນລວມກິດຈະການ	11 - 12
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ	13
ໃບລາຍງານກະແສເງິນສົດລວມກິດຈະການ	14 -15
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ	16 – 65

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ທະນາຄານ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ໃນບົດລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານ ການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບອະນຸຍາດດຳເນີນທຸລະກິດດ້ານການທະນາຄານ ສະບັບປັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດຊື່ວ່າ ທະນາຄານ Compagnie Financière de la BRED (''COFIBRED''). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ທະນາຄານດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150,235,349,000 ກີບໄດ້ຖືກຈ່າຍເຕັມມູນຄ່າໂດຍທະນາຄານ COFIBRED.

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະວັນທີ 31 ທັນວາ 2016 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	95,604,321	70%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ)	13,657,760	10%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	13,657,759	10%
ນັກລົງທຶນຕ່າງປະເທດ	13,657,760	10%
	136,577,600	**100%**

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ທັນວາ 2016 ແມ່ນ 682,888 ລ້ານກີບ (ນະວັນທີ 31 ທັນວາ 2015: 682,888 ລ້ານກີບ).

ຂໍ້ມູນທົ່ວໄປ (ຕໍ່)

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ທັນວາ 2016 ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ແປດ ສິບເອັດ (81) ໜ່ວຍບໍລິການ ແລະ ສິບຫົກ (16) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2016 ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

ຊື່	*ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ບໍລິສັດຫລັກຊັບ ທຄຕລ - ມທ ຈຳກັດ	ເລກທີ 180 -10 ລົງວັນທີ 14 ທັນວາ 2010 ໂດຍກົມສົ່ງເສີມການລົງທຶນ ຂອງກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ.	ຫລັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2016, ທະນາຄານມີ ສີ່ (04) ບໍລິສັດຮ່ວມທຶນຄື:

ຊື່	*ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງທະນາຄານ*
ທະນາຄານຮ່ວມທຸລະກິດ ລາວ - ຫວຽດ	ເລກທີ 232/11 ລົງວັນທີ 08 ກັນຍາ 2011 ໂດຍ ທະນາຄານແຫ່ງ ສປປ ລາວ.	ການທະນາຄານ & ການເງິນ	25%
ທະນາຄານລາວ - ຝຣັ່ງ	121-09/ຜທ ລົງວັນທີ 26 ສິງຫາ 2009 ໂດຍ ກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ.	ການທະນາຄານ & ການເງິນ	46%
ບໍລິສັດປະກັນໄພ ລາວ - ຫວຽດ	ເລກທີ 077/08/FIMC ລົງວັນທີ 09 ມິຖຸນາ 2008 ໂດຍ ຄະນະກຳມະການລົງທຶນ ຕ່າງປະເທດ ຂອງສປປ ລາວ.	ປະກັນໄພ	35%
ທະນາຄານ ລາວ - ຈີນ ຈຳກັດ	ເລກທີ 041/ຫຈທ ລົງວັນທີ 27 ມັງກອນ 2014 ໂດຍ ພະແນກທະບຽນວິສາຫະກິດ ຂອງ ສປປ ລາວ.	ການທະນາຄານ & ການເງິນ	49%

ຂໍ້ມູນທົ່ວໄປ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ຮອດວັນທີ 31 ທັນວາ 2016 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ບຸນເຫຼືອ ສິນໄຊວໍລະວົງ	ປະທານ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ຄຳສຸກ ສູນດາລາ	ຮອງປະທານ	ແຕ່ງຕັ້ງຄືນໃໝ່ ວັນທີ 09 ເມສາ 2015
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງຄືນໃໝ່ ວັນທີ 09 ເມສາ 2015
ທ່ານ ພັນຊະນະ ຄຸນນຸວົງ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ມາກ ໂຮເບີດ	ສະມາຊິກ	ແຕ່ງຕັ້ງຄືນໃໝ່ ວັນທີ 09 ເມສາ 2015
ທ່ານ ວຽງໄຊ ຈັນທະວິສຸກ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ຮອດວັນທີ 31 ທັນວາ 2016 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 15 ມັງກອນ 2016
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 06 ມິຖຸນາ 2008
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ຄຳຊ່ຽນ ມິ່ງບຸບຜາ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 23 ພະຈິກ 2015
ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 23 ພະຈິກ 2015
ທ່ານ ບົວອັນ ສີມະລີວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 1 ພະຈິກ 2016

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນຊ່ວງໄລຍະ ວັນທີ 01 ມັງກອນ 2016 ເຖິງ ວັນທີ 14 ມັງກອນ 2016 ແມ່ນທ່ານ ພູ ຂົງ ຈັນທະຈັກ - ຮັກສາການຜູ້ອຳນວຍການໃຫຍ່.

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນຊ່ວງໄລຍະ ວັນທີ 15 ມັງກອນ 2016 ເຖິງ ນະມື້ອອກເອກະສານລາຍງານການເງິນ ສະບັບນີ້ ແມ່ນທ່ານ ພູຂົງ ຈັນທະຈັກ - ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງທະນາຄານແມ່ນບໍລິສັດ ເອິນ ແອນ ຢັງ ລາວ ຈຳກັດ.

ເລກທີອ້າງອີງ: 60790273/ 18712878-IFRS

ບົດລາຍງານນັກກວດສອບອິດສະຫຼະ

ຮຽນ: ຜູ້ຖືຮຸ້ນ ຂອງ
ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ທີ່ນັບຖື

ຄຳເຫັນແບບມີເງື່ອນໄຂ

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນລວມກິດຈະການຂອງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ, ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນລວມກິດຈະການນະວັນທີ 31 ທັນວາ 2016, ໃບລາຍງານຜົນການດຳເນີນງານລວມກິດຈະການ, ໃບລາຍງານຜົນການດຳເນີນງານນອກການທຸລະກິດລວມກິດຈະການ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ ແລະ ໃບລາຍງານກະແສເງິນສົດລວມກິດຈະການ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ ທີ່ປະກອບດ້ວຍບົດສະຫຼຸບຂອງນັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ນອກຈາກຜົນກະທົບຂອງບັນຫາທີ່ລະບຸໄວ້ໃນວັກ ພື້ນຖານໃນການອອກຄຳເຫັນແບບມີເງື່ອນໄຂ, ພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນລວມກິດຈະການ ສະບັບນີ້ໄດ້ສະແດງພາບພົດອັນຖືກຕ້ອງ ແລະ ຍຸດຕິທຳ ຂອງ ຖານະການເງິນສະເພາະກິດຈະການ ຂອງທະນາຄານ ນະວັນທີ 31 ທັນວາ 2016 ລວມທັງ ຜົນປະກອບການລວມກິດຈະການ ແລະ ກະແສເງິນສົດສະເພາະກິດຈະການສຳລັບປີທີ່ສິ້ນສຸດດັ່ງກ່າວ ໂດຍສອດຄ່ອງຕາມມາດຕະຖານສາກົນດ້ານການລາຍງານການເງິນ.

ພື້ນຖານການອອກຄຳເຫັນ

ເນື່ອງຈາກຂໍ້ຈຳກັດຂອງຂໍ້ມູນ ທາງຄະນະອຳນວຍການຂອງທະນາຄານຍັງບໍ່ສາມາດສະໜອງຂໍ້ມູນກ່ຽວກັບການເປີດເຜີຍຂໍ້ມູນຂອງ ມູນຄ່າຍຸດຕິທຳ ແລະ ການບໍລິຫານຄວາມສ່ຽງທາງການເງິນ ທີ່ໄດ້ກຳນົດໄວ້ພາຍໃຕ້ ມາດຕະຖານຂອງ IFRS ເລກທີ 7: "ເຄື່ອງມືທາງການເງິນ ການເປີດເຜີຍຂໍ້ມູນ" ແລະ IFRS ເລກທີ 13: "ການຕີມູນຄ່າຍຸດຕິທຳ"

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ. ບັນດາຄວາມຮັບຜິດຊອບ ຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມ ໃນວັກ *"ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນລວມກິດຈະການ"* ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກທະນາຄານ ໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາການກວດສອບທີ່ສຳຄັນ

ບັນຫາການກວດສອບທີ່ສຳຄັນແມ່ນບັນຫາທີ່ໃນການຕັດສິນໃຈແບບມືອາຊີບຂອງພວກຂ້າພະເຈົ້າແມ່ນມີຄວາມສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນລວມກິດຈະການຂອງໄລຍະປັດຈຸບັນ. ບັນຫາເຫຼົ່ານີ້ແມ່ນຖືກນຳສະເໜີໃນບໍລິບົດຂອງການກວດສອບເອກະສານລາຍງານການເງິນລວມກິດຈະການໂດຍທັງໝົດ ແລະ ໃນການຮ່າງຄຳຄິດເຫັນຂອງພວກຂ້າພະເຈົ້າ ແລະ ພວກຂ້າພະເຈົ້າບໍ່ໄດ້ສະໜອງຄຳຄິດເຫັນແບບສັງລວມກ່ຽວກັບບັນຫາເຫຼົ່ານີ້.

ຂົງເຂດທີ່ເອົາໃຈໃສ່	*ວິທີການກວດສອບຂອງພວກຂ້າພະເຈົ້າເພື່ອຕອບສະໜອງປັດໄຈຄວາມສ່ຽງ*
ການປ່ຽນເປັນມາດຕະຖານສາກົນດ້ານການລາຍງານການເງິນ "IFRS" ທະນາຄານດຳເນີນງານຢູ່ ສປປ ລາວ ແລະ ປະຕິບັດການບັນທຶກ ແລະ ລົງບັນຊີ ໂດຍອີງຕາມ ກົດໝາຍບັນຊີ ຂອງ ສປປ ລາວ ແລະ ລະບຽບການທີ່ກ່ຽວຂ້ອງທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ. ເອກະສານລາຍງານການເງິນລວມກົດຈະການຕາມມາດຕະຖານສາກົນດ້ານການລາຍງານການເງິນ ຂອງທະນາຄານແມ່ນຖືກກະກຽມໂດຍ ການລົງບັນທຶກລາຍການດັດແກ້ທີ່ຈຳເປັນລົງໃນການລົງບັນຊີ ແລະ ລົງບັນທຶກ. ການກຳນົດທຸກໆຄວາມແຕກຕ່າງຂອງນະໂຍບາຍການບັນຊີທີ່ໄດ້ຮັບການຍອມຮັບໂດຍທົ່ວໄປ ແລະ ການຄິດໄລ່ລາຍການດັດແກ້ທີ່ຈຳເປັນ, ແມ່ນຮຽກຮ້ອງໃຫ້ດຳເນີນການຕັດສິນໃຈໂດຍຄະນະບໍລິຫານຂອງທະນາຄານ.	ບັນດາຂັ້ນຕອນຂອງພວກຂ້າພະເຈົ້າ, ທີ່ກ່ຽວຂ້ອງກັບຂະບວນການປ່ຽນເປັນມາດຕະຖານສາກົນດ້ານການລາຍງານການເງິນຂອງທະນາຄານ ລວມມີ: • ພວກຂ້າພະເຈົ້າໄດ້ປະເມີນ ແລະ ຊອກຫາສິ່ງທ້າທາຍ ໃນການຄັດເລືອກ ແລະ ການນຳໃຊ້ບັນດານະໂຍບາຍການບັນຊີຂອງທະນາຄານ • ພວກຂ້າພະເຈົ້າໄດ້ຮ່າງການຄາດຄະເນຂອງຄວາມແຕກຕ່າງລະຫວ່າງເອກະສານລາຍງານການເງິນຕາມ ລະບົບການບັນຊີລາວ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ ແລະ ສົມທຽບກັບ ເອກະສານລາຍງານການເງິນທີ່ໄດ້ກະກຽມໂດຍທະນາຄານ, • ພວກຂ້າພະເຈົ້າໄດ້ນຳໃຊ້ເຄື່ອງມືເພື່ອປະເມີນຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງການເປີດເຜີຍທີ່ໄດ້ກະກຽມໂດຍທະນາຄານ ແລະ • ພວກຂ້າພະເຈົ້າໄດ້ໃຫ້ຊ່ຽວຊານສະເພາະດ້ານມາດຕະຖານສາກົນດ້ານການລາຍງານການເງິນມີສ່ວນຮ່ວມໃນຂັ້ນຕອນຂອງພວກຂ້າພະເຈົ້າເພື່ອປະເມີນການປະຕິບັດຕາມຂໍ້ກຳນົດການເປີດເຜີຍຂອງມາດຕະຖານສາກົນດ້ານການລາຍງານການເງິນ.
ເງິນແຮສຳລັບຄ່າເສື່ອມຂອງເງິນກູ້ໃຫ້ແກ່ລູກຄ້າ (ບົດອະທິບາຍຊ້ອນທ້າຍເລກທີ 18 - ເງິນກູ້ໃຫ້ແກ່ລູກຄ້າ) ເງິນແຮສຳລັບຄ່າເສື່ອມໜີ້ເສຍຂອງເງິນກູ້ແມ່ນມີຍອດທີ່ສູງ ແລະ ເປັນມູນຄ່າຄາດຄະເນທີ່ມີຄວາມບໍ່ແນ່ນອນໃນລະດັບທີ່ສູງ. ຜູ້ບໍລິຫານຂອງທະນາຄານຕ້ອງພິຈາລະນາໃນການຈັດປະເພດ ເງິນກູ້ທີ່ເກີດດອກອອກຜົນ ແລະ ບໍ່ເກີດດອກອອກຜົນ ໂດຍອີງຕາມ ປັດໄຈທາງດ້ານປະລິມານ ແລະ ຄຸນະພາບ. ເພື່ອຄິດໄລ່ເງິນແຮຄ່າເສື່ອມ ທະນາຄານແມ່ນໄດ້ພັດທະນາຮູບແບບ ແລະ ສ້າງຂໍ້ສົມມຸດຖານທີ່ແນ່ນອນ ທີ່ລວມມີ ການປະເມີນຫຼັກຊັບຄ້ຳປະກັນ, ການຄາດຄະເນກະແສເງິນສົດ ແລະ ເງື່ອນໄຂທາງການເງິນຂອງຜູ້ກູ້ຢືມ. ເນື່ອງຈາກຍອດເງິນແຮນີ້ແມ່ນມີຄວາມສຳຄັນ ແລະ ຮຽກຮ້ອງໃຫ້ມີການຕັດສິນໃຈໃນລະດັບສູງໂດຍຄະນະບໍລິຫານຂອງ	ພວກຂ້າພະເຈົ້າໄດ້ສ້າງຄວາມເຂົ້າໃຈ ແລະ ໄດ້ທົດສອບການອອກແບບ ແລະ ປະສິດທິພາບການດຳເນີນງານຂອງການຄວບຄຸມທີ່ສຳຄັນທີ່ກ່ຽວຂ້ອງກັບ: • ການພິຈາລະນາ ແລະ ການຮັບຮູ້ສິນເຊື່ອ, • ການຈັດລະດັບ ແລະ ການຕິດຕາມສິນເຊື່ອ, • ການຈັດປະເພດລາຍງານຖານະເງິນກູ້ຕາມຄວາມສ່ຽງທີ່ມີລັກສະນະຄ້າຍຄືກັນ, ແລະ • ການຄິດໄລ່ເງິນແຮຄ່າເສື່ອມສຳລັບໜີ້ເສຍ ໂດຍອີງຕາມບັນດາຂໍ້ກຳນົດທາງລະບຽບການ. ສຳລັບຕົວຢ່າງຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ ທີ່ຖືກຄິດໄລ່ເງິນແຮຄ່າເສື່ອມຕາມແຕ່ລະລູກຄ້າ, ພວກຂ້າພະເຈົ້າໄດ້: • ປະເມີນ ແລະ ຫາສິ່ງທ້າທາຍຂໍ້ສົມມຸດຖານຂອງຄະນະ

ທະນາຄານ ແລະ ສິ່ງທີ່ມີຢູ່ໂດຍພາວະວິໄສຂອງຂໍ້ສົມມຸດຖານທີ່ໄດ້ເລືອກ, ພວກຂ້າພະເຈົ້າຈຶ່ງໄດ້ມີການເອົາໃຈໃສ່ເປັນພິເສດໃນການກວດສອບຂອງພວກຂ້າພະເຈົ້າ.	ອຳນວຍການໃນແງ່ຂອງການຄາດຄະເນເງິນສົດ ແລະ ຈຳນວນການເກັບກູ້ຄືນຫຼັກຊັບ ແລະ • ປະເມີນຜົນກະທົບຂອງການປັບປຸງໂຄ້ງສ້າງໜີ້ ທີ່ເຫັນວ່າເໝາະສົມ ສຳລັບເງິນແຮ່ຄ່າເສື່ອມທີ່ຖືກຄິດໄລ່ເປັນກຸ່ມ ພວກຂ້າພະເຈົ້າໄດ້ໃຫ້ຊ່ຽວຊານສະເພາະດ້ານມີສ່ວນຮ່ວມໃນຂັ້ນຕອນຂອງພວກຂ້າພະເຈົ້າ ດັ່ງຕໍ່ໄປນີ້: • ທົດສອບຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງຂໍ້ມູນທີ່ນຳໃຊ້ໃນຮູບແບບ • ທົດສອບຄວາມຖືກຕ້ອງໃນການຄຳນວນຂອງຮູບແບບຂອງທະນາຄານ • ປະເມີນ ແລະ ຫາສິ່ງທ້າທາຍກ່ຽວກັບຄວາມເໝາະສົມຂອງຂໍ້ສົມມຸດຖານລວມມີ ອັດຕາການສູນເສຍໃນອະດີດ ແລະ • ສົມທຽບ, ຂໍ້ມູນ ແລະ ຂໍ້ສົມມຸດຖານທີ່ໄດ້ສ້າງໂດຍທະນາຄານຕໍ່ກັບຕົວອັດແທກພາຍນອກ. ສຸດທ້າຍພວກຂ້າພະເຈົ້າໄດ້ປະເມີນ ຄວາມຄົບຖ້ວນ ແລະ ຖືກຕ້ອງ ຂອງການເປີດເຜີຍໃນເອກະສານລາຍງານການເງິນ ທີ່ກ່ຽວຂ້ອງກັບການສຳຮອງໜີ້ເສຍ ເພື່ອປະເມີນຄວາມສອດຄ່ອງກັບຄວາມຮຽກຮ້ອງຕ້ອງການດ້ານການເປີດເຜີຍ.

ຄວາມຮັບຜິດຊອບຂອງຄະນະບໍລິຫານທະນາຄານຕໍ່ເອກະສານລາຍງານການເງິນລວມກິດຈະການ

ຄະນະບໍລິຫານທະນາຄານແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນລວມກິດຈະການ ໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການລາຍງານການເງິນ ແລະ ບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນລວມກິດຈະການ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນລວມກິດຈະການ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງທະນາຄານ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານທະນາຄານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານທະນາຄານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນລວມກິດຈະການ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນ ການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນລວມກິດຈະການໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ່ນຳໃຊ້ເອກະສານລາຍງານການເງິນລວມກິດຈະການ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນລວມກິດຈະການບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ออกแบบ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.

- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງທະນາຄານໃນການສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນລວມກິດຈະການ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອະນາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນການນຳສະເໜີໂດຍລວມ, ໂຄງສ້າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນລວມກິດຈະການ, ລວມທັງການເປີດເຜີຍຂໍ້ມູນ ແລະ ບໍ່ວ່າຈະເປັນເອກະສານລາຍງານການເງິນລວມກິດຈະການແມ່ນໄດ້ສະແດງທຸລະກຳທີ່ຕິດພັນ ແລະ ເຫດການໃນລັກສະນະທີ່ບັນລຸຕາມການນຳສະເໜີທີ່ຍຸດຕິທຳໄດ້ສຳເລັດ.

EY
Building a better working world

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ ປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ບໍລິສັດ ເອິນ ແອນ ຢັ໋ງ ລາວ ຈຳກັດ:

ກະຊວງ ການ ເງິນ
ບໍລິສັດ
ເອິນ ແອນ ຢັ໋ງ
ລາວ ຈຳກັດ
ERNST & YOUNG
LAO CO.,LTD
ນະຄອນ ຫລວງ ວຽງຈັນ

Trinh Hoang Anh
ຮຸ້ນສ່ວນ
ໃບອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນເລກທີ :LCPAA/2-1-00001

ນະຄອນຫລວງວຽງຈັນ, ສປປ ລາວ
31 ພຶດສະພາ 2017

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານໃນການທຸລະກິດລວມກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

	ບົດອະທິບາຍ ເລກທີ	2016 ລ້ານກີບ	2015 ລ້ານກີບ
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	8	1,406,431	1,073,610
ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ	9	(858,596)	(812,970)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ		**547,835**	**260,640**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	10	193,844	171,548
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	10	(15,411)	(13,314)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**10**	**178,433**	**158,234**
ລາຍຮັບ/(ລາຍຈ່າຍ)ສຸດທິຈາກການຄ້າ	11	47,270	(246,883)
ລາຍຮັບອື່ນໆຈາກການດຳເນີນງານ	12	14,994	422,260
ລາຍຮັບທັງໝົດຈາກການດຳເນີນງານ		**788,532**	**594,251**
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ	19	(167,367)	(114,455)
(ຫັກເພີ່ມ)/ເກັບຄືນຄ່າເສື່ອມມູນຄ່າ ການລົງທຶນທາງດ້ານການເງິນ	13	(10,985)	1,837
ລາຍຮັບສຸດທິຈາກການດຳເນີນງານ		**610,180**	**481,633**
ລາຍຈ່າຍພະນັກງານ	14	(240,203)	(220,719)
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	23, 24	(70,553)	(64,465)
ລາຍຈ່າຍອື່ນໆໃນການດຳເນີນງານ	15	(99,621)	(97,685)
ລາຍຈ່າຍທັງໝົດໃນການດຳເນີນງານ		**(410,377)**	**(382,869)**
ສ່ວນແບ່ງກຳໄລ ຂອງບໍລິສັດຮ່ວມທຶນ	22	26,413	48,325
ກຳໄລກ່ອນອາກອນ		**226,216**	**147,089**
ລາຍຈ່າຍອາກອນກຳໄລພາຍໃນປີ	29.1	(49,928)	(24,327)
(ລາຍຈ່າຍ)/ລາຍຮັບອາກອນກຳໄລເຍື່ອນຊຳລະ	29.1	(2,183)	1,950
ກຳໄລສຸດທິພາຍໃນປີ		**174,105**	**124,712**
ແບ່ງເຂົ້າ:			
ຜູ້ຖືຮຸ້ນຂອງບໍລິສັດແມ່		173,416	124,371
ສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມ		689	341
ກຳໄລຕໍ່ຮຸ້ນ (ກີບ)	**40**	**1,270**	**911**

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ວ່າການຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ລາໃຈ ຄັມພຣະວົງສ໌
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
31 ພຶດສະພາ 2017

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບນອກການທຸລະກິດລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

	ບົດອະທິບາຍ ເລກທີ	2016 ລ້ານກີບ	2015 ລ້ານກີບ
ກຳໄລສຸດທິພາຍໃນປີ		**174,105**	**124,712**
ລາຍຮັບອື່ນໆນອກການທຸລະກິດ			
ຂາດທຶນສຸດທິຈາກເຄື່ອງມືທາງການເງິນມີໄວ້ເພື່ອຂາຍ		(33,427)	(35,708)
ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ		8,023	4,627
ລາຍຮັບນອກການທຸລະກິດພາຍໃນໄລຍະ ຫຼັງຫັກອາກອນ		**(25,404)**	**(31,081)**
ຍອດລວມລາຍຮັບນອກການທຸລະກິດພາຍໃນປີ ຫຼັງຫັກອາກອນ		**148,701**	**93,631**
ແບ່ງເຂົ້າ:			
ຜູ້ຖືຮຸ້ນຂອງບໍລິສັດແມ່		148,200	93,290
ສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມ		501	341

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ລຳມະນີແສງ ໄຊຍະເພັດ	ທ່ານ ນ. ພຸແສງທອງ ອານຸລັກຄຳ	ທ່ານ ລາໃຈ ສົມພອະວົງສ໌
ຫົວໜ້າພະແນກບັນຊີສັງລວມ	ວ່າການຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

31 ພຶດສະພາ 2017

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນລວມກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

	ບົດອະທິບາຍ ເລກທີ	*31 ທັນວາ 2016 ລ້ານກີບ*	*31 ທັນວາ 2015 ລ້ານກີບ*
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	16	5,680,936	9,466,790
ເງິນຝາກຢູ່ທະນາຄານອື່ນ	17	2,950,093	1,986,635
ເງິນກູ້ໃຫ້ແກ່ລູກຄ້າ	18	19,093,205	10,854,955
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຄ້າ		39	6,046
ການລົງທຶນທາງດ້ານການເງິນ - ປະເພດມີໄວ້ເພື່ອຂາຍ	20	198,121	224,348
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	21	2,553,110	1,776,408
ການລົງທຶນໃນບັນດາບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ	22	551,449	555,418
ຊັບສົມບັດຄົງທີ່ ແລະ ອຸປະກອນ	23	447,935	391,146
ຊັບສົມບັດຄົງທີ່ບໍ່ມີຕົວຕົນ	24	243,521	297,744
ຊັບສິນອາກອນເຍື້ອນຊຳລະ	29.4	10,856	6,259
ຊັບສິນອື່ນໆ	25	294,009	211,111
ລວມຊັບສິນ		**32,023,274**	**25,776,860**
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ	26	3,526,229	2,446,347
ໜີ້ຕ້ອງສົ່ງລູກຄ້າ	27	25,402,421	21,310,561
ກູ້ຢືມຈາກທະນາຄານ ແຫ່ງສປປ ລາວ	28	1,640,776	720,497
ໜີ້ສິນອາກອນ	29.2	36,496	30,934
ໜີ້ສິນອາກອນເຍື້ອນຊຳລະ	29.4	9,834	11,077
ໜີ້ສິນອື່ນໆ	30	94,324	60,373
ລວມໜີ້ສິນ		**30,710,080**	**24,579,789**
ທຶນ			
ທຶນຈົດທະບຽນ		682,888	682,888
ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ	32	359,007	314,898
ເງິນແຮສຳລັບຫຼັກຊັບມີໄວ້ເພື່ອຂາຍ	33	7,385	32,789
ຮຸ້ນທີ່ໄດ້ຊື້ຄືນ		(1,010)	(1,010)
ກຳໄລສະສົມ		230,992	134,263
ສ່ວນຂອງທຶນທັງໝົດຂອງທະນາຄານແມ່		**1,279,262**	**1,163,828**
ສ່ວນຂອງທຶນທັງໝົດຈາກສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມ		33,932	33,243
ລວມທຶນ		**1,313,194**	**1,197,071**
ລວມໜີ້ສິນ ແລະ ທຶນ		**32,023,274**	**25,776,860**

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ລຳມະນີແສງ ໄຊຍະເພັດ	ທ່ານ ນ. ພຸແສງທອງ ອານຸລັກຄຳ	ທ່ານ ລາໃຈ ຄັນພະອິງສ໌
ຫົວໜ້າພະແນກບັນຊີສັງລວມ	ອຳນວຍການຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ

31 ພຶດສະພາ 2017

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງລວມກິດຈະການ

ສຳລັບ ປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

	ທຶນຈົດທະບຽນ ລ້ານກີບ	*ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ ລ້ານກີບ*	*ຮຸ້ນທີ່ໄດ້ຊື້ຄືນ ລ້ານກີບ*	*ເງິນແຮສຳລັບຫລັກຊັບມີໄວ້ເພື່ອຂາຍ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ສ່ວນໄດ້ສ່ວນເສຍທີ່ບໍ່ສາມາດຄວບຄຸມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອໃນວັນທີ 31 ທັນວາ 2015	**682,888**	**314,898**	**(1,010)**	**32,789**	**134,263**	**33,243**	**1,197,071**
ລາຍຈ່າຍເງິນປັນຜົນປີ 2015 ຈ່າຍໃຫ້ແກ່ຜູ້ຖືຮຸ້ນ	-	-	-	-	(29,881)	-	(29,881)
ກຳໄລສຸດທິພາຍໃນປີ	-	-	-	-	173,416	689	174,105
ແບ່ງສ່ວນກຳໄລເຂົ້າຄັງສະສົມສຳລັບປີ 2015	-	44,109	-	-	(44,109)	-	-
ການປ່ຽນແປງສຸດທິໃນຄັງສະສົມປະເພດມີໄວ້ເພື່ອຂາຍ	-	-	-	(25,404)	-	-	(25,404)
ອາກອນຕ້ອງສິ່ງເພີ່ມສຳລັບປີທີ່ຜ່ານມາ	-	-	-	-	(2,697)	-	(2,697)
ຍອດເຫຼືອນະວັນທີ 31 ທັນວາ 2016	**682,888**	**359,007**	**(1,010)**	**7,385**	**230,992**	**33,932**	**1,313,194**

ກະກຽມໂດຍ:

ທ່ານ ນ. ລຳມະນີແສງ ໄຊຍະເພັດ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ນ. ພຸແສງທອງ ອານຸລັກຄຳ
ຮັກສາການຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ລາໃຈ ຄັນພຣະວົງສ໌
ຮອງຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
31 ພຶດສະພາ 2017

ໃບລາຍງານກະແສເງິນສົດລວມກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

	ບົດອະທິບາຍ ເລກທີ	*2016 ລ້ານກີບ*	*2015 ລ້ານກີບ*
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**226,216**	**147,089**
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	23, 24	70,553	64,465
ລາຍຈ່າຍທີ່ຫັກເປັນເງິນແຮສຳລັບການສູນເສຍເງິນກູ້ ແລະ ຄ່າເສື່ອມຂອງການລົງທຶນໃນຫຼັກຊັບ		178,352	112,618
ສ່ວນແບ່ງກຳໄລຂອງບໍລິສັດພາຍໃຕ້ວິທີສ່ວນໄດ້ເສຍ	22	(26,413)	(48,325)
ກຳໄລຈາກການຂາຍຊັບສິນບັດຄົງທີ່	12	(676)	(359,076)
ລາຍຮັບເງິນປັນຜົນ		(11,060)	(12,673)
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ		**436,972**	**(95,902)**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ			
ຍອດເຫຼືອຢູ່ທະນາຄານອື່ນ		(206,364)	(334,797)
ເງິນກູ້ໃຫ້ແກ່ລູກຄ້າ		(8,406,559)	(1,338,065)
ລົງທຶນທາງການເງິນ - ປະເພດມີໄວ້ເພື່ອຄ້າ		6,007	(2,140)
ລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ		26,227	(2,016)
ລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		(787,691)	(507,839)
ຊັບສິນອື່ນໆ		(7,296)	54,422
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ			
ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ ແລະ ທຫລ		2,000,161	183,832
ໜີ້ຕ້ອງສົ່ງລູກຄ້າ		4,091,859	2,208,913
ໜີ້ສິນອື່ນໆ		5,007	(186,372)
ອາກອນທີ່ໄດ້ຈ່າຍພາຍໃນປີ	29.3	(46,875)	(9,020)
ກະແສເງິນສົດສຸດທິຈາກ ການດຳເນີນງານ		**(2,888,552)**	**(28,984)**
ການເຄື່ອນໄຫວດ້ານການລົງທຶນ			
ການຈັດຊື້ ແລະ ການກໍ່ສ້າງຊັບສິນບັດຄົງທີ່		(170,304)	(244,225)
ຮັບຈາກການຂາຍຊັບສິນບັດຄົງທີ່		48,918	371,908
ຮັບເງິນປັນຜົນ		11,060	38,452
ກະແສເງິນສົດສຸດທິທີ່ໄດ້(ນຳໃຊ້)/ຈາກການເຄື່ອນໄຫວການລົງທຶນ		**(110,326)**	**166,135**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດລວມກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

	ບົດອະທິບາຍ ເລກທີ	2016 ລ້ານກີບ	2015 ລ້ານກີບ
ກິດຈະກຳທາງການເງິນ			
ຈ່າຍເງິນປັນຜົນ		(29,881)	(55,534)
ກະແສເງິນສົດສຸດທິທີ່ນຳໃຊ້ໃນການເຄື່ອນໄຫວທາງການເງິນ		**(29,881)**	**(55,534)**
(ຫຼຸດລົງ)/ເພີ່ມຂຶ້ນສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**(3,028,759)**	**81,617**
ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ		**10,154,343**	**10,081,167**
ສ່ວນຜິດຕ່າງອັດຕາແລກປ່ຽນ		**-**	**(8,441)**
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍປີ	**34**	**7,125,584**	**10,154,343**

ກະກຽມໂດຍ:	ອະນຸມັດໂດຍ:	ອະນຸມັດໂດຍ:
ທ່ານ ນ. ລຳມະນີແສງ ໄຊຍະເພັດ	ທ່ານ ນ. ພຸແສງທອງ ອານຸລັກຄຳ	ທ່ານ ລາໃຈ ຄັນພຣະວົງສ໌
ຫົວໜ້າພະແນກບັນຊີສັງລວມ	ວ່າການຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ.

31 ພຶດສະພາ 2017

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນລວມກິດຈະການ

ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ໃນບົດລາຍງານສະບັບນີ້ ເອີ້ນວ່າ "ທະນາຄານ") ດຳເນີນທຸລະກິດໃນຮູບແບບ ມະຫາຊົນ ແລະ ຈົດທະບຽນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ).

ການສ້າງຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານຖືກສ້າງຕັ້ງຂຶ້ນໂດຍການປະກອບທຶນຂອງທະນາຄານ ການຄ້າຕ່າງປະເທດລາວ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບ ອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989 ອອກໂດຍທະນາຄານແຫ່ງ ສປປ ລາວ ແລະ ໃບ ອະນຸຍາດດຳເນີນທຸລະກິດດ້ານການທະນາຄານ ສະບັບປັບປຸງຄັ້ງລ່າສຸດ ເລກທີ 4284/ທຫລ, ລົງວັນທີ 11 ພະຈິກ 2010 ອອກ ໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານ ໄດ້ປ່ຽນຊື່ມາເປັນ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນ ທີ 10 ມັງກອນ 2011 ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ນະວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍ ກະຊວງການເງິນ ເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະ ສາດ ຊື່ວ່າ ທະນາຄານ Compagnie Financière de la BRED (''COFIBRED''). ອີງຕາມສັນຍາການຊື້ຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED. COFIBRED ແມ່ນທະນາຄານໃນເຄືອຂອງ BRED ທະນາຄານ ດັ່ງກ່າວເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງ ເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ. ມູນຄ່າຊື້ທັງໝົດ ເຊິ່ງເທົ່າກັບ 150,235,349,000 ກີບໄດ້ຖືກຈ່າຍເຕັມມູນ ຄ່າໂດຍທະນາຄານ COFIBRED.

ອີງຕາມການແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ, ໂຄງສ້າງການຖືຮຸ້ນຂອງທະນາຄານ ນະ ວັນທີ 31 ທັນວາ 2016 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*%*
ລັດຖະບານ	95,604,321	70%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ)	13,657,760	10%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	13,657,759	10%
ນັກລົງທຶນຕ່າງປະເທດ	13,657,760	10%
	136,577,600	**100%**

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການລວມທັງ ການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກອົງກອນ ແລະ ບຸກຄົນ; ເງິນກູ້ໄລຍະສັ້ນ, ກາງ, ແລະ ຍາວ ໃຫ້ແກ່ອົງກອນ ແລະ ບຸກຄົນ ອີງຕາມຈຸດປະສົງ ແລະ ຄວາມ ສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງດ້ານການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ທັນວາ 2016 ແມ່ນ 682,888 ລ້ານກີບ (ນະວັນທີ 31 ທັນວາ 2015: 682,888 ລ້ານກີບ).

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ທີ່ຕັ້ງ ແລະ ເຄືອຂ່າຍ

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ທັນວາ 2016 ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ໜຶ່ງ (1) ບໍລິສັດໃນເຄືອ, ສີ່ (4) ບໍລິສັດຮ່ວມທຶນ, ສິບເກົ້າ (19) ສາຂາຫລັກ, ແປດສິບເອັດ (81) ໜ່ວຍບໍລິການ ແລະ ສິບຫົກ (16) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2016, ທະນາຄານມີ ໜຶ່ງ (01) ບໍລິສັດໃນເຄືອຄື:

ຊື່	*ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງ ທະນາຄານ*
ບໍລິສັດຫລັກຊັບ ທຄຕລ - ກທ ຈຳກັດ	ເລກທີ 180 -10 ລົງວັນທີ 14 ທັນວາ 2010 ໂດຍກົມສົ່ງເສີມການລົງທຶນ ຂອງກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ.	ຫລັກຊັບ	70%

ບໍລິສັດຮ່ວມທຶນ

ນະວັນທີ 31 ທັນວາ 2016**,** ທະນາຄານມີ ສີ່ (04) ບໍລິສັດຮ່ວມທຶນຄື:

ຊື່	*ໃບທະບຽນວິສາຫະກິດ*	*ຂະແໜງການ*	*% ຮຸ້ນຂອງ ທະນາຄານ*
ທະນາຄານຮ່ວມທຸລະກິດ ລາວ - ຫວຽດ	ເລກທີ 232/11 ລົງວັນທີ 08 ກັນຍາ 2011 ໂດຍ ທະນາຄານແຫ່ງ ສປປ ລາວ.	ການທະນາຄານ & ການເງິນ	25%
ທະນາຄານລາວ - ຝຣັ່ງ	121-09/ຜທ ລົງວັນທີ 26 ສິງຫາ 2009 ໂດຍ ກະຊວງ ແຜນການ ແລະ ການລົງທຶນ ຂອງ ສປປ ລາວ	ການທະນາຄານ & ການເງິນ	46%
ບໍລິສັດປະກັນໄພ ລາວ - ຫວຽດ	ເລກທີ 077/08/FIMC ລົງວັນທີ 09 ມິຖຸນາ 2008 ໂດຍ ຄະນະກຳມະການລົງທຶນ ຕ່າງປະເທດ ຂອງສປປ ລາວ.	ປະກັນໄພ	35%
ທະນາຄານ ລາວ - ຈີນ ຈຳກັດ	ເລກທີ 041/ຫຈຫ ລົງວັນທີ 27 ມັງກອນ 2014 ໂດຍ ພະແນກທະບຽນວິສາຫະກິດ ຂອງ ສປປ ລາວ.	ການທະນຄານ & ການເງິນ	49%

1. ຂໍ້ມູນກ່ຽວກັບທະນາຄານ (ຕໍ່)

ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານ ຮອດວັນທີ 31 ທັນວາ 2016 ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ບຸນເຫຼືອ ສີນໄຊວໍລະວົງ	ປະທານ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ຄຳສຸກ ສູນດາລາ	ຮອງປະທານ	ແຕ່ງຕັ້ງຄືນໃໝ່ ວັນທີ 09 ເມສາ 2015
ທ່ານ ພູຂົງ ຈັນທະຈັກ	ສະມາຊິກ	ແຕ່ງຕັ້ງຄືນໃໝ່ ວັນທີ 09 ເມສາ 2015
ທ່ານ ພັນຊະນະ ຄຸນນຸວົງ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015
ທ່ານ ມາກ ໂຣເບີດ	ສະມາຊິກ	ແຕ່ງຕັ້ງຄືນໃໝ່ ວັນທີ 09 ເມສາ 2015
ທ່ານ ວຽງໄຊ ຈັນທະວີສຸກ	ສະມາຊິກ	ແຕ່ງຕັ້ງ ວັນທີ 09 ເມສາ 2015

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງທະນາຄານ ນະວັນທີ 31 ທັນວາ 2016 ແລະ ນະວັນທີທີ່ອອກເອກະສານລາຍງານນີ້ ປະກອບມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ພູຂົງ ຈັນທະຈັກ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 15 ມັງກອນ 2016
ທ່ານ ພັນຊະນະ ຄຸນນຸວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 06 ມິຖຸນາ 2008
ທ່ານ ນ. ຂັນທະລີ ວົງໄຊຍະລາດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ລາໃຈ ຄັນພຣະວົງສ໌	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ບັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 30 ກັນຍາ 2014
ທ່ານ ຄຳຊ່ຽນ ມິ່ງບຸບຜາ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 23 ພະຈິກ 2015
ທ່ານ ສຸພັກ ຖິ່ນໄຊພອນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 23 ພະຈິກ 2015
ທ່ານ ບົວວັນ ສີມະລີວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງ ວັນທີ 1 ພະຈິກ 2016

ພະນັກງານ

ພະນັກງານ ທັງໝົດຂອງທະນາຄານ ແລະ ບໍລິສັດໃນເຄືອ ນະວັນທີ 31 ທັນວາ 2016 ແມ່ນ 1,621 ຄົນ (31 ທັນວາ 2015: 1,548 ຄົນ).

2. ພື້ນຖານໃນການກຽມ

ທະນາຄານສ້າງເອກະສານລາຍງານການເງິນລວມກິດຈະການແມ່ນໄດ້ຮັບການກະກຽມໂດຍອີງຕາມພື້ນຖານຕົ້ນທຶນເດີມ, ເວັ້ນແຕ່ໄດ້ເປີດເຜີຍຢູ່ໃນບົດອະທິບາຍຊ້ອນທ້າຍເລກທີໃດໜຶ່ງຂອງເອກະສານລາຍງານການເງິນສະບັບນີ້.

ທະນາຄານຮັກສາການບັນທຶກບັນຊີເປັນເງິນກີບ ("ກີບ") ເຊິ່ງເປັນສະກຸນ ເງິນຫລັກຂອງທະນາຄານ ແລະ ໄດ້ສ້າງເອກະສານ ລາຍງານການເງິນລວມກິດຈະການເປັນຫົວໜ່ວຍລ້ານກີບ.

ທະນາຄານຍັງໄດ້ສ້າງ ແລະ ອອກເອກະສານລາຍງານການເງິນສະເພາະກິດຈະການຕາມ IFRS ລົງວັນທີ 31 ມີນາ 2017

ປີການບັນຊີຂອງທະນາຄານແມ່ນເລີ່ມຕົ້ນແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດ 31 ທັນວາ.

3. ຄຳຖະແຫຼງການ

ເອກະສານລາຍງານການເງິນລວມກິດຈະການຂອງທະນາຄານ ຖືກກະກຽມໂດຍສອດຄ່ອງກັບມາດຕະຖານສາກົນດ້ານການ ລາຍງານການເງິນ (IFRS) ທີ່ອອກໂດຍ IASB.

4. ການນຳສະເໜີເອກະສານລາຍງານການເງິນລວມກິດຈະການ

ທາງທະນາຄານໄດ້ນຳສະເໜີໃບລາຍງານຖານະການເງິນ ໂດຍລຽງລຳດັບຕາມສະພາບຄ່ອງ. ຊັບສິນ ແລະ ໜີ້ສິນທາງການເງິນ ແມ່ນໄດ້ຖືກລາຍງານເປັນມູນຄ່າລວມ ໃນໃບລາຍງານຖານະການເງິນ. ຊັບສິນ ແລະ ໜີ້ສິນທາງການເງິນ ຈະຖືກນຳມາຫັກ ລ້າງກັນ ແລະ ລາຍງານເປັນມູນຄ່າສຸດທິ ໃນເວລາທີ່ ບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງຫາກມີຄວາມຕ້ອງການຢາກຫັກລ້າງ ໃນທຸກໆກໍລະນີຂ້າງລຸ່ມນີ້:

- ການດຳເນີນທຸລະກິດປົກກະຕິ
- ໃນກໍລະນີທີ່ທຸລະກິດມີການກະທຳຄວາມຜິດ
- ໃນກໍລະນີຂອງບໍ່ສາມາດຊຳລະໜີ້ ຫຼື ການລົ້ມລະລາຍຂອງທະນາຄານແລະ/ຫຼື ຄູ່ຄ້າຂອງຕົນ.

5. ພື້ນຖານຂອງການສ້າງລວມກິດຈະການ

ເອກະສານລາຍງານການເງິນສ້າງລວມກິດຈະການແມ່ນປະກອບດ້ວຍເອກະສານລາຍງານການເງິນຂອງທະນາຄານ ແລະ ບໍລິສັດໃນເຄືອ (ໃນທີ່ນີ້ເອີ້ນວ່າ “ກຸ່ມ”) ນະວັນທີ 31 ທັນວາ 2016. ບໍລິສັດໃນເຄືອແມ່ນບໍລິສັດຜູ້ຖືກລົງທຶນທີ່ທະນາຄານ ຄວບຄຸມ. ການຄວບຄຸມແມ່ນບັນລຸໄດ້ໃນເວລາທີ່ທະນາຄານໄດ້ຖືກຮັບ ຫຼືມີສິດທິ, ທີ່ຈະໄດ້ຮັບຄືນຈາກຕົວປ່ຽນແປງຈາກ ການມີສ່ວນຮ່ວມຂອງຕົນກັບນັກລົງທຶນ ແລະ ມີຄວາມສາມາດໃນການສິ່ງຜົນກະທົບຕໍ່ຜົນຕອບແທນທີ່ຜ່ານອຳນາດຂອງຕົນ ຕໍ່ຜູ້ນັກລົງທຶນ.

ໂດຍທົ່ວໄປ, ມີຂໍ້ສົມມຸດຖານທີ່ວ່າຜົນຂອງສິດລົງຄະແນນສ່ວນໃຫຍ່ຢູ່ໃນການຄວບຄຸມໄດ້. ຢ່າງໃດກໍຕາມ, ພາຍໃຕ້ ສະຖານະການສະເພາະໃດໜຶ່ງ, ທະນາຄານອາດຈະຍັງໃຊ້ການຄວບຄຸມທີ່ມີການຖືຫຸ້ນໜ້ອຍກ່ວາ 50% ຫຼື ອາດບໍ່ສາມາດທີ່ ຈະອອກດຳເນີນຄວບຄຸມແມ້ກະທັ້ງມີການຖືຄອງຮຸ້ນຢູ່ຫຼາຍກ່ວາ 50% ຂອງຮຸ້ນຂອງນິຕິບຸກຄົນ. ເມື່ອການປະເມີນວ່າມັນມີ ອຳນາດຫຼາຍກ່ວານັກລົງທຶນ ແລະ ຈຶ່ງຄວບຄຸມການປ່ຽນແປງຂອງຜົນຕອບແທນຂອງຕົນ, ທະນາຄານພິຈາລະນາຂໍ້ເທັດຈິງທີ່ ກ່ຽວຂ້ອງທັງຫມົດ ແລະ ສະພາບການ, ລວມທັງ:

5. ພື້ນຖານຂອງການສັງລວມກິດຈະການ (ຕໍ່)

- ຈຸດປະສົງ ແລະ ການອອກແບບຂອງນັກລົງທຶນ
- ການກິດຈະກຳທີ່ກ່ຽວຂ້ອງ ແລະ ວິທີການຕັດສິນໃຈກ່ຽວກັບກິດຈະກຳເຫຼົ່ານັ້ນ ບໍ່ວ່າຈະໂດຍທະນາຄານ ຫຼື ບໍ
- ສາມາດຊີ້ນຳບັນດາກິດຈະກຳ
- ຂໍ້ຜັນທະສັນຍາເຊັ່ນ: ສິດໃນການຮ້ອງ, ສິດໃນການເພີ່ມ ແລະ ສິດໃນການຊຳລະ
- ບໍ່ວ່າທະນາຄານໄດ້ຖືກຮັບ ຫຼື ມີສິດ ທີ່ຈະໄດ້ຮັບຄືນຈາກຕົວປ່ຽນແປງຈາກການມີສ່ວນຮ່ວມຂອງຕົນກັບນັກລົງທຶນ ແລະ ມີຄວາມສາມາດໃນການສົ່ງຜົນກະທົບຕໍ່ຜົນຕອບແທນທີ່ຜ່ານອຳນາດຂອງຕົນຕໍ່ຜູ້ນັກລົງທຶນ.

ກຳໄລ ຫຼື ຂາດທຶນ ແລະ ອົງປະກອບຂອງ OCI ແຕ່ລະຄົນແມ່ນປະກອບກັບຜູ້ຖືຫຸ້ນຂອງບໍລິສັດແມ່ຂອງກຸ່ມບໍລິສັດ ແລະ ສ່ວນໄດ້ສ່ວນເສຍທີ່ບໍ່ມີການຄວບຄຸມ, ເຖິງແມ່ນວ່າສ່ວນໄດ້ສ່ວນເສຍທີ່ບໍ່ມີການຄວບຄຸມຈະມີຍອດຂາດດຸນ.

ໃນເວລາທີ່ມີຄວາມຈຳເປັນ, ການດັດແກ້ແມ່ນໄດ້ເຮັດໃນເອກະສານລາຍງານການເງິນຂອງບໍລິສັດໃນເຄືອທີ່ຈະເຮັດໃຫ້ນະໂຍບາຍການບັນຊີຂອງເຂົາເຈົ້າ ໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງກຸ່ມບໍລິສັດ. ຊັບສິນລະຫວ່າງກຸ່ມທັງໝົດ, ໜີ້ສິນ, ທຶນ, ລາຍຮັບ, ລາຍຈ່າຍ ແລະ ກະແສເງິນສົດທີ່ກ່ຽວຂ້ອງກັບທຸລະກຳລະຫວ່າງສະມາຊິກຂອງກຸ່ມບໍລິສັດໄດ້ຖືກລົບລ້າງຢ່າງເຕັມສ່ວນໃນການສັງລວມກິດຈະການ.

ການປ່ຽນແປງໃນຜົນປະໂຫຍດໃນກຳມະສິດຂອງບໍລິສັດໃນເຄືອ, ໂດຍປາດສະຈາກການສູນເສຍການຄວບຄຸມ, ຖືກບັນທຶກການເຮັດທຸລະກຳທາງດ້ານທຶນ. ຖ້າຫາກວ່າກຸ່ມບໍລິສັດສູນເສຍການຄວບຄຸມໃນບໍລິສັດໃນເຄືອ, ຈະຖືກຢຸດການຮັບຮູ້ຂອງໃນຊັບສິນທີ່ກ່ຽວຂ້ອງ (ລວມທັງຄ່າຄວາມນິຍົມ), ໜີ້ສິນ, ສ່ວນໄດ້ສ່ວນເສຍທີ່ບໍ່ມີການຄວບຄຸມ (NCI) ແລະ ອົງປະກອບອື່ນໆຂອງທຶນ, ໃນຂະນະທີ່ໃດຮັບກຳໄລ ຫຼື ຂາດທຶນແມ່ນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ. ການລົງທຶນໃດໜຶ່ງທີ່ໄດ້ຮັກສາຈະຖືກຮັບຮູ້ຢູ່ໃນມູນຄ່າຍຸດຕິທຳ ນະວັນທີຂອງການສູນເສຍຂອງການຄວບຄຸມ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

6.1 ການແລກປ່ຽນເງິນຕ່າງປະເທດ

ການເຮັດທຸລະກຳທີ່ເປັນເງິນຕາຕ່າງປະເທດແມ່ນ ຖືກບັນທຶກ ແລະ ແລກປ່ຽນເປັນສະກຸນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນນະວັນທີທີ່ເຮັດທຸລະກຳ. ຊັບສິນ ແລະ ໜີ້ສິນທີ່ເປັນສະກຸນເງິນຕ່າງປະເທດ ແມ່ນຈະໄດ້ ຖືກແລກປ່ຽນຄືນເປັນເງິນກີບ ໂດຍໃຊ້ອັດຕາແລກປ່ຽນນະວັນທີສ້າງບົດລາຍງານ (ເບິ່ງລາຍລະອຽດອັດຕາແລກປ່ຽນຂອງສະກຸນເງິນຕ່າງປະເທດ ທີ່ໃຊ້ໃນການແລກປ່ຽນເປັນເງິນກີບ ນະວັນທີ 31 ທັນວາ 2016 ແລະ 31 ທັນວາ 2015 ໃນ ເອກະສານຊ້ອນທ້າຍເລກທີ 42). ສ່ວນຜິດຕ່ຽງທີ່ເກີດຂຶ້ນຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນ ໃນມື້ສ້າງບົດລາຍງານແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານລວມກິດຈະການ.

6.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ

6.2.1 ວັນທີຂອງການຮັບຮູ້

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແລະ ໜີ້ຕ້ອງສົ່ງລູກຄ້າ, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍ ເຊັ່ນ ມື້ທີ່ທະນາຄານກາຍເປັນພາກສ່ວນໜຶ່ງໃນພັນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ລວມທັງ "ວິທີການຄ້າປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບການເງິນໃນສະ ຖານທີ່ຊື້ຂາຍ. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແມ່ນ ຖືກຮັບຮູ້ໃນເມື່ອເງິນໄດ້ໂອນເຂົ້າບັນຊີ ຂອງລູກຄ້າຮຽບຮ້ອຍແລ້ວ. ທະນາຄານຮັບຮູ້ໜີ້ຕ້ອງສົ່ງລູກຄ້າເມື່ອທະນາຄານໄດ້ຮັບເງິນຈາກລູກຄ້າເປັນທີ່ຮຽບຮ້ອຍແລ້ວ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

6.2.2 ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບລັກສະນະຂອງເຄື່ອງມືທາງການເງິນ ແລະ ຈຸດປະສົງຂອງຄະນະບໍລິຫານຕໍ່ເຄື່ອງມືທາງການເງິນທີ່ຕ້ອງການ. ເຄື່ອງມືທາງການເງິນທັງໝົດແມ່ນຖືກຕີມູນຄ່າໃນເບື້ອງຕົ້ນ ຕາມມູນຄ່າຍຸດຕິທຳບວກກັບລາຍຈ່າຍທີ່ເກີດຈາກການຊື້, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ມູນຄ່າ ຍຸດຕິທຳຖືກບັນທຶກໂດຍຜ່ານກຳໄລ ແລະ ຂາດທຶນ.

6.2.3 ຊັບສິນທາງການເງິນ ຫລື ໜີ້ສິນທາງການເງິນທີ່ມີໄວ້ເພື່ອການຄ້າ

ຊັບສິນທາງການເງິນ ຫລື ໜີ້ສິນທາງການເງິນທີ່ມີໄວ້ເພື່ອການຄ້າ ແມ່ນຖືກບັນທຶກໃນໃບລາຍງານຖານະການເງິນລວມ ກິດຈະການຕາມມູນຄ່າຍຸຕິທຳ. ການປ່ຽນແປງຂອງມູນຄ່າຍຸຕິທຳແມ່ນຖືກບັນທຶກເປັນ "ກຳໄລ/(ຂາດທຶນ) ສຸດທິໃນຫລັກຊັບ ແລະ ການຊື້-ຂາຍເງິນຕາຕ່າງປະເທດ". ລາຍຮັບດອກເບ້ຍ ແລະ ເງິນປັນຜົນ ແມ່ນຖືກບັນທຶກເປັນ "ກຳໄລ/(ຂາດທຶນ) ສຸດທິ ຈາກຫລັກຊັບ ແລະ ການຊື້ - ຂາຍເງິນຕາຕ່າງປະເທດ". ອີງຕາມ ກຳນົດເວລາຂອງສັນຍາ ຫລື ເມື່ອສິດໃນການຈ່າຍໄດ້ເກີດ ຂຶ້ນ.

ເຊິ່ງລວມຢູ່ໃນປະເພດນີ້ແມ່ນມີຫລັກຊັບລົງທຶນ ທີ່ມີຈຸດປະສົງເພື່ອຊື້ - ຂາຍໃນໄລຍະສັ້ນ.

6.2.4 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ

ອັດຕາດອກເບ້ຍທີ່ແທ້ຈິງ (EIR) ແມ່ນອັດຕາສ່ວນຫຼຸດຕໍ່ເຈ້ຍທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບ ສິນ ຫຼື ໜີ້ສິນທາງການເງິນ. ຄ່າເສື່ອມຕົ້ນທຶນຂອງຊັບສິນ ຫຼື ໜີ້ສິນທາງການເງິນແມ່ນຖືກຄັດແກ້ ເມື່ອທະນາຄານໄດ້ແກ້ໄຂ ການຄາດຄະເນລາຍຮັບ ຫຼື ລາຍຈ່າຍຂອງທະນາຄານ ໂດຍຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ແລະ ສ່ວນຜິດຕ່ຽງ ຂອງ ມູນຄ່າດັ່ງກ່າວຈະຖືກບັນທຶກເປັນ 'ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ' ສຳລັບຊັບສິນທາງການເງິນ ແລະ 'ດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືດອກເບ້ຍ' ສຳລັບໜີ້ສິນທາງການເງິນ. ນະໂຍບາຍການບັນຊີສຳລັບວິທີ EIR ແມ່ນມີ ຄວາມແຕກຕ່າງຕາມແຕ່ລະປະເພດຂອງການນຳໃຊ້ເຄື່ອງມື ເຊິ່ງໄດ້ອະທິບາຍເພີ່ມເຕີມເອກະສານຊ້ອນທ້າຍເລກທີ:

- 6.2.6 ສຳລັບ "ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ"
- 6.2.7 ສາລັບ "ການລົງທຶນທີ່ຖືໄວ້ຈົນຄົບກຳນົດ"
- 6.2.8 ສຳລັບ 'ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ໃຫ້ແກ່ລູກຄ້າ'
- 6.2.9 ສຳລັບ 'ໜີ້ຕ້ອງສົ່ງທະນາຄານອື່ນ ແລະ ລູກຄ້າ ແລະ ເງິນກູ້ຍືມອື່ນໆ'
- 6.4 ສຳລັບ 'ການເສື່ອມມູນຄ່າຂອງຊັບສິນທາງການເງິນ'
- 6.8 ສຳລັບ 'ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ'

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

6.2.5 ມື້ທີ 1 ກຳໄລ ຫຼື ຂາດທຶນ

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸດຕິທຳຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ ຫຼື ອີງຕາມມູນຄ່າທີ່ໄດ້ສຳຫຼວດໃນຕະຫຼາດ, ທະນາຄານຮັບຮູ້ສ່ວນຜິດຕ່າງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທຳ ('ມື້ທີ 1' ກຳໄລ ຫຼື ຂາດທຶນ) ໃນ "ລາຍຮັບສຸດທິຈາກການຄ້າ". ໃນກໍລະນີທີ່ມູນຄ່າຍຸດຕິທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫຼວດ, ສ່ວນຜິດຕ່າງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າທີ່ໄດ້ຈາກນຳໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອຂໍ້ມູນສາມາດຊອກຫາໄດ້ ຫຼື ເມື່ອເຄື່ອງມືການເງິນບໍ່ຖືກຮັບຮູ້.

6.2.6 ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ

ການລົງທຶນໃນຫຼັກຊັບປະເພດມີໄວ້ເພື່ອຂາຍ ປະກອບມີ ຫຼັກຊັບທຶນ ແລະ ຫຼັກຊັບໜີ້. ຫຼັກຊັບທຶນຈະຖືກຈັດປະເພດເປັນຫຼັກຊັບປະເພດມີໄວ້ເພື່ອຂາຍ ຖ້າໃນກໍລະນີທີ່ຫຼັກຊັບດັ່ງກ່າວ ບໍ່ໄດ້ຖືກຈັດເປັນປະເພດຫຼັກຊັບມີໄວ້ເພື່ອການຄ້າ ຫຼື ຫຼັກຊັບທີ່ບັນທຶກມູນຄ່າຍຸດຕິທຳ ໂດຍຜ່ານ ກຳໄລ ແລະ ຂາດທຶນໂດຍກົງ. ຫຼັກຊັບໜີ້ແມ່ນເກີດຂຶ້ນໂດຍບໍ່ມີໄລຍະເວລາທີ່ແນ່ນອນ ແລະ ອາດຈະຖືກຂາຍອອກໄປເພື່ອເຮັດໃຫ້ມີສະພາບຄ່ອງ ຫຼື ເພື່ອຕອບສະໜອງການປ່ຽນແປງເງື່ອນໄຂໃນຕະຫຼາດ.

ທະນາຄານຍັງບໍ່ໄດ້ຮັບຮູ້ບັນດາເງິນກູ້ ຫຼື ໜີ້ຕ້ອງຮັບເປັນການລົງທຶນການເງິນມີໄວ້ເພື່ອຂາຍ.

ຫລັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າເປັນມູນຄ່າຍຸດຕິທຳ.

ກຳໄລ ຫຼື ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດທຶນ (ໃນໃບລາຍງານຜົນການດຳເນີນງານນອກການທຸລະກິດ) ເປັນ "ເງິນແຮສຳລັບຫລັກຊັບມີໄວ້ເພື່ອຂາຍ". ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫຼື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານລວມກິດຈະການ ວ່າແມ່ນ "ລາຍຮັບອື່ນໆຈາກການດຳເນີນງານ" ເມື່ອທະນາຄານລົງທຶນຫລາຍກວ່າໜຶ່ງລາຍການໂດຍນຳໃຊ້ຫລັກຊັບຄ້ຳປະກັນດຽວກັນ, ມັນຈະຖືກສະສາງອອກຕາມຫລັກການເຂົ້າກ່ອນ-ອອກກ່ອນ. ເງິນປັນຜົນທີ່ຫາມາໄດ້ໃນຊ່ວງໄລຍະການຖືຊັບສິນການເງິນມີໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານສະເພາະການກິດຈະການ ວ່າເປັນ "ລາຍຮັບອື່ນໆຈາກການດຳເນີນງານອື່ນໆ " ເມື່ອສິດຂອງການໄດ້ຮັບເງິນປັນຜົນຂອງທະນາຄານ ຖືກສ້າງຂຶ້ນ. ເມື່ອການຂາດທຶນເພີ່ມຂຶ້ນເນື່ອງຈາກການເສື່ອມມູນຄ່າຂອງການລົງທຶນດັ່ງກ່າວນັ້ນ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານລວມກິດຈະການ ວ່າເປັນ "ການຫັກຄ່າເສື່ອມການລົງທຶນທາງການເງິນ" ໂດຍປ່ຽນຈາກ "ເງິນແຮສຳລັບຫລັກຊັບມີໄວ້ເພື່ອຂາຍ".

6.2.7 ການລົງທຶນທີ່ຖືໄວ້ຈົນຄົບກຳນົດ

ການລົງທຶນທີ່ຖືໄວ້ຈົນຄົບກຳນົດແມ່ນຊັບສິນທາງການເງິນທີ່ບໍ່ແມ່ນອະນຸພັນທາງການເງິນ ເຊິ່ງມີການກຳນົດໄວ້ຢ່າງຈະແຈ້ງ ຫຼື ສາມາດກຳນົດໄດ້ໄລຍະເວລາໃນການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້ແລ້ວ, ເຊິ່ງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດ. ພາຍຫລັງການຮັບຮູ້ມູນຄ່າເບື້ອງຕົ້ນ, ການລົງທຶນປະເພດຖືໄວ້ຈົນຄົບກຳນົດຈະຖືກບັນທຶກອີງຕາມຕົ້ນທຶນ ບວກໃຫ້ ລາຍຮັບ/ລາຍຈ່າຍດອກເບ້ຍຄ້າງຮັບ ໂດຍຄິດໄລ່ຕາມອັດຕາດອກເບ້ຍຕາມສັນຍາຕາມແບບວິທີຄົງຕົວ. ການລົງທຶນປະເພດຖືໄວ້ຈົນຄົບກຳນົດ ຈະຖືກປະເມີນຄ່າເສື່ອມເປັນແຕ່ລະໄລຍະ. ຈະມີການຫັກຄ່າເສື່ອມຂອງຫລັກຊັບປະເພດນີ້ ຖ້າຫາກມູນຄ່າຍຸດຕິທຳມີການຫຼຸດລົງ ຫຼື ຫຼຸດລົງຕ່ຳກວ່າຕົ້ນທຶນຊື້ ຫຼື ໄລຍະເວລາຂອງການຫຼຸດລົງຂອງລາຄາມີລັກສະນະຍາວນານ. ຄ່າເສື່ອມທີ່ເກີດຈາກຫລັກຊັບແບບນີ້ຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານສະເພາະການກິດຈະການ ໃນພາກສ່ວນຂອງ "ລາຍຈ່າຍຈາກຂາດທຶນສິນເຊື່ອ".

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

6.2.7 ການລົງທຶນທີ່ຖືໄວ້ຈົນຄົບກຳນົດ (ຕໍ່)

ຖ້າທະນາຄານຕ້ອງການຂາຍ ຫຼື ຈັດປະເພດການລົງທຶນທີ່ຖືໄວ້ຈົນຄົບກຳນົດໃໝ່ກ່ອນມື້ຄົບກຳນົດ (ນອກເໜືອຈາກມີເຫດການໃດໜຶ່ງສະເພາະ), ລາຍການຄັງຫລັກຊັບທີ່ຖືກຈັດເປັນປະເພດ ຖືໄວ້ຈົນຄົບກຳນົດທັງໝົດຈະຖືກປ່ຽນແປງ ແລະ ຈະຕ້ອງຖືກຈັດປະເພດຄືນໃໝ່ເປັນ ຫລັກຊັບມີໄວ້ເພື່ອຂາຍ. ນອກຈາກນີ້, ທະນາຄານຈະຖືກຫ້າມບໍ່ໃຫ້ຈັດປະເພດຊັບສິນການເງິນໃດໆໃຫ້ເປັນຊັບສິນການເງິນທີ່ຖືໄວ້ຈົນຄົບພາຍໃນ 2 ປີ.

6.2.8 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ

ໜີ້ຕ້ອງຮັບຈາກທະນາຄານອື່ນ' ແລະ 'ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ', ລວມມີຊັບສິນການເງິນທີ່ບໍ່ແມ່ນອະນຸພັນທີ່ມີໄລຍະເວລາ ຫຼື ສາມາດກຳນົດໄລຍະເວລາການຊຳລະທີ່ແນ່ນອນ ເຊິ່ງລາຄາຊັບສິນເຫຼົ່ານັ້ນບໍ່ໄດ້ມີການຊື້-ຂາຍໃນຕະຫຼາດ, ນອກເໜືອຈາກ:

- ທະນາຄານມີຄວາມຕັ້ງໃຈທີ່ຈະຂາຍທັນທີ ຫຼື ທະນາຄານສາມາດຂາຍໄດ້ໃນໄລຍະສັ້ນ ແລະ ນັ້ນກໍ່ຂຶ້ນຢູ່ກັບການຮັບຮູ້ເບື້ອງຕົ້ນ, ກຳນົດຕາມມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ;
- ທະນາຄານຮັບຮູ້ມູນຄ່າເບື້ອງຕົ້ນ ແລະ ກຳນົດມູນຄ່າຂາຍ;
- ທະນາຄານອາດຈະບໍ່ໄດ້ກຳໄລຈາກການລົງທຶນທັງໝົດ ເນື່ອງຈາກການເສື່ອມຄ່າຂອງຊັບສິນ.

ຫຼັງຈາກການປະເມີນເບື້ອງຕົ້ນ, ເງິນຝາກກັບທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ຈະຖືກບັນທຶກລົງບັນຊີນຳໃຊ້ ອັດຕາດອກເບ້ຍທີ່ແທ້ຈິງ (ອັດຕາດອກເບ້ຍທີ່ແທ້ຈິງ "EIR") ລິບໃຫ້ລາຍຈ່າຍຄ່າເສື່ອມ. ຄ່າເສື່ອມຖືກຄິດໄລ່ໂດຍຄຳນຶງເຖິງສ່ວນຫຼຸດຂອງຊັບສິນທີ່ໄດ້ມາ ແລະ ຄ່າທຳນຽມ ແລະ ຕົ້ນທຶນທີ່ເປັນ ສ່ວນໜຶ່ງຂອງອັດຕາດອກເບ້ຍຕົວຈິງ. ເພາະສະນັ້ນ, ທະນາຄານໄດ້ຮັບຮູ້ລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາຜົນຕອບແທນເຊິ່ງເປັນອັດຕາການຄາດຄະເນທີ່ດີທີ່ສຸດຂອງອັດຕາຜົນຕອບແທນຄົງທີ່ຕາມອາຍຸເງິນກູ້, ດັ່ງນັ້ນ, ຈຶ່ງມີການຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ແຕກຕ່າງກັນໃນການຄິດໄລ່ຄ່າທຳນຽມໃນໄລຍະຕ່າງໆ ແລະ ລັກສະນະອື່ນໆຂອງວົງຈອນຊີວິດຜະລິດຕະພັນ (ການຈ່າຍລ່ວງໜ້າ, ດອກເບ້ຍ ແລະ ຄ່າບໍລິການ).

ຖ້າຫາກວ່າການຄາດຄະເນມີການປັບປຸງແກ້ໄຂ, ຈະຕ້ອງມີການບັນທຶກການດັດແກ້ເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງມູນຄ່າໃນໃບລາຍງານຖານະການເງິນ ອີງຕາມການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລາຍຮັບດອກເບ້ຍ. ຫຼັງຈາກນັ້ນ, ມູນຄ່າດັດແກ້ດັ່ງກ່າວຈະຖືກຄິດໄລ່ຄ່າເສື່ອມ ແລະ ຖືກບັນທຶກເປັນດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍໃນໃບລາຍງານຜົນການດຳເນີນງານ.

ທະນາຄານອາດຈະອອກຂໍ້ຜູກພັນເງິນກູ້ເມື່ອເງິນກູ້ຖືກຖອນ, ເງິນກູ້ດັ່ງກ່າວນັ້ນຈະຖືກຈັດປະເພດເປັນການເຄື່ອນໄຫວທີ່ມີໄວ້ເພື່ອຄ້າຂາຍເພາະວ່າຈຸດປະສົງແມ່ນຂາຍເງິນກູ້ໄລຍະສັ້ນ. ຂໍ້ຜູກພັນເຫລົ່ານີ້ຈະຖືກບັນທຶກ ແລະ ຖືກປະເມີນຕາມມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ.

ເມື່ອເງິນກູ້ຖືກຖອນ, ກໍ່ຈະຖືກຮັກສາໂດຍ ທະນາຄານ ແລະ ຈະບໍ່ຂາຍໃນໄລຍະສັ້ນ, ຂໍ້ຜູກພັນຈະຖືກບັນທຶກເມື່ອສັນຍາໄດ້ຖືກເຮັດຂຶ້ນ ແລະ ມີແນວໂນ້ມບົ່ງບອກວ່າການຂາດທຶນຈະເພີ່ມຂຶ້ນ (ຕົວຢ່າງ: ໜີ້ຕ້ອງສົ່ງໃຫ້ຄູ່ສັນຍາ).

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ (ຕໍ່)

6.2.9 ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ທຶນກູ້ຢືມ

"ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ທຶນກູ້ຢືມ" ປະກອບມີຂໍ້ຕົກລົງຕາມສັນຍາທີ່ສົ່ງຜົນເຮັດໃຫ້ທະນາຄານມີພັນທະທີ່ ຕ້ອງຈ່າຍເງິນສົດ ຫຼື ຊັບສິນການເງິນອື່ນໆໃຫ້ແກ່ເຈົ້າຂອງສັນຍາ.

ຫຼັງຈາກມີການປະເມີນເບື້ອງຕົ້ນ, 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ທຶນກູ້ຢືມ' ຈະຖືກປະເມີນອີງຕາມການຫັກມູນຄ່າເສື່ອມໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ('EIR'). ມູນຄ່າເສື່ອມຖືກຄິດໄລ່ໂດຍອີງ ຕາມສ່ວນຫລຸດ ແລະ ຄ່າ ທຳນຽມຂອງໜີ້ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງການຄິດໄລ່ອັດຕາດອກເບ້ຍຕົວຈິງ.

6.2.10 ການຈັດປະເພດຊັບສິນການເງິນຄືນໃໝ່

ເລີ່ມຈາກວັນທີ 1 ກໍລະກົດ 2008, ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ສຳລັບບັນດາຊັບສິນທາງການເງິນ ທີ່ບໍ່ ແມ່ນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ໄປເປັນ "ຊັບສິນທີ່ມີໄວ້ເພື່ອຂາຍ", "ເງິນກູ້ ແລະ ໜີ້ຕ້ອງຮັບ", ຫຼື "ຊັບສິນ ທີ່ຖືໄວ້ຈົນຄົບກຳນົດ". ນັບຈາກວັນທີດັ່ງກ່າວ, ທະນາຄານຍັງໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ ບັນດາເຄື່ອງມືການເງິນ ທີ່ ນອກເໜືອຈາກ "ເຄື່ອງມືການເງິນທີ່ມີໄວ້ເພື່ອຂາຍ" ໄປເປັນ **"ເງິນກູ້ ແລະ ໜີ້ຕ້ອງຮັບ".** ການຈັດປະເພດຄືນໃໝ່ຈະຖືກບັນ ທຶກດ້ວຍມູນຄ່າຍຸດຕິທຳໃນມື້ທີ່ຕີມູນຄ່າຄືນ, ເຊິ່ງມູນຄ່າດັ່ງກ່າວນັ້ນຈະກາຍເປັນມູນຄ່າຕົ້ນທຶນໃໝ່.

ສຳລັບຊັບສິນການເງິນທີ່ຖືກຈັດເປັນປະເພດອອກຈາກ "ຊັບສິນມີໄວ້ເພື່ອຂາຍ", ທຸກໆກຳໄລ ແລະ ຂາດທຶນທີ່ເກີດຈາກຊັບ ສິນດັ່ງກ່າວໃນໄລຍະຜ່ານມາທີ່ໄດ້ລົງບັນຊີເປັນທຶນເຈົ້າຂອງແມ່ນຖືກສະສາງໄປເປັນກຳໄລ ຫຼື ຂາດທຶນຈາກອາຍຸສັນຍາທີ່ຍັງ ເຫຼືອຂອງການລົງທຶນໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ. ທຸກໆສ່ວນຜິດຕ່ຽງລະຫວ່າງມູນຄ່າຕົ້ນທຶນໃໝ່ ແລະ ກະແສເງິນສົດ ທີ່ຄາດຄະເນໄວ້ແມ່ນຈະຖືກສະສາງອອກຕາມອາຍຸສັນຍາທີ່ຍັງເຫຼືອຂອງຊັບສິນໂດຍໃຊ້ອັດຕາດອກເບ້ຍຕົວຈິງ. ຖ້າຊັບສິນ ຖືກກຳນົດວ່າມີການເສື່ອມຄ່າມູນຄ່າທີ່ລົງບັນຊີເປັນທຶນເຈົ້າຂອງນັ້ນແມ່ນຈະຖືກນຳມາລາຍງານໃນໃບລາຍງານຜົນການ ດຳເນີນງານລວມກິດຈະການ.

ໃນບາງກໍລະນີ ທະນາຄານອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອານຸພັນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ເປັນ ປະເພດ "ເງິນກູ້ ແລະ ໜີ້ຕ້ອງຮັບ" ຖ້າການເຄື່ອນໄຫວຂອງມັນສອດຄ່ອງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະ ທະນາຄານມີ ເຈດຈຳນົງໃດໜຶ່ງ ແລະ ສາມາດຄອບຄອງຊັບສິນທາງການເງິນ ສຳລັບເປັນຊັບສິນທີ່ຍຶດໄດ້ໃນອະນາຄົດ ຫຼື ຄອບຄອງໄວ້ ຈົນຄົບກຳນົດ. ຖ້າຊັບສິນການເງິນຖືກຈັດປະເພດຄືນໃໝ່ ແລະ ຖ້າທະນາຄານໄດ້ຄາດຄະເນເງິນສົດທີ່ຈະໄດ້ ຮັບໃນອະນາຄົດເພີ່ມໃນພາຍຫລັງເນື່ອງຈາກວ່າຄວາມສາມາດທີ່ຈະໄດ້ຮັບເງິນສົດດັ່ງກ່າວເພີ່ມຂຶ້ນ, ຜົນກະທົບຂອງການເພີ່ມ ຂຶ້ນນັ້ນ ແມ່ນໄດ້ບັນທຶກເປັນການດັດແກ້ ຕາມອັດຕາດອກເບ້ຍຕົວຈິງ ຈາກມື້ທີ່ການຄາດຄະເນມີການປ່ຽນແປງ.

ການຈັດປະເພດຄືນໃໝ່ແມ່ນການເລືອກໂດຍຄະນະອຳນວຍການ ແລະ ຖືກກຳນົດເປັນເຄື່ອງມືໂດຍພື້ນຖານເຄື່ອງມື.

6. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

6.3 ການຫັກລ້າງຊັບສິນ ແລະ ໜີ້ສິນທາງການເງິນ

6.3.1 ຊັບສິນທາງການເງິນ

ຊັບສິນທາງການເງິນ (ຫຼື ສ່ວນໜຶ່ງຂອງຊັບສິນການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນທີ່ໄດ້ຫມົດອາຍຸແລ້ວ. ນອກຈາກນີ້, ທະນາຄານຍັງຢຸດຮັບຮູ້ເປັນຊັບສິນ ໃນກໍລະນີທີ່ຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ທະນາຄານຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ທະນາຄານໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດທີ່ຈະໄດ້ຮັບທັງໝົດໃນອານາຄົດໂດຍທັນທີໃຫ້ພາກສ່ວນທີສາມພາຍໃຕ້ຮູບແບບ 'ການຕິດພັນ'.

ການຕິດພັນ ເປັນການເຮັດທຸລະກຳຜ່ານທະນາຄານຖືເປັນລາຍການທີ່ເກີດຂຶ້ນ ເມື່ອທະນາຄານຖືສິດຕາມສັນຍາ ເພື່ອຮັບກະແສເງິນສົດຂອງຊັບສິນທາງການເງິນ (ຊັບສິນເດີມ), ແຕ່ຖືເປັນພາລະຜູກພັນຕາມສັນຍາທີ່ຈະຕ້ອງຈ່າຍຊຳລະເງິນສົດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ (ຜູ້ຮັບສຸດທ້າຍ), ເມື່ອມີການປະຕິບັດຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້. ນະວັນທີ 31 ທັນວາ 2016 ທະນາຄານບໍ່ມີຊັບສິນທາງການເງິນພາຍໃຕ້ຮູບແບບດັ່ງກ່າວ.

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍ່ຕໍ່ເມື່ອ:

- ທະນາຄານໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ ຫຼື
- ທະນາຄານບໍ່ໄດ້ໂອນຄວາມສ່ຽງ ແລະ ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນ ທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ

ອີງຕາມຂໍ້ມູນດ້ານເທິງ, ທະນາຄານຈະພິຈາລະນາວ່າການຄວບຄຸມ ຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອທະນາຄານໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼື ໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ທະນາຄານຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ທະນາຄານຍັງຮັບຮູ້ເປັນໜີ້ສິນໃນເຄືອ, ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ວ່າມັນຈະສະທ້ອນກະທົບຕໍ່ສິດ ແລະ ພັນທະຂອງທະນາຄານທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄ້ຳປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕ່ຳກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ທະນາຄານມີຄວາມສາມາດໃນການຊຳລະໜີ້.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.3 ການຫັກລ້າງຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

6.3.1 ຊັບສິນທາງການເງິນ (ຕໍ່)

ນອກຈາກນີ້ທະນາຄານຍັງຢຸດຮັບຮູ້ບັນດາຊັບສິນທາງການເງິນໂດຍສະເພາະການໃຫ້ກູ້ຢືມແກ່ລູກຄ້າ ເມື່ອເງື່ອນໄຂ ແລະ ຂໍ້ຕົກລົງສ່ວນໃຫຍ່ໄດ້ມີການເຈລະຈາກັນໃໝ່ ແລະ ຖືກພິຈາລະນາເປັນກູ້ຢືມໃໝ່, ສ່ວນຜົດຕ່າງຈະຖືກບັນທຶກເປັນຄ່າເສື່ອມໃນໃບລາຍງານຜົນການດຳເນີນງານ.

6.3.2 ໜີ້ສິນທາງການເງິນ

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕໍ່ກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່, ແລະ ສ່ວນຜົດຕ່າງ ຂອງຍອດຍົກມາຈະຖືກລາຍງານໃນໃບລາຍງານຜົນການດຳເນີນງານ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

6.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ

ທະນາຄານປະເມີນໃນມື້ເຮັດໃບລາຍງາຍຖານະການເງິນວ່າມີຫລັກຖານຊັດເຈນທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນມີການເສື່ອມມູນຄ່າ ຫຼື ບໍ່. ຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນຈະຖືວ່າມີຄວາມເສຍຫາຍຖ້າພຽງແຕ່ວ່າມີ ຫລັກຖານຊັດເຈນຂອງຄວາມເສຍຫາຍຈາກຜົນຂອງໜຶ່ງ ຫຼື ຫລາຍເຫດການທີ່ປະກົດຂຶ້ນຫລັງຈາກ ມີການຮັບຮູ້ຊັບສິນ (ເກີດມີ "ເຫດການເສຍຫາຍ") ແລະ ເຫດການເສຍຫາຍໜຶ່ງ (ຫຼື ຫລາຍເຫດການ) ໄດ້ສົ່ງຜົນກະທົບ ເຖິງການຄາດຄະເນກະແສເງິນສົດໃນອະນາຄົດ ຂອງຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ຢ່າງໜ້າເຊື່ອຖື.

ຫລັກຖານຂອງການເສື່ອມມູນຄ່າອາດລວມມີ: ຕົວຊີ້ວັດວ່າຜູ້ກູ້ຢືມ ຫຼື ກຸ່ມຂອງຜູ້ກູ້ຢືມແມ່ນມີຄວາມຫຍຸ້ງຍາກທາງດ້ານການເງິນ, ການຜິດສັນຍາ ຫຼື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າພວກ ເຂົາຈະລົ້ມລະລາຍ ຫຼື ການປັບປຸງລະບົບ ການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດ ຫລຸດລົງ ເຊັ່ນ: ການປ່ຽນແປງໜີ້ ເກີນກຳນົດ ຫຼື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

6.4.1 ຊັບສິນທາງການເງິນທີ່ຮັບຮູ້ຕາມມູນຄ່າຕັດຈຳໜ່າຍ

ຂາດທຶນການເສື່ອມມູນຄ່າສະເພາະ

ສຳລັບຊັບສິນທາງການເງິນທີ່ບັນທຶກຕາມມູນຄ່າສຸດທິຫລັງຫັກຄ່າເສື່ອມມູນຄ່າ (ເຊັ່ນ: ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ທຶນກູ້ຢືມ ແລະ ການກູ້ຢືມອື່ນໆ), ທະນາຄານຈະປະເມີນຫຼັກຖານຂອງການເສື່ອມມູນຄ່າຂອງຊັບສິນທາງການເງິນວ່າມີຫລັກຖານການເສື່ອມຄ່າຂອງຊັບສິນການເງິນນັ້ນສຳຄັນ ຫຼື ບໍ່ເພື່ອພິຈາລະນາສະເພາະໂດຍຜູ້ບໍລິຫານ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

6.4.1 ຊັບສິນທາງການເງິນທີ່ຮັບຮູ້ຕາມມູນຄ່າຕັດຈຳໜ່າຍ (ຕໍ່)

ຖ້າຫາກມີຫລັກຖານວ່າຄ່າເສື່ອມເກີດຂຶ້ນ, ຈຳນວນຄ່າເສື່ອມຈະຖືກຕີມູນຄ່າເປັນສ່ວນຕ່າງລະຫວ່າງຍອດຍົກມາຂອງຊັບ ສິນ ແລະ ຍອດເຫຼືອປັດຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເສື່ອມທີ່ອາດຈະເກີດຂຶ້ນ ໃນອະນາຄົດ). ຍອດຍົກມາ ຂອງຊັບສິນແມ່ນຫລຸດລົງ ຍ້ອນນຳໃຊ້ບັນຊີຄ່າເສື່ອມ ແລະ ຈຳນວນຄ່າເສື່ອມທີ່ລາຍງານໃນໃບລາຍງານຜົນການດຳເນີນງານ. ລາຍຮັບດອກເບ້ຍຈະຖືກສືບຕໍ່ຄິດໄລ່ຕາມຍອດຍົກມາທີ່ຫລຸດລົງ ແລະ ຖືກຄິດໄລ່ໂດຍນຳ ໃຊ້ອັດຕາດອກເບ້ຍກະແສເງິນສົດ ໃນອະນາຄົດ ເພື່ອປະເມີນຄ່າເສື່ອມ. ລາຍຮັບດອກເບ້ຍຖືກລົງບັນຊີໃນ "ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ".

ເງິນກູ້ພ້ອມກັບລາຍຈ່າຍທີ່ຕິດພັນຈະຖືກສະສາງອອກ ເມື່ອທະນາຄານໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອ ຫລັກຊັບຄ້ຳ ປະກັນຖືກໂອນໃຫ້ທະນາຄານ. ຖ້າໃນປີຕໍ່ມາ, ຄ່າເສື່ອມໜີ້ເສຍຈະເພີ່ມຂຶ້ນ ຫຼື ຫລຸດລົງຍ້ອນວ່າມີເຫດການ ເກີດ ຂຶ້ນຫລັງຈາກໄດ້ ຫັກຄ່າເສື່ອມ, ຄ່າເສື່ອມໜີ້ເສຍທີ່ຖືກຫັກໄວ້ກ່ອນໜ້ານີ້ຈະເພີ່ມຂຶ້ນ ຫຼື ຫລຸດລົງໂດຍການດັດແກ້ ໃນບັນຊີລາຍ ຈ່າຍ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້ ມູນຄ່າທີ່ເກັບຄືນໄດ້ນັ້ນຈະຖືກລົງບັນຊີເບື້ອງມີໃນ "ລາຍຮັບ".

ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ ແມ່ນມູນຄ່າໃນປັດຈຸບັນຕາມອັດຕາດອກເບ້ຍຕົວຈິງຂອງ ຊັບ ສິນການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫລຸດສຳລັບການຕີມູນຄ່າຂອງ ຄ່າເສື່ອມມູນຄ່າແມ່ນອັດ ຕາ ດອກເບ້ຍຕົວຈິງໃນປັດຈຸບັນ. ຖ້າທະນາຄານໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາສ່ວນ ຫລຸດ ສຳລັບຄິດໄລ່ຄ່າເສື່ອມແມ່ນ ຕ້ອງນຳໃຊ້ອັດຕາດອກເບ້ຍຕົວຈິງໃນປັດຈຸບັນ.

ການຄິດໄລ່ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດ ທີ່ຄາດຄະເນໄວ້ຂອງຫລັກຊັບຄ້ຳປະກັນ ມີຜົນກະທົບຕໍ່ກະແສ ເງິນສົດ ອາດເປັນຜົນມາຈາກຫລັກ ຊັບຄ້ຳປະກັນທີ່ຍຶດມາໄດ້ລຶບໃຫ້ຕົ້ນທຶນຂອງຫລັກຊັບຄ້ຳປະກັນທີ່ໄດ້ຮັບ ແລະ ຂາຍ ບໍ່ ວ່າການຍຶດຫລັກຊັບຈະເປັນໄປໄດ້ ຫຼື ບໍ່ກໍ່ຕາມ.

ຮູບແບບການເສື່ອມມູນຄ່າເປັນກຸ່ມ

ເພື່ອຈຸດປະສົງໃນການປະເມີນຄ່າເສື່ອມເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມ ຕາມລັກສະນະຄວາມ ສ່ຽງທີ່ຄ້າຍ ຄື ກັນ ເຊິ່ງເປັນຕົວຊີ້ວັດຄວາມສາມາດຂອງລູກໜີ້ໃນການຈ່າຍເງິນຈຳນວນທັງໝົດອີງຕາມເງື່ອນໄຂໃນສັນຍາ (ຕົວຢ່າງເຊັ່ນ, ອີງ ຕາມພື້ນຖານຂອງການປະເມີນຜົນຄວາມສ່ຽງການປ່ອຍສິນເຊື່ອ ຫຼື ການໃຫ້ຄະແນນໂດຍພິຈາລະນາຈາກ ປະເພດຊັບສິນ, ປະເພດອຸດສາຫະກຳ, ສະຖານທີ່ຕັ້ງພູມສາດ, ປະເພດຂອງຫຼັກຊັບຄ້ຳປະກັນ, ສະຖານະພາບທີ່ຜ່ານມາ ແລະ ປັດໄຈອື່ນໆທີ່ ກ່ຽວຂ້ອງ).

ກະແສເງິນສົດໃນອານາຄົດຂອງກຸ່ມຊັບສິນການເງິນທີ່ມີການຫັກຄ່າເສື່ອມມູນຄ່າເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານ ການເສື່ອມຄ່າຜ່ານມາຂອງຊັບສິນທີ່ມີລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ການເສື່ອມຄ່າຜ່ານມາຖືກດັດແກ້ ບົນ ພື້ນຖານຂໍ້ມູນທີ່ມີໃນປັດຈຸບັນ ເພື່ອສ່ອງແສງເຖິງຜົນກະທົບຂອງເງື່ອນໄຂໃນປັດຈຸບັນ ເຊິ່ງການເສື່ອມຄ່າຜ່ານມາແມ່ນ ເປັນ ບ່ອນອີງ ແລະ ເພື່ອຍ້າຍຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາ ທີ່ບໍ່ສົ່ງຜົນກະທົບໃນປັດຈຸບັນ.

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບ ການປ່ຽນແປງ ຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງອັດຕາການວ່າງງານ, ລາຄາຊັບສິນ, ລາຄາ ສິນຄ້າ, ເງື່ອນໄຂການຊຳລະ, ຫຼື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສຳຄັນຂອງການ ຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ນຳໃຊ້ ໃນການຄາດຄະເນກະແສເງິນສົດໃນອະນາຄົດ ໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫລຸດສ່ວນຜິດດ່ຽງລະຫວ່າງຂາດທຶນທີ່ ຄາດຄະເນ ແລະ ຂາດທຶນຕົວຈິງ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

6.4.2 ການເສື່ອມມູນຄ່າຂອງການລົງທຶນທາງການເງິນມີໄວ້ເພື່ອຂາຍ

ທະນາຄານຍັງໄດ້ບັນທຶກຄ່າເສື່ອມມູນຄ່າຕໍ່ການລົງທຶນທີ່ມີໄວ້ເພື່ອຂາຍ ເມື່ອເກີດການຫຼຸດລົງທີ່ສຳຄັນ ຫຼື ການຫຼຸດລົງ ໃນມູນຄ່າຍຸດຕິທຳທີ່ຕ່ຳກວ່າຕົ້ນທຶນ ຂໍ້ກຳນົດທີ່ "ສຳຄັນ" ຫຼື "ຍາວນານ" ຕ້ອງຖືກພິຈາລະນາ, ການພິຈາລະນາດັ່ງກ່າວນີ້ ທະນາຄານປະເມີນລະຫວ່າງຫຼາຍປັດໄຈ ແລະ ການເໜັງຕີງຂອງລາຄາຮຸ້ນ ແລະ ໄລຍະເວລາ ແລະ ກຳນົດຂອບເຂດຂອງມູນຄ່າຍຸດຕິທຳທີ່ຕ່ຳກວ່າຕົ້ນທຶນ.

6.4.3 ການປະເມີນມູນຄ່າຫຼັກຊັບຄ้ຳປະກັນ

ທະນາຄານຊອກຫາວິທີທີ່ຈະນຳໃຊ້ຫລັກຊັບຄ้ຳປະກັນ, ຖ້າເປັນໄປໄດ້, ເພື່ອຫລຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫລັກຊັບຄ้ຳປະກັນອາດເປັນໄດ້ຫລາຍຮູບແບບ ເຊັ່ນ ເງິນສົດ, ຫລັກຊັບ, ໜັງສືສິນເຊື່ອ/ໜັງສືຄ้ຳປະກັນ, ອະສັງຫາລິມະ ຊັບ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຕົກລົງທີ່ຮັດກຸມ. ໂດຍທົ່ວໄປ, ມູນຄ່າຍຸດຕິທຳຂອງຫລັກຊັບຄ้ຳປະກັນແມ່ນຖືກປະເມີນໃນມູນຄ່າຕ່ຳສຸດໃນມື້ເລີ່ມຕົ້ນ ແລະ ຕາມບົດລາຍງານປະຈຳປີຂອງທະນາຄານ.

ເພື່ອກຳນົດຂອບເຂດທີ່ຄວນເປັນໄປໄດ້ ທະນາຄານໄດ້ນຳໃຊ້ຂໍ້ມູນຕາມທ້ອງຕະຫຼາດສຳລັບປະເມີນຊັບສິນການເງິນ ທີ່ໃຊ້ເປັນຫລັກຊັບຄ้ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ່າຕາມທ້ອງຕະຫຼາດ ຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫລັກຊັບຄ้ຳປະກັນທີ່ບໍ່ແມ່ນທາງການເງິນ, ເຊັ່ນ ອະສັງຫາລິມະຊັບ ຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກ ເຊັ່ນ ນາຍໜ້າ, ດັດສະນີ ລາຄາທີ່ພັກອາໄສ, ບົດລາຍງານການ ເງິນທີ່ຖືກກວດສອບແລ້ວ ແລະ ແຫລ່ງຂໍ້ມູນທີ່ໜ້າເຊື່ອຖືອື່ນໆ.

6.4.4 ຫຼັກຊັບຄ้ຳປະກັນທີ່ຖືກຍຶດ

ນະໂຍບາຍທະນາຄານແມ່ນກຳນົດວ່າຊັບສິນທີ່ຍຶດມາສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງທະນາຄານຫຼື ຄວນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນຊັບສິນຕາມແຕ່ລະປະເພດທີ່ກ່ຽວຂ້ອງ ເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາ ຫຼື ຍອດຍົກມາຂອງຊັບສິນທີ່ຖືກຄ้ຳປະກັນ. ຊັບສິນທີ່ຖືກກຳນົດວ່າຈະຂາຍອອກຈະຖືກໂອນເປັນຊັບສິນມີໄວ້ສຳລັບຂາຍ ແລະ ຖືກຕີມູນຄ່າຕາມມູນຄ່າຕົວຈິງນະມື້ທີ່ຍຶດຊັບສິນໂດຍສອດຄ່ອງກັບນະໂຍບາຍຂອງທະນາຄານ.

6.5 ການຫັກລ້າງເຄື່ອງມືທາງການເງິນ

ຊັບສິນ ແລະ ໜີ້ສິນທາງການເງິນແມ່ນຖືກຫັກລ້າງກັນ ແລະ ມູນຄ່າສຸດທິຈະຖືກລາຍງານໃນໃບລາຍງານຖານະການເງິນ, ຖ້າຫາກວ່າທະນາຄານຖືກບັງຄັບທາງກົດໝາຍໃຫ້ສະສາງຈຳນວນເງິນດັ່ງກ່າວນັ້ນ ແລະ ທະນາຄານຕັ້ງໃຈຈະສະສາງໃນມູນຄ່າສຸດທິ ຫຼື ຂາຍຊັບສິນເພື່ອຊຳລະໜີ້ສິນໃນເວລາດຽວກັນ. ນີ້ບໍ່ແມ່ນກໍລະນີທົ່ວໄປໃນຂໍ້ຕົກລົງວ່າດ້ວຍການຫັກລ້າງລະຫວ່າງ ຊັບສິນ - ໜີ້ສິນ ແລະ ຊັບສິນ-ໜີ້ສິນທີ່ກ່ຽວຂ້ອງໄດ້ຖືກສະແດງມູນຄ່າລວມໃນໃບລາຍງານຖານະການເງິນ ລວມກິດຈະການ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.6 ການລົງທຶນໃນບໍລິສັດຮ່ວມທຶນ

ທະນາຄານແມ່ນມີລາຍຮັບຈາກບໍລິສັດຮ່ວມທຶນ ເຊິ່ງແມ່ນຫົວໜ່ວຍທຸລະກິດທີ່ມີການຄວບຄຸມຮ່ວມກັນ, ດັ່ງນັ້ນ ການຮ່ວມທຶນແມ່ນໄດ້ມີຂໍ້ຕົກລົງກັນ ກຳນົດການຄວບຄຸມຮ່ວມກັນໃນການເຄື່ອນໄຫວທຸລະກິດ. ຂໍ້ຕົກລົງໄດ້ຕົກລົງເປັນເອກະສັນກັນ ສຳລັບຂໍ້ຕົກລົງທາງດ້ານການເງິນ ແລະ ການດຳເນີນງານໃນການຮ່ວມທຶນ.

ທະນາຄານ ຮັບຮູ້ລາຍຮັບຈາກບໍລິສັດຮ່ວມທຶນ ຕາມຮູບແບບວິທີສ່ວນໄດ້ສ່ວນເສຍ. ພາຍໃຕ້ຮູບແບບນີ້, ການລົງທຶນໃນບໍລິສັດຮ່ວມທຶນ ແມ່ນຖືກບັນທຶກຕາມຕົ້ນທຶນໃນເບື້ອງຕົ້ນ ຢູ່ໃນໃບລາຍງານຖານະການເງິນລວມກິດຈະການ ບວກກັບ ລາຍການດັດແກ້ເປັນ "ຊັບສິນສຸດທິ ຕາມສັດສ່ວນຂອງການລົງທຶນກັບບໍລິສັດຮ່ວມທຶນ ຕາມພາຍຫລັງ. ຄ່ານິຍົມຕາມສັດສ່ວນຂອງການລົງທຶນໃນບໍລິສັດຮ່ວມທຶນ ແມ່ນຖືກຮັບຮູ້ເປັນມູນຄ່າຊາກ ລວມຢູ່ໃນຍອດຍົກມາ ຂອງເງິນລົງທຶນ ແລະ ບໍ່ຫັກຄ່າເສື່ອມ.

ສ່ວນແບ່ງກຳໄລຂອງທະນາຄານຈາກບໍລິສັດຮ່ວມທຶນ ແມ່ນໄດ້ສະແດງໃຫ້ເຫັນຢູ່ໃນໃບລາຍງານການດຳເນີນງານລວມກິດຈະການ. ນີ້ແມ່ນກຳໄລທີ່ປະກອບເປັນທຶນຂອງຜູ້ຖືຮຸ້ນໃນບໍລິສັດຮ່ວມທຶນ ແລະ ແມ່ນກຳໄລຫຼັງອາກອນ ແລະ ເປັນລາຍຮັບທີ່ບໍ່ສາມາດຄວບຄຸມໄດ້ການລົງທຶນໃນບໍລິສັດຮ່ວມທຶນ.

ຫລັງຈາກນຳໃຊ້ຮູບແບບການລົງທຶນແລ້ວ ທະນາຄານຈະພິຈາລະນາວ່າ ຈຳເປັນຕ້ອງຮັບຮູ້ຄ່າເສື່ອມເພີ່ມເຕີມ ຂອງການລົງທຶນໃນບໍລິສັດຮ່ວມທຶນ ຫລື ບໍ່. ທະນາຄານຈະພິຈາລະນາໃນມື້ທີ່ສ້າງເອກະສານລາຍງານ ວ່າມີຫລັກຖານ ການເສື່ອມຄ່າຂອງການລົງທຶນ ໃນບໍລິສັດຮ່ວມທຶນ ຫລື ບໍ່. ໃນສະຖານະການດັ່ງກ່າວ ທະນາຄານຈະຄິດໄລ່ຄ່າເສື່ອມມູນຄ່າ ເປັນສ່ວນຕ່າງລະຫວ່າງ ຈຳນວນເງິນທີ່ເກັບຄືນໄດ້ ແລະ ຍອດຍົກມາຂອງການລົງທຶນໃນບໍລິສັດຮ່ວມທຶນ ແລະ ຮັບຮູ້ສ່ວນຜິດດ່ຽງຢູ່ໃນໃບລາຍງານການດຳເນີນງານລວມກິດຈະການ.

6.7 ການເຊົ່າຊື້

ການພິຈາລະນາວ່າມີຂໍ້ຕົກລົງໃດທີ່ເປັນການເຊົ່າຊື້ ຫລື ລວມຢູ່ໃນການເຊົ່າຊື້ ຫລື ບໍ່ ແມ່ນຂຶ້ນຢູ່ກັບການຕົກລົງ ແລະ ຕ້ອງກຳນົດການປະເມີນວ່າ ການປະຕິບັດຂໍ້ຕົກລົງແມ່ນຂຶ້ນຢູ່ກັບການນຳໃຊ້ຊັບສິນສະເພາະ ຫລື ຊັບສິນ ແລະ ຂໍ້ຕົກລົງໃນການໂອນກຳມະສິດນຳໃຊ້ຊັບສິນ.

ທະນາຄານເປັນຜູ້ເຊົ່າ

ການເຊົ່າຊື້ທີ່ບໍ່ໄດ້ໂອນທຸກຄວາມສ່ຽງໃຫ້ທະນາຄານ ແລະ ຜົນປະໂຫຍດທີ່ເກີດຂຶ້ນໂດຍບັງເອີນຕໍ່ກຳມະສິດຂອງ ລາຍການເຊົ່າຊື້ ແມ່ນການເຊົ່າໃນການດຳເນີນງານ. ການຈ່າຍຄ່າເຊົ່າຊື້ໃນການດຳເນີນງານແມ່ນຖືກບັນທຶກເປັນ ລາຍຈ່າຍຢູ່ໃນໃບລາຍງານການດຳເນີນງານດ້ວຍວິທີສະເໜີຕົວ ຕໍ່ກັບໄລຍະຂອງການເຊົ່າຊື້. ໜີ້ຕ້ອງສິ່ງໃນການເຊົ່າຊື້ທີ່ອາດເກີດຂຶ້ນແມ່ນຖືກບັນທຶກເປັນລາຍຈ່າຍຢູ່ໃນໄລຍະທີ່ມີການເຄື່ອນໄຫວເກີດຂຶ້ນ.

6.8 ການຮັບຮູ້ລາຍຮັບ ແລະ ຄ່າໃຊ້ຈ່າຍ

ລາຍຮັບແມ່ນໄດ້ຖືກຮັບຮູ້ໃນຂອບເຂດຂອງຄວາມເປັນໄປໄດ້ທີ່ວ່າຜົນປະໂຫຍດໃນທາງເສດຖະກິດຈະໄຫຼເຂົ້າທະນາຄານ ແລະ ລາຍຮັບເຫຼົ່ານັ້ນຈະຖືກຕີມູນຄ່າຢ່າງເຊື່ອຖືໄດ້. ຫລັກການການຮັບຮູ້ສະເພາະດັ່ງຕໍ່ໄປນີ້ຈະຕ້ອງຖືກປະເມີນກ່ອນລາຍຮັບຈະຖືກຮັບຮູ້.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.8 ການຮັບຮູ້ລາຍຮັບ ແລະ ຄ່າໃຊ້ຈ່າຍ (ຕໍ່)

6.8.1 ດອກເບ້ຍ ແລະ ລາຍຮັບຄ້າຍຄືດອກເບ້ຍ ແລະ ລາຍຈ່າຍ

ສຳລັບທຸກໆເຄື່ອງມືທາງການເງິນທີ່ຖືກຕີມູນຄ່າຕາມລາຄາຄ່າເສື່ອມຕົ້ນທຶນ ແລະ ຊັບສິນທາງການເງິນທີ່ມີດອກເບ້ຍ ໄດ້ຈັດປະເພດເປັນ ຊັບສິນທີ່ມີໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນໄດ້ກຳນົດຕາມມູນຄ່າຍຸດຕິທຳ ໂດຍຜ່ານກຳໄລ ແລະ ຂາດທຶນ, ລາຍຮັບ ຫຼື ລາຍຈ່າຍດອກເບ້ຍ ແມ່ນຖືກບັນທຶກໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ເຊິ່ງແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊຳລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງ ຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ການຄິດໄລ່ແມ່ນຄຳນຶງເຖິງທຸກໆຂໍ້ກຳນົດໃນສັນຍາຂອງເຄື່ອງມືການເງິນ (ເຊັ່ນວ່າ: ທາງເລືອກໃນການຊຳລະລ່ວງໜ້າ) ລວມທັງທຸກໆຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍບໍລິຫານທີ່ກ່ຽວພັນກັບເຄື່ອງມື ແລະ ເຊິ່ງເປັນສ່ວນປະກອບຂອງອັດຕາດອກເບ້ຍທີ່ແທ້ຈິງ, ແຕ່ບໍ່ແມ່ນຂາດທຶນສິນເຊື່ອໃນອະນາຄົດ.

ເມື່ອມູນຄ່າຕາມບັນຊີຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນທີ່ຄ້າຍຄືກັນຖືກຫຼຸດລົງໂດຍການຫັກຄ່າເສື່ອມມູນຄ່າ, ລາຍຮັບດອກເບ້ຍຈະຖືກຮັບຮູ້ໂດຍການນຳໃຊ້ອັດຕາດອກເບ້ຍທີ່ໃຊ້ໃນການຄິດໄລ່ກະແສເງິນສົດໃນອະນາຄົດສຳລັບເພື່ອຈຸດປະສົງຂອງການວັດຄ່າເສື່ອມ.

6.8.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

ທະນາຄານມີລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຈາກການໃຫ້ບໍລິການຫລາຍຮູບແບບແກ່ລູກຄ້າ. ລາຍຮັບຈາກຄ່າທຳນຽມສາມາດແບ່ງເປັນສອງປະເພດຄືດັ່ງລຸ່ມນີ້:

ລາຍຮັບຄ່າທຳນຽມຈາກການບໍລິການໃນໄລຍະເວລາໃດໜຶ່ງທີ່ແນ່ນອນ

ຄ່າທຳນຽມທີ່ໄດ້ຈາກການບໍລິການໃນໄລຍະເວລາໃດໜຶ່ງ ແມ່ນເປັນລາຍຮັບຄ້າງຮັບສຳລັບໃນເວລານັ້ນໆ. ຄ່າທຳນຽມດັ່ງກ່າວລວມມີຄ່າບໍລິການ ແລະ ຄ່າຄຸ້ມຄອງຊັບສິນ, ຄ່າຮັກສາ ແລະ ຄ່າຄຸ້ມຄອງອື່ນໆ ແລະ ຄ່າໃຫ້ຄຳແນະນຳ.

ລາຍຮັບຄ່າທຳນຽມທີ່ເປັນສ່ວນໜຶ່ງຂອງເຄື່ອງມືທາງການເງິນທີ່ກ່ຽວຂ້ອງ

ຄ່າທຳນຽມທີ່ທະນາຄານພິຈາລະນາວ່າເປັນສ່ວນໜຶ່ງຂອງການນຳໃຊ້ເຄື່ອງມືທາງການເງິນທີ່ສອດຄ່ອງກັນໄດ້ແກ່: ຄ່າທຳນຽມການກູ້ຢືມເງິນໃນເບື້ອງຕົ້ນ, ຄ່າທຳນຽມສັນຍາການກູ້ຢືມເງິນສຳລັບເງິນກູ້ຢືມທີ່ມີແນວໂນ້ມທີ່ຈະໄດ້ຮັບການເບີກຖອນ ແລະ ຄ່າທຳນຽມສິນເຊື່ອອື່ນໆທີ່ກ່ຽວຂ້ອງ. ການຮັບຮູ້ຂອງຄ່າທຳນຽມເຫຼົ່ານີ້ (ລວມມີຄ່າໃຊ້ຈ່າຍບໍລິຫານ) ເປັນສ່ວນຫນຶ່ງຂອງການນຳໃຊ້ເຄື່ອງມືທາງການເງິນທີ່ສອດຄ່ອງກັນ ແລະ ຖືກຮັບຮູ້ເປັນລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາ EIR (ທີ່ກຳນົດໄວ້ໃນຂໍ້ 5.2.3 ຂ້າງເທິງ). ໃນກໍລະນີທີ່ບໍ່ສາມາດເບີກໃຊ້ວົງເງິນກູ້ໄດ້ທັງໝົດ, ຄ່າທຳນຽມສັນຍາຈະຖືກຮັບຮູ້ເປັນລາຍຮັບໄດ້ເມື່ອໝົດອາຍຸພັນທະຜູກພັນທາງການເງິນ. ຄ່າທຳນຽມສັນຍາທີ່ຢູ່ພາຍໃນຂອບເຂດຂອງ IAS 39 (ເຊິ່ງກຳນົດເປັນ FVPL ຫຼື ຄິດອັດຕາດອກເບ້ຍໃນຕະຫຼາດທີ່ເປັນອັດຕາດອກເບ້ຍຕ່ຳກວ່າ ຫຼື ມີການຊຳລະຕາມບັນຊີສຸດທິ) ຖືກຮັບຮູ້ເປັນອະນຸພັນ ຕາມມູນຄ່າຍຸຕິທຳໂດຍຜ່ານການກຳໄລ ຫຼື ຂາດທຶນ.

ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນແມ່ນຖືກຮັບຮູ້ເມື່ອທະນາຄານຖືກປະກາດສິດໃນການຮັບການຊຳລະ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.8 ການຮັບຮູ້ລາຍຮັບ ແລະ ຄ່າໃຊ້ຈ່າຍ (ຕໍ່)

6.8.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ (ຕໍ່)

ລາຍຮັບສຸດທິຈາກການຄ້າ

ຜົນທີ່ເກີດຂຶ້ນຈາກກິດຈະກຳການຊື້ຂາຍລວມເຖິງກຳໄລ ແລະ ຂາດທຶນ ຈາກການປ່ຽນແປງມູນຄ່າຍຸດຕິທຳ ແລະ ລາຍຮັບດອກເບ້ຍ ຫຼື ລາຍຈ່າຍທີ່ກ່ຽວຂ້ອງ ແລະ ເງິນປັນຜົນ ສຳລັບຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນ "ມີໄວ້ເພື່ອຄ້າ" ເຊິ່ງລວມເຖິງ ສິ່ງທີ່ບໍ່ມີປະສິດທິພາບທີ່ໄດ້ບັນທຶກໄວ້ໃນທຸລະກຳຄວາມສ່ຽງ.

6.9 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດດັ່ງທີ່ໄດ້ອ້າງອີງຢູ່ໃນໃບລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນກຳມື, ເງິນຝາກກະແສລາຍວັນກັບທະນາຄານແຫ່ງ ສປປ ລາວ ແລະ ໜີ້ຕ້ອງຮັບຈາກທະນາຄານເຊິ່ງເປັນປະເພດກະແສລາຍວັນ, ກຳນົດ 3 ເດືອນ ຫຼື ຕ່ຳກວ່ານັ້ນ.

6.10 ຊັບສິນບັດ ແລະ ອຸປະກອນ

ຊັບສິນບັດ ແລະ ອຸປະກອນ ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງຂອງອາຍຸການນຳໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີການປ່ຽນແປງຕາມການຄາດຄະເນທາງການບັນຊີ.

ຄ່າຫຼ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼ້ຍຫ້ຽນແບບສະເໝີຕົ້ວ ເພື່ອຫຼຸດຕົ້ນທຶນຂອງຊັບສິນບັດ ແລະ ອຸປະກອນ ໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງລຸ່ມນີ້:

ອາຄານ ແລະ ການປັບປຸງ	5%
ເຄື່ອງໃຊ້ຫ້ອງການ	20%
ເຟີນີເຈີ ແລະ ຕິດຕັ້ງ	20%
ພາຫະນະ	20%

ຊັບສິນບັດ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນຳໃຊ້ຊັບສິນບັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສິນບັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສິນບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບຈາກການດຳເນີນງານອື່ນໆ" ໃນໃບລາຍງານຜົນການດຳເນີນງານລວມກິດຈະການຂອງປີທີ່ຊັບສິນບັດໄດ້ຖືກສະສາງອອກ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.11 ຊັບສິນບັດຖຶງທີ່ບໍ່ມີຕົວຕົນ

ຊັບສິນບັດຖຶງທີ່ບໍ່ມີຕົວຕົນຂອງທະນາຄານປະກອບດ້ວຍ ມູນຄ່າສິດໃນການນຳໃຊ້ທີ່ດິນ ແລະ ຊອບແວ.

ຊັບສິນບັດຖຶງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ເມື່ອຕົ້ນທຶນຂອງຊັບສິນບັດຖຶງທີ່ສາມາດປະເມີນໄດ້ຢ່າງແນ່ນອນ ແລະ ມັນຈະສາມາດສ້າງຜົນປະໂຫຍດໃຫ້ແກ່ທະນາຄານໃນອະນາຄົດ.

ຊັບສິນບັດຖຶງທີ່ທະນາຄານຍຶດມາໄດ້ຈະຖືກປະເມີນມູນຄ່າຕົ້ນທຶນເບື້ອງຕົ້ນ. ຕົ້ນທຶນຂອງຊັບສິນບັດຖຶງທີ່ບໍ່ມີຕົວຕົນທີ່ໄດ້ມາຈາກການລວມທຸລະກິດຈະຖືກຮັບຮູ້ຕາມມູນຄ່າຍຸດຕິທຳໃນມື້ທີ່ໄດ້ມາ. ຕໍ່ຈາກນັ້ນ, ຊັບສິນບັດຖຶງທີ່ບໍ່ມີຕົວຕົນຈະຖືກຮັບຮູ້ໂດຍການເອົາຕົ້ນທຶນລົບໃຫ້ຄ່າເສື່ອມສະສົມ.

ອາຍຸການນຳໃຊ້ຂອງຊັບສິນທີ່ບໍ່ມີຕົວຕົນ ແມ່ນໄດ້ຖືກປະເມີນ ໂດຍຈັດເປັນ ມີກຳນົດ ແລະ ບໍ່ມີກຳນົດ. ຊັບສິນບັດຖຶງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນຖືກຫັກຄ່າເສື່ອມຕາມອາຍຸການນຳໃຊ້. ໄລຍະຂອງການຫັກຄ່າເສື່ອມ ແລະ ວິທີການຫັກຄ່າເສື່ອມສຳລັບຊັບສິນທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ກຳນົດຈະຖືກທົບທວນຄືນເປັນຢ່າງນ້ອຍສຸດໃນທ້າຍປີການບັນຊີ. ການປ່ຽນແປງອາຍຸການນຳໃຊ້ຄາດຄະເນແມ່ນຈະໄດ້ລົງບັນຊີເປັນການປ່ຽນແປງໄລຍະ ແລະ ວິທີຂອງການຫັກຄ່າເສື່ອມ , ຕາມຄວາມ ເໝາະສົມ ແລະ ຖືເປັນການປ່ຽນແປງການຄາດຄະເນໃນບັນຊີ. ລາຍຈ່າຍກ່ຽວກັບການຫັກຄ່າເສື່ອມຂອງຊັບສິນບັດຖຶງທີ່ບໍ່ມີຕົວຕົນທີ່ມີອາຍຸການນຳໃຊ້ທີ່ມີກຳນົດແມ່ນໄດ້ຖືຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນໝວດຂອງລາຍຈ່າຍທີ່ພົວພັນກັບຊັບສິນທີ່ບໍ່ມີຕົວຕົນ.

ຄ່າເສື່ອມຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າເສື່ອມແບບສະໝ່ຳສະເໝີຕົວເພື່ອຫຼຸດຕົ້ນທຶນຂອງຊັບສິນທີ່ບໍ່ມີຕົວຕົນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອັດຕາຄາດຄະເນການຫັກຄ່າເສື່ອມມີດັ່ງນີ້:

► ຊອບແວ	2 - 5 ປີ

ສິດໃນການນຳໃຊ້ທີ່ດິນຂອງທະນາຄານແມ່ນບໍ່ມີຄ່າເສື່ອມ ເນື່ອງຈາກສິດໃນການນຳໃຊ້ທີ່ດິນແມ່ນມີອາຍຸການນຳໃຊ້ແບບບໍ່ຈຳກັດ ແລະ ອອກໃຫ້ໂດຍລັດຖະບານຂອງ ສປປ ລາວ.

6.12 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ

ທະນາຄານປະເມີນນະມື້ເຮັດເອກະສານລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບ ການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ທະນາຄານປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກ ມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸດຕິທຳຂອງຊັບສິນ ຫຼື ມູນຄ່າຍຸດຕິທຳຂອງໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫລາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫລຸດລົງ ເພື່ອໃຫ້ໄດ້ມູນຄ່າປັດຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫລຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປັດຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບ ບໍລິສັດໃນເຄືອ ຫຼື ຕົວຊີ້ບອກມູນຄ່າຍຸດຕິທຳອື່ນໆ.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.12 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ (ຕໍ່)

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງປົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫລຸດລົງ. ຖ້າຫາກມີຕົວຊີ້ບອກ, ທະນາຄານຈະຄາດຄະເນຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນ ມີການປ່ຽນແປງ ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປົ້ນຄືນແມ່ນຖືກກຳນົດຂຶ້ນ ສະນັ້ນ ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດ ຍົກມາທີ່ຖືກກຳນົດລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນປີຜ່ານມາ. ການປົ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານລວມກິດຈະການ.

6.13 ການຄ້ຳປະກັນທາງການເງິນ

ໂດຍທົ່ວໄປ ທະນາຄານໄດ້ໃຫ້ການຄ້ຳປະກັນທາງການເງິນ, ປະກອບມີ ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ ແລະ ໜັງສືຕອບຮັບ. ການຄ້ຳປະກັນທາງການເງິນແມ່ນຖືກຮັບຮູ້ ໃນເອກະສານລາຍງານການເງິນລວມກິດຈະການ (ພາຍໃຕ້ 'ໜີ້ສິນອື່ນໆ') ທີ່ມູນຄ່າຍຸດຕິທຳ, ພ້ອມຄ່າທຳນຽມ. ພາຍຫຼັງການຮັບຮູ້ ໜີ້ສິນຂອງທະນາຄານພາຍໃຕ້ໜັງສືຄ້ຳປະກັນແມ່ນຄິດໄລ່ໂດຍເອົາມູນຄ່າທີ່ຮັບຮູ້ພື້ນຖານທີ່ສູງກວ່າ ລົບຄ່າເສື່ອມສະສົມທີ່ຮັບຮູ້ໃນໃບລາຍງານການເງິນ ແລະ ການຄາດຄະເນລາຍຈ່າຍທີ່ດີທີ່ສຸດທີ່ຕ້ອງຊຳລະຕາມພັນທະທີ່ເກີດຂຶ້ນຈາກໜັງສືຄ້ຳປະກັນ.

ທຸກໆການເພີ່ມຂຶ້ນຂອງໜີ້ສິນທີ່ກ່ຽວຂ້ອງກັບການຄ້ຳປະກັນທາງການເງິນແມ່ນຖືກບັນທຶກໄວ້ໃນໃບລາຍງານຜົນການດຳເນີນງານໃນ 'ລາຍຈ່າຍເງິນແຮໜີ້ເສຍ'. ຄ່າທຳນຽມແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນ 'ລາຍຮັບສຸດທິຄ່າທຳນຽມ ແລະ ຄ່າບໍລິການ' ຕາມວິທີສະເໜີຕົວຕາມອາຍຸຂອງການຄ້ຳປະກັນ.

6.14 ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດຂອງພະນັກງານຫລັງກະສຽນ

ຜົນປະໂຫຍດຫລັງອອກການ ແມ່ນຈະຖືກຈ່າຍໃຫ້ພະນັກງານທະນາຄານ ຜູ່ທີ່ກະສຽນ ໂດຍຄັງສຳຮອງເງິນບຳເນັດ ທີ່ທະນາຄານສ້າງຂຶ້ນ. ນະໂຍບາຍຂອງທະນາຄານແມ່ນຫັກຈາກເງິນເດືອນພື້ນຖານຂອງພະນັກງານທຸກໆເດືອນ ເພື່ອເກັບຮັກສາໄວ້. ປັດຈຸບັນນີ້ ແມ່ນໃຊ້ອັດຕາ 8.00% ຈາກເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ. ທະນາຄານບໍ່ມີພັນທະເພີ່ມເຕີມກ່ຽວກັບຜົນປະໂຫຍດຂອງພະນັກງານຫຼັງກະສຽນນອກເໜືອນຈາກນີ້.

ຜົນປະໂຫຍດໃນການຍົກເລີກສັນຍາຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ທະນາຄານມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ່ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດ ວຽກໄດ້;
- ກໍລະນີທະນາຄານພິຈາລະນາວ່າຈຳເປັນຕ້ອງຫລຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ.

6. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

6.14 ຜົນປະໂຫຍດຂອງພະນັກງານ (ຕໍ່)

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານ ເດືອນສຸດທ້າຍຄູນໃຫ້ຈຳນວນເດືອນທີ່ເຮັດວຽກກັບທະນາຄານ. ນະວັນທີ 31 ທັນວາ 2016, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ທະນາຄານບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນລວມກິດຈະການ

6.15 ເງິນແຮ

ເງິນແຮ ຈະຖືກຮັບຮູ້ ກໍ່ຕໍ່ເມື່ອທະນາຄານມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕີກລົງ) ເນື່ອງມາ ຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ທະນາຄານກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນການດຳເນີນງານ ພາຍຫລັງໄດ້ຮັບເງິນຄືນ.

6.16 ອາກອນກຳໄລ

ອາກອນພາຍໃນປີ

ຊັບສິນ ແລະ ໜີ້ສິນອາກອນພາຍໃນປີ ສຳລັບປີປັດຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບ ຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນສັກສິດນຳໃຊ້ໃນມື້ສ້າງໃບລາຍງານຖານະການເງິນ ພາຍໃນປະເທດທີ່ທະນາຄານດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນປີທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີທຶນແມ່ນຖືກຮັບຮູ້ໃນທຶນເຈົ້າຂອງ ແລະ ບໍ່ໄດ້ມີການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຜູ້ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

ອາກອນເຍື້ອນຊຳລະ

ອາກອນເຍື້ອນຊຳລະແມ່ນຖືກຄິດໄລ່ ຈາກສ່ວນຜິດຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ຕ້ອງສິ່ງອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ເປັນສ່ວນ ຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນເຍື້ອນຊຳລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວທີ່ບໍ່ແມ່ນການ ລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫລຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງໜີ້ ຕ້ອງຮັບອາກອນຈະ ຖືກອະນຸຍາດໃຫ້ຫັກ. ໜີ້ຕ້ອງຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

6. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

6.16 ອາກອນກຳໄລ (ຕໍ່)

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕີວຈີ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍ ສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະ ມື້ສ້າງໃບລາຍງານຖານະການເງິນ.

ອາກອນພາຍໃນປີ ແລະ ອາກອນເຍື້ອນຊຳລະຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸດຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການຜິດຕ່ຽງອັດຕາ ແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ເຊິ່ງສາມາດຄິດຄ່າທຳນຽມ ຫຼື ບັນທຶກບັນຊີເປັນ OCI. ຂໍ້ຍົກເວັ້ນເຫຼົ່ານີ້ແມ່ນ ໄດ້ຖືກຈັດປະເພດຄືນໃໝ່ ຈາກ OCI ໄປ ໃບລາຍງານຜົນການດຳເນີນງານ ໃນບັນຊີກຳໄລ ຫຼື ຂາດທຶນເຍື້ອນຊຳລະ. ທະນາຄານ ຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊຳລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງດ້ານການເງິນ ທີ່ຖືກຈັດປະເພດເປັນທຶນເຈົ້າ ຂອງ.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະແມ່ນໄດ້ຖືກຫັກລ້າງ ຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ເພື່ອຫັກລ້າງຊັບສິນ ອາກອນ ແລະ ໜີ້ສິນອາກອນ ແລະ ທະນາຄານມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

ທະນາຄານແມ່ນຫັກລ້າງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະ ເມື່ອມີທັງສິດທາງດ້ານກົດໝາຍ ແລະ ທະນາຄານມີ ຈຸດປະສົງທີ່ຈະຫັກລ້າງກັນບົນພື້ນຖານມູນຄ່າສຸດທິ.

6.17 ຊັບສິນທີ່ໄດ້ຮັບມອບໝາຍອຳນາດ (ຊັບສິນທີ່ທະນາຄານບໍ່ໄດ້ຖືກຳມະສິດ)

ທະນາຄານໄດ້ໃຫ້ບໍລິການກ່ຽວກັບກອງທຶນ ແລະ ການບໍລິການບໍລິຫານຊັບສິນ ເຊິ່ງເປັນຜົນເຮັດໃຫ້ທະນາຄານໄດ້ຖືຄອງ ຫຼື ໄດ້ ຮັບສິດໃນການລົງທຶນໃນນາມລູກຄ້າຂອງທະນາຄານ. ຊັບສິນດັ່ງກ່າວບໍ່ໄດ້ຖືກສະແດງໃນເອກະສານລາຍງານການເງິນຂອງ ທະນາຄານ, ເນື່ອງຈາກຊັບສິນເຫຼົ່ານັ້ນ ບໍ່ແມ່ນຊັບສິນຂອງທະນາຄານ.

6.18 ຄັງສຳຮອງທຶນເຈົ້າຂອງ

ຄັງສຳຮອງຖືກບັນທຶກເປັນທຶນ ໃນເອກະສານລາຍງານການເງິນລວມກິດຈະການ ຂອງທະນາຄານ, ເຊິ່ງລວມມີ:

- ຄັງສຳຮອງຕາມລະບຽບການ, ເຊິ່ງຖືກສ້າງຂຶ້ນຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ, ລາຍລະອຽດຢູ່ບົດອະທິບາຍ ຊ້ອນທ້າຍເລກທີ 32; ແລະ
- ເງິນແຮສຳລັບຫລັກຊັບມີໄວ້ເພື່ອຂາຍ, ເຊິ່ງປະກອບດ້ວຍສ່ວນປ່ຽນແປງຂອງມູນຄ່າຍຸດຕິທຳຂອງຫຼັກຊັບມີໄວ້ເພື່ອຂາຍ. ລາຍລະອຽດຢູ່ບົດອະທິບາຍຊ້ອນທ້າຍເລກທີ 33.

6.19 ມາດຕະຖານແຕ່ຍັງບໍ່ທັນບັງຄັບໃຊ້

ມາດຕະຖານ ແລະ ການຕີຄວາມໝາຍທີ່ໄດ້ວາງອອກ, ແຕ່ວ່າຍັງບໍ່ທັນມີຜົນບັງຄັບໃຊ້, ຈົນເຖິງມື້ອອກເອກະສານລາຍງານການ ເງິນລວມກິດຈະການ ຂອງທະນາຄານ ແມ່ນໄດ້ເປີດເຜີຍດັ່ງຕໍ່ໄປນີ້. ທະນາຄານຈະຮັບຮອງເອົາມາດຕະຖານເຫລົ່ານີ້, ຖ້າ ສາມາດນຳໃຊ້ໄດ້ໃນເວລາທີ່ມາດຕະຖານດັ່ງກ່າວໄດ້ມີຜົນບັງຄັບໃຊ້.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.19 ມາດຕະຖານແຕ່ຍັງບໍ່ທັນບັງຄັບໃຊ້ (ຕໍ່)

IFRS 9 ເຄື່ອງມືທາງການເງິນ

ເດືອນ ກໍລະກົດ 2014, IASB ໄດ້ອອກ IFRS 9 ເຄື່ອງມືທາງການເງິນ ສະບັບສົມບູນ ທີ່ສະແດງໃຫ້ເຫັນທຸກໆສ່ວນຂອງ ເຄື່ອງມືທາງການເງິນ ແລະ ປ່ຽນແທນ IAS 39 ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການວັດແທກ ແລະ IFRS 9 ທຸກ ສະບັບກ່ອນໜ້ານີ້. ມາດຕະຖານດັ່ງກ່າວໄດ້ນຳສະເໜີຂໍ້ກຳນົດໃໝ່ກ່ຽວກັບ ການຈັດປະເພດ ແລະ ການວັດແທກ, ຄ່າເສື່ອມ , ແລະ ການບັນຊີປ້ອງກັນຄວາມສ່ຽງ. IFRS 9 ແມ່ນຈະຖືກບັງຄັບໃຊ້ສຳລັບປີທີ່ເລີ່ມນະວັນທີ ຫຼື ຫຼັງຈາກວັນທີ 1 ມັງກອນ 2018 ພ້ອມກັບອະນຸຍາດໃຫ້ສາມາດນຳໃຊ້ກ່ອນໄດ້. ມີຂໍ້ກຳນົດໃຊ້ຄືນຫຼັງ ແຕ່ຂໍ້ມູນສົມທຽບແມ່ນບໍ່ໄດ້ບັງຄັບ. ການນຳໃຊ້ IFRS 9 ຈະມີຜົນບັງຄັບໃຊ້ກ່ຽວກັບ ການຈັດປະເພດ ແລະ ການວັດແທກ ຊັບສິນທາງການເງິນຂອງທະນາຄານແຕ່ບໍ່ມີຜົນ ຕໍ່ກັບການຈັດປະເພດ ແລະ ການວັດແທກໜີ້ສິນ ທາງການເງິນຂອງທະນາຄານ.

IFRS 15 ລາຍຮັບຈາກສັນຍາກັບລູກຄ້າ

ໃນເດືອນພຶດສະພາ 2014, IASB ໄດ້ອອກ IFRS 15 ລາຍຮັບຈາກສັນຍາກັບລູກຄ້າ, ມີຜົນບັງຄັບໃຊ້ສຳລັບປີເລີ່ມຕົ້ນໃນ ວັນທີ 1 ມັງກອນ 2018 ກັບການນຳໃຊ້ທີ່ໄດ້ຮັບອະນຸຍາດ. IFRS 15 ໄດ້ກຳນົດຫຼັກການພື້ນຖານສຳລັບການຮັບຮູ້ລາຍຮັບ ແລະ ຈະສາມາດນຳໃຊ້ກັບທຸກໆສັນຍາທີ່ມີກັບລູກຄ້າ. ຢ່າງໃດກໍຕາມ, ລາຍຮັບດອກເບ້ຍ ແລະ ຄ່າທຳນຽມ ທີ່ຕິດພັນກັບ ເຄື່ອງມືທາງການເງິນ ແລະ ການເຊົ່າ ຈະຍັງຢູ່ນອກຂອບເຂດຂອງ IFRS 15 ແລະ ຈະໄດ້ຮັບການຄຸ້ມຄອງໂດຍການ ມາດຕະຖານອື່ນໆ (ຕົວຢ່າງ: IFRS 9, ແລະ IFRS 16 ການເຊົ່າ).

ການເກັບລາຍຮັບພາຍໃຕ້ IFRS 15 ຈຳເປັນຕ້ອງຖືກຮັບຮູ້ເປັນສິນຄ້າ ແລະ ການບໍລິການໄດ້ຖືກຍົກຍ້າຍ, ໃນຂອບເຂດທີ່ຜູ່ ໂອນຄາດຄະເນສິນຄ້າ ແລະ ການບໍລິການ. ມາດຕະຖານຈະກຳນົດຂໍ້ກຳນົດການເປີດເຜີຍສະບັບສົມບູນກ່ຽວກັບການ ລັກສະນະ, ຂອບເຂດ ແລະ ໄລຍະເວລາ ເຊັ່ນດຽວກັນກັບຄວາມບໍ່ແນ່ນອນຂອງລາຍຮັບ ແລະ ກະແສເງິນສົດກັບລູກຄ້າ.

ທະນາຄານບໍ່ໄດ້ຄາດວ່າຈະມີການນຳໃຊ້ IFRS 15 ລ່ວງໜ້າ ແລະ ຂະນະນີ້ແມ່ນກຳລັງປະເມີນຜົນກະທົບຂອງຕົນ.

IFRS 16 ການເຊົ່າສິນເຊື່ອ

IASB ອອກມາດຕະຖານບັນຊີໃຫມ່ສຳລັບການເຊົ່າ - IFRS 16 ການເຊົ່າ ໃນເດືອນມັງກອນປີ 2016. ມາດຕະຖານໃໝ່ ດັ່ງກ່າວບໍ່ໄດ້ມີການປ່ຽນແປງການບັນຊີທີ່ສຳຄັນສຳລັບການເຊົ່າ ຕໍ່ກັບຜູ້ໃຫ້ເຊົ່າ. ຢ່າງໃດກໍຕາມ, ມັນໄດ້ກຳນົດໃຫ້ຜູ້ເຊົ່າ ຮັບຮູ້ ການເຊົ່າທັງໝົດເປັນຫນີ້ສິນໃຫ້ເຊົ່າໃນໃບລາຍງານຖານະການເງິນຂອງພວກເຂົາ ໂດຍສອດຄ່ອງກັບສິດໃນການນຳໃຊ້ຊັບສິນ. ຜູ້ເຊົ່າຕ້ອງໄດ້ນຳໃຊ້ຮູບແບບດຽວສຳລັບການຮັບຮູ້ການເຊົ່າທັງຫມົດ, ແຕ່ວ່າຈະມີທາງເລືອກທີ່ຈະບໍ່ຮັບຮູ້ການເຊົ່າທີ່ມີໄລຍະ ສັ້ນ ແລະ ການເຊົ່າທີ່ມີມູນຄ່າຕ່ຳ. ໂດຍທົ່ວໄປ, ກຳໄລ ຫຼື ຂາດທຶນໃນການຮັບຮູ້ສຳລັບການຮັບຮູ້ການເຊົ່າຈະຄ້າຍຄືກັນກັບ ການບັນຊີການເຊົ່າທາງການເງິນໃນປັດຈຸບັນ ເຊິ່ງລາຍຈ່າຍດອກເບ້ຍ ແລະ ຄ່າຫຼ້ຍຫ້ຽນຈະຖືກຮັບຮູ້ແຍກຕ່າງຫາກໃນໃບລາຍ ງານຜົນການດຳເນີນງານ.

IFRS 16 ມີຜົນບັງຄັບໃຊ້ສຳລັບປີທີ່ເລີ່ມຕົ້ນນະວັນທີ ຫຼື ຫຼັງວັນທີ 1 ມັງກອນ 2019. ມາດຕະຖານລາຍຮັບໃຫມ່ດັ່ງກ່າວ ສາມາດນຳໃຊ້ລ່ວງໜ້າໄດ້, IFRS 15, ໄດ້ຖືກນຳໃຊ້ໃນວັນດຽວກັນ. ຜູ້ເຊົ່າຈະຕ້ອງນຳໃຊ້ IFRS 16 ໂດຍນຳໃຊ້ຍ້ອນຫຼັງກັບ ຄືນແບບເຕັມ ຫຼື ບາງສ່ວນ.

ທະນາຄານບໍ່ໄດ້ນຳໃຊ້ IFRS 16 ລ່ວງໜ້າ ແລະ ຂະນະນີ້ແມ່ນກຳລັງປະເມີນຜົນກະທົບຢູ່.

6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

6.19 ມາດຕະຖານແຕ່ຍັງບໍ່ທັນບັງຄັບໃຊ້ (ຕໍ່)

ດັດແກ້ IAS 12 ອາກອນກຳໄລ

ໃນເດືອນມັງກອນ 2016, IASB ໄດ້ດັດແກ້ IAS 12 ແລະ ມີການຊີ້ແຈງເຖິງການບັນທຶກບັນຊີຂອງຊັບສິນອາກອນເຍື່ອນຊຳລະຂອງເຄື່ອງທາງການເງິນ ທີ່ຖືກວັດແທກຕາມມູນຄ່າຍຸດຕິທຳ ແຕ່ຈະຖືກວັດແທກທີ່ມູນຄ່າຕົ້ນທຶນສຳລັບຈຸດປະສົງທາງດ້ານອາກອນ. ການດັດແກ້ແມ່ນຜົນບັງຄັບໃຊ້ເລີ່ມຈາກວັນທີ 1 ມັງກອນ 2017. ທະນາຄານກຳລັງປະເມີນຜົນກະທົບ ແຕ່ບໍ່ໄດ້ຄາດຄະເນວ່າປະຕິບັດຕາມການດັດແກ້ດັ່ງກ່າວ ຈະມີການຜົນກະທົບມີສຳຄັນຕໍ່ກັບເອກະສານລາຍງານການເງິນລວມກິດຈະການ

ດັດແກ້ IAS 7 ໃບລາຍງານກະແສເງິນສົດ

ໃນເດືອນມັງກອນ 2016 IASB ໄດ້ດັດແກ້ IAS 7 ໃບລາຍງານກະແສເງິນສົດ ເພື່ອຈຸດປະສົງໃນການປັບປຸງການເປີດເຜີຍກິດຈະກຳທາງການເງິນ ແລະ ຊ່ວຍໃຫ້ຜູ້ນຳໃຊ້ມີຄວາມເຂົ້າໃຈຫຼາຍຂຶ້ນຕໍ່ກັບການລາຍງານຖານະສະພາບຄ່ອງຂອງນິຕິບຸກຄົນ. ພາຍໃຕ້ຂໍ້ກຳນົດໃໝ່ ນິຕິບຸກຄົນຕ້ອງເປີຍເຜີຍການປ່ຽນແປງໃນໜີ້ສິນທາງການເງິນ ເຊິ່ງເປັນຜົນຂອງກິດຈະກຳທາງການເງິນ ເຊັ່ນ ການປ່ຽນແປງຈາກລາຍການກະແສເງິນສົດ ແລະ ບໍ່ແມ່ນກະແສເງິນສົດ (ຕົວຢ່າງ ກຳໄລ ແລະ ຂາດທຶນຈາກການແລກປ່ຽນເງິນຕາຕ່າງປະເທດ). ການດັດແກ້ມີຜົນບັງຄັບໃຊ້ເລີ່ມຈາກວັນທີ 1 ມັງກອນ 2017. ທະນາຄານກຳລັງປະເມີນຜົນກະທົບຢູ່.

7. ການຄາດຄະແນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນລວມກິດຈະການຂອງທະນາຄານ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງທະນາຄານ, ຄະນະບໍລິຫານໄດ້ພິຈາລະນາດັ່ງນີ້ ເຊິ່ງມີຜົນກະທົບອັນສຳຄັນໃຫ້ແກ່ຕົວເລກການຮັບຮູ້ທີ່ມີຄວາມສ່ຽງຫລາຍ ເຊິ່ງຜົນມາຈາກເຄື່ອງມືການດັດແກ້ທີ່ສຳຄັນຂອງມູນຄ່າຕົວຈິງຂອງຊັບສິນ ແລະ ໜີ້ສິນພາຍໃນປີການເງິນ ຕໍ່ໜ້າ. ທະນາຄານໄດ້ອີງໃສ່ຂໍ້ສົມມຸດຖານ ແລະ ການຄາດຄະເນຂອງຕົນ ກ່ຽວກັບການກຳນົດເວລາທີ່ມີການລາຍງານທາງດ້ານການເງິນທີ່ຖືກກະກຽມ. ສະພາບການ ແລະ ສົມມຸດຖານ ກ່ຽວກັບການພັດທະນາໃນອະນາຄົດ, ຢ່າງໃດກໍ່ຕາມ, ອາດຈະມີການປ່ຽນແປງ ເນື່ອງມາຈາກການປ່ຽນແປງຂອງຕະຫຼາດ ຫຼື ສະພາບການທີ່ຄວບຄຸມທະນາຄານ. ການປ່ຽນແປງດັ່ງກ່າວໄດ້ສະທ້ອນໃຫ້ເຫັນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ.

7. ການຄາດຄະແນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

7.1 ຄວາມສົບເນື່ອງໃນການດຳເນີນທຸລະກິດ

ຄະນະບໍລິຫານຂອງທະນາຄານໄດ້ປະເມີນຄວາມອາດສາມາດຂອງທະນາຄານ ກໍ່ຄືຄວາມສົບເນື່ອງໃນການດຳເນີນທຸລະກິດ ແລະ ເປັນທີ່ໜ້າພໍໃຈວ່າທະນາຄານມີແຫລ່ງທຶນ ເພື່ອສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະບໍລິຫານບໍ່ມີ ສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງທະນາຄານ ເພື່ອສືບຕໍ່ດຳເນີນງານກໍ່ຄືຄວາມສົບເນື່ອງໃນການ ດຳເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນລວມກິດຈະການລວມກິດຈະການ ຍັງສືບຕໍ່ສ້າງຂຶ້ນບົນພື້ນຖານ ຄວາມສົບເນື່ອງໃນການດຳເນີນທຸລະກິດ.

7.2 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ

ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍເລກທີ 5.2.4, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດ ກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຄິງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກ ເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍ ລ່ວງໜ້າ, ຄ່າປັບໄໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນ ສ່ວນສຳຄັນຂອງເຄື່ອງມື.

7. ການຄາດຄະແນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

7.3 ການຂາດທຶນຈາກຄ່າເສື່ອມມູນຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າ

ທະນາຄານໄດ້ມີການທົບທວນເງິນໃຫ້ກູ້ ແລະ ເງິນລ່ວງໜ້າທີ່ສຳຄັນເປັນແຕ່ລະບຸກຄົນຕາມແຕ່ລະວັນທີລາຍງານ ເພື່ອປະເມີນວ່າການຂາດທຶນຈາກຄ່າເສື່ອມມູນຄ່າ ຄວນຖືກບັນທຶກລົງໃນໃບລາຍງານຜົນການດຳເນີນງານ ຫຼື ບໍ່.

ວິທີການປະເມີນຄ່າເສື່ອມມູນຄ່າຂອງຊັບສິນທີ່ບັນທຶກໂດຍວິທີຫັກລົບຕົ້ນທຶນ ເປັນຜົນໃຫ້ມີການບັນທຶກເງິນແຮສຳລັບ:

- ການເສື່ອມມູນຄ່າສະເພາະຕາມຄວາມສຳຄັນແບບລາຍການ ຫຼື ຊັບສິນສ່ຽງທີ່ຖືກກຳນົດວ່າສຳຄັນ;
- ການເສື່ອມມູນຄ່າເປັນກຸ່ມ

ລາຍລະອຽດຂອງແຕ່ລະປະເພດໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍ ເລກທີ 5.4.1. ເຊິ່ງປະກອບດ້ວຍການຕັດສິນໃຈຂອງຄະນະບໍລິຫານ, ໂດຍສະເພາະແລ້ວຈະມີການປະເມີນມູນຄ່າ ແລະ ກຳນົດເວລາຂອງກະແສເງິນສົດໃນອະນາຄົດ ແລະ ມູນຄ່າຫຼັກຊັບຄ້ຳປະກັນ ເມື່ອມີການຂາດທຶນຈາກຄ່າເສື່ອມມູນຄ່າ. ການປະເມີນດັ່ງກ່າວມາຈາກຈຳນວນຂອງປັດໄຈ, ການປ່ຽນແປງຂອງລາຍການທີ່ເຮັດໃຫ້ເກີດຄວາມແຕກຕ່າງຂອງຜົນຕອບແທນ.

7.4 ຄ່າເຊື່ອມມູນຄ່າຂອງການລົງທຶນທີ່ມີໄວ້ເພື່ອຂາຍ

ທະນາຄານທົບທວນຄືນຕາສານຫນີ້ຂອງຕົນທີ່ຈັດປະເພດເປັນການລົງທຶນທີ່ມີໄວ້ເພື່ອຂາຍໃນແຕ່ລະວັນທີ່ລາຍງານເພື່ອປະເມີນວ່າພວກມັນໄດ້ເຊື່ອມຄ່າ ຫຼື ບໍ່ ດັ່ງທີ່ໄດ້ອະທິບາຍໄວ້ໃນເອກະສານຊ້ອນທ້າຍເລກທີ 6.4.2.

ການປະເມີນຜົນດັ່ງກ່າວນີ້, ລວມທັງການຄາດຄະເນກະແສເງິນສົດໃນອະນາຄົດ ແລະ ຂໍ້ມູນທີ່ປະກອບເຂົ້າອື່ນໆເຂົ້າໃນຮູບແບບກະແສເງິນສົດແບບສ່ວນຫຼຸດ ແລະ ໃນກໍລະນີຂອງຕາສານທຶນ, ການຕີລາຄາຂອງສິ່ງທີ່ເປັນ 'ທີ່ສຳຄັນ' ຫຼື 'ເປັນເວລາດົນ' ແມ່ນຮຽກຮ້ອງໃຫ້ມີການຕັດສິນໃຈ. ໃນການຕັດສິນໃຈດັ່ງກ່າວນີ້, ທະນາຄານການປະເມີນ, ໃນບັນດາປັດໄຈອື່ນໆ, ປະຫວັດການເຄື່ອນໄຫວຂອງລາຄາຫຸ້ນ ແລະ ໄລຍະເວລາ ແລະ ຂອບເຂດທີ່ມູນຄ່າຍຸດຕິທຳຂອງການລົງທຶນແມ່ນຕ່ຳກວ່າຕົ້ນທຶນ.

7.5 ຊັບສິນອາກອນເຍື້ອນຊຳລະ

ຊັບສິນອາກອນຍື້ນຊຳລະ ແມ່ນໄດ້ຖືກຮັບຮູ້ໃນແງ່ຂອງການຂາດທຶນອາກອນ ທີ່ອາດມີຄວາມເປັນໄປໄດ້ທີ່ວ່າກຳໄລອາກອນໃນອະນາຄົດທີ່ມີຢູ່ກັບການຂາດທຶນທີ່ສາມາດນຳໃຊ້ໄດ້. ການຕັດສິນຮຽກຮ້ອງໃຫ້ມີການກຳນົດຈຳນວນເງິນຂອງຊັບສິນອາກອນເຍື້ອນຊຳລະ ທີ່ສາມາດຮັບຮູ້ໄດ້, ໂດຍອີງໃສ່ແນວໂນ້ມໄລຍະເວລາ ແລະ ລະດັບຂອງກຳໄລອາກອນໃນອະນາຄົດ ພ້ອມກັບຍຸດທະສາດການວາງແຜນອາກອນໃນອະນາຄົດ.

8. ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

	2016	*2015*
	ລ້ານກີບ	*ລ້ານກີບ*
ລາຍຮັບດອກເບ້ຍການໃຫ້ກູ້ຢືມ	1,252,157	933,530
ລາຍຮັບດອກເບ້ຍເງິນຝາກຢູ່ທະນາຄານອື່ນ	14,344	9,664
ລາຍຮັບດອກເບ້ຍຈາກການລົງທຶນໃນຫຼັກຊັບ	108,348	81,650
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ	31,582	48,766
	1,406,431	**1,073,610**

9. ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ

	2016	*2015*
	ລ້ານກີບ	*ລ້ານກີບ*
ລາຍຈ່າຍດອກເບ້ຍເງິນຝາກຂອງທະນາຄານອື່ນ	83,871	27,427
ລາຍຈ່າຍດອກເບ້ຍເງິນຝາກຂອງລູກຄ້າ	774,725	785,543
	858,596	**812,970**

10. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	2016	*2015*
	ລ້ານກີບ	*ລ້ານກີບ*
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	124,993	106,908
ທຸລະກຳທຳດ້ານສິນເຊື່ອ	64,633	60,519
ທຸລະກຳທາງອື່ນ	4,218	4,121
	193,844	**171,548**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ບໍລິການຊຳລະສະສາງ	(14,077)	(10,707)
ທຸລະກຳທາງອື່ນ	(1,334)	(2,607)
	(15,411)	**(13,314)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**178,433**	**158,234**

11. ລາຍຮັບ/(ລາຍຈ່າຍ) ສຸດທິຈາກການຄ້າ

	2016 *ລ້ານກີບ*	*2015* *ລ້ານກີບ*
ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ	47,270	41,002
ຂາດທຶນຈາກການຊື້ຂາຍເງິນຕາລ່ວງໜ້າ	-	(287,150)
ການປ່ຽນແປງໃນມູນຄ່າຍຸຕິທຳ ຂອງຫຼັກຊັບມີໄວ້ເພື່ອຄ້າ	-	(993)
ລາຍຮັບເງິນປັນຜົນຈາກຫຼັກຊັບມີໄວ້ເພື່ອຄ້າ	-	258
	47,270	**(246,883)**

12. ລາຍຮັບອື່ນໆຈາກການດຳເນີນງານ

	2016 *ລ້ານກີບ*	*2015* *ລ້ານກີບ*
ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ	11,060	12,413
ກຳໄລຈາກການຂາຍຊັບສິນບັດຄົງທີ່	676	359,076
ເກັບຄືນໜີ້ສູນທີ່ສະສາງອອກ	2,677	49,731
ອື່ນໆ	581	1,040
	14,994	**422,260**

13. (ຫັກເພີ່ມ)/ການເກັບຄືນຄ່າເສື່ອມມູນຄ່າສຳລັບການລົງທຶນທາງດ້ານການເງິນ

	2016 *ລ້ານກີບ*	*2015* *ລ້ານກີບ*
(ຫັກເພີ່ມ)/ການເກັບຄືນຄ່າເສື່ອມ ສຳລັບການລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ *(ບົດອະທິບາຍເລກທີ 20)*	(10,985)	1,837
	(10,985)	**1,837**

14. ລາຍຈ່າຍພະນັກງານ

	2016 *ລ້ານກີບ*	*2015* *ລ້ານກີບ*
ເງິນເດືອນ	132,580	125,780
ຜົນປະໂຫຍດ ແລະ ສະຫວັດດີການ	102,340	89,438
ຄ່າໃຊ້ຈ່າຍອື່ນໆກ່ຽວກັບພະນັກງານ	5,283	5,501
	240,203	**220,719**

15. ລາຍຈ່າຍອື່ນໆຈາກການດຳເນີນງານ

	2016 *ລ້ານກີບ*	*2015* *ລ້ານກີບ*
ຄ່າການບໍລິການຈາກພາຍນອກ	24,490	23,094
ຄ່າສ້ອມແປງ ແລະ ບຳລຸງຮັກສາ	15,371	14,165
ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	4,546	4,037
ຄ່າເຊົ່າຫ້ອງການ	9,566	8,134
ຄ່າການສື່ສານ	1,277	1,803
ຄ່າການຝຶກອົບຮົມ, ປະຊຸມ ແລະ ສຳມະນາ	8,844	7,238
ຄ່າເບ້ຍປະກັນໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	21,250	18,697
ຄ່າອາກອນ ແລະ ພັນທະອື່ນໆ	578	146
ອື່ນໆ	13,699	20,371
	99,621	**97,685**

16. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

	31 ທັນວາ 2016 *ລ້ານກີບ*	*31 ທັນວາ 2015* *ລ້ານກີບ*
ເງິນສົດໃນກຳມືເປັນເງິນກີບ	1,016,618	1,246,264
ເງິນສົດໃນກຳມືເປັນເງິນຕາຕ່າງປະເທດ	850,541	990,378
ຍອດເຫຼືອຢູ່ ທຫລ		
- ເງິນຝາກບັງຄັບ	1,378,763	1,134,906
- ເງິນຝາກກະແສລາຍວັນ	2,435,014	6,095,242
	5,680,936	**9,466,790**

16. ເງິນສິດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ") (ຕໍ່)

